ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

# ປື້ມຄູ່ມື
# ຄວາມຮູ້ພື້ນຖານກ່ຽວກັບ ກົດໝາຍຂະແໜງກະສິກຳ ແລະ ປ່າໄມ້
## (ສຳລັບເຜີຍແຜ່)

ຮຽບຮຽງ ແລະ ຈັດພິມໂດຍ : ກົມນະໂຍບາຍ ແລະ ນິຕິກຳ,
ກະຊວງກະສິກຳ ແລະ ປ່າໄມ້
ສະໜັບສະໜູນ ໂດຍ : ອົງການຮ່ວມມືສາກົນແຫ່ງປະເທດ ຍີ່ປຸ່ນ

ມັງກອນ 2020
(ສະຫງວນລິຂະສິດ)

# ຄໍານໍາ

ປີ 2016-2019 ກະຊວງກະສິກໍາ ແລະ ປ່າໄມ້ ໄດ້ມີການປັບປຸງກົດໝາຍ ຈໍານວນ 03 ສະບັບ ຄື: ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ແລະ ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ໃນປີ 2016 ແລະ ກົດໝາຍວ່າດ້ວຍປ່າໄມ້ ໃນປີ 2019 ພ້ອມທັງສ້າງໃໝ່ 01 ສະບັບ ຄື: ກົດໝາຍວ່າດ້ວຍການຈັດສັນ ພູມລໍາເນົາ ແລະ ອາຊີບ ໃນປີ 2018. ສະນັ້ນ, ຈຶ່ງໄດ້ປັບປຸງ **"ປຶ້ມຄູ່ມື ຄວາມຮູ້ພື້ນຖານ ກ່ຽວກັບ ກົດໝາຍຂະແໜງການກະສິກໍາ ແລະ ປ່າໄມ້''** ທີ່ຈັດພິມໃນປີ 2014 ໃຫ້ມີເນື້ອໃນຄົບຖ້ວນ ແລະ ສົມບູນຂຶ້ນ ແນໃສ່ຕອບສະໜອງຄວາມຕ້ອງການ ໃນການໂຄສະນາເຜີຍແຜ່, ສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍຂອງຂະແໜງການກະສິກໍາ ແລະ ປ່າໄມ້ ລົງສູ່ປະຊາຊົນລາວບັນດາເຜົ່າ, ບ້ານ, ກຸ່ມບ້ານ, ຮາກຖານການຜະລິດ ຕະຫຼອດຮອດຜູ້ປະກອບການ ແລະ ການຈັດຕັ້ງທຸກພາກສ່ວນ. ປຶ້ມຄູ່ມືສະບັບນີ້ ໄດ້ສັງລວມເນື້ອໃນພື້ນຖານ ຂອງບັນດາກົດໝາຍຂະແໜງການກະສິກໍາ ແລະ ປ່າໄມ້ ທີ່ມີຜົນບັງຄັບໃຊ້ໃນປະຈຸບັນ ຈໍານວນ 08 ສະບັບ ຄື: ກົດໝາຍວ່າດ້ວຍກະສິກໍາ, ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ), ກົດໝາຍວ່າດ້ວຍສັດນໍ້າ ແລະ ສັດປ່າ, ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ), ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ), ກົດໝາຍວ່າດ້ວຍການປະມົງ, ກົດໝາຍວ່າດ້ວຍຊົນລະປະທານ ແລະ ກົດໝາຍວ່າດ້ວຍການຈັດສັນພູມລໍາເນົາ ແລະ ອາຊີບ ໂດຍໄດ້ຄັດຈ້ອນເອົາສະເພາະເນື້ອໃນຂອງບັນດາກົດໝາຍດັ່ງກ່າວ ເປັນຕົ້ນ ຄວາມສໍາຄັນຂອງກົດໝາຍ, ກົດໝາຍອະນຸຍາດໃຫ້ເຮັດໄດ້ ມີຫຍັງແດ່ ?, ກົດໝາຍຫ້າມ ຫຼື ບໍ່ອະນຸຍາດໃຫ້ເຮັດ ມີຫຍັງແດ່ ? ແລະ ຖ້າລະເມີດ ຈະໄດ້ຮັບໂທດຄືແນວໃດ ? ທັງນີ້ກໍເພື່ອເປັນບ່ອນອີງ ແລະ ເປັນຄູ່ມື ໃນການໂຄສະນາເຜີຍແຜ່ໃຫ້ເປົ້າໝາຍ ເຂົ້າໃຈງ່າຍຂຶ້ນ ແລະ ເປັນເຈົ້າການ ເຂົ້າຮ່ວມຈັດຕັ້ງປະຕິບັດ ຢ່າງມີປະສິດທິຜົນ.

ການສັງລວມ ແລະ ຈັດພິມປຶ້ມຄູ່ມືສະບັບນີ້ ບໍ່ສາມາດປະຕິເສດໄດ້ເຖິງຂໍ້ຂາດຕົກບົກຜ່ອງທາງດ້ານເນື້ອໃນ ແລະ ຫຼັກໄວຍາກອນ. ດັ່ງນັ້ນ, ໃນເວລາເຜີຍແຜ່ ຫຼື ສຶກສາຄົ້ນຄວ້າຕົວຈິງ ຖ້າຫາກເຫັນວ່າ ຍັງບໍ່ທັນຈະແຈ້ງ, ເຫັນຄວນເພີ່ມ ຫຼື ຕັດອອກບັນຫາໃດ ພວກເຮົາມີຄວາມຍິນດີ ຮັບເອົາຄໍາຄິດ, ຄໍາເຫັນ ແລະ ຄໍາແນະນໍາ ເພື່ອເຮັດໃຫ້ເນື້ອໃນຄົບຖ້ວນສົມບູນຍິ່ງຂຶ້ນ.

**ລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້**

ກະຊວງກະສິກໍາ ແລະ ປ່າໄມ້

ລັດຖະມົນຕີ

ປອ.ລຽນ ທິແກ້ວ

## ສາລະບານ


### ກົດໝາຍວ່າດ້ວຍກະສິກຳ

I. ຄວາມສຳຄັນຂອງກົດໝາຍວ່າດ້ວຍກະສິກຳ ມີຄືແນວໃດ ?................................ 1
II. ກົດໝາຍວ່າດ້ວຍກະສິກຳ ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດໄດ້ ມີຫຍັງແດ່ ?...................................................... 2
III. ກົດໝາຍວ່າດ້ວຍກະສິກຳ ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເຮັດ ມີຫຍັງແດ່ ?.................................................................... 13
IV. ຖ້າລະເມີດກົດໝາຍວ່າດ້ວຍກະສິກຳ ຈະໄດ້ຮັບໂທດຄືແນວໃດ ?........................ 13

### ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ)

I. ຄວາມສຳຄັນຂອງກົດໝາຍວ່າດ້ວຍປ່າໄມ້ ມີຄືແນວໃດ ?................................ 15
II. ກົດໝາຍວ່າດ້ວຍປ່າໄມ້ ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດໄດ້ ມີຫຍັງແດ່ ?.................................................................. 16
III. ກົດໝາຍວ່າດ້ວຍປ່າໄມ້ ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເຮັດ ມີຫຍັງແດ່ ?.................................................................... 23
IV. ຖ້າລະເມີດ ກົດໝາຍວ່າດ້ວຍປ່າໄມ້ ຈະໄດ້ຮັບໂທດ ຄືແນວໃດ ? ....................... 26

### ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ

I. ຄວາມສຳຄັນຂອງກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ມີຄືແນວໃດ ? ................. 29
II. ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດໄດ້ ມີຫຍັງແດ່ ?................................................... 31
III. ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເຮັດ ມີຫຍັງແດ່ ?.................................................................... 36
IV. ຖ້າລະເມີດກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ຈະໄດ້ຮັບໂທດຄືແນວໃດ ?.......... 37

### ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ)

I. ຄວາມສຳຄັນຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ມີຄືແນວໃດ ? .................................................................... 40
II. ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດໄດ້ ມີຫຍັງແດ່ ? ..................................... 42
III. ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເຮັດ ມີຫຍັງແດ່ ?........................................... 50

IV. ຖ້າລະເມີດກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ
ຈະໄດ້ຮັບໂທດ ຄືແນວໃດ ? .................................................................. 52

**ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ)**
I. ຄວາມສຳຄັນຂອງກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ
ມີຄືແນວໃດ ? ........................................................................ 53
II. ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ອະນຸຍາດ ໃຫ້ບຸກຄົນ,
ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດໄດ້ ມີຫຍັງແດ່ ? ..................................... 54
III. ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ຫ້າມບຸກຄົນ,
ນິຕິບຸກຄົນ ແລະ ການຈັດຕັ້ງເຮັດ ມີຫຍັງແດ່ ? ......................................... 62
IV. ຖ້າລະເມີດກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ
ຈະໄດ້ຮັບໂທດຄືແນວໃດ ? ............................................................. 63

**ກົດໝາຍວ່າດ້ວຍການປະມົງ**
I. ຄວາມສຳຄັນຂອງກົດໝາຍວ່າດ້ວຍການປະມົງ ມີຄືແນວໃດ ? .......................... 65
II. ກົດໝາຍວ່າດ້ວຍການປະມົງ ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ
ເຮັດໄດ້ ມີຫຍັງແດ່ ? ................................................................... 66
III. ກົດໝາຍວ່າດ້ວຍການປະມົງ ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເຮັດ
ມີຫຍັງແດ່ ?........................................................................ 75
IV. ຖ້າລະເມີດກົດໝາຍວ່າດ້ວຍການປະມົງ ຈະໄດ້ຮັບໂທດຄືແນວໃດ ? .................. 76

**ກົດໝາຍວ່າດ້ວຍຊົນລະປະທານ**
I. ຄວາມສຳຄັນຂອງກົດໝາຍວ່າດ້ວຍຊົນລະປະທານ ມີຄືແນວໃດ ? .................... 77
II. ກົດໝາຍວ່າດ້ວຍຊົນລະປະທານ ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ
ແລະ ການຈັດຕັ້ງ ເຮັດໄດ້ ມີຫຍັງແດ່ ? .................................................. 79
III. ກົດໝາຍວ່າດ້ວຍຊົນລະປະທານ ຫ້າມບຸກຄົນ, ນິຕິບຸກຄົນ ແລະ
ການຈັດຕັ້ງເຮັດ ມີຫຍັງແດ່ ? .............................................................. 84
IV. ຖ້າລະເມີດ ກົດໝາຍວ່າດ້ວຍຊົນລະປະທານ ຈະໄດ້ຮັບໂທດ ຄືແນວໃດ ? ........... 86

**ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ**
I. ຄວາມສຳຄັນຂອງກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ
ມີຄືແນວໃດ ? ........................................................................ 87
II. ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ອະນຸຍາດໃຫ້ ບຸກຄົນ,

ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດໄດ້ ມີຫຍັງແດ່ ? ...................................... 88
III. ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ຫ້າມບຸກຄົນ, ນິຕິບຸກຄົນ
ແລະ ການຈັດຕັ້ງເຮັດ ມີຫຍັງແດ່ ? ........................................................ 94
IV. ຖ້າລະເມີດກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ
ຈະໄດ້ຮັບໂທດ ຄືແນວໃດ ? ................................................................. 96

ເອກະສານອ້າງອີງ ........................................................................... 98
ຕິດຕໍ່ປະສານງານ .......................................................................... 99

# ຄວາມຮູ້ພື້ນຖານ ກ່ຽວກັບ ກົດໝາຍວ່າດ້ວຍກະສິກຳ

**ກົດໝາຍວ່າດ້ວຍກະສິກຳ ໄດ້ຖືກຮັບຮອງເອົາ ໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IV ໃນວັນທີ 10 ຕຸລາ 1998 ແລະ ປະທານປະເທດແຫ່ງ ສປປ ລາວ ໄດ້ປະກາດໃຊ້ຢ່າງເປັນທາງການ ໃນວັນທີ 06 ພະຈິກ 1998 ຊຶ່ງປະກອບມີ 8 ພາກ, 85 ມາດຕາ.**

## I. ຄວາມສຳຄັນຂອງກົດໝາຍວ່າດ້ວຍກະສິກຳ ມີຄືແນວໃດ ?

### 1. ຄວາມສຳຄັນຂອງກະສິກຳ

ກະສິກຳ ແມ່ນ ການປູກຝັງ, ການລ້ຽງສັດ ແລະ ການປະມົງ ເພື່ອຕອບສະໜອງທາງດ້ານທັນຍາຫານ ແລະ ອາຫານໃຫ້ແກ່ສັງຄົມ, ເປັນວັດຖຸດິບປ້ອນໂຮງງານອຸດສາຫະກຳປຸງແຕ່ງ ລວມທັງ ເປັນສິນຄ້າຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ.

ປະຈຸບັນ **"ກະສິກຳ"** ຍັງເປັນພື້ນຖານລາຍຮັບຕົ້ນຕໍ ຂອງຄອບຄົວຊາວກະສິກອນໃນທົ່ວປະເທດ. ດັ່ງນັ້ນ, ພັກເຮົາຈຶ່ງກຳນົດວ່າ: ກະສິກຳ ເປັນແນວລົບອັນດັບໜຶ່ງ, ການກະສິກຳ ແລະ ປ່າໄມ້ ຍັງແມ່ນຂະແໜງການພື້ນຖານ ໃນໂຄງປະກອບເສດຖະກິດແຫ່ງຊາດຂອງພວກເຮົາ, ການຫັນຈາກກະສິກຳທຳມະຊາດ ໄປສູ່ການຜະລິດເປັນສິນຄ້າ ເປັນຄວາມຮຽກຮ້ອງຕ້ອງການພາວະວິໃສ ຂອງສະໄໝຂ້າມຜ່ານຂຶ້ນສູ່ສັງຄົມນິຍົມຢູ່ປະເທດເຮົາ.





### 2. ຄວາມສຳຄັນຂອງກົດໝາຍວ່າດ້ວຍກະສິກຳ

ຍ້ອນເຫັນໄດ້ບົດບາດຄວາມສຳຄັນຂອງກະສິກຳ ທີ່ກ່າວມາຂ້າງເທິງນັ້ນ, ເພື່ອຮັບປະກັນການຜະລິດກະສິກຳ ໃຫ້ມີການຂະຫຍາຍຕົວ, ທັນສະໄໝ, ຍືນຍົງ ແລະ ປົກປັກຮັກສາສິ່ງແວດລ້ອມ, ຮັບປະກັນສະບຽງອາຫານໃຫ້ພຽງພໍ, ສະອາດ, ປອດໄພຕໍ່ສຸຂະພາບ ຂອງຜູ້ບໍລິໂພກ ແລະ ຜູ້ຜະລິດ. ກົດໝາຍວ່າດ້ວຍກະສິກຳ ເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998 ປະກອບດ້ວຍ 8 ພາກ, 85 ມາດຕາ ຊຶ່ງແມ່ ນໜຶ່ງໃນລະບົບກົດໝາຍຂອງລັດທີ່ສ້າງຂຶ້ນບົນພື້ນຖານລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ເປັນກົດໝາຍສະບັບທຳອິດ ຂອງຂະແໜງການກະສິກຳ ແລະ ປ່າໄມ້ ໂດຍກຳນົດລວມກ່ຽວກັບ ວຽກງານປູກຝັງ, ລ້ຽງສັດ, ການປະມົງ ແລະ ຊົນລະປະທານ. ປະຈຸບັນ, ບັນດາ

ວຽກງານດັ່ງກາວ ສ່ວນໃຫຍ່ ແມ່ນໄດ້ຜັນຂະຫຍາຍອອກເປັນກົດໝາຍສະເພາະແລ້ວ ເຊັ່ນ: ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (2008), ກົດໝາຍວ່າດ້ວຍການປ້ອງກັນພືດ (2008) ທັງສອງກົດໝາຍທີ່ໄດ້ກ່າວມານີ້ ປະຈຸບັນແມ່ນໄດ້ມີການປັບປຸງ, ຖືກຮັບຮອງ ແລະ ປະກາດໃຊ້ຢ່າງເປັນທາງການ ໃນປີ (2016), ກົດໝາຍວ່າດ້ວຍການປະມົງ (2009) ແລະ ກົດໝາຍວ່າດ້ວຍຊົນລະປະທານ (2012).

### 3. ຈຸດປະສົງຂອງກົດໝາຍວ່າດ້ວຍກະສິກຳ

ກົດໝາຍວ່າດ້ວຍກະສິກຳ ກຳນົດຫຼັກການ, ລະບຽບການ, ມາດຕະການຕ່າງໆ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ການຜະລິດກະສິກຳ ຊຶ່ງເປັນພື້ນຖານເສດຖະກິດຂອງປະເທດຊາດ ລວມທັງ ການຄຸ້ມຄອງ, ການປົກປັກຮັກສາກິດຈະການ ແລະ ຜະລິດຕະພົນກະສິກຳ ແນໃສ່ ຊຸກຍູ້, ສົ່ງເສີມ ແລະ ຂະຫຍາຍການຜະລິດກະສິກຳ ເພື່ອຮັບປະກັນການສະໜອງສະບຽງອາຫານ ແລະ ການຜະລິດເປັນສິນຄ້າ, ສ້າງເງື່ອນໄຂໃຫ້ແກ່ການກໍ່ສ້າງ ແລະ ຂະຫຍາຍອຸດສາຫະກຳປຸງແຕ່ງກະສິກຳ, ເຮັດໃຫ້ເສດຖະກິດແຫ່ງຊາດ ມີການຂະຫຍາຍຕົວ, ປະຊາຊົນຮັ່ງມີ, ປະເທດຊາດເຂັ້ມແຂງ ທັງຮັບປະກັນບໍ່ໃຫ້ກໍ່ຄວາມເສຍຫາຍ ແລະ ເປັນອັນຕະລາຍຕໍ່ສິ່ງແວດລ້ອມ.

## II. ກົດໝາຍວ່າດ້ວຍກະສິກຳ ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດໄດ້ ມີຫຍັງແດ່ ?

### 1. ນະໂຍບາຍ ກ່ຽວກັບ ກະສິກຳ

ໃນກົດໝາຍວ່າດ້ວຍກະສິກຳ ບໍ່ໄດ້ກຳນົດ **“ນະໂຍບາຍກ່ຽວກັບກະສິກຳ”** ເປັນມາດຕາສະເພາະ, ແຕ່ກໍພໍສັງລວມໄດ້ວ່າ: ລັດ ມີນະໂຍບາຍຊຸກຍູ້, ສົ່ງເສີມທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ເພື່ອລົງທຶນໃສ່ການຜະລິດກະສິກຳ ຕາມທິດຜະລິດແບບອຸດສາຫະກຳ ແລະ ທັນສະໄໝ ເພື່ອຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ, ເປັນວັດຖຸດິບ ສະໜອງໃຫ້ໂຮງງານອຸດສາຫະກຳປຸງແຕ່ງພາຍໃນປະເທດ ແລະ ເພື່ອເປັນສິນຄ້າສົ່ງອອກ ດ້ວຍການປະຕິບັດລະບົບນະໂຍບາຍສົ່ງເສີມທີ່ເໝາະສົມ ຕາມກົນໄກເສດຖະກິດຕະຫຼາດ; ອີກດ້ານໜຶ່ງ ລັດ ກໍມີນະໂຍບາຍຊຸກຍູ້, ສົ່ງເສີມຊາວກະສິກອນ ຈັດຕັ້ງເປັນກຸ່ມ, ສະຫະກອນ ແລະ ສະມາຄົມຜູ້ຜະລິດກະສິກຳ ເພື່ອໄດ້ຮັບການສະໜອງບໍລິການທາງດ້ານວິຊາການ ແລະ ນະໂຍບາຍອື່ນ ຕາມລະບຽບກົດໝາຍ.





ລັດ ມີນະໂຍບາຍສົ່ງເສີມການຜະລິດກະສິກຳຢ່າງຄົບຊຸດ ເປັນຕົ້ນແມ່ນ ທຶນ ແລະ ກອງທຶນສົ່ງເສີມ, ແນວພັນພືດ ແລະ ແນວພັນສັດ, ຝຸ່ນ ແລະ ອາຫານສັດ, ຢາປາບສັດຕູພືດ ແລະ ຢາປົວສັດ, ເຄື່ອງມື ແລະ ພາຫະນະກົນຈັກການກະເສດ, ຊົນລະປະທານ, ວິຊາການ, ຂໍ້ມູນຂ່າວສານດ້ານກະສິກຳ, ສູນຄົ້ນຄວ້າ ແລະ ສະຖານີທົດລອງ, ການຝຶກອົບຮົມຊາວກະສິກອນ, ສາງ, ໂຮງອົບ ແລະ ຫ້ອງເຢັນ, ການປຸງແຕ່ງຜະລິດຕະພົນກະສິກຳ, ທະນາຄານເມັດພືດ ແລະ ທະນາຄານສັດ, ການຕະຫຼາດ, ລາຄາ ແລະ ການປົກປ້ອງຜົນປະໂຫຍດຂອງຊາວກະສິກອນ.

- **ທຶນ ແລະ ກອງທຶນສົ່ງເສີມ:** ລັດ ຈະສົ່ງເສີມໃຫ້ປະຊາຊົນກູ້ຢືມທຶນ ມາທຳການຜະລິດກະສິກຳ ເປັນແຕ່ລະໄລຍະ ຄື: ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ດ້ວຍດອກເບ້ຍທີ່ມີລັກສະນະສົ່ງເສີມ ພ້ອມທັງດຶງດູດການຊ່ວຍເຫຼືອຂອງຕ່າງປະເທດ ເພື່ອມາຊຸກຍູ້ການຜະລິດກະສິກຳ.
  - ກໍລະນີເກີດໄພທຳມະຊາດ ເຊັ່ນ: ໄພແຫ້ງແລ້ງ, ໄພນ້ຳຖ້ວມ, ພະຍຸສັດ, ພະຍາດ ບົ້ງແມງ ຫຼື ອື່ນໆ ທີ່ສ້າງຄວາມເສຍຫາຍຢ່າງຮ້າຍແຮງ ໃຫ້ແກ່ການຜະລິດກະສິກຳນັ້ນ ລັດ ຈະມີນະໂຍບາຍຜ່ອນຜັນການທົດແທນຕົ້ນທຶນ ແລະ ດອກເບ້ຍທີ່ໄດ້ກູ້ຢືມຈາກລັດໃຫ້ແກ່ຊາວກະສິກອນ ຢ່າງສົມເຫດສົມຜົນ;
  - ລັດ ສ້າງຕັ້ງກອງທຶນສົ່ງເສີມກະສິກຳ ເພື່ອຊຸກຍູ້ການຜະລິດກະສິກຳໃຫ້ມີປະສິດທິພາບ. ກອງທຶນສົ່ງເສີມກະສິກຳໄດ້ມາຈາກ ທຶນປະກອບຂອງລັດ, ທຶນປະກອບຂອງປະຊາຊົນ ແລະ ທຶນຊ່ວຍເຫຼືອຈາກສາກົນ.
- **ແນວພັນພືດ ແລະ ແນວພັນສັດ:** ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບຄົ້ນຄ້ວາວິທະຍາສາດ ຊອກຫາແນວພັນພືດ, ແນວພັນສັດຢູ່ພາຍໃນ ແລະ ຈາກຕ່າງປະເທດທີ່ດີ ແລະ ເໝາະສົມກັບສະພາບດິນຟ້າອາກາດຂອງແຕ່ລະທ້ອງຖິ່ນ ຂອງ ສປປ ລາວ ເພື່ອໃຫ້ການຜະລິດກະສິກຳ ມີປະສິດທິພາບສູງ ໂດຍປະສານສົມທົບກັບກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ມະຫາວິທະຍາໄລແຫ່ງຊາດ ແລະ ອົງການປົກຄອງທ້ອງຖິ່ນ.
- **ຝຸ່ນ ແລະ ອາຫານສັດ:** ລັດ ສົ່ງເສີມການສະໜອງຝຸ່ນ ແກ່ຊາວກະສິກອນ ຢ່າງກ້ວາງຂວາງ ແລະ ທັນກັບລະດູການ ເພື່ອຮັບປະກັນໃຫ້ການຜະລິດກະສິກຳ ມີປະສິດທິຜົນສູງທາງດ້ານປະລິມານ ແລະ ຄຸນນະພາບ ໂດຍຊຸກຍູ້ໃຫ້ມີການຜະລິດຝຸ່ນອົງຄະທາດ ແລະ ຝຸ່ນວິທະຍາສາດ ຢູ່ພາຍໃນປະເທດ ແລະ ໃນກໍລະນີທີ່ຈຳເປັນ ກໍສາມາດນຳເຂົ້າຈາກຕ່າງປະເທດໄດ້ ຕາມລະບຽບກົດໝາຍ.
  - ລັດ ສົ່ງເສີມໃຫ້ມີການຕອບສະໜອງດ້ານອາຫານສັດ ໃຫ້ແກ່ສັດລ້ຽງຂອງຄອບຄົວ ແລະ ສັດລ້ຽງເປັນທຸລະກິດ ດ້ວຍການຊຸກຍູ້ໃຫ້ຊອກຫາແນວພັນພືດທີ່ດີແກ່ການລ້ຽງສັດ ຈາກພາຍໃນ ແລະ ຕ່າງປະເທດ, ຜະລິດວັດຖຸດິບປ້ອນໂຮງງານອາຫານສັດ ລວມທັງ ການກໍ່ສ້າງໂຮງງານປຸງແຕ່ງອາຫານສັດ.
  - ໃນກໍລະນີ ທີ່ການຜະລິດອາຫານສັດ ຢູ່ພາຍໃນປະເທດຫາກບໍ່ພຽງພໍ ກໍອະນຸຍາດໃຫ້ນຳເຂົ້າຈາກຕ່າງປະເທດໄດ້ ຕາມລະບຽບກົດໝາຍ.

- **ຢາປາບສັດຕູພືດ ແລະ ຢາປົວສັດ:** ລັດ ສົ່ງເສີມການຜະລິດຢາປາບສັດຕູພືດ ແລະ ຢາປົວສັດຢູ່ພາຍໃນປະເທດ ແລະ ໃນກໍລະນີທີ່ຈຳເປັນເພື່ອຕອບສະໜອງຢາປາບສັດຕູພືດ ແລະ ຢາປົວສັດໃຫ້ພຽງພໍ ແລະ ທັນເວລານັ້ນ ລັດ ກໍອະນຸຍາດໃຫ້ນຳເຂົ້າມາຈາກຕ່າງປະເທດ ຕາມລະບຽບກົດໝາຍ.
- **ເຄື່ອງມື ແລະ ພາຫະນະກົນຈັກການກະເສດ:** ລັດ ສົ່ງເສີມໃຫ້ທຳການຜະລິດເຄື່ອງມື ແລະ ພາຫະນະກົນຈັກການກະເສດທີ່ເໝາະສົມ ແລະ ທັນສະໄໝ ຢູ່ພາຍໃນປະເທດ ແລະ ໃນກໍລະນີທີ່ຈຳເປັນ ກໍອະນຸຍາດໃຫ້ນຳເຂົ້າຈາກຕ່າງປະເທດຕາມລະບຽບກົດໝາຍ ໃຫ້ພຽງພໍ ແລະ ທັນເວລາ. ນອກຈາກນີ້, ລັດ ຍັງສົ່ງເສີມໃຫ້ມີການຈັດຕັ້ງກອງກົນຈັກການກະເສດໃນເຂດຕ່າງໆ ເປັນຕົ້ນ ໃນເຂດຈຸດສຸມກະສິກຳ.
- **ວິຊາການ:** ລັດ ມີໜ້າທີ່ກໍ່ສ້າງນັກວິຊາການດ້ານກະສິກຳຫຼາຍລະດັບ ເພື່ອຕອບສະໜອງຄວາມຕ້ອງການທີ່ຈຳເປັນ ເພື່ອຊຸກຍູ້, ຊີ້ນຳຊາວກະສິກອນ ໂດຍເລີ່ມແຕ່ເວລາກະກຽມລົງມືທຳການຜະລິດ ຈົນຮອດເວລາເກັບກ່ຽວ, ຕະຫຼອດຮອດການເກັບຮັກສາ, ການປຸງແຕ່ງເບື້ອງຕົ້ນ ແລະ ການຫຸ້ມຫໍ່, ຂົນສົ່ງໄປສູ່ຕະຫຼາດ. ນອກຈາກນີ້, ລັດ ຍັງສົ່ງເສີມໃຫ້ພາກສ່ວນອື່ນ ກໍ່ສ້າງນັກວິຊາການດ້ານກະສິກຳອີກດ້ວຍ.
- **ຂໍ້ມູນຂ່າວສານທາງດ້ານກະສິກຳ:** ລັດ ຕ້ອງຕອບສະໜອງຂໍ້ມູນຂ່າວສານ, ສະຖິຕິ ກ່ຽວກັບ ການຜະລິດກະສິກຳ ເຊັ່ນ: ເຕັກນິກການປູກຝັງ, ລ້ຽງສັດ ແລະ ການປະມົງ, ແນວພັນພືດ ແລະ ແນວພັນສັດ, ຄຸນນະພາບ ແລະ ມາດຕະຖານສາກົນ, ການເໜັງຕີງຂອງລາຄາໃນທ້ອງຕະຫຼາດ, ຂໍ້ມູນກ່ຽວກັບອຸຕຸນິຍົມ, ອຸທົກກະສາດ ແລະ ອື່ນໆ, ສ້າງລະບົບເກັບກຳຂໍ້ມູນ, ຂ່າວສານ, ສະຖິຕິແຕ່ຂັ້ນບ້ານ, ຫົວໜ່ວຍຮາກຖານຂຶ້ນມາ ເພື່ອໃຫ້ມີຂໍ້ມູນຕົວຈິງ. ພ້ອມກັນນັ້ນ ລັດ ກໍຊຸກຍູ້ໃຫ້ພາກສ່ວນອື່ນ ປະກອບສ່ວນໃນການ ສະໜອງຂໍ້ມູນຂ່າວສານ ທາງດ້ານກະສິກຳ.
- **ສູນຄົ້ນຄວ້າ ແລະ ສະຖານີທົດລອງ:** ລັດ ສົ່ງເສີມການສ້າງ ແລະ ຂະຫຍາຍສູນຄົ້ນຄວ້າ ແລະ ສະຖານີທົດລອງໃນເຂດການຜະລິດຕ່າງໆ ທີ່ເຫັນວ່າເໝາະສົມ ເພື່ອຄົ້ນຄວ້າ, ນຳໃຊ້ບົດຮຽນທີ່ດີ ຢູ່ພາຍໃນປະເທດ ແລະ ນຳເອົາຜົນສຳເລັດຂອງສາກົນທາງດ້ານກະສິກຳ ເຂົ້າມານຳໃຊ້ພາຍໃນປະເທດ ແນໃສ່ເພີ່ມທະວີປະສິດທິຜົນຂອງຜົນຜະລິດກະສິກຳ.
- **ການຝຶກອົບຮົມຊາວກະສິກອນ:** ລັດ ເອົາໃຈໃສ່ຝຶກອົບຮົມໃຫ້ຊາວກະສິກອນກ່ຽວກັບ ການປູກຝັງ, ລ້ຽງສັດ ແລະ ການປະມົງ ໃຫ້ຮູ້ຈັກນຳໃຊ້ເຕັກນິກວິທະຍາສາດ ແລະ ເຕັກໂນໂລຊີໃໝ່ ຢ່າງກວ້າງຂວາງໃນການຜະລິດກະສິກຳ ດ້ວຍການຈັດການຝຶກອົບຮົມ, ທັດສະນະສຶກສາ, ສຳມະນາຢູ່ພາຍໃນ ແລະ ຕ່າງປະເທດ, ຮຽນຮູ້ມາດຕະຖານສາກົນ ກ່ຽວກັບ ຜະລິດຕະຜົນກະສິກຳ ແນໃສ່ເຮັດໃຫ້ການຜະລິດກະສິກຳ ມີປະສິດທິພາບ ແລະ ສາມາດເປັນສິນຄ້າໄດ້.
  - ລັດ ສົ່ງເສີມໃຫ້ນຳເອົາບົດຮຽນທີ່ດີ ຈາກຄອບຄົວຕົວແບບ ແລະ ຫົວໜ່ວຍການຜະລິດກະສິກຳຢູ່ພາຍໃນ ມາເຜີຍແຜ່ຮໍ່າຮຽນ, ຜັນຂະຫຍາຍ ໃຫ້ກວ້າງຂວາງ ແລະ ທັນເວລາ.

– ລັດ ສົ່ງເສີມໃຫ້ພາກສ່ວນຕ່າງໆ ມີສ່ວນຮ່ວມໃນການຝຶກອົບຮົມຊາວກະສິກອນ ກ່ຽວກັບ ການຜະລິດກະສິກຳ.
– ລັດ ຈະນຳເອົາວິຊາກະສິກຳພື້ນຖານເຂົ້າໃນຫຼັກສູດການສຶກສາ.

➢ **ສາງ, ໂຮງອົບ, ຫ້ອງເຢັນ ແລະ ໂຮງງານປຸງແຕ່ງ:** ລັດ ສົ່ງເສີມໃຫ້ປະຊາຊົນສ້າງ ສາງ, ໂຮງອົບ, ຫ້ອງເຢັນ ແລະ ໂຮງງານປຸງແຕ່ງຜົນຜະລິດກະສິກຳເບື້ອງຕົ້ນ ຢ່າງກ້ວາງ ຂວາງ ແລະ ຖືກຕ້ອງຕາມມາດຕະຖານເຕັກນິກ ເພື່ອຮັກສາຜະລິດຕະຜົນກະສິກຳ ໃຫ້ ຢູ່ໃນສະພາບຄົງຕົວ ແລະ ເກັບຮັກສາໄວ້ໄດ້ຍາວນານ; ກະຊວງກະສິກຳ ແລະ ປ່າໄມ້ ມີໜ້າທີ່ແນະນຳ, ຝຶກອົບຮົມທາງດ້ານວິຊາການ ກ່ຽວກັບ ລະບົບສາງ, ໂຮງອົບ, ຫ້ອງ ເຢັນ ແລະ ໂຮງງານປຸງແຕ່ງເບື້ອງຕົ້ນ ໃຫ້ປະຊາຊົນ.

➢ **ທະນາຄານເມັດພືດ ແລະ ທະນາຄານສັດ:** ລັດ ຊຸກຍູ້, ສົ່ງເສີມໃຫ້ມີການສ້າງ ຕັ້ງທະນາຄານເມັດພືດ ແລະ ທະນາຄານສັດ ເພື່ອຕອບສະໜອງຄວາມຕ້ອງການຂອງ ຊາວກະສິກອນ ໃນເວລາຈຳເປັນ ດ້ວຍການນຳເອົາຜົນຜະລິດຂອງຕົນ ໄປເປັນຫຼັກຊັບ ຄ້ຳປະກັນ ເພື່ອກູ້ຢືມເງິນ ແລະ ຊາວກະສິກອນ ມີສິດນຳເອົາຜະລິດຕະຜົນ ທີ່ນຳໄປຄ້ຳ ປະກັນນັ້ນ ອອກຈຳໜ່າຍໃນເວລາຜົນຜະລິດມີລາຄາສູງ. ນອກຈາກນີ້, ທະນາຄານ ເມັດພືດ ແລະ ທະນາຄານສັດ ຍັງມີຈຸດປະສົງໃຫ້ຊາວກະສິກອນສາມາດກູ້ຢືມເມັດພືດ ຫຼື ສັດ ໄປນຳໃຊ້ໃນເວລາທີ່ຈຳເປັນ.

➢ **ການຕະຫຼາດ:** ລັດ ຊຸກຍູ້ໃຫ້ພາກສ່ວນເສດຖະກິດ ຊອກຫາຕະຫຼາດພາຍໃນ ແລະ ຕ່າງປະເທດ ດ້ວຍການໂຄສະນາສິນຄ້າ, ການເປີດການວາງສະແດງສິນຄ້າກະສິກຳ ແລະ ເປີດກ້ວາງ ການພົວພັນກັບສາກົນ ກ່ຽວກັບ ການຊື້-ຂາຍ, ແລກປ່ຽນສິນຄ້າກະສິກຳ; ນອກຈາກນີ້ ລັດ ຍັງຊຸກຍູ້ການຜະລິດກະສິກຳຂອງປະຊາຊົນ ດ້ວຍການຜູກພັນສອງ ສົ້ນ ລວມທັງ ສົ່ງເສີມການສ້າງຕັ້ງສະຫະກອນ ແລະ ບໍລິສັດຂອງລັດ ເພື່ອຜູກພັນ ຊື້-ຂາຍຜົນຜະລິດກະສິກຳ. ການນຳຜົນຜະລິດກະສິກຳເຂົ້າມາໃນປະເທດ ຫຼື ສົ່ງອອກ ຕ້ອງປະຕິບັດໃຫ້ຖືກ ຕ້ອງຕາມລະບຽບກົດໝາຍ.




➢ **ລາຄາ:** ລັດ ຮັບປະກັນລາຄາຕ່ຳສຸດ ສຳລັບສິນຄ້າກະສິກຳບາງຊະນິດທີ່ຈຳເປັນແກ່ ການດຳລົງຊີວິດຂອງປະຊາຊົນ. ໃນກໍລະນີທີ່ຈຳເປັນ ລັດ ຈະໄປເກັບຊື້ຜະລິດຕະຜົນ ກະສິກຳດັ່ງກ່າວ ເພື່ອຮັກສາລາຄາໃຫ້ໝັ້ນທ່ຽງ ເປັນຕົ້ນ ໃນລະດູການເກັບກ່ຽວ,

ນອກຈາກນີ້, ລັດ ຕ້ອງຊອກທຸກວິທີທາງ ເພື່ອສະກັດກັ້ນການກົດໜ່ວງລາຄາສິນຄ້າກະສິກຳ ເພື່ອແນໃສ່ປົກປ້ອງຜົນປະໂຫຍດຂອງຜູ້ຜະລິດ ແລະ ຜູ້ບໍລິໂພກ.

- **ການປົກປ້ອງຜົນປະໂຫຍດຂອງຊາວກະສິກອນ:** ລັດ ປົກປ້ອງຜົນປະໂຫຍດຂອງຊາວກະສິກອນ ດ້ວຍການຊຸກຍູ້ການຂະຫຍາຍການຜະລິດ ແລະ ການຊົມໃຊ້ຜະລິດຕະຜົນກະສິກຳພາຍໃນປະເທດ, ການຫຼຸດຜ່ອນ ແລະ ຈຳກັດການນຳເຂົ້າຜະລິດຕະຜົນກະສິກຳ ຈາກຕ່າງປະເທດທີ່ບໍ່ຈຳເປັນ ລວມທັງ ການນຳໃຊ້ມາດຕະການສົ່ງເສີມຕ່າງໆ ທີ່ກ່າວມາຂ້າງເທິງ.

## 2. ປະເພດກິດຈະການກະສິກຳ

ກິດຈະການກະສິກຳ ແມ່ນວຽກງານ ກ່ຽວກັບ ການປູກຝັງ, ການລ້ຽງສັດ ແລະ ການປະມົງ.

ກິດຈະການກະສິກຳ ຢູ່ ສປປ ລາວ ໄດ້ແບ່ງອອກເປັນປະເພດຕ່າງໆ ເຊັ່ນ: ກິດຈະການກ່ຽວກັບ ທີ່ດິນກະສິກຳ, ຊົນລະປະທານ, ແນວພັນພືດ ແລະ ແນວພັນສັດ, ຝຸ່ນ ແລະ ອາຫານສັດ, ຢາປາບສັດຕູພືດ ແລະ ຢາປົວສັດ, ເຄື່ອງມື ແລະ ພາຫະນະກົນຈັກການກະເສດ, ສາງເກັບມ້ຽນ, ການປຸງແຕ່ງຜົນຜະລິດກະສິກຳ, ຕະຫຼາດກະສິກຳ, ການພົວພັນຮ່ວມມືກັບຕ່າງປະເທດ ທາງດ້ານກະສິກຳ.

## 3. ສິດ ແລະ ພັນທະ ຂອງຜູ້ດຳເນີນກິດຈະການກະສິກຳ

### 3.1. ສິດ ຂອງຜູ້ດຳເນີນກິດຈະການກະສິກຳ

ຜູ້ດຳເນີນກິດຈະການກະສິກຳ ມີສິດໄດ້ຮັບການປົກປ້ອງຕາມກົດໝາຍ, ເປັນເຈົ້າກຳມະສິດຕໍ່ຊັບສິນ ແລະ ຜົນທີ່ໄດ້ຮັບ ຈາກການດຳເນີນກິດຈະການກະສິກຳ, ໄດ້ຮັບການຊ່ວຍເຫຼືອ ແລະ ແນະນຳທາງດ້ານວິຊາການ ແລະ ເຕັກໂນໂລຊີ ຈາກຂະແໜງກະສິກຳ ແລະ ປ່າໄມ້ ລວມທັງ ໂອນ ແລະ ສືບທອດ ກິດຈະການກະສິກຳ.

### 3.2. ພັນທະ ຂອງຜູ້ດຳເນີນກິດຈະການກະສິກຳ

ຜູ້ດຳເນີນກິດຈະການກະສິກຳ ມີພັນທະ ດັ່ງນີ້:

- ນຳໃຊ້ທີ່ດິນກະສິກຳ ໃຫ້ຖືກຕາມເປົ້າໝາຍ ແລະ ຕາມລະບຽບກົດໝາຍ;
- ບໍ່ສ້າງຄວາມເສຍຫາຍແກ່ການຜະລິດຂອງຜູ້ອື່ນ ຫຼື ແກ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ;
- ລາຍງານການແຜ່ລະບາດພະຍຸສັດ;
- ປະຕິບັດສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບ;
- ປະຕິບັດມາດຕະການຄວາມປອດໄພທາງດ້ານວິຊາການ;
- ປະຕິບັດພັນທະພາສີອາກອນ ແລະ ພັນທະອື່ນໆ ກ່ຽວກັບ ກິດຈະການກະສິກຳ;
- ລາຍງານຜົນການດຳເນີນກິດຈະການກະສິກຳ ຕາມສັນຍາ;
- ໃຫ້ຄວາມຮ່ວມມືເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາກິດຈະການກະສິກຳ.

## 4. ທີ່ດິນກະສິກຳ

### 4.1. ການນຳໃຊ້ທີ່ດິນກະສິກຳ

ລັດ ຈັດສັນ ແລະ ສົ່ງເສີມໃຫ້ນຳໃຊ້ທີ່ດິນກະສິກຳ ເຂົ້າໃນການຜະລິດ ຢ່າງຖືກຕ້ອງຕາມເປົ້າໝາຍ ຕາມທ່າແຮງຂອງແຕ່ລະເຂດ ເພື່ອໃຫ້ແຕ່ລະຄອບຄົວ ມີທີ່ດິນທຳການຜະລິດ ຕາມຄວາມສາມາດດ້ານແຮງງານ ແລະ ທຶນຮອນຂອງຕົນ ດ້ວຍຮູບການມອບສິດນຳໃຊ້ ຫຼື ໃຫ້ເຊົ່າຕາມລະບຽບກົດໝາຍ ໂດຍຖືເອົາການຍົກສະມັດຖະພາບຂອງດິນເປັນຕົ້ນຕໍ ແລະ ຫັນໄປສູ່ການເຮັດກະເສດສຸມເທື່ອລະກ້າວ. ລັດ ເອົາໃຈໃສ່ຈັດສັນທີ່ດິນໃຫ້ປະຊາຊົນບັນດາເຜົ່າ ເພື່ອທຳການຜະລິດແບບຄົງທີ່ ແນໃສ່ຫຼຸດຜ່ອນການຖາງປ່າເຮັດໄຮ່ ແລະ ກ້າວໄປເຖິງການຢຸດຕິການຖາງປ່າເຮັດໄຮ່ຢ່າງສິ້ນເຊີງ.

**4.2. ປະເພດທີ່ດິນກະສິກຳ** ແບ່ງອອກເປັນ 2 ປະເພດ ຄື: ທີ່ດິນປູກຝັງ ແລະ ທີ່ດິນລ້ຽງສັດ.

- **ທີ່ດິນປູກຝັງ** ແມ່ນ ທີ່ດິນທີ່ນຳໃຊ້ເຂົ້າໃນການປູກຝັງ ຊຶ່ງລວມມີ: ທີ່ດິນທີ່ມີຄວາມຮາບພຽງ ແລະ ທີ່ດິນເນີນ ຫຼື ທີ່ດິນໂນນ;
- **ທີ່ດິນລ້ຽງສັດ** ແມ່ນ ປະເພດທີ່ດິນປອກໂລ້ນ ຫຼື ປ່າຫຍ້າປະເພດຕ່າງໆ ຊຶ່ງສາມາດຫັນມາປູກພືດ ແລະ ປູກຫຍ້າ ສຳລັບ ລ້ຽງສັດ ຫຼື ດິນທີ່ສາມາດເຮັດໜອງເພື່ອລ້ຽງສັດນ້ຳ.





### 4.3. ການຫັນປ່ຽນທີ່ດິນກະສິກຳ

ການຫັນປ່ຽນທີ່ດິນກະສິກຳປະເພດໜຶ່ງ ໄປສູ່ທີ່ດິນກະສິກຳອີກປະເພດໜຶ່ງ ຈະຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ປ່າໄມ້ ຕາມຂະໜາດເນື້ອທີ່ດິນທີ່ຈະຫັນປ່ຽນ.

### 4.4. ການປັບປຸງທີ່ດິນກະສິກຳ

ບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ທຳການຜະລິດກະສິກຳ ຕ້ອງເອົາໃຈໃສ່ປັບປຸງດິນໃຫ້ມີຄວາມອຸດົມສົມບູນ, ສາມາດນຳໃຊ້ໄດ້ຢ່າງຍາວນານ ແລະ ມີປະສິດທິຜົນ ໃນການປູກຝັງ ແລະ ລ້ຽງສັດ ດ້ວຍການນຳໃຊ້ຝຸ່ນຕ່າງໆ ເຊັ່ນ: ຝຸ່ນຄອກ, ຝຸ່ນບົ່ມ, ຝຸ່ນຂຽວ, ຂີ້ເຈັຍ, ປູນ, ຖ່ານຕົມ, ຫີນກາວ.

### 4.5. ເງື່ອນໄຂການນຳໃຊ້ທີ່ດິນກະສິກຳ

ບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຢາກນຳໃຊ້ທີ່ດິນເພື່ອທຳການຜະລິດກະສິກຳ ນັ້ນ ຕ້ອງໄດ້ຮັບອະນຸຍາດຈາກລັດເສຍກ່ອນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍທີ່ດິນ ໂດຍນຳໃຊ້ເຂົ້າໃນການຜະລິດກະສິກຳ ຢ່າງຖືກຕ້ອງຕາມເປົ້າໝາຍ, ມີປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

ຖ້າວ່າ ຜູ້ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ທີ່ດິນກະສິກຳ ຫາກບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ກ່າວມາເທິງນີ້ ພາຍໃນກຳນົດ ສາມປີ ແລ້ວ ກໍຈະໝົດສິດໃນການນຳໃຊ້ທີ່ດິນດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ.

## 5. ແນວພັນພືດ ແລະ ແນວພັນສັດ

### 5.1. ແນວພັນພືດ

ແນວພັນພືດ ແມ່ນ ແນວພັນຂອງພືດລົ້ມລຸກ ຫຼື ພືດຢືນຕົ້ນ ຊຶ່ງອາດຈະແມ່ນແນວພັນບໍລິສຸດ, ແນວພັນປະສົມ ຫຼື ແນວພັນພື້ນເມືອງ ທີ່ໄດ້ຜ່ານການປັບປຸງ, ພັດທະນາ, ຂະຫຍາຍ ຫຼື ສ້າງເປັນແນວພັນໃໝ່ທີ່ມີປະສິດທິພາບສູງ ຕາມຂະບວນການທາງດ້ານວິທະຍາສາດເຕັກນິກ ໂດຍໄດ້ຜ່ານການຮັບຮອງ ແລະ ອະນຸຍາດໃຫ້ນຳໃຊ້ເຂົ້າໃນການຜະລິດ ຈາກກະຊວງກະສິກຳ ແລະ ປ່າໄມ້.

### 5.2. ແນວພັນສັດ

ແນວພັນສັດ ແມ່ນ ແນວພັນຂອງສັດປະເພດຕ່າງໆ ຊຶ່ງປະກອບດ້ວຍແນວພັນບໍລິສຸດ, ແນວພັນປະສົມ ແລະ ແນວພັນພື້ນເມືອງ ລວມທັງສັດບົກ ແລະ ສັດນໍ້າ ທີ່ມີການຈະເລີນເຕີບໃຫຍ່ໄວ, ສາມາດຕອບສະໜອງຜົນຜະລິດໄດ້ຫຼາຍ, ມີຄຸນນະພາບດີ ແລະ ແມ່ນສາຍພັນທີ່ໄດ້ຜ່ານການຄັດເລືອກ, ປັບປຸງ, ຂະຫຍາຍ ຫຼື ສ້າງເປັນແນວພັນໃໝ່ ຕາມຂະບວນການທາງດ້ານວິທະຍາສາດເຕັກນິກ ທີ່ໄດ້ຜ່ານກາຮັບຮອງ ແລະ ອະນຸຍາດໃຫ້ນຳໃຊ້ເຂົ້າໃນການຜະລິດ ຈາກກະຊວງກະສິກຳ ແລະ ປ່າໄມ້.

### 5.3. ການນຳໃຊ້ແນວພັນ

ລັດ ຊຸກຍູ້ໃຫ້ປະຊາຊົນ ຜະລິດ ແລະ ນຳໃຊ້ ແນວພັນພືດ ແລະ ແນວພັນສັດ ທີ່ມີຄຸນນະພາບດີ ແລະ ເໝາະສົມ ກັບຈຸດພິເສດແຕ່ລະທ້ອງຖິ່ນຂອງປະເທດ ເພື່ອໃຫ້ການຜະລິດມີປະສິດທິຜົນສູງ. ການນຳແນວພັນພືດ ຫຼື ແນວພັນສັດເຂົ້າມາພາຍໃນປະເທດ ຫຼື ສົ່ງອອກຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການກະສິກຳ ແລະ ປ່າໄມ້.

## 6. ຝຸ່ນ ແລະ ອາຫານສັດ

### 6.1. ຝຸ່ນ

ຝຸ່ນ ແມ່ນ ວັດສະດຸ ຊຶ່ງມີສ່ວນປະສົມຂອງທາດອິນຊີ ແລະ ທາດເຄມີຕ່າງໆ ທີ່ເປັນທາດອາຫານຈຳເປັນສຳລັບພືດ ເພື່ອຊ່ວຍໃຫ້ພືດໃຫຍ່ໄວ ແລະ ມີຄຸນນະພາບດີ

ລວມທັງປັບປຸງດິນປູກຝັງ ໃຫ້ອຸດົມສົມບູນ. ຝຸ່ນທີ່ນຳໃຊ້ເຂົ້າໃນການຜະລິດກະສິກຳ ໃນ ສປປ ລາວ ມີ ສອງປະເພດຄື: ຝຸ່ນວິທະຍາສາດ ແລະ ຝຸ່ນອິງຄະທາດ.

- **ຝຸ່ນວິທະຍາສາດ** ແມ່ນ ຝຸ່ນທີ່ປະກອບດ້ວຍສານເຄມີປະເພດດຽວ ຫຼື ປະເພດປະສົມ ຊຶ່ງເປັນອາຫານໂດຍກົງຂອງພືດເຊັ່ນ: ຝຸ່ນອາສີດ, ຝຸ່ນຟົດສະຟໍ, ຝຸ່ນໂປຕັດຊຽມ ແລະ ອື່ນໆ;
- **ຝຸ່ນອິງຄະທາດ** ແມ່ນ ຝຸ່ນທີ່ປະກອບດ້ວຍການສະສົມທາດຕ່າງໆ ຈາກການສະຫຼາຍຕົວຂອງເສດເຫຼືອຊາກພືດ, ຊາກສັດ ແລະ ໂລຫະທາດຫຼາຍຊະນິດ ຊຶ່ງເປັນອາຫານທາງອ້ອມຂອງພືດ ລວມທັງ ຊ່ວຍປັບປຸງຄຸນນະພາບຂອງດິນ ເຊັ່ນ: ຝຸ່ນບົ່ມ, ຝຸ່ນມູນສັດ ແລະ ອື່ນໆ;

**ການນຳໃຊ້ຝຸ່ນທຸກຊະນິດ** ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບການນຳໃຊ້ຝຸ່ນ ຢ່າງເຄັ່ງຄັດ ເຊັ່ນ: ນຳໃຊ້ໃຫ້ຖືກຕາມຈຸດປະສົງ, ປະເພດ ແລະ ປະລິມານ ເພື່ອເຮັດໃຫ້ການນຳໃຊ້ຝຸ່ນ ມີປະສິດທິພາບ, ຮັບປະກັນບໍ່ໃຫ້ເປັນອັນຕະລາຍຕໍ່ຊີວິດ, ສຸຂະພາບຂອງ ຄົນ ແລະ ສັດ. ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ວາງລະບຽບ ກ່ຽວກັບ ການນຳໃຊ້ຝຸ່ນ ແລະ ກຳນົດປະເພດຂອງຝຸ່ນທີ່ເປັນອັນຕະລາຍຮ້າຍແຮງ ທີ່ຫ້າມນຳໃຊ້. ພ້ອມກັນນີ້ ກໍຕ້ອງຊ່ວຍເຫຼືອຝຶກອົບຮົມ, ຊຸກຍູ້ໃຫ້ຊາວກະສິກອນ ໄດ້ນຳໃຊ້ຝຸ່ນອິງຄະທາດເປັນຕົ້ນຕໍ ແລະ ນຳໃຊ້ຝຸ່ນໃຫ້ຖືກຕ້ອງຕາມວິທີການ, ມາດຕະຖານເຕັກນິກ ແລະ ທັນກັບລະດູການຜະລິດ.

## 6.2. ອາຫານສັດ

ອາຫານສັດ ແມ່ນ ວັດສະດຸທີ່ນຳມາລ້ຽງສັດ ຊຶ່ງໄດ້ມາຈາກທຳມະຊາດ, ການຜະລິດ ຫຼື ການປຸງແຕ່ງຈາກຜະລິດຕະຜົນກະສິກຳ ແລະ ທາດອື່ນໆ ທີ່ມີຄຸນນະພາບທາງດ້ານໂພຊະນາການ. ອາຫານສັດປະກອບດ້ວຍ ສາມ ປະເພດຄື: **ອາຫານສົດ** ເຊັ່ນ: ຫຍ້າຂຽວ, ເມັດພືດ; **ອາຫານປຸງແຕ່ງເບື້ອງຕົ້ນ** ເຊັ່ນ: ຮຳ, ເຟືອງ, ຫຍ້າບົ່ມ, ຫຍ້າແຫ້ງ ແລະ **ອາຫານສຳເລັດຮູບ** ເຊັ່ນ: ອາຫານປຸງແຕ່ງຂຶ້ນຕາມສູດໂພຊະນາການສຳລັບແຕ່ລະປະເພດສັດ.

## 6.3. ການຄຸ້ມຄອງຝຸ່ນ ແລະ ອາຫານສັດ

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດລະບຽບການ ກ່ຽວກັບ ການຄຸ້ມຄອງຝຸ່ນວິທະຍາສາດ, ຝຸ່ນອິງຄະທາດ ແລະ ອາຫານສັດ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ຂະແໜງ ອຸດສາຫະກຳ ແລະ ການຄ້າ, ການເງິນ, ທະນາຄານ, ວິທະຍາສາດ ແລະ ເຕັກໂນໂລຊີ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອກຳນົດປະເພດ, ຄຸນນະພາບຂອງຝຸ່ນ, ຄຸ້ມຄອງການນຳເຂົ້າ, ການຂົນສົ່ງ, ການຈຳໜ່າຍ, ການເກັບຮັກສາ, ການຫຸ້ມຫໍ່ ແລະ ກິດຈະການອື່ນໆ ທີ່ກ່ຽວພັນກັບຝຸ່ນ ເພື່ອຮັບປະກັນໃຫ້ຝຸ່ນທຸກຊະນິດ ມີສ່ວນປະສົມຖືກຕ້ອງຕາມສູດ, ມີຄຸນນະພາບດີ ພ້ອມທັງຊຸກຍູ້ ໃຫ້ມີການຜະລິດຝຸ່ນ ແລະ ອາຫານສັດຢູ່ພາຍໃນປະເທດ.

## 7. ຢາປາບສັດຕູພືດ ແລະ ຢາປົວສັດ

### 7.1. ຢາປາບສັດຕູພືດ

ຢາປາບສັດຕູພືດ ແມ່ນ ສານທີ່ມີປະຕິກິລິຍາທາງເຄມີ ເພື່ອນຳໃຊ້ເຂົ້າໃນການປ້ອງກັນ, ກຳຈັດສັດຕູພືດ ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ການປູກຝັງ ລວມທັງ ສານເຄມີທີ່ນຳໃຊ້ໃນການເກັບມ້ຽນ, ຮັກສາ ແລະ ການຂົນສົ່ງ.

ຢາປາບສັດຕູພືດ ໄດ້ມາຈາກການປະສົມທາດເຄມີ ຊຶ່ງປຸງແຕ່ງຈາກໂຮງງານ ຫຼື ສະກັດຈາກພືດໂດຍກົງ ຊຶ່ງເອີ້ນວ່າ: ຢາປາບສັດຕູພືດພື້ນເມືອງ.

### 7.2. ຢາປົວສັດ

ຢາປົວສັດ ແມ່ນ ສານທີ່ມີປະຕິກິລິຍາທາງເຄມີ, ປະກອບດ້ວຍສ່ວນປະສົມຂອງທາດເຄມີ ຫຼື ສະກັດໂດຍກົງຈາກພືດ ຫຼື ສັດ ຊຶ່ງມີຄຸນລັກສະນະເປັນຢາ ເພື່ອນຳໃຊ້ເຂົ້າໃນການປ້ອງກັນ ແລະ ປົວພະຍາດຂອງສັດລ້ຽງ.

### 7.3. ການນຳໃຊ້ຢາປາບສັດຕູພືດ ແລະ ຢາປົວສັດ

ຜູ້ນຳໃຊ້ ຢາປາບສັດຕູພືດ ຫຼື ຢາປົວສັດ ຕ້ອງປະຕິບັດໃຫ້ຖືກກັບຈຸດປະສົງ ແລະ ລະບຽບການຢ່າງເຄັ່ງຄັດ ລວມທັງ ການເກັບມ້ຽນຮັກສາຢາດັ່ງກ່າວ ເພື່ອເຮັດໃຫ້ການນຳໃຊ້ຢາປາບສັດຕູພືດ ຫຼື ຢາປົວສັດ ມີປະສິດທິພາບ ທັງຮັບປະກັນບໍ່ໃຫ້ເປັນອັນຕະລາຍຕໍ່ຊີວິດ, ສຸຂະພາບຂອງຄົນ ແລະ ສັດ.

### 7.4. ການຄຸ້ມຄອງຢາປາບສັດຕູພືດ ແລະ ຢາປົວສັດ

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດລະບຽບການ ກ່ຽວກັບ ການຄຸ້ມຄອງຢາປາບສັດຕູພືດ ແລະ ຢາປົວສັດ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເຊັ່ນ: ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງສາທາລະນະສຸກ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ ເພື່ອກຳນົດປະເພດ, ຄຸນນະພາບຂອງຢາທີ່ເປັນອັນຕະລາຍ ແລະ ປະເພດຫ້າມນຳໃຊ້, ຄຸ້ມຄອງການນຳເຂົ້າ, ການຂົນສົ່ງ, ການຈຳໜ່າຍ, ການເກັບຮັກສາ ແລະ ກິດຈະການອື່ນໆ ທີ່ກ່ຽວຂ້ອງກັບຢາປາບສັດຕູພືດ ຫຼື ຢາປົວສັດ ເພື່ອຮັບປະກັນໃຫ້ປະເພດຢາຕ່າງໆ ມີສ່ວນປະສົມຖືກຕ້ອງຕາມສູດ, ຕາມມາດຕະຖານເຕັກນິກ ແລະ ມີຄຸນນະພາບດີ.

ຢາປາບສັດຕູພືດ ແລະ ຢາປົວສັດທຸກປະເພດ ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ ແລະ ຈຳໜ່າຍ ນັ້ນ ຕ້ອງຕິດສະຫຼາກຢ່າງຈະແຈ້ງ, ເຫັນໄດ້ງ່າຍ ແລະ ສາມາດເຂົ້າໃຈໄດ້ ຊຶ່ງຈະຕ້ອງບົ່ງບອກຄຸນລັກສະນະ, ຊະນິດສານເຄມີ, ວິທີ ແລະ ກຳນົດເວລາການນຳໃຊ້ຢ່າງລະອຽດ, ຄວາມເປັນອັນຕະລາຍ ພ້ອມທັງແນະນຳວິທີແກ້ພິດໃນເບື້ອງຕົ້ນ. ໂດຍທົ່ວໄປຈະເຫັນສັນຍາລັກທີ່ບົ່ງບອກວິທີການນຳໃຊ້ ຕິດໄວ້ ດັ່ງນີ້:

**ການເກັບຮັກສາ**



ເກັບຮັກສາໄກຈາກມືເດັກ

**ຄຳແນະນຳ**



ທຳຄວາມສະອາດຫຼັງການນຳໃຊ້



ໃສ່ອຸປະກອນປ້ອງກັນຕາ



ໃສ່ອຸປະກອນປ້ອງກັນດັງ



ໃສ່ໜ້າກາກປ້ອງກັນອາຍພິດ



ໃສ່ຖົງມືປ້ອງກັນການສຳພັດ



ໃສ່ເກີບໂບກປ້ອງກັນຕີນ



ໃສ່ຊຸດປ້ອງກັນ ໃນເວລາສີດຢາ ຫຼື ໃຊ້ຢາ

**ອັນຕະລາຍ**



ເປັນອັນຕະລາຍຕໍ່ສັດລ້ຽງ



ເປັນອັນຕະລາຍຕໍ່ປາ-ສັດນ້ຳ

## 8. ເຄື່ອງມື ແລະ ພາຫະນະກົນຈັກການກະເສດ

ເຄື່ອງມື ແລະ ພາຫະນະກົນຈັກການກະເສດ ແມ່ນ ເຄື່ອງມື ແລະ ພາຫະນະກົນຈັກທີ່ນຳໃຊ້ເຂົ້າໃນການປູກຝັງ ແລະ ລ້ຽງສັດ ຊຶ່ງລວມມີ:

- ເຄື່ອງມື ແລະ ພາຫະນະກົນຈັກ ທີ່ຮັບໃຊ້ເຂົ້າໃນການບຸກເບີກເນື້ອທີ່ດິນປູກຝັງ ຫຼື ລ້ຽງສັດ, ການດັດແປງໜ້າດິນ, ໄຖ, ຄາດ, ປັກດຳ, ເສຍຫຍ້າ, ໃສ່ຝຸ່ນ, ປ້ອງກັນ ຫຼື ປາບສັດຕູພືດ, ເກັບກ່ຽວ, ຟາດ, ເກັບຮັກສາ, ສີ, ບົດ ແລະ ຂົນສົ່ງ ຊຶ່ງປະກອບດ້ວຍເຄື່ອງມືງ່າຍດາຍ, ປະຖົມປະຖານ ແລະ ພາຫະນະກົນຈັກທັນສະໄໝ;
- ເຄື່ອງມື ແລະ ພາຫະນະກົນຈັກປ້ອງກັນ, ຮັກສາ, ລ້ຽງ ແລະ ປິ່ນປົວສັດ;
- ເຄື່ອງມືຕົບແຕ່ງ, ຄັດເລືອກຜົນຜະລິດກະສິກຳ, ແຊ່ເຢັນ ແລະ ອື່ນໆ.

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ກຳນົດ ລະບຽບການ ແລະ ມາດຕະຖານເຕັກນິກ ໃນການນຳເຂົ້າ ຫຼື ຜະລິດບັນດາເຄື່ອງມື ແລະ ພາຫະນະກົນຈັກການກະເສດ ໂດຍປະສານສົມທົບ ກັບກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

## 9. ສາງເກັບມ້ຽນ

ສາງເກັບມ້ຽນ ແມ່ນ ອາຄານ, ສະຖານທີ່ ສໍາລັບເກັບມ້ຽນຜົນຜະລິດກະສິກໍາ, ຝຸ່ນ ແລະ ອາຫານສັດ, ຢາປາບສັດຕູພືດ ແລະ ຢາປົວສັດ, ຮັກສາຄຸນນະພາບໃຫ້ຍາວນານ ຊຶ່ງລວມມີ: ເລົ້າເຂົ້າ, ສາງເກັບມ້ຽນເມັດພືດ, ແນວພັນ, ຝຸ່ນ, ອາຫານສັດ, ສາງເຢັນສໍາລັບເກັບມ້ຽນ ຜັກ, ໝາກໄມ້, ຊີ້ນສົດ, ນົມສົດ ແລະ ສາງສະເພາະ ເພື່ອເກັບມ້ຽນຢາປາບສັດຕູພືດ ແລະ ຢາປົວສັດ.

ການສ້າງສາງເກັບມ້ຽນ ຕ້ອງຮັບປະກັນໃຫ້ຖືກຕ້ອງຕາມລະບຽບການ ແລະ ມາດຕະຖານເຕັກນິກ ທີ່ກະຊວງກະສິກໍາ ແລະ ປ່າໄມ້ວາງອອກ, ພ້ອມກັນນັ້ນ ກໍຕ້ອງໃຫ້ຖືກຕ້ອງຕາມລະບຽບຂອງຜັງເມືອງ.

## 10. ການປຸງແຕ່ງຜົນຜະລິດກະສິກໍາ

ການປຸງແຕ່ງຜົນຜະລິດກະສິກໍາ ແມ່ນ ການນໍາເອົາໝາກຜົນທີ່ໄດ້ມາຈາກ ການປູກຝັງ, ລ້ຽງສັດ ແລະ ການປະມົງ ມາປຸງແຕ່ງໃຫ້ເປັນຜະລິດຕະພັນເຄິ່ງສໍາເລັດຮູບ ແລະ ສໍາເລັດຮູບ ເຊັ່ນ: ການດອງ, ການຕາກແຫ້ງ, ການເຮັດອາຫານສໍາເລັດຮູບ, ການເຮັດເຄື່ອງກະປ໋ອງ, ການສະກັດນໍ້າມັນພືດ, ການຜະລິດເປັນເຄື່ອງໃຊ້ສອຍ ແລະ ອື່ນໆ.

ການສ້າງໂຮງຫັດຖະກໍາ ແລະ ໂຮງງານປຸງແຕ່ງຜົນຜະລິດກະສິກໍາ ຕ້ອງຮັບປະກັນໃຫ້ຖືກຕາມລະບຽບການ ແລະ ມາດຕະຖານເຕັກນິກ ທີ່ກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ກະຊວງສາທາລະນະສຸກ ວາງອອກ, ພ້ອມກັນນັ້ນ ກໍໃຫ້ຖືກຕ້ອງຕາມລະບຽບຂອງຜັງເມືອງ.

## 11. ຕະຫຼາດກະສິກໍາ

ຕະຫຼາດກະສິກໍາ ແມ່ນ ບ່ອນຊື້ຂາຍຜົນຜະລິດກະສິກໍາ ລະຫວ່າງ ຜູ້ຜະລິດ ແລະ ຜູ້ຊົມໃຊ້ ລວມທັງ ການນໍາເອົາຜົນຜະລິດກະສິກໍາອອກສູ່ຂອດຈໍລະຈອນທົ່ວໄປ. ຕະຫຼາດກະສິກໍາມີຄວາມສໍາຄັນຕໍ່ການຊຸກຍູ້ຂະບວນການຜະລິດກະສິກໍາຢູ່ ສປປ ລາວ ແນໃສ່ຕອບສະໜອງສະບຽງອາຫານຢ່າງພຽງພໍ ແລະ ເປັນສິນຄ້າສົ່ງອອກ.

ຕະຫຼາດກະສິກໍາ ຕ້ອງສ້າງຂຶ້ນຢ່າງກ້ວາງຂວາງດ້ວຍຫຼາຍຮູບການ, ຫຼາຍລະດັບທັງຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອເປັນບ່ອນຈໍາໜ່າຍຜົນຜະລິດກະສິກໍາ, ສ້າງຕັ້ງສະຫະກອນ ແລະ ບໍລິສັດຜູກພັນຊື້-ຂາຍ ກັບຊາວກະສິກອນໂດຍກົງ, ສ້າງຕັ້ງບໍລິສັດສົ່ງອອກຜະລິດຕະຜົນກະສິກໍາ.

## 12. ການພົວພັນຮ່ວມມືດ້ານກະສິກໍາ ກັບຕ່າງປະເທດ

ລັດ ເປີດກວ້າງການຮ່ວມມືກັບສາກົນ ທາງດ້ານກະສິກໍາ ເພື່ອແລກປ່ຽນບົດຮຽນ, ວິຊາການ, ການຄຸ້ມຄອງ, ນໍາໃຊ້ວິທະຍາສາດ, ເຕັກໂນໂລຊີ ທີ່ທັນສະໄໝ ເພື່ອມາພັດທະນາກິດຈະການກະສິກໍາຂອງປະເທດເຮົາ ໃຫ້ມີການຂະຫຍາຍຕົວ ແລະ ມີປະສິດທິພາບສູງ.

ສປປ ລາວ ຍາດແຍ່ງທຶນຮອນ ຈາກຕ່າງປະເທດ ເພື່ອມາເສີມຂະຫຍາຍການປູກຝັງ, ລ້ຽງສັດ ລວມທັງການດຶງດູດການລົງທຶນຂອງຕ່າງປະເທດ ເຂົ້າໃນກິດຈະການກະສິກຳ.

## III. ກົດໝາຍວ່າດ້ວຍກະສິກຳ ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດ ມີຫຍັງແດ່ ?

ກົດໝາຍວ່າດ້ວຍກະສິກຳ ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1) ຖົມດິນກະສິກຳ ແລະ ຂຸດເອົາດິນກະສິກຳດ້ວຍຮູບການ ແລະ ວິທີການໃດກໍຕາມທີ່ຈະເຮັດໃຫ້ທີ່ດິນກະສິກຳດັ່ງກ່າວ ປ່ຽນແປງຈາກສະພາບເດີມ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການກະສິກຳ ແລະ ປ່າໄມ້;
2) ນຳໃຊ້ທີ່ດິນກະສິກຳ ບໍ່ຖືກຕ້ອງຕາມເປົ້າໝາຍ ແລະ ລະບຽບກົດໝາຍ;
3) ບໍ່ປະຕິບັດສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບ ຕາມກົດໝາຍ ແລະ ມາດຕະການຄວາມປອດໄພທາງດ້ານວິຊາການ;
4) ນຳເຂົ້າ ຫຼື ສົ່ງອອກຜົນຜະລິດກະສິກຳ ໂດຍບໍ່ໄດ້ຮັບອະນຸຍາດ;
5) ເຮັດຄອກສັດໃສ່ກ້ອງຕະລ່າງເຮືອນ ຫຼື ເຮັດຄອກສັດໃກ້ນ້ຳສ້າງ ຫຼື ໃກ້ຫ້ວຍ, ໜອງ, ຄອງ, ບຶງ ຂອງສາທາລະນະ;
6) ບໍ່ລາຍງານການແຜ່ລະບາດພະຍຸສັດ ແລະ ການດຳເນີນກິດຈະການກະສິກຳ ຕາມສັນຍາ;
7) ລ້ຽງສັດຕາມແຄມທາງຫຼວງແຫ່ງຊາດ, ບໍ່ຄຸ້ມຄອງຮັກສາສັດລ້ຽງ ເຮັດໃຫ້ທຳລາຍຜົນລະປູກຂອງຜູ້ອື່ນ ຫຼື ກໍ່ໃຫ້ເກີດອຸປະຕິເຫດບົນທ້ອງຖະໜົນ;
8) ນຳໃຊ້ອຸປະກອນ ຫຼື ວິທີການທີ່ມີລັກສະນະທຳລາຍ, ດັບສູນພັນປາ ແລະ ສັດນ້ຳອື່ນໆ ເຊັ່ນ: ຢາເບື່ອ, ລະເບີດ, ໄຟຟ້າ, ແຫຖີ່, ມອງຖີ່, ໜ້າກາກ ລວມທັງ ການນຳໃຊ້ຕ້ອນ, ລີ່, ໂຕ່ງ ຕາມຫ້ວຍຮ່ອງ ເພື່ອຮິບໂຮມເອົາປານ້ອຍ, ປາໃຫຍ່ ເປັນຕົ້ນ ແມ່ນໃນລະດູແຜ່ພັນ;
9) ສ້າງຄວາມເສຍຫາຍ ແກ່ການຜະລິດຂອງຜູ້ອື່ນ ຫຼື ແກ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;
10) ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາກິດຈະການກະສິກຳ ແລະ ບໍ່ປະຕິບັດພັນທະພາສີອາກອນ ຫຼື ພັນທະອື່ນ ກ່ຽວກັບ ກິດຈະການກະສິກຳ;
11) ພຶດຕິກຳອື່ນທີ່ເປັນຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## IV. ຖ້າລະເມີດກົດໝາຍວ່າດ້ວຍກະສິກຳ ຈະໄດ້ຮັບໂທດຄືແນວໃດ ?

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ລະເມີດກົດໝາຍວ່າດ້ວຍກະສິກຳ ຈະຖືກລົງໂທດແຕ່ເບົາຫາໜັກ ຕາມແຕ່ລະກໍລະນີທີ່ໄດ້ລະບຸໄວ້ໃນ ມາດຕາ 80, 81, 82 ແລະ 83 ຂອງກົດໝາຍວ່າດ້ວຍກະສິກຳ ຄື:

1. **ມາດຕະການຕັກເຕືອນ ແລະ ສຶກສາອົບຮົມ**: ນຳໃຊ້ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍວ່າດ້ວຍກະສິກຳ ສະຖານເບົາ ເຊັ່ນ: ບໍ່ລາຍງານຜົນການດຳເນີນກິດຈະການກະສິກຳ ຕາມສັນຍາ, ບໍ່ລາຍງານການແຜ່ລະບາດພະຍຸສັດ, ປະຕິບັດງານບໍ່ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ການລະເມີດໃນສະຖານເບົາອື່ນໆ ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ.
2. **ມາດຕະການປັບໃໝ:** ນຳໃຊ້ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍວ່າດ້ວຍກະສິກຳ ໃນກໍລະນີໃດໜຶ່ງ ຄື:
   – ດຳເນີນທຸລະກິດກະສິກຳ ໂດຍບໍ່ມີໃບອະນຸຍາດ ສຳລັບທຸລະກິດທີ່ຕ້ອງໄດ້ຂໍອະນຸຍາດຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍວິສາຫະກິດ ຫຼື ບໍ່ຕໍ່ໃບອະນຸຍາດທີ່ໝົດອາຍຸ;
   – ລາຍງານບໍ່ຖືກຕ້ອງຕາມຄວາມຈິງ;
   – ບໍ່ປະຕິບັດ ຕາມມາດຕະການຄວາມປອດໄພທາງດ້ານວິຊາການ ແລະ ກໍ່ຄວາມເສຍຫາຍໃຫ້ຜູ້ອື່ນ;
   – ບໍ່ນຳໃຊ້ມາດຕະການ ສະກັດກັ້ນຜົນກະທົບຕໍ່ສິ່ງແວດລ້ອມ;
   – ສ້າງຄວາມເສຍຫາຍ ໃຫ້ແກ່ການຜະລິດ ທີ່ເກີດມາຈາກຄວາມຜິດພາດຂອງຕົນ ເຊັ່ນ: ເຮັດໃຫ້ດິນກະສິກຳເສື່ອມຄຸນນະພາບ, ບໍ່ສະກັດກັ້ນການແຜ່ຂະຫຍາຍພະຍາດພືດ ຫຼື ພະຍາດສັດ, ສ້າງຄວາມເສຍຫາຍໃຫ້ແກ່ການຜະລິດຂອງຜູ້ອື່ນ, ລະບົບນໍ້າຊົນລະປະທານ, ຫ້ວຍ, ຮ່ອງ, ຄອງ, ບຶງ ແລະ ອື່ນໆ;
   – ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ຄຸ້ມຄອງ ແລະ ກວດກາ ກິດຈະການກະສິກຳ ຫຼື ບໍ່ປະຕິບັດຕາມສັນຍາ ເຮັດການຜະລິດກະສິກຳ.
3. **ມາດຕະການທາງອາຍາ:** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ເຊັ່ນ: ການປອມແປງໃບອະນຸຍາດດຳເນີນກິດຈະການກະສິກຳ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ, ບໍ່ປະຕິບັດຕາມມາດຕະການຄວາມປອດໄພ ຊຶ່ງພາໃຫ້ມີຄົນເສຍຊີວິດ, ສຸຂະພາບ ຫຼື ພາໃຫ້ເກີດມີຄວາມເສຍຫາຍຕໍ່ຊັບສິນຂອງລັດ, ຂອງລວມໝູ່ ຫຼື ຂອງປະຊາຊົນ ກໍຈະຖືກລົງໂທດ ຕາມກົດໝາຍອາຍາ.
4. **ມາດຕະການໂທດເພີ່ມ:** ນອກຈາກໂທດຕົ້ນຕໍທີ່ໄດ້ກ່າວມາຂ້າງເທິງ (ຂໍ້ 1 ເຖິງ ຂໍ້ 3) ນີ້ແລ້ວ ຜູ້ລະເມີດທີ່ໄດ້ກໍ່ຄວາມເສຍຫາຍຢ່າງຮ້າຍແຮງຕໍ່ຊັບສິນຂອງລັດ, ສິ່ງແວດລ້ອມສັງຄົມ ຫຼື ທຳມະຊາດ ຈະຖືກປະຕິບັດມາດຕະການໂທດເພີ່ມອີກ ເຊັ່ນ: ໂຈະກິດຈະການກະສິກຳ, ຖອນໃບອະນຸຍາດ, ຮິບພາຫະນະທີ່ນຳໃຊ້ເຂົ້າໃນການກະທຳຜິດນັ້ນ.

# ຄວາມຮູ້ພື້ນຖານ ກ່ຽວກັບ ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ 2019)

**ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ) ໄດ້ຖືກຮັບຮອງເອົາໃນກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII ໃນວັນທີ 13 ມິຖຸນາ 2019 ແລະ ປະທານປະເທດແຫ່ງ ສປປ ລາວ ໄດ້ປະກາດໃຊ້ຢ່າງເປັນທາງການ ໃນວັນທີ 25 ກໍລະກົດ 2019 ຊຶ່ງປະກອບມີ 15 ພາກ, 16 ໝວດ ແລະ 175 ມາດຕາ.**

## I. ຄວາມສຳຄັນຂອງກົດໝາຍວ່າດ້ວຍປ່າໄມ້ ມີຄືແນວໃດ ?

### 1. ຄວາມສຳຄັນຂອງປ່າໄມ້ ແລະ ທີ່ດິນປ່າໄມ້

ຕັ້ງແຕ່ໃດມາ ປ່າໄມ້ ແລະ ທີ່ດິນປ່າໄມ້ ແມ່ນຕິດພັນກັບການດຳລົງຊີວິດ ຂອງປະຊາຊົນລາວບັນດາເຜົ່າ ໃນການສະໜອງໄມ້ ເພື່ອການສ້າງສາ, ຢາປົວພະຍາດ, ເຄື່ອງນຸ່ງຫົ່ມ, ອາຫານ, ເຮັດຟືນ, ເປັນແຫຼ່ງວັດຖຸດິບ ໃຫ້ແກ່ການຜະລິດອຸດສາຫະກຳໄມ້, ເປັນບ່ອນທ່ອງທ່ຽວທຳມະຊາດ, ການຄົ້ນຄວ້າວິທະຍາສາດ ແລະ ເປັນທີ່ຢູ່ອາໄສຂອງສັດປ່າ.

ນອກຈາກນັ້ນ ປ່າໄມ້ ມີຄຸນປະໂຫຍດທີ່ສຳຄັນຕໍ່ການດຳລົງຊີວິດ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ຂະຫຍາຍຕົວຂຶ້ນເລື້ອຍໆ, ປ່າໄມ້ ຍັງປົກປັກຮັກສາສິ່ງແວດລ້ອມ ເຊັ່ນ: ດັດປັບອາກາດ,ເປັນແຫຼ່ງດູດຊຶມຊັບອາຍກາກບອນນິກ, ການພັກຜ່ອນຢ່ອນໃຈ, ປົກປັກຮັກສາແຫຼ່ງນ້ຳ, ດູດຊຶມນ້ຳຝົນ ແລະ ນ້ຳໃຕ້ດິນ, ຮັກສາຄຸນນະພາບຂອງດິນ, ຮັບປະກັນການຜະລິດກະສິກຳ, ຊົນລະປະທານ ແລະ ພະລັງງານໄຟຟ້ານ້ຳຕົກ; ປ່າໄມ້ ຍັງມີຄວາມສຳຄັນຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຄື: ເປັນຊາຍແດນລະຫວ່າງຊາດ ຊຶ່ງໃນໄລຍະຕໍ່ສູ້ກູ້ຊາດ ພວກເຮົາຍັງອາໄສປ່າໄມ້ ເປັນບ່ອນຢູ່ອາໄສ ຊຶ່ງບົດບາດສຳຄັນນີ້ ແມ່ນບໍ່ມີສິ່ງອື່ນໃດ ຈະເຮັດແທນໄດ້.



ຖ້າຫາກວ່າ ປ່າໄມ້ຖືກທຳລາຍ ຈະເກີດມີໄພທຳມະຊາດ, ດິນຟ້າອາກາດມີການປ່ຽນແປງ, ເຮັດໃຫ້ ນ້ຳຖ້ວມ, ແຫ້ງແລ້ງ, ເກີດລົມພະຍຸ, ເກີດການເຊາະເຈື່ອນຂອງດິນ, ສັດນ້ຳ

ແລະ ສັດປ່າ ອາດຈະສູນພັນ, ບໍ່ມີເຄື່ອງປ່າຂອງດົງ ເຊັ່ນ: ເຫັດ, ໜໍ່ໄມ້, ໝາກໄມ້, ຫົວ, ເຄືອ, ຮາກໄມ້ ແລະ ອື່ນໆ ຊຶ່ງຈະສົ່ງຜົນກະທົບຕໍ່ການດຳລົງຊີວິດ.

ໂດຍເຫັນໄດ້ເຖິງຄວາມສຳຄັນຂອງປ່າໄມ້ ແລະ ທີ່ດິນປ່າໄມ້ ຄືດັ່ງກ່າວ, ລັດ ຈຶ່ງໄດ້ກຳນົດເອົາ **ວັນທີ 01 ມິຖຸນາ ເປັນວັນປູກຕົ້ນໄມ້ແຫ່ງຊາດ** ເພື່ອສ້າງສະຕິຮັກ, ຫວງແຫນໃນການປົກປັກຮັກສາ, ພັດທະນາປ່າໄມ້, ທີ່ດິນປ່າໄມ້ ແລະ ສິ່ງແວດລ້ອມທຳມະຊາດ ໃຫ້ແກ່ປະຊາຊົນບັນດາເຜົ່າ ໂດຍສະເພາະອະນຸຊົນ ແນໃສ່ເຮັດໃຫ້ປ່າໄມ້ ອຸດົມສົມບູນ ແລະ ບໍ່ໃຫ້ປົກແຫ້ງຈັກເທື່ອ.

### 2. ຄວາມສຳຄັນຂອງກົດໝາຍວ່າດ້ວຍປ່າໄມ້

ຍ້ອນເຫັນໄດ້ບົດບາດຄວາມສຳຄັນຂອງປ່າໄມ້ ທີ່ກ່າວມາຂ້າງເທິງນັ້ນ, ຍາມໃດພັກ ແລະ ລັດຖະບານ ກໍມີຄວາມເປັນຫ່ວງເປັນໃຍ ແລະ ໄດ້ວາງແນວທາງນະໂຍບາຍ ກໍຄືລະບຽບກົດໝາຍ ແນໃສ່ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ຊັບພະຍາກອນປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ຍືນນານ. ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ປະກອບດ້ວຍ 12 ພາກ, 16 ໝວດ ແລະ 130 ມາດຕາ, ຊຶ່ງແມ່ນໜຶ່ງໃນລະບົບກົດໝາຍຂອງລັດ ທີ່ໄດ້ສ້າງຂຶ້ນບົນພື້ນຖານຂອງລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

### 3. ຈຸດປະສົງຂອງກົດໝາຍວ່າດ້ວຍປ່າໄມ້

ກົດໝາຍວ່າດ້ວຍປ່າໄມ້ ໄດ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ ແລະ ກວດກາ ປ່າໄມ້ ແລະ ທີ່ດິນປ່າໄມ້, ສົ່ງເສີມການຟື້ນຟູ, ປູກ ແລະ ຂະຫຍາຍຊັບພະຍາກອນປ່າໄມ້ ເພື່ອເຮັດໃຫ້ຊັບພະຍາກອນປ່າໄມ້ມີຄວາມອຸດົມສົມບູນ, ເພີ່ມຄວາມປົກຫຸ້ມປ່າໄມ້, ເປັນແຫຼ່ງທ່ອງທ່ຽວ, ທຳມາຫາກິນ ແລະ ນຳໃຊ້ຂອງປະຊາຊົນ ໂດຍບໍ່ປົກແຫ້ງ ແນໃສ່ຮັບປະກັນ ການປົກປັກຮັກສາຄຸນນະພາບຂອງດິນ, ອາກາດ, ແຫຼ່ງນ້ຳ, ຊີວະນາໆພັນ, ສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

## II. ກົດໝາຍວ່າດ້ວຍປ່າໄມ້ ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດໄດ້ ມີຫຍັງແດ່ ?

### 1. ນະໂຍບາຍ ກ່ຽວກັບ ປ່າໄມ້ ແລະ ທີ່ດິນປ່າໄມ້

ລັດ ສົ່ງເສີມການລົງທຶນໃສ່ການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດປ່າໄມ້, ສ້າງພື້ນຖານວັດຖຸເຕັກນິກ ເພື່ອປົກປັກຮັກສາສິ່ງແວດລ້ອມ, ແຫຼ່ງນ້ຳ, ຊີວະນາໆພັນ ແລະ ການດຳລົງຊີວິດຂອງປະຊາຊົນ ລວມທັງການຈັດສັນອາຊີບຄົງທີ່ ໃຫ້ປະຊາຊົນໃນເຂດປ່າໄມ້.

ລັດ ຊຸກຍູ້ໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ປ່າໄມ້ ແລະ ທີ່ດິນປ່າໄມ້ທຸກປະເພດ ໃນເຂດທີ່ດິນປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ໃຫ້ອຸດົມສົມບູນ ເພື່ອປົກປັກຮັກສາສິ່ງແວດລ້ອມ, ເປັນວັດຖຸດິບປ້ອນໂຮງງານອຸດສາຫະກຳ ແລະ ຫັດຖະກຳ ຕາມນະໂຍບາຍຕ່າງໆ ເຊັ່ນ: ນະໂຍບາຍສິນເຊື່ອ, ຍົກເວັ້ນ ຫຼື ຫຼຸດຜ່ອນພາສີ, ອາກອນ ຕາມກົດໝາຍ.

ລັດ ຊຸກຍູ້ ແລະ ສົ່ງເສີມ ໃຫ້ມີການນຳໃຊ້ປ່າໄມ້ ເປັນແຫຼ່ງທ່ອງທ່ຽວ, ສະຖານທີ່ພັກຜ່ອນ, ບ່ອນສຶກສາຄົ້ນຄວ້າທົດລອງ, ການຊື້ຂາຍກາກບອນປ່າໄມ້, ການບໍລິການດ້ານລະບົບນິເວດປ່າໄມ້ ແລະ ອື່ນໆ ຕາມກົດໝາຍ.

ລັດ ຮັບຮູ້ ການດຳເນີນທຸລະກິດໄມ້ ທີ່ຖືກຕ້ອງຕາມກົດໝາຍ ໂດຍສ້າງລະບົບການຢັ້ງຢືນປ່າໄມ້, ການຄ້ຳປະກັນໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຕ້ອງຕາມມາດຕະຖານການຄຸ້ມຄອງປ່າໄມ້ສາກົນ.





2. **ປະເພດປ່າໄມ້ ແລະ ທີ່ດິນປ່າໄມ້** ແບ່ງອອກເປັນ 3 ປະເພດ ຄື:

- **ປ່າປ້ອງກັນ** ແມ່ນ ປ່າໄມ້ທີ່ໄດ້ກຳນົດເພື່ອຈຸດປະສົງນຳໃຊ້ໃນການຮັກສາແຫຼ່ງນ້ຳ, ແຄມນ້ຳ, ແຄມທາງ, ປ້ອງກັນການເຊາະເຈື່ອນ ແລະ ຮັກສາຄຸນນະພາບຂອງດິນ, ເຂດຍຸດທະສາດ ເພື່ອປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປ້ອງກັນໄພທຳມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ.
- **ປ່າສະຫງວນ** ແມ່ນ ປ່າໄມ້ທີ່ໄດ້ກຳນົດເພື່ອຈຸດປະສົງນຳໃຊ້ໃນການອະນຸລັກທຳມະຊາດ, ປົກປັກຮັກສາ ແລະ ຂະຫຍາຍ ພັນພືດ, ພັນສັດນ້ຳ ແລະ ສັດປ່ານາໆຊະນິດ, ລະບົບນິເວດປ່າໄມ້ ແລະ ສິ່ງຕ່າງໆ ທີ່ມີຄຸນຄ່າທາງດ້ານ ທຳມະຊາດ, ປະຫວັດສາດ, ວັດທະນະທຳ, ການທ່ອງທ່ຽວ, ສິ່ງແວດລ້ອມ, ການສຶກສາ ແລະ ການຄົ້ນຄວ້າທົດລອງວິທະຍາສາດ.
- **ປ່າຜະລິດ** ແມ່ນ ປ່າໄມ້ທຳມະຊາດ ແລະ ປ່າປູກ ທີ່ໄດ້ກຳນົດເປັນເຂດສະໜອງໄມ້ ແລະ ເຄື່ອງປ່າຂອງດົງເປັນສິນຄ້າ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ.

**ສຳລັບປ່າປ້ອງກັນ ແລະ ປ່າສະຫງວນ** ມີ 4 ລະດັບຄື: ລະດັບຊາດ, ແຂວງ, ເມືອງ ແລະ ບ້ານ ສ່ວນປ່າຜະລິດ ມີແຕ່ລະດັບຊາດເທົ່ານັ້ນ.












## 3. ກຳມະສິດ ກ່ຽວກັບ ປ່າໄມ້ ແລະ ທີ່ດິນປ່າໄມ້

- ປ່າໄມ້ທຳມະຊາດ ແລະ ທີ່ດິນປ່າໄມ້ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຕົວແທນ ແລະ ຄຸ້ມຄອງຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍໃຫ້ອົງການຈັດຕັ້ງ ແລະ ປະຊາຊົນທຸກຄົນມີສ່ວນຮ່ວມ ໃນການບູລະນະ, ປົກປັກຮັກສາ ແລະ ນຳໃຊ້ ຕາມກົດໝາຍ;
- ປ່າປູກ ແລະ ໄມ້ປູກ ທີ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລວມທັງຜູ້ລົງທຶນປູກ ຕາມເຂດທີ່ໄດ້ຈັດສັນໃຫ້ດ້ວຍເຫື່ອແຮງ ຫຼື ທຶນຮອນຂອງຕົນ ໂດຍການຮັບຮູ້ຈາກອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນກຳມະສິດຂອງຜູ້ປູກ ຫຼື ຂອງຜູ້ລົງທຶນປູກ;
- ຕົ້ນໄມ້ທຳມະຊາດ ທີ່ມີໃນທີ່ດິນນາ, ທີ່ດິນສວນ, ທີ່ດິນປຸກສ້າງ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບສິດນຳໃຊ້ທີ່ດິນຕາມກົດໝາຍ ເປັນກຳມະສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ. ສຳລັບຕົ້ນໄມ້ ທີ່ເກີດຂຶ້ນຕາມທຳມະຊາດ ຫຼື ປູກ ໃນທີ່ດິນສາທາລະນະ ເປັນກຳມະສິດຂອງລັດ.

## 4. ສິດຂອງບຸກຄົນ ແລະ ນິຕິບຸກຄົນ ທີ່ມີຕໍ່ປ່າໄມ້ ແລະ ທີ່ດິນປ່າໄມ້

ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສິດນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຄ່າບໍລິການດ້ານລະບົບນິເວດປ່າໄມ້ ແລະ ຄຸນຄ່າອື່ນຂອງປ່າໄມ້ ໃນເຂດທີ່ ລັດ ຈັດສັນໃຫ້ ເພື່ອດຳເນີນກິດຈະການ ຕາມກົດໝາຍ.

## 5. ພັນທະຂອງບຸກຄົນ ແລະ ນິຕິບຸກຄົນ ທີ່ມີຕໍ່ປ່າໄມ້ ແລະ ທີ່ດິນປ່າໄມ້

ພົນລະເມືອງລາວທຸກຄົນ, ຄອບຄົວ, ການຈັດຕັ້ງ ແລະ ທຸກພາກສ່ວນ ທີ່ອາໄສຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລ້ວນແຕ່ມີພັນທະປະກອບສ່ວນເຂົ້າໃນການປົກປັກຮັກສາ, ພັດທະນາປ່າໄມ້, ຊັບພະຍາກອນປ່າໄມ້, ທີ່ດິນປ່າໄມ້, ແຫຼ່ງນ້ຳ, ສັດນ້ຳ, ສັດປ່າ, ຊີວະນາໆພັນ ແລະ ສິ່ງແວດລ້ອມ, ປ້ອງກັນບໍ່ໃຫ້ປ່າໄມ້ເຊື່ອມໂຊມ, ບົກແຫ້ງ, ປ້ອງກັນບໍ່ໃຫ້ໄຟໄໝ້ປ່າ ແລະ ເຂັ້ມງວດສະກັດກັ້ນທຸກຮູບການທຳລາຍ

ປ່າໄມ້ ແລະ ທີ່ດິນປ່າໄມ້ ເຂົ້າຮ່ວມການວາງແຜນຈັດສັນ, ຄຸ້ມຄອງ, ຟື້ນຟູ, ປູກຕົ້ນໄມ້ໃຫ້ເປັນປ່າ.





ນອກຈາກພັນທະລວມແລ້ວ ສໍາລັບ ຜູ້ທີ່ນໍາໃຊ້ ຫຼື ຜູ້ໄດ້ຜົນປະໂຫຍດຈາກປ່າໄມ້ ແລະ ທີ່ດິນປ່າໄມ້ ຕ້ອງປະຕິບັດພັນທະ ດັ່ງນີ້:

- ປະຕິບັດນະໂຍບາຍ ແລະ ກົດໝາຍ ກ່ຽວກັບ ວຽກງານປ່າໄມ້;
- ປູກ, ຟື້ນຟູ ແລະ ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ອຸດົມສົມບູນຕະຫຼອດໄປ;
- ປົກປັກຮັກສາປ່າໄມ້, ທີ່ດິນປ່າໄມ້, ປ່າຍອດນໍ້າ, ສິ່ງແວດລ້ອມ, ສັດນໍ້າ ແລະ ສັດປ່າ;
- ບູລະນະທີ່ດິນ, ປູກໄມ້ ແລະ ຟື້ນຟູຄືນປ່າໄມ້ ໃນກໍລະນີ ທີ່ໄດ້ຂຸດຄົ້ນແຮ່ທາດ ແລະ ກິດຈະກໍາຕ່າງໆແລ້ວ;
- ນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ຖືກຕ້ອງຕາມເປົ້າໝາຍ ທີ່ໄດ້ກໍານົດໃຫ້ ແລະ ຖືກຕ້ອງ ຕາມສັນຍາ ແລະ ກົດໝາຍ;
- ເສຍຄ່າຊັບພະຍາກອນ, ຄ່າທໍານຽມປ່າໄມ້, ຄ່າເຊົ່າ ຫຼື ສໍາປະທານທີ່ດິນປ່າໄມ້, ຈ່າຍຄ່າການບໍລິການດ້ານລະບົບນິເວດປ່າໄມ້ ແລະ ພັນທະອື່ນ ກ່ຽວກັບ ປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມກົດໝາຍ;
- ປະກອບສ່ວນ ແລະ ຂົນຂວາຍທຶນຮອນ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນກອງທຶນປົກປັກຮັກສາປ່າໄມ້;
- ໃຫ້ຂໍ້ມູນການນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້, ປະສານສົມທົບ ແລະ ໃຫ້ຄວາມຮ່ວມມືກັບອົງການທີ່ກ່ຽວຂ້ອງ;
- ນໍາໃຊ້ທຸກວິທີການ ເພື່ອສະກັດກັ້ນການທໍາລາຍປ່າໄມ້, ປ້ອງກັນໄຟໄໝ້ລາມປ່າ, ລັກລອບຂຸດຄົ້ນໄມ້, ເຄື່ອງປ່າຂອງດົງ, ສັດນໍ້າ ແລະ ສັດປ່າ;
- ປະຕິບັດພັນທະອື່ນ ທີ່ໄດ້ກໍານົດໄວ້ໃນກົດໝາຍ.

## 6. ການນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ມີ 4 ປະເພດ

### 6.1. ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອສາທາລະນະປະໂຫຍດ

- ການນຳໃຊ້ປ່າໄມ້ ເພື່ອສາທາລະນະປະໂຫຍດ ເຊັ່ນ: ການສຶກສາຄົ້ນຄວ້າທາງດ້ານວິທະຍາສາດ, ທ່ອງທ່ຽວທຳມະຊາດ, ເປັນບ່ອນພັກຜ່ອນ, ປ່າສັກສິດ, ປ່າຊ້າ, ຮັກສາສິ່ງແວດລ້ອມ ແລະ ການຄ້າຂາຍກາກບອນປ່າໄມ້ ສາມາດດຳເນີນໄດ້ໃນເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ທີ່ລັດຈັດສັນໃຫ້;
- ສຳລັບການນຳໃຊ້ໄມ້ ເພື່ອສາທາລະນະປະໂຫຍດຂອງບ້ານ ເຊັ່ນ: ການປຸກສ້າງຫ້ອງການ, ສະໂມສອນ, ໂຮງຮຽນ, ສຸກສາລາ, ວັດ, ຂົວ ໃຫ້ນຳໃຊ້ໄມ້ຈາກ ປ່າຊົມໃຊ້ຂອງບ້ານ ທີ່ໄດ້ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດຂຸດຄົ້ນ ຈາກພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຕາມແຜນການຂຸດຄົ້ນໄມ້ປະຈຳປີຂອງ ແຂວງ, ນະຄອນຫຼວງ ທີ່ລັດຖະບານ ໄດ້ຮັບຮອງເອົາແລ້ວ;
- ສຳລັບການນຳໃຊ້ເຄື່ອງປ່າຂອງດົງ ທີ່ບໍ່ເປັນສິນຄ້າ ເພື່ອເປັນຢາປົວພະຍາດ, ການປະດັບປະດາ, ການວາງສະແດງ ແລະ ອື່ນໆ ໃຫ້ເກັບກູ້ຕາມເຂດປ່າໄມ້ ທີ່ໄດ້ຈັດສັນໃຫ້.

### 6.2. ການນາໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອຄອບຄົວ

- ລັດ ອະນຸຍາດໃຫ້ປະຊາຊົນພາຍໃນບ້ານ ນຳໃຊ້ໄມ້ຈາກປ່າຊົມໃຊ້ຂອງບ້ານ ເພື່ອປຸກສ້າງ ແລະ ສ້ອມແປງເຮືອນສະເພາະຄອບຄົວທີ່ຈຳເປັນ ເຊັ່ນ: ຄອບຄົວທີ່ທຸກຍາກ ບໍ່ທັນມີເຮືອນຢູ່, ເຮືອນເກົ່າແກ່, ເປ່ເພ ຫຼື ຖືກເສຍຫາຍຈາກໄພພິບັດ ໂດຍການອະນຸຍາດຈາກຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ຕາມການສະເໜີ ຂອງອົງການປົກຄອງບ້ານ ຕາມລະບຽບການ;
- ໄມ້ທຳມະຊາດ ຢູ່ຕາມທີ່ດິນນາ, ທີ່ດິນສວນ, ທີ່ດິນປຸກສ້າງ ຂອງ ບຸກຄົນ ຫຼື ຄອບຄົວ ທີ່ ລັດ ໄດ້ມອບສິດນຳໃຊ້ ຫຼື ສິດໃຊ້ທີ່ດິນໃຫ້ຢ່າງຖືກຕ້ອງແລ້ວ ຕ້ອງໄດ້ຂຶ້ນບັນຊີ ໂດຍສະເໜີອົງການປົກຄອງບ້ານອອກໃບຢັ້ງຢືນ ແລະ ຮັບຮູ້ຈາກຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງທີ່ກ່ຽວຂ້ອງ.

### 6.3. ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ຕາມປະເພນີ

ການນຳໃຊ້ປ່າໄມ້ຕາມປະເພນີ ແມ່ນ ການຊົມໃຊ້ປ່າໄມ້ ທີ່ເຄີຍປະຕິບັດກັນມາ ໃນຂອບເຂດປ່າໄມ້ບ້ານ ໂດຍສອດຄ່ອງກັບແຜນຈັດສັນ ແລະ ກົດໝາຍ.





### 6.4. ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອທຸລະກິດ

ການນຳໃຊ້ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອທຸລະກິດ ແມ່ນ ການນຳໃຊ້ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ເຂົ້າໃນການທ່ອງທ່ຽວ, ເປັນສະຖານທີ່ພັກຜ່ອນ, ການບໍລິການດ້ານລະບົບນິເວດປ່າໄມ້, ການຄ້າຂາຍກາກບອນປ່າໄມ້, ການສະໜອງໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ແກ່ໂຮງງານອຸດສາຫະກຳປຸງແຕ່ງ ແລະ ເປັນສິນຄ້າ.

**ການນຳໃຊ້ໄມ້ ເພື່ອເປັນສິນຄ້າ** ໃຫ້ດ□າເນີນໃນເຂດປ່າຜະລິດ ທີ່ມີແຜນຈັດສັນ, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດປ່າໄມ້ທີ່ ລັດ ຈັດສັນໃຫ້ບ້ານນຳໃຊ້, ເຂດເນື້ອທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລັດໄດ້ມອບສິດນຳໃຊ້ທີ່ດິນໃຫ້ຢ່າງຖືກຕ້ອງຕາມກົດໝາຍ.

**ການນຳໃຊ້ເຄື່ອງປ່າຂອງດົງ ເພື່ອເປັນສິນຄ້າ** ໃຫ້ດ□າເນີນໃນເຂດປ່າໄມ້ທີ່ ລັດ ຈັດສັນໃຫ້, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດເນື້ອທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ ລັດ ໄດ້ມອບສິດນຳໃຊ້ທີ່ດິນ ໃຫ້ຢ່າງຖືກຕ້ອງຕາມກົດໝາຍ.

## 7. ການຫັນປ່ຽນທີ່ດິນປ່າໄມ້

ການຫັນປ່ຽນທີ່ດິນປ່າໄມ້ ເປັນທີ່ດິນປະເພດອື່ນ ຈະດຳເນີນໄດ້ກໍຕໍ່ເມື່ອເປັນການຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ, ກຳນົດ ຢູ່ໃນແຜນຈັດສັນທີ່ດິນແຫ່ງຊາດ ແລະ ທ້ອງຖິ່ນ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການນຳໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ ໂດຍບໍ່ມີຜົນກະທົບທີ່ຮ້າຍແຮງຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ .

**ການຫັນປ່ຽນທີ່ດິນປ່າໄມ້ ມີ ລັກສະນະຖາວອນ ແລະ ລັກສະນະຊົ່ວຄາວ**

- ລັກສະນະຖາວອນ ແມ່ນ ການຫັນປ່ຽນທີ່ດິນປ່າໄມ້ ເປັນທີ່ດິນປະເພດອື່ນ ເພື່ອຮັບໃຊ້ຈຸດປະສົງໃດໜຶ່ງ ທີ່ມີລັກສະນະຍາວນານ ເປັນຕົ້ນ ການສ້າງເຂື່ອນໄຟຟ້າ, ອ່າງເກັບນ້ຳ, ຕີນເສົາສາຍສົ່ງໄຟຟ້າ, ຕີນເສົາເຄື່ອງສົ່ງສັນຍານໂທລະສັບ ຫຼື ການຈັດສັນພູມລຳເນົາ. ສຳລັບທີ່ດິນປ່າໄມ້ ຢູ່ຕາມແລວສາຍສົ່ງໄຟຟ້າ ແລະ ເສັ້ນທາງ ບໍ່ຈຳເປັນຕ້ອງຫັນປ່ຽນ;
- ລັກສະນະຊົ່ວຄາວ ແມ່ນ ການຫັນປ່ຽນທີ່ດິນປ່າໄມ້ ເປັນທີ່ດິນປະເພດອື່ນ ເພື່ອດຳເນີນກິດຈະການໃດໜຶ່ງ ພາຍຫຼັງທີ່ກິດຈະການດັ່ງກ່າວໄດ້ສິ້ນສຸດແລ້ວ ທີ່ດິນທີ່ໄດ້ຫັນປ່ຽນນັ້ນ ກໍຕ້ອງກັບຄືນມາເປັນທີ່ດິນປ່າໄມ້ເໝືອນເດີມ ເປັນຕົ້ນ ເຂດຂຸດຄົ້ນບໍ່ແຮ່, ເສັ້ນທາງຜ່ານເຂົ້າຫາເຂດກໍ່ສ້າງ, ສະຖານທີ່ປຸກສ້າງຊົ່ວຄາວ.

**ອົງການລັດ ທີ່ມີສິດຕົກລົງຫັນປ່ຽນທີ່ດິນປ່າໄມ້**

- ສະພາແຫ່ງຊາດ ຕົກລົງຫັນປ່ຽນປະເພດທີ່ດິນ ປ່າປ້ອງກັນແຫ່ງຊາດ, ປ່າສະຫງວນແຫ່ງຊາດ, ປ່າຜະລິດ ແລະ ປ່າປ້ອງກັນລະດັບແຂວງ, ປ່າສະຫງວນລະດັບແຂວງ ເປັນທີ່ດິນປະເພດອື່ນ ຕາມການສະເໜີຂອງລັດຖະບານ;
- ລັດຖະບານ ຕົກລົງຫັນປ່ຽນປະເພດທີ່ດິນປ່າໄມ້ ເປັນທີ່ດິນປະເພດອື່ນ ຕາມການສະເໜີຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍການເຫັນ

ດີເປັນເອກະພາບ ກັບກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດັ່ງນີ້:

1. ການຫັນປ່ຽນທີ່ດິນປ່າປ້ອງກັນ, ປ່າສະຫງວນ ລະດັບເມືອງ;
2. ການຫັນປ່ຽນທີ່ດິນປ່າຊຸດໂຊມ ທີ່ບໍ່ສາມາດຟື້ນຟູຄືນດ້ວຍຕົວມັນເອງໄດ້ **ເນື້ອທີ່ແຕ່ ໜຶ່ງຮ້ອຍເຮັກຕາ ຫາ ໜຶ່ງພັນເຮັກຕາ** ຕໍ່ໜຶ່ງກິດຈະການເທົ່ານັ້ນ;
3. ການຫັນປ່ຽນທີ່ດິນປ່າປອກໂຫຼ້ນ ທີ່ບໍ່ສາມາດຟື້ນຟູຄືນດ້ວຍຕົວມັນເອງ **ເນື້ອທີ່ແຕ່ ສອງຮ້ອຍເຮັກຕາ ຫາ ສິບພັນເຮັກຕາ** ຕໍ່ ໜຶ່ງກິດຈະການເທົ່ານັ້ນ.

ຖ້າການຫັນປ່ຽນທີ່ດິນປະເພດດັ່ງກ່າວ ຫາກມີເນື້ອທີ່ເກີນກວ່າຂອບເຂດ ທີ່ໄດ້ກຳນົດໄວ້ໃນຂໍ້ 2 ແລະ 3 ທີ່ໄດ້ກ່າວມາຂ້າງເທິງນີ້ ຕ້ອງໄດ້ຜ່ານການຮັບຮອງ ຈາກສະພາແຫ່ງຊາດ ຕາມການສະເໜີຂອງລັດຖະບານ.

- ສະພາປະຊາຊົນ ຂັ້ນແຂວງ ຕົກລົງຫັນປ່ຽນປະເພດທີ່ດິນປ່າໄມ້ ເປັນທີ່ດິນປະເພດອື່ນ ຕາມການສະເໜີຂອງອົງການປົກຄອງຂັ້ນແຂວງ ດັ່ງນີ້:

1. ການຫັນປ່ຽນທີ່ດິນ ປ່າປ້ອງກັນ, ປ່າສະຫງວນ ຂັ້ນບ້ານ;
2. ການຫັນປ່ຽນທີ່ດິນປ່າຊຸດໂຊມ ທີ່ບໍ່ສາມາດຟື້ນຟູຄືນດ້ວຍຕົວມັນເອງໄດ້ ເນື້ອທີ່ຕໍ່າກວ່າ ໜຶ່ງຮ້ອຍເຮັກຕາ ຕໍ່ ໜຶ່ງກິດຈະການເທົ່ານັ້ນ;
3. ການຫັນປ່ຽນທີ່ດິນປ່າປອກໂຫຼ້ນ ເນື້ອທີ່ຕໍ່າກວ່າ ສອງຮ້ອຍເຮັກຕາ ຕໍ່ ໜຶ່ງກິດຈະການເທົ່ານັ້ນ.

## 8. ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້

ການເຊົ່າ ຫຼື ການສຳປະທານທີ່ດິນປ່າໄມ້ ເພື່ອຟື້ນຟູປ່າ, ປູກປ່າ, ຕົ້ນໄມ້ອຸດສາຫະກຳ ແລະ ເຄື່ອງປ່າຂອງດົງ ໃຫ້ດຳເນີນໃນເຂດທີ່ດິນປ່າຊຸດໂຊມ ທີ່ບໍ່ສາມາດຟື້ນຟູຄືນເອງໄດ້ ແລະ ທີ່ດິນປ່າປອກໂຫຼ້ນ ທີ່ໄດ້ຈັດສັນໄວ້ເທົ່ານັ້ນ ຂອບເຂດສິດ ອະນຸມັດໃຫ້ເຊົ່າ ຫຼື ສຳປະທານ ໃຫ້ປະຕິບັດ ດັ່ງນີ້:

### 8.1. ສຳລັບທີ່ດິນປ່າຊຸດໂຊມ

- **ອົງການປົກຄອງແຂວງ, ນະຄອນ** ມີສິດຕົກລົງໃຫ້ເຊົ່າ ຫຼື ສຳປະທານ ບໍ່ເກີນ ໜຶ່ງຮ້ອຍຫ້າສິບ ເຮັກຕາ ຕໍ່ໜຶ່ງໂຄງການ ແລະ ກຳນົດການເຊົ່າ ຫຼື ສຳປະທານ ສູງສຸດບໍ່ເກີນ ສາມສິບ ປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ກໍລະນີ ຕາມການສະເໜີຂອງອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນຫຼວງ ໂດຍເປັນເອກພາບກັບພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ;
- **ລັດຖະບານ** ມີສິດຕົກລົງໃຫ້ເຊົ່າ ຫຼື ສຳປະທານຫຼາຍກວ່າ ໜຶ່ງຮ້ອຍຫ້າສິບເຮັກຕາ ຫາ ສິບຫ້າພັນ ເຮັກຕາ ຕໍ່ໜຶ່ງໂຄງການ ແລະ ກຳນົດເວລາການເຊົ່າ ຫຼື ສຳປະທານ ເກີນກວ່າ ສາມສິບ ປີ ແຕ່ສູງສຸດບໍ່ໃຫ້ເກີນ ສີ່ສິບ ປີ

ແລະ ສາມາດຕໍ່ໄດ້ ແລ້ວແຕ່ລະກໍລະນີ ຕາມການສະເໜີຂອງອົງການຄຸ້ມຄອງທີ່ດິນແຫ່ງຊາດ ໂດຍເປັນເອກະພາບກັບ ກະຊວງກະສິກຳ ແລະ ປ່າໄມ້, **ຖ້າເກີນກ່ວາ ສິບຫ້າພັນ ເຮັກຕາ** ຕ້ອງໄດ້ມີການຮັບຮອງຈາກຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງລັດຖະບານ.

**8.2. ສຳລັບທີ່ດິນປ່າປອກໂຫຼ້ນ**

- **ອົງການປົກຄອງແຂວງ, ນະຄອນ** ມີສິດຕົກລົງໃຫ້ເຊົ່າ ຫຼື ສຳປະທານ ບໍ່ເກີນ ຫ້າຮ້ອຍ ເຮັກຕາ ຕໍ່ໜຶ່ງໂຄງການ ແລະ ກຳນົດເວລາການເຊົ່າ ຫຼື ສຳປະທານສູງສຸດບໍ່ເກີນ ສີ່ສິບ ປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ກໍລະນີ ຕາມການສະເໜີຂອງອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນ ໂດຍເປັນເອກະພາບກັບພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນ;
- **ລັດຖະບານ** ມີສິດຕົກລົງໃຫ້ເຊົ່າ ຫຼື ສຳປະທານ ຫຼາຍກ່ວາ ຫ້າຮ້ອຍ ເຮັກຕາ ຫາ ສາມສິບພັນ ເຮັກຕາ ຕໍ່ໜຶ່ງໂຄງການ ແລະ ກຳນົດເວລາການເຊົ່າ ຫຼື ສຳປະທານ ເກີນກວ່າ ສີ່ສິບ ປີ ແຕ່ສູງສຸດບໍ່ໃຫ້ເກີນ ຫົກສິບ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ລະກໍລະນີ ຕາມການສະເໜີຂອງອົງການຄຸ້ມຄອງທີ່ດິນແຫ່ງຊາດ ໂດຍເປັນເອກະພາບກັບ ກະຊວງກະສິກຳ ແລະ ປ່າໄມ້, ຖ້າເກີນກວ່າ ສາມສິບພັນ ເຮັກຕາ ຕ້ອງໄດ້ມີການຮັບຮອງຈາກຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງລັດຖະບານ;
- **ສຳລັບເຂດຊົນນະບົດ, ຫ່າງໄກສອກຫຼີກ** ກຳນົດເວລາການເຊົ່າ ຫຼື ສຳປະທານ ແມ່ນເກີນກວ່າ ສີ່ສິບ ປີ ແຕ່ສູງສຸດບໍ່ໃຫ້ເກີນ ເຈັດສິບ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ກໍລະນີ.

## III. ກົດໝາຍວ່າດ້ວຍປ່າໄມ້ ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດ ມີຫຍັງແດ່ ?

ກົດໝາຍວ່າດ້ວຍປ່າໄມ້ ໄດ້ຈັດແບ່ງອອກເປັນ ສີ່ ຂໍ້ຫ້າມ ຄື: ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ປ່າໄມ້, ຂໍ້ຫ້າມສຳລັບນັກທຸລະກິດ, ຂໍ້ຫ້າມສຳລັບປະຊາຊົນ ແລະ ຂໍ້ຫ້າມສຳລັບການຈັດຕັ້ງ ແລະ ບຸກຄົນອື່ນ ມີ ດັ່ງນີ້:

### 1. ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ປ່າໄມ້

ຫ້າມ ພະນັກງານປ່າໄມ້ ແລະ ເຈົ້າໜ້າທີ່ປ່າໄມ້ ມີ ພຶດຕິກຳ ດັ່ງນີ້:

1) ສວຍໃຊ້ໜ້າທີ່ຕຳແໜ່ງ ແລະ ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ;
2) ໃຊ້ສິດໜ້າທີ່ເກີນຂອບເຂດ ຊຶ່ງໄດ້ກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດຂອງປະຊາຊົນ;
3) ປະລະໜ້າທີ່ ແລະ ຄວາມຮັບຜິດຊອບຕໍ່ວຽກງານປ່າໄມ້ ທີ່ການຈັດຕັ້ງມອບໝາຍໃຫ້;
4) ເປີດເຜີຍຄວາມລັບຂອງລັດ ແລະ ຂອງລັດຖະບານ ກ່ຽວກັບ ປ່າໄມ້;

5) ປອມແປງເອກະສານ ເຊັ່ນ: ປອມແປງລາຍເຊັນ, ຕາປະທັບ ແລະ ບັນຊີໄມ້, ການວັດແທກໄມ້, ການຈັດຊັ້ນຄຸນນະພາບໄມ້, ຂໍ້ມູນການສຳຫຼວດ ແລະ ກວດກາປ່າໄມ້ ແລະ ການຕີກາໄມ້;
6) ດຳເນີນ ຫຼື ເຂົ້າຮ່ວມການດຳເນີນທຸລະກິດ ກ່ຽວກັບ ການຂຸດຄົ້ນ, ຊື້-ຂາຍໄມ້ ແລະ ຜະລິດຕະພັນປ່າໄມ້;
7) ມອບຄ້ອນຕີກາໄມ້ ໃຫ້ນັກທຸລະກິດ ແລະ ປະຊາຊົນ ລວມທັງພະນັກງານທີ່ບໍ່ມີໜ້າທີ່ຮັບຜິດຊອບ;
8) ຍ້າຍ, ປ່ຽນແປງ ຫຼື ທຳລາຍ ເຄື່ອງໝາຍເຂດແດນ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;
9) ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ແລະ ນຳໃຊ້ມາດຕະການອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
10) ມີໄວ້ໃນຄອບຄອງ ເຄື່ອງຈັກຂຸດຄົ້ນໄມ້ ແລະ ພາຫະນະລາກແກ່ໄມ້;
11) ພຶດຕິກຳອື່ນທີ່ເປັນຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## 2. ຂໍ້ຫ້າມສຳລັບນັກທຸລະກິດ

ຫ້າມ ນັກທຸລະກິດ ພາຍໃນ ແລະ ຕ່າງປະເທດ ມີ ພຶດຕິກຳ ດັ່ງນີ້:

1) ດຳເນີນການສຳຫຼວດປ່າໄມ້, ຊັບພະຍາກອນປ່າໄມ້, ຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ເວັ້ນເສຍແຕ່ໄດ້ຮັບອະນຸຍາດ;
2) ສ້າງຕັ້ງໂຮງຊອຍ, ໂຮງເລື່ອຍ, ໂຮງເຟີນີເຈີ ແລະ ໂຮງງານປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ຢູ່ໃນ ຫຼື ຢູ່ໃກ້ປ່າໄມ້ທຸກປະເພດ;
3) ບຸກລຸກທຳລາຍປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃນເຂດຫວງຫ້າມເດັດຂາດຂອງປ່າປ້ອງກັນ ແລະ ປ່າສະຫງວນ, ເຂດເຊື່ອມຕໍ່ລະຫວ່າງປ່າສະຫງວນດ້ວຍກັນ ຫຼື ລະຫວ່າງປ່າສະຫງວນ ກັບປ່າໄມ້ປະເພດອື່ນ ແລະ ເຂດອື່ນໆ;
4) ຈັບຈອງຕົ້ນໄມ້, ປ່າໄມ້ ຫຼື ເຄື່ອງປ່າຂອງດົງ ແລະ ທີ່ດິນປ່າໄມ້, ຕັດໄມ້ທົດແທນແຜນການຂຸດຄົ້ນໄມ້ຂອງສົກປີຜ່ານມາ ແລະ ຕັດໄມ້ກ່ອນໄດ້ຮັບອະນຸຍາດ;
5) ບຸກເບີກປ່າໄມ້ ແລະ ທີ່ດິນປ່າໄມ້ ນອກເຂດທີ່ອະນຸຍາດ;
6) ຍ້າຍ, ປ່ຽນແປງ ຫຼື ທຳລາຍ ເຄື່ອງໝາຍເຂດແດນປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;
7) ນຳເຂົ້າແຮງງານ, ພາຫະນະລາກແກ່ໄມ້, ເຄື່ອງຈັກ ແລະ ອຸປະກອນຂຸດຄົ້ນໄມ້ ໂດຍບໍ່ໄດ້ຮັບອະນຸຍາດ;
8) ຕັດ, ຊື້-ຂາຍ ແລະ ເຄື່ອນຍ້າຍໄມ້ທຳມະຊາດ ປະເພດຫວງຫ້າມ ແລະ ໄມ້ພິເສດທີ່ໃກ້ສູນພັນ ໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະບານ ເຊັ່ນ: ໄມ້ດູ່ລາຍ, ໄມ້ຂະຍຸງ, ໄມ້ປະດົງ, ໄມ້ຄຳພີ້, ໄມ້ໂລ່ງເລ່ງ, ໄມ້ຈຳປາປ່າ;
9) ເຄື່ອນຍ້າຍໄມ້ ແລະ ເຄື່ອງປ່າຂອງດົງເກີນນ້ຳໜັກ, ເກີນຈຳນວນ, ເກີນຂະໜາດ ແລະ ໃນໄລຍະເວລາທີ່ເກືອດຫ້າມ ຫຼື ບໍ່ຖືກກັບເອກະສານ;

10) ຊື້ຈ້າງ, ໃຫ້ສິນບົນແກ່ພະນັກງານ, ເຈົ້າໜ້າທີ່ ແລະ ປະຊາຊົນ;
11) ປອມແປງເອກະສານ, ຕາປະທັບ ແລະ ຄ້ອນຕີກາໄມ້;
12) ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ, ເຈົ້າໜ້າທີ່ ຫຼື ປະຊາຊົນ;
13) ພຶດຕິກຳອື່ນທີ່ເປັນຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.




### 3. ຂໍ້ຫ້າມສຳລັບປະຊາຊົນ

ຫ້າມ ປະຊາຊົນ ມີ ພຶດຕິກຳ ດັ່ງນີ້:

1) ທຳລາຍປ່າໄມ້ ດ້ວຍການບຸກລຸກ, ບຸກເບີກຖາກຖາງປ່າໄມ້, ຈູດປ່າ, ຕັດໄມ້, ການໄມ້ ຫຼື ນຳໃຊ້ສານເຄມີ ໃຫ້ຕົ້ນໄມ້ຕາຍ ຫຼື ດ້ວຍການກະທຳອື່ນ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ;
2) ເຂົ້າໄປຕັ້ງຖິ່ນຖານຢູ່ເຂດປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ຫຼື ທຳການຜະລິດ ໂດຍບໍ່ໄດ້ຮັບອະນຸຍາດ;
3) ຕັດ, ຊື້-ຂາຍ, ເຄື່ອນຍ້າຍ ຫຼື ເກັບກູ້ໄມ້ທຳມະຊາດ ປະເພດຫວງຫ້າມ ແລະ ໄມ້ພິເສດທີ່ໃກ້ສູນພັນ ໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະບານ ເຊັ່ນ: ໄມ້ດູ່ລາຍ, ໄມ້ຂະຍຸງ, ໄມ້ປະດົງ, ໄມ້ຄຳພີ້, ໄມ້ໂລ່ງເລ່ງ, ໄມ້ຈຳປາປ່າ;
4) ຈັບຈອງຕົ້ນໄມ້, ປ່າໄມ້, ເຄື່ອງປ່າຂອງດົງ ແລະ ທີ່ດິນປ່າໄມ້;
5) ຮ່ວມມືກັບນັກທຸລະກິດ, ພະນັກງານ ຫຼື ເຈົ້າໜ້າທີ່ ໃນການລັກລອບຕັດໄມ້, ບຸກລຸກທຳລາຍປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
6) ປອມແປງເອກະສານ, ຕາປະທັບ ແລະ ຄ້ອນຕີກາໄມ້;
7) ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ, ເຈົ້າໜ້າທີ່ ຫຼື ປະຊາຊົນ;
8) ຍ້າຍ, ປ່ຽນແປງ ຫຼື ທຳລາຍ ເຄື່ອງໝາຍເຂດແດນປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;
9) ຊື້-ຂາຍ ໄມ້ທີ່ບໍ່ຖືກຕ້ອງຕາມກົດໝາຍ;
10) ພຶດຕິກຳອື່ນທີ່ເປັນຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

4. **ຂໍ້ຫ້າມສຳລັບການຈັດຕັ້ງ ແລະ ບຸກຄົນອື່ນ**

ຫ້າມ ການຈັດຕັ້ງ ແລະ ບຸກຄົນອື່ນ ມີ ພຶດຕິກຳ ດັ່ງນີ້:

1) ໃຊ້ສິດໜ້າທີ່ ເກີນຂອບເຂດ, ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ, ເຈົ້າໜ້າທີ່ ຫຼື ຜູ້ອື່ນ;
2) ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ຜູ້ອື່ນ;
3) ດຳເນີນທຸລະກິດຂຸດຄົ້ນ, ຊື້-ຂາຍ, ເຄື່ອນຍ້າຍໄມ້ ແລະ ເຄື່ອງປ່າຂອງດົງ ດ້ວຍຕົນເອງ ຫຼື ມີຫຸ້ນສ່ວນ ໂດຍບໍ່ໄດ້ຮັບອະນຸຍາດ;
4) ອະນຸມັດການຫັນປ່ຽນປະເພດປ່າໄມ້ ແລະ ທີ່ດິນປ່າໄມ້, ອະນຸມັດໃຫ້ເຊົ່າ ແລະ ສຳປະທານທີ່ດິນປ່າໄມ້ ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ ລວມທັງການເອົາໄມ້ແລກປ່ຽນກັບໂຄງການ;
5) ອອກອະນຸຍາດຕັດໄມ້ ແລະ ເກັບກູ້ເຄື່ອງປ່າຂອງດົງ;
6) ຂັດຂວາງການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ ທີ່ປະຕິບັດວຽກງານປ່າໄມ້;
7) ກົດໜ່ວງຖ່ວງດຶງການດຳເນີນຄະດີ ກ່ຽວກັບປ່າໄມ້;
8) ພຶດຕິກຳອື່ນທີ່ເປັນຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.





## IV. ຖ້າລະເມີດ ກົດໝາຍວ່າດ້ວຍປ່າໄມ້ ຈະໄດ້ຮັບໂທດ ຄືແນວໃດ ?

ຜູ້ທີ່ລະເມີດກົດໝາຍວ່າດ້ວຍປ່າໄມ້ ຈະຖືກລົງໂທດແຕ່ເບົາຫາໜັກ ຕາມແຕ່ລະກໍລະນີທີ່ໄດ້ລະບຸໄວ້ໃນມາດຕາ 123, 124, 125, 126, 127 ແລະ 128 ຂອງກົດໝາຍວ່າດ້ວຍປ່າໄມ້ ສະບັບປະຈຸບັນ ຄື:

1. **ກໍລະນີເບົາ ແມ່ນການກະທຳຜິດ ທີ່ມີມູນຄ່າການເສຍຫາຍຕ່ຳກ່ວາ 1.000.000 ກີບ:**

➢ **ສຳລັບການຈັດຕັ້ງ ແລະ ບຸກຄົນ ຫຼື ວິສາຫະກິດ** ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບ ປ່າໄມ້ ແລະ ຂໍ້ຫ້າມທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາແລະກໍ່ຄວາມເສຍຫາຍທີ່ມີມູນຄ່າຕ່ຳກວ່າ1.000.000ກີບ ແລະ ມີຄວາມຈິງໃຈລາຍງານ, ຮັບສາລະພາບຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຕົນ ແລະ ສົ່ງຊັບສິນ ຫຼື ຂອງກາງ ທີ່ໄດ້ມາໂດຍບໍ່ຖືກຕ້ອງນັ້ນຄືນຄົບຖ້ວນ ກໍຈະຖືກຕັກເຕືອນ ແລະ ສຶກສາອົບຮົມ;

➢ **ສຳລັບພະນັກງານ ແລະ ເຈົ້າໜ້າທີ່** ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບ ປ່າໄມ້ ແລະ ຂໍ້ຫ້າມທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳຜິດທາງ

ອາຍາ ແລະ ກໍ່ຄວາມເສຍຫາຍທີ່ມີມູນຄ່າຕໍ່າກວ່າ 1.000.000 ກີບ ກໍຈະຖືກປະຕິບັດວິໄນຕາມ ແຕ່ລະກໍລະນີ ດັ່ງນີ້:

- ຕິຕຽນ, ກ່າວເຕືອນຄວາມຜິດ ໂດຍບັນທຶກໄວ້ ໃນສໍານວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;
- ໂຈະການເລື່ອນຊັ້ນ-ຂັ້ນເງິນເດືອນ, ການຍ້ອງຍໍ. ຜູ້ທີ່ຖືກປະຕິບັດວິໄນຕ້ອງສົ່ງຊັບສິນທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງ ຄືນໃຫ້ການຈັດຕັ້ງຄົບຖ້ວນ.

**2. ກໍລະນີທີ່ບໍ່ເຂັດຫຼາບ ຫຼື ສະຖານໜັກ ແມ່ນການກະທໍາຜິດທີ່ມີມູນຄ່າການເສຍຫາຍເກີນກ່ວາ 1.000.000 ກີບ ຂຶ້ນໄປ:**

- **ການຈັດຕັ້ງ ແລະ ບຸກຄົນ ຫຼື ວິສາຫະກິດ** ທີ່ໄດ້ລະເມີດລະບຽບກົດໝາຍກ່ຽວກັບ ປ່າໄມ້ ແລະ ຂໍ້ຫ້າມ ທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍທີ່ມີມູນຄ່າແຕ່ 1.000.000 ກີບ ຂຶ້ນໄປ ກໍຈະຖືກປັບໃໝ ໜຶ່ງເທົ່າຂອງມູນຄ່າເສຍຫາຍຂອງໄມ້, ຜະລິດຕະພັນໄມ້ ລວມທັງ ຊັບພະຍາກອນປ່າໄມ້ ຕາມລາຄາທ້ອງຕະຫຼາດ;
- **ໃນກໍລະນີທີ່ມີການລະເມີດເປັນຄັ້ງທີສອງ ຫຼື ເປັນອາຈິນ** ກໍຈະຖືກປັບໃໝສອງເທົ່າ ຂອງມູນຄ່າຄວາມເສຍຫາຍຂອງໄມ້, ຜະລິດຕະພັນໄມ້ ແລະ ໃຊ້ແທນມູນຄ່າຊັບພະຍາກອນປ່າໄມ້ ຕາມລາຄາທ້ອງຕະຫຼາດ;
- **ການຈັດຕັ້ງ ແລະ ບຸກຄົນ ຫຼື ວິສາຫະກິດ** ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ຄອບຄົວ ແລະ ບຸກຄົນອື່ນ ເນື່ອງມາຈາກການກະທໍາທີ່ບໍ່ຖືກຕ້ອງກ່ຽວກັບປ່າໄມ້ ຈະຕ້ອງໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ;
- **ການຈັດຕັ້ງ ແລະ ບຸກຄົນ** ທີ່ໄດ້ຕັດໄມ້, ຖາງປ່າໄມ້, ຈູດປ່າໄມ້ ຫຼື ທໍາລາຍປ່າໄມ້ດ້ວຍວິທີການອື່ນໆ, ຂຸດຄົ້ນເຄື່ອງປ່າຂອງດົງ ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ, ມອບຄ້ອນຕີກາໄມ້ໃຫ້ຜູ້ອື່ນທີ່ບໍ່ມີສິດໜ້າທີ່ຮັບຜິດຊອບ, ຕັດ, ຊື້-ຂາຍ ແລະ ເຄື່ອນຍ້າຍໄມ້ທໍາມະຊາດປະເພດຫວງຫ້າມ ແລະ ໄມ້ພິເສດທີ່ໃກ້ຈະສູນພັນ ໂດຍບໍ່ໄດ້ຮັບອະນຸຍາດ, ກົດໜ່ວງຖ່ວງດຶງການດໍາເນີນຄະດີ ກ່ຽວກັບປ່າໄມ້, ອະນຸມັດການຫັນປ່ຽນປ່າໄມ້ທໍາມະຊາດ, ຂຸດຄົ້ນ ຫຼື ອອກອະນຸຍາດຕັດໄມ້ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແມ່ນຈະຖືກດໍາເນີນຄະດີອາຍາ ແລະ ລົງໂທດຕັດອິດສະລະພາບ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 139 ແລະ 143 ຂອງກົດໝາຍອາຍາ ແລະ ປັບໃໝສອງເທົ່າຂອງມູນຄ່າຄວາມເສຍຫາຍຂອງໄມ້, ຜະລິດຕະພັນໄມ້ ແລະ ຊັບພະຍາກອນປ່າໄມ້ ຕາມລາຄາທ້ອງຕະຫຼາດ;
- **ສໍາລັບພະນັກງານ** ນອກຈາກປະຕິບັດບັນດາມາດຕະການທີ່ກ່າວມາຂ້າງເທິງແລ້ວ ຕ້ອງປະຕິບັດເພີ່ມຕື່ມຄື: ປົດຕໍາແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕໍາແໜ່ງຕໍ່າກວ່າເກົ່າ ຫຼື ໃຫ້ອອກຈາກລັດຖະການ ໂດຍບໍ່ຮັບນະໂຍບາຍໃດໆ.

## 3. ມາດຕະການທາງອາຍາ:

ບຸກຄົນ ທີ່ໄດ້ລະເມີດກົດໝາຍວ່າດ້ວຍປ່າໄມ້ ທີ່ເປັນການກະທຳຜິດທາງອາຍາ ເຊັ່ນ: ຕັດໄມ້, ຖາງປ່າໂດຍບໍ່ຖືກຕ້ອງຕາມລະບຽບການ ກ່ຽວກັບ ປ່າໄມ້, ຈູດປ່າ ຫຼື ທຳລາຍປ່າໄມ້ດ້ວຍວິທີການອື່ນໆ, ຂຸດຄົ້ນເຄື່ອງປ່າຂອງດົງ ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ, ມອບຄ້ອນຕີກາໄມ້ໃຫ້ຜູ້ທີ່ບໍ່ມີສິດໜ້າທີ່ຮັບຜິດຊອບ, ຕັດ, ຊື້-ຂາຍ ແລະ ເຄື່ອນຍ້າຍໄມ້ທຳມະຊາດປະເພດຫວງຫ້າມ ແລະ ໄມ້ພິເສດທີ່ໃກ້ຈະສູນພັນ ໂດຍບໍ່ໄດ້ຮັບອະນຸຍາດ, ກົດໜ່ວງຖ່ວງດຶງການດຳເນີນຄະດີ ກ່ຽວກັບ ປ່າໄມ້, ອະນຸມັດການຫັນປ່ຽນປ່າໄມ້ທ□າມະຊາດ, ຂຸດຄົ້ນ ຫຼື ອອກອະນຸຍາດຕັດໄມ້ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກດຳເນີນຄະດີອາຍາ ແລະ ລົງໂທດຕັດອິດສະລະພາບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 139 ແລະ 143 ຂອງກົດໝາຍອາຍາ ແລະ ປັບໃໝສອງເທົ່າຂອງມູນຄ່າຄວາມເສຍຫາຍຂອງໄມ້, ຜະລິດຕະພັນໄມ້ ແລະ ຊັບພະຍາກອນປ່າໄມ້ ຕາມລາຄາທ້ອງຕະຫຼາດ.

ນອກຈາກໂທດຕົ້ນຕໍທີ່ໄດ້ກ່າວມາຂ້າງເທິງນີ້ແລ້ວ ຜູ້ກະທຳຜິດຈະຖືກປະຕິບັດໂທດເພີ່ມໃນການຮິບຊັບ, ພາຫະນະອຸປະກອນທີ່ພົວພັນກັບການກະທຳຜິດເປັນຂອງລັດ ແລະ ອາດຈະຖືກໂຈະ ຫຼື ຖອນໃບອະນຸຍາດ, ຖອນສິດນຳໃຊ້ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້.

# ຄວາມຮູ້ພື້ນຖານ ກ່ຽວກັບ ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ

**ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ໄດ້ຖືກຮັບຮອງເອົາໃນ ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VI ໃນວັນທີ 24 ທັນວາ 2007 ແລະ ປະທານປະເທດແຫ່ງ ສປປ ລາວ ໄດ້ປະກາດໃຊ້ຢ່າງເປັນທາງການ ໃນວັນທີ 14 ມັງກອນ 2008 ຊຶ່ງປະກອບມີ 9 ພາກ, 74 ມາດຕາ.**

## I. ຄວາມສຳຄັນຂອງກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ມີຄືແນວໃດ?

### 1. ຄວາມໝາຍຂອງສັດນ້ຳ ແລະ ສັດປ່າ

**ສັດນ້ຳ** ແມ່ນ ສັດທຸກຊະນິດທີ່ເກີດ ແລະ ຂະຫຍາຍຕົວຢູ່ໃນນ້ຳທຳມະຊາດ ຫຼື ຖືກນຳເອົາຈາກທຳມະຊາດ ມາລ້ຽງ ເຊັ່ນ: ປາຂ່າ, ປາບຶກ, ປາ ເລີມ ແລະ ອື່ນໆ;

**ສັດປ່າ** ແມ່ນ ສັດທຸກຊະນິດທີ່ເກີດ ແລະ ຂະຫຍາຍຕົວຢູ່ໃນປ່າທຳມະຊາດ, ອາໄສຢູ່ໃນປ່າ ຫຼື ຖືກນຳເອົາຈາກທຳມະຊາດ ມາລ້ຽງ ເຊັ່ນ: ຊ້າງ, ເສືອ, ໝີ, ກວາງ, ຟານ, ລິງ, ງູ, ນົກ ແລະ ອື່ນໆ;

**ສັດເຄິ່ງບົກເຄິ່ງນ້ຳ** ເປັນທັງສັດນ້ຳ ແລະ ສັດປ່າ ເຊັ່ນ: ແຂ້, ເຕົ່າ ແລະ ອື່ນໆ.

### 2. ຄວາມສຳຄັນຂອງສັດນ້ຳ ແລະ ສັດປ່າ

ສັດນ້ຳ ແລະ ສັດປ່າ ມີຄວາມສຳຄັນ ຕໍ່ຄວາມສົມດູນຂອງລະບົບນິເວດທຳມະຊາດ, ປະກອບສ່ວນເຂົ້າໃນການຍົກລະດັບຊີວິດການເປັນຢູ່ ຂອງປະຊາຊົນລາວບັນດາເຜົ່າ ໃຫ້ດີຂຶ້ນ, ມີຜົນດີຕໍ່ການສຶກສາ, ຄົ້ນຄວ້າທາງດ້ານວິທະຍາສາດ, ນຳໃຊ້ເພື່ອສາທາລະນະປະໂຫຍດ (ທ່ອງທ່ຽວ, ສວນສັດ, ການກິລາ, ລະຄອນສັດ, ຫໍພິພິທະພັນສັດ), ນຳໃຊ້ເພື່ອຄອບຄົວ (ບໍລິໂພກ, ເປັນຢາ, ເອ້ຢ້ອງ), ນຳໃຊ້ຕາມຮີດຄອງປະເພນີ (ການປ່ອຍສັດ), ນຳໃຊ້ເພື່ອທຸລະກິດ (ຟາມສັດ, ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນຳຜ່ານ) ຊຶ່ງມັນເປັນເງື່ອນໄຂ ແລະ ທ່າແຮງອັນສຳຄັນ ໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດຊາດ.

ຍ້ອນເຫັນໄດ້ຄວາມສຳຄັນດັ່ງກ່າວ, ພັກ ແລະ ລັດຖະບານ ຈຶ່ງໄດ້ມີການປະກອບທຶນຮອນຢ່າງຫຼວງຫຼາຍ ເພື່ອຮັບໃຊ້ເຂົ້າໃນການປົກປັກຮັກສາສັດນ້ຳ ແລະ ສັດປ່າ ໃຫ້ແຜ່ພັນນັບມື້ນັບເພີ່ມຂຶ້ນເລື້ອຍໆ ເຊັ່ນ: ລັດຖະບານ ໄດ້ສ້າງກົດໝາຍວ່າດ້ວຍປ່າໄມ້ ເພື່ອໃຫ້ສະພາແຫ່ງຊາດຮັບຮອງເອົາໃນປີ 1996 ອັນໄດ້ເຮັດໃຫ້ຂະບວນການປົກປັກຮັກສາສັດນ້ຳ ແລະ ສັດປ່າ ໄດ້ເກີດຂຶ້ນຢ່າງກວ້າງຂວາງ ໃນຂອບເຂດທົ່ວປະເທດ ແລະ ຕໍ່ມາລັດຖະບານ ກໍໄດ້ສ້າງກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ເພື່ອໃຫ້ສະພາແຫ່ງຊາດ ຮັບຮອງເອົາໃນທ້າຍປີ 2007 ຊຶ່ງກົດໝາຍສະບັບນີ້ ໄດ້ຖືເອົາການປົກປັກຮັກສາສັດນ້ຳ ແລະ ສັດປ່າ ເປັນວຽກງານຕົ້ນຕໍຂອງທົ່ວປວງຊົນ. ສະນັ້ນ, ອົງການປົກຄອງທັງສູນກາງ ແລະ ທ້ອງຖິ່ນ, ໂດຍສະເພາະຂະແໜງ

ການກະສິກຳ ແລະ ປ່າໄມ້ ຈຶ່ງໄດ້ເພີ່ມທະວີຄວາມເປັນເຈົ້າການໃນການສຶກສາອົບຮົມໃຫ້ປະຊາຊົນລາວບັນດາເຜົ່າ ທີ່ດໍາລົງຊີວິດຢູ່ຊົນນະບົດ ໃຫ້ຮູ້ຈັກຮັກ ແລະ ຫວງແຫນສັດນ້ຳ ແລະ ສັດປ່າ, ບໍ່ລ່າ, ບໍ່ຄ້າ, ບໍ່ຊື້, ບໍ່ຂາຍ, ບໍ່ບໍລິໂພກ, ບໍ່ນໍາເຂົ້າ ແລະ ບໍ່ສົ່ງອອກ. ອັນສໍາຄັນ ກົດໝາຍສະບັບນີ້ ຍັງໄດ້ກໍານົດເອົາ **ວັນທີ 13 ກໍລະກົດ ເປັນວັນປ່ອຍປາ ແລະ ອະນຸລັກສັດນ້ຳ ແລະ ສັດປ່າແຫ່ງຊາດ.**






## 3. ຈຸດປະສົງຂອງກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ

ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ສັດນ້ຳ ແລະ ສັດປ່າ ຢ່າງຍາວນານ ບໍ່ໃຫ້ສົ່ງຜົນກະທົບຕໍ່ທໍາມະຊາດ, ຖິ່ນທີ່ຢູ່ອາໄສ, ຈໍາກັດການຫຼຸດລົງ ແລະ ການສູນພັນຂອງສັດນ້ຳ ແລະ ສັດປ່າ ພ້ອມທັງປຸກລະດົມໃຫ້ທົ່ວປວງຊົນ ເຫັນໄດ້ຄວາມສໍາຄັນ, ເຊີດຊູສະຕິຮັກ, ຫວງແຫນ, ຖະໜອມ ແລະ ເປັນເຈົ້າການເຂົ້າຮ່ວມໃນການຄຸ້ມຄອງ, ກວດກາ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ສັດນ້ຳ ແລະ ສັດປ່າ ແບບຍືນຍົງ ແນໃສ່ຮັບປະກັນຄວາມອຸດົມສົມບູນ, ຄວາມສົມດູນຂອງລະບົບນິເວດທໍາມະຊາດ, ປະກອບສ່ວນ ຍົກລະດັບຊີວິດການເປັນຢູ່ ຂອງປະຊາຊົນລາວບັນດາເຜົ່າ ໃຫ້ດີຂຶ້ນ ແລະ ເປັນທ່າແຮງໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.











## II. ກົດໝາຍວ່າດ້ວຍສັດນໍ້າ ແລະ ສັດປ່າ ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດໄດ້ ມີຫຍັງແດ່ ?

### 1. ນະໂຍບາຍ ກ່ຽວກັບ ສັດນໍ້າ ແລະ ສັດປ່າ

ລັດ ຊຸກຍູ້ສົ່ງເສີມການອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ຂະຫຍາຍພັນສັດນໍ້າ ແລະ ສັດປ່າ ດ້ວຍການວາງນະໂຍບາຍ, ລະບຽບກົດໝາຍ, ທຶນຮອນ, ວິຊາການ, ເຕັກໂນໂລຊີ ແລະ ມາດຕະການຕ່າງໆ ເພື່ອເພີ່ມຈໍານວນສັດນໍ້າ ແລະ ສັດປ່າ ໃຫ້ຫຼາຍຂຶ້ນ ແນໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການທາງດ້ານ ເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ.

ລັດ ສົ່ງເສີມໃຫ້ບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການອະນຸລັກ, ປົກປັກຮັກສາ, ລ້ຽງ ແລະ ຂະຫຍາຍພັນ ດ້ວຍການໄດ້ຮັບນະໂຍບາຍຕ່າງໆ ເຊັ່ນ: ນະໂຍບາຍສິນເຊື່ອ, ຍົກເວັ້ນ ຫຼື ຫຼຸດຜ່ອນພາສີ, ອາກອນຕາມລະບຽບການ.

### 2. ການດໍາເນີນທຸລະກິດ ກ່ຽວກັບ ສັດນໍ້າ ແລະ ສັດປ່າ

ຖ້າຢາກດໍາເນີນທຸລະກິດ ກ່ຽວກັບ ສັດນໍ້າ ແລະ ສັດປ່າ ເຊັ່ນ: ການສ້າງສວນສັດ, ການສ້າງຟາມສັດ, ການປິ່ນປົວສັດ, ການຄ້າຂາຍ, ການເຄື່ອນຍ້າຍ, ການນໍາເຂົ້າ, ການສົ່ງອອກ, ການສົ່ງອອກຄືນ, ການນໍາຜ່ານ, ການສະແດງລະຄອນສັດ, ການສ້າງສາລະຄະດີສັດ ຕ້ອງໄດ້ຮັບຄວາມເຫັນດີຈາກຂະແໜງການກະສິກໍາ ແລະ ປ່າໄມ້ ແລະ ຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກໍານົດໄວ້ ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ ແລະ ໃຫ້ປະຕິບັດ ດັ່ງນີ້:

- **ສັດນໍ້າ ແລະ ສັດປ່າ ປະເພດຫວງຫ້າມ** ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ;
- **ສັດນໍ້າ ແລະ ສັດປ່າ ປະເພດຄຸ້ມຄອງ** ຕ້ອງໄດ້ຮັບອະນຸຍາດຈາກ ກະຊວງກະສິກໍາ ແລະ ປ່າໄມ້;
- **ສັດນໍ້າ ແລະ ສັດປ່າ ປະເພດທົ່ວໄປ** ຕ້ອງໄດ້ຮັບອະນຸຍາດຈາກ ພະແນກກະສິກໍາ ແລະ ປ່າໄມ້ ປະຈໍາແຂວງ, ນະຄອນຫຼວງ.

### 3. ປະເພດ ສັດນໍ້າ ແລະ ສັດປ່າ

ສັດນໍ້າ ແລະ ສັດປ່າ ຢູ່ ສປປ ລາວ ປະກອບດ້ວຍ ສັດລ້ຽງລູກດ້ວຍນໍ້ານົມ, ສັດປີກ, ສັດເລືອຄານ, ສັດເຄິ່ງບົກເຄິ່ງນໍ້າ ແລະ ແມງໄມ້ທຸກຊະນິດ ຊຶ່ງແບ່ງອອກເປັນ 3 ຊະນິດ ດັ່ງນີ້: ສັດນໍ້າ ແລະ ສັດປ່າ ປະເພດຫວງຫ້າມ, ສັດນໍ້າ ແລະ ສັດປ່າ ປະເພດຄຸ້ມຄອງ ແລະ ສັດນໍ້າ ແລະ ສັດປ່າ ປະເພດທົ່ວໄປ.

#### 3.1. ສັດນໍ້າ ແລະ ສັດປ່າ ປະເພດຫວງຫ້າມ

ແມ່ນ ສັດນໍ້າ ແລະ ສັດປ່າ ທີ່ໄດ້ກໍານົດໄວ້ໃນ ບັນຊີ I ຊຶ່ງເປັນສັດປະເພດທີ່ຫາຍາກ, ໃກ້ຈະສູນພັນ, ມີຄຸນຄ່າສູງ ແລະ ມີຄວາມສໍາຄັນເປັນພິເສດ ຕໍ່ການພັດທະນາເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ແລະ ການສຶກສາຄົ້ນຄວ້າທາງດ້ານວິທະຍາສາດ.

ດັ່ງນັ້ນ, ສັດນ້ຳ ແລະ ສັດປ່າ ປະເພດນີ້ ຕ້ອງໄດ້ຄຸ້ມຄອງ, ກວດກາ, ອະນຸລັກ, ປົກປັກຮັກສາ ແລະ ພັດທະນາ, ສ່ວນການນຳໃຊ້ນັ້ນ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ.



### 3.2. ສັດນ້ຳ ແລະ ສັດປ່າ ປະເພດຄຸ້ມຄອງ

ແມ່ນ ສັດນ້ຳ ແລະ ສັດປ່າ ທີ່ໄດ້ກຳນົດໄວ້ໃນ ບັນຊີ II ຊຶ່ງເປັນສັດທີ່ມີຄຸນປະໂຫຍດ ທາງດ້ານເສດຖະກິດ, ສັງຄົມ, ສິ່ງແວດລ້ອມ, ຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ແລະ ການສຶກສາຄົ້ນຄວ້າທາງດ້ານວິທະຍາສາດ. ດັ່ງນັ້ນ, ສັດນ້ຳ ແລະ ສັດປ່າ ປະເພດນີ້ ຕ້ອງມີການຄຸ້ມຄອງ, ກວດກາ, ອະນຸລັກ, ປົກປັກຮັກສາ ແລະ ຄວບຄຸມການນຳໃຊ້.



### 3.3. ສັດນ້ຳ ແລະ ສັດປ່າ ປະເພດທົ່ວໄປ

ແມ່ນ ສັດນ້ຳ ແລະ ສັດປ່າ ທີ່ໄດ້ກຳນົດໄວ້ໃນ ບັນຊີ III ຊຶ່ງເປັນສັດປະເພດທີ່ສາມາດຂະຫຍາຍພັນໄດ້ຕາມທຳມະຊາດຢ່າງກວ້າງຂວາງ, ມີຄວາມສຳຄັນ ຕໍ່ການພັດທະນາເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ແລະ ການສຶກສາຄົ້ນຄວ້າທາງດ້ານວິທະຍາສາດ. ດັ່ງນັ້ນ, ສັດນ້ຳ ແລະ ສັດປ່າປະເພດນີ້ ສາມາດນຳໃຊ້ໄດ້ຕາມລະບຽບກົດໝາຍ ໂດຍຮັບປະກັນບໍ່ໃຫ້ສູນພັນ ພ້ອມທັງ ບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ລະບົບນິເວດ ແລະ ສິ່ງແວດລ້ອມ.

## 4. ກຳມະສິດ ກ່ຽວກັບ ສັດນ້ຳ ແລະ ສັດປ່າ

ສັດນ້ຳ ແລະ ສັດປ່າ ທຳມະຊາດ ທີ່ມີຢູ່ໃນດິນແດນ ຂອງ ສປປ ລາວ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ; ສ່ວນສັດນ້ຳ ແລະ ສັດປ່າ ທີ່ບຸກຄົນ ແລະ ການຈັດຕັ້ງ ໄດ້ນຳມາລ້ຽງ

ແລະ ຂະຫຍາຍພັນດ້ວຍເຫື່ອແຮງ ຫຼື ທຶນຮອນຂອງຕົນ ແມ່ນເປັນກຳມະສິດຂອງບຸກຄົນ ແລະ ການຈັດຕັ້ງ ຕາມລະບຽບກົດໝາຍ.

**5. ສິດ ຂອງບຸກຄົນ ແລະ ນິຕິບຸກຄົນ ໃນການນຳໃຊ້ສັດນ້ຳ ແລະ ສັດປ່າ**

ບຸກຄົນ ແລະ ນິຕິບຸກຄົນ ໄດ້ຮັບສິດນຳໃຊ້ສັດນ້ຳ ແລະ ສັດປ່າ ຈາກ:

- **ການມອບສິດນຳໃຊ້ສັດນ້ຳ ແລະ ສັດປ່າ** ແມ່ນ ການຕົກລົງຂອງອົງການທີ່ມີສິດໜ້າທີ່ກ່ຽວຂ້ອງ ໃນການເອົາສັດນ້ຳ ແລະ ສັດປ່າ ໃຫ້ບຸກຄົນ ແລະ ການຈັດຕັ້ງ ນຳໃຊ້ຢ່າງຍາວນານ ແລະ ມີຄວາມສະຫງົບ ຕາມສັນຍາ ແລະ ລະບຽບກົດໝາຍ;
- **ການໂອນສິດນຳໃຊ້ສັດນ້ຳ ແລະ ສັດປ່າ** ແມ່ນ ການເອົາສິດນຳໃຊ້ສັດນ້ຳ ແລະ ສັດປ່າ ທີ່ຕົນໄດ້ພັດທະນາໃຫ້ຜູ້ອື່ນ ດ້ວຍການຂາຍ, ການມອບ ຫຼື ການແລກປ່ຽນ. ການໂອນ ຕ້ອງປະຕິບັດໃຫ້ສອດຄ່ອງກັບລະບຽບກົດໝາຍ, ແຈ້ງໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ແລະ ຂຶ້ນທະບຽນໃໝ່ ລວມທັງເສຍຄ່າທຳນຽມຕາມລະບຽບການ;
- **ການສືບທອດສິດນຳໃຊ້ສັດນ້ຳ ແລະ ສັດປ່າ** ແມ່ນ ການຕົກທອດສິດດັ່ງກ່າວ ໄປຍັງລູກ, ຜົວ ຫຼື ເມຍ, ພໍ່, ແມ່, ຫຼານ ຫຼື ຍາດຕິພີ່ນ້ອງ ພາຍຫຼັງຜູ້ນຳໃຊ້ສັດນ້ຳ ແລະ ສັດປ່າ ໄດ້ເສຍຊີວິດແລ້ວ. **ການສືບທອດ** ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍມູນມໍລະດົກ, ພື້ນຖານການສືບທອດມູນມໍລະດົກ ແລະ ແຈ້ງໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ແລະ ຂຶ້ນທະບຽນໃໝ່ ລວມທັງເສຍຄ່າທຳນຽມ ຕາມລະບຽບການ;
- **ຜູ້ນຳໃຊ້ ແລະ ຜູ້ດຳເນີນທຸລະກິດ ກ່ຽວກັບ ສັດນ້ຳ ແລະ ສັດປ່າ** ມີສິດປົກປັກຮັກສາ, ພັດທະນາ, ນຳໃຊ້, ໄດ້ຮັບໝາກຜົນ, ໂອນ ແລະ ສືບທອດສັດນ້ຳ ແລະ ສັດປ່າ ແລະ ຍັງມີສິດສຶກສາຄົ້ນຄວ້າທົດລອງທາງດ້ານວິທະຍາສາດ;
- **ສຳລັບການຈັດຕັ້ງຂອງລັດ** ມີສິດຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້;
- **ສ່ວນສິດນຳໃຊ້ຕາມຮີດຄອງ** ແມ່ນ ນຳໃຊ້ເພື່ອຄວາມຈຳເປັນທາງດ້ານວັດທະນະທຳ ຫຼື ຄວາມເຊື່ອຖື ເຊັ່ນ: ການປ່ອຍນົກ, ປ່ອຍເຕົ່າ, ປ່ອຍປາ ແລະ ອື່ນໆ.




## 6. ພັນທະ ຂອງຜູ້ນຳໃຊ້ ແລະ ຜູ້ດຳເນີນທຸລະກິດ ກ່ຽວກັບ ສັດນ້ຳ ແລະ ສັດປ່າ

### 6.1. ຜູ້ນຳໃຊ້ສັດນ້ຳ ແລະ ສັດປ່າ ມີພັນທະຕົ້ນຕໍ ດັ່ງນີ້:

- ປະຕິບັດລະບຽບ ແລະ ກົດໝາຍກ່ຽວກັບສັດນ້ຳ ແລະ ສັດປ່າ;
- ນຳໃຊ້ສັດນ້ຳ ແລະ ສັດປ່າ ຢ່າງຍືນຍົງ ແລະ ບໍ່ມີຜົນກະທົບອັນບໍ່ດີ ຕໍ່ສິ່ງແວດລ້ອມ, ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ສົນທິສັນຍາສາກົນ;
- ນຳໃຊ້ທຸກວິທີການ ເພື່ອສະກັດກັ້ນການລັກລອບຫາ, ລ່າ, ຊື້-ຂາຍ ແລະ ທຳລາຍຖິ່ນທີ່ຢູ່ອາໄສ ຂອງ ສັດນ້ຳ ແລະ ສັດປ່າ;
- ອະນຸລັກ, ປົກປັກຮັກສາສັດນ້ຳ, ສັດປ່າ ແລະ ສິ່ງແວດລ້ອມທຳມະຊາດ;
- ປະກອບສ່ວນ ແລະ ທຶນຮອນທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
- ເສຍຄ່າທຳນຽມ, ຄ່າເຊົ່າ ແລະ ພັນທະອື່ນໆ ກ່ຽວກັບ ສັດນ້ຳ ແລະ ສັດປ່າ ຕາມລະບຽບກົດໝາຍ;
- ລາຍງານ ກ່ຽວກັບ ຂໍ້ມູນການພັດທະນາ, ນຳໃຊ້ສັດນ້ຳ ແລະ ສັດປ່າ ແລະ ໃຫ້ການຮ່ວມມືແກ່ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນ;
- ກວດກາສຸຂະພາບ, ເຝົ້າລະວັງ, ຕິດຕາມການລະບາດຂອງພະຍາດສັດ ຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ. ໃນກໍລະນີ ສັດຕິດເຊື້ອພະຍາດ ຕ້ອງປິ່ນປົວຢ່າງທັນການ.

### 6.2. ຜູ້ດຳເນີນທຸລະກິດ ກ່ຽວກັບ ສັດນ້ຳ ແລະ ສັດປ່າ ມີພັນທະຕົ້ນຕໍ ດັ່ງນີ້:

- ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ;
- ເສຍພັນທະ ແລະ ຄ່າທຳນຽມ ຕາມລະບຽບກົດໝາຍ;
- ໂຄສະນາເຜີຍແຜ່ ກ່ຽວກັບ ວຽກງານຄຸ້ມຄອງ, ອະນຸລັກ, ປົກປັກຮັກສາສັດນ້ຳ ແລະ ສັດປ່າ;
- ປະກອບສ່ວນທາງດ້ານທຶນຮອນ ແລະ ແຮງງານເຂົ້າໃນການປົກປັກຮັກສາ ແລະ ພັດທະນາສັດນ້ຳ ແລະ ສັດປ່າ ແລະ ສິ່ງແວດລ້ອມທຳມະຊາດ;
- ນຳໃຊ້ທຸກວິທີການເພື່ອສະກັດກັ້ນ ການທຳລາຍຖິ່ນທີ່ຢູ່ອາໄສ, ປ້ອງກັນໄຟໄໝ້ລາມປ່າ, ການລັກລອບຫາ, ລ່າ ແລະ ຄ້າຂາຍສັດນ້ຳ ແລະ ສັດປ່າ;
- ໃຫ້ການຮ່ວມມື, ຕອບສະໜອງຂໍ້ມູນ ແລະ ເອື້ອອຳນວຍຄວາມສະດວກໃຫ້ແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງລັດ;
- ຂົນຂວາຍທຶນຮອນທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນການປົກປັກຮັກສາ ແລະ ພັດທະນາສັດນ້ຳ ແລະ ສັດປ່າ;

- ກວດກາສຸຂະພາບ, ເຝົ້າລະວັງ, ຕິດຕາມການລະບາດຂອງພະຍາດສັດ ຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ. ໃນກໍລະນີ ສັດຕິດເຊື້ອພະຍາດ ຕ້ອງປິ່ນປົວຢ່າງທັນການ.

**7. ການນໍາໃຊ້ສັດນໍ້າ ແລະ ສັດປ່າ ມີ 4 ຢ່າງ ດັ່ງນີ້:**

**7.1. ການນໍາໃຊ້ສັດນໍ້າ ແລະ ສັດປ່າ ເພື່ອສາທາລະນະປະໂຫຍດ**

ແມ່ນ ການນໍາເອົາສັດນໍ້າ ແລະ ສັດປ່າ ມາຮັບໃຊ້ຜົນປະໂຫຍດສ່ວນລວມ ເຊັ່ນ: ການທ່ອງທ່ຽວ, ສວນສັດ, ການກິລາ, ລະຄອນສັດ, ຫໍພິພິທະພັນ ແລະ ອື່ນໆ ແຕ່ຕ້ອງປະຕິບັດຕາມລະບຽບກົດໝາຍ ຮັບປະກັນຄວາມຍືນຍົງ, ບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມທໍາມະຊາດ ແລະ ສັງຄົມ. ອັນສໍາຄັນໃນການນໍາໃຊ້ສັດນໍ້າ ແລະ ສັດປ່າເພື່ອສາທາລະນະປະໂຫຍດ ຕ້ອງໄດ້ຮັບການອະນຸມັດຕາມຂັ້ນຕອນ ດັ່ງນີ້:

- **ການນໍາໃຊ້ສັດນໍ້າ ແລະ ສັດປ່າ ປະເພດຫວງຫ້າມ ເພື່ອສາທາລະນະປະໂຫຍດ** ຕ້ອງໄດ້ຮັບອະນຸຍາດຈາກ ລັດຖະບານ;
- **ການນໍາໃຊ້ສັດນໍ້າ ແລະ ສັດປ່າ ປະເພດຄຸ້ມຄອງ ເພື່ອສາທາລະນະປະໂຫຍດ** ຕ້ອງໄດ້ຮັບອະນຸຍາດຈາກ ກະຊວງກະສິກໍາ ແລະ ປ່າໄມ້;
- **ການນໍາໃຊ້ສັດນໍ້າ ແລະ ສັດປ່າ ປະເພດທົ່ວໄປ ເພື່ອສາທາລະນະປະໂຫຍດ** ຕ້ອງໄດ້ຮັບອະນຸຍາດຈາກ ພະແນກກະສິກໍາ ແລະ ປ່າໄມ້ ປະຈໍາແຂວງ, ນະຄອນ.

**7.2. ການນໍາໃຊ້ສັດນໍ້າ ແລະ ສັດປ່າ ເພື່ອຄອບຄົວ**

ແມ່ນ ການນໍາເອົາສັດນໍ້າ ແລະ ສັດປ່າ ຫຼື ສິ້ນສ່ວນຂອງສັດນໍ້າ ແລະ ສັດປ່າມານໍາໃຊ້ເພື່ອບໍລິໂພກ, ເປັນຢາປົວພະຍາດ, ເອ້ຢ້ອງ ແລະ ອື່ນໆ. ຄອບຄົວພາຍໃນບ້ານ ສາມາດນໍາໃຊ້ສັດນໍ້າ ແລະ ສັດປ່າ ປະເພດທົ່ວໄປຕາມລະບຽບການ, ຕາມລະດູການ ແລະ ສະຖານທີ່ທີ່ອະນຸຍາດ, ນໍາໃຊ້ເຄື່ອງມື ແລະ ວິທີການທີ່ມີລັກສະນະບໍ່ດັບສູນ; ສໍາລັບການນໍາໃຊ້ສັດນໍ້າ ແລະ ສັດປ່າ ປະເພດຄຸ້ມຄອງ ຕ້ອງປະຕິບັດຕາມລະບຽບການ ຂອງກະຊວງກະສິກໍາ ແລະ ປ່າໄມ້.

**7.3. ການນໍາໃຊ້ສັດນໍ້າ ແລະ ສັດປ່າ ຕາມຮີດຄອງ**

ແມ່ນ ການນໍາເອົາສັດນໍ້າ ແລະ ສັດປ່າ ມານໍາໃຊ້ເພື່ອຄວາມຈໍາເປັນທາງດ້ານວັດທະນະທໍາ ຫຼື ຄວາມເຊື່ອຖື ເຊັ່ນ: ການປ່ອຍນົກ, ປ່ອຍເຕົ່າ, ປ່ອຍປາ ແລະ ອື່ນໆ.

**7.4. ການນໍາໃຊ້ສັດນໍ້າ ແລະ ສັດປ່າ ເພື່ອທຸລະກິດ**

ແມ່ນ ການທີ່ລັດອະນຸຍາດໃຫ້ ນໍາໃຊ້ສັດນໍ້າ ແລະ ສັດປ່າ ເພື່ອທຸລະກິດ ເຊັ່ນ: ສວນສັດ, ຟາມສັດ, ການນໍາເຂົ້າ, ການສົ່ງອອກ, ການສົ່ງອອກຄືນ, ນໍາຜ່ານ, ການທ່ອງທ່ຽວໃນເຂດອະນຸລັກ ແລະ ອື່ນໆ ຕາມລະບຽບການ.

## III. ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເຮັດ ມີຫຍັງແດ່ ?

ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ໄດ້ຈັດແບ່ງຂໍ້ຫ້າມອອກເປັນ 2 ປະເພດຄື: ຂໍ້ຫ້າມທົ່ວໄປ (ບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ຢູ່ ສປປ ລາວ) ແລະ ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ປ່າໄມ້.

### 1. ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ຢູ່ ສປປ ລາວ ມີການກະທຳດັ່ງນີ້:

1) ນຳເອົາສັດນ້ຳ ແລະ ສັດປ່າ ປະເພດຫວງຫ້າມ ທີ່ຍັງມີຊີວິດ, ຊາກ, ສິ້ນສ່ວນ ແລະ ອະໄວຍະວະຕ່າງໆຂອງສັດ ອອກຈາກຖິ່ນທີ່ຢູ່ອາໄສມາໄວ້ໃນຄອບຄອງ;
2) ທໍລະມານສັດ ທຸກຮູບແບບ;
3) ລັກລອບ ຫາ, ລ່າ, ຊື້-ຂາຍ ແລະ ມີໄວ້ໃນຄອບຄອງ ສັດນ້ຳ ແລະ ສັດປ່າ ໂດຍບໍ່ໄດ້ຮັບອະນຸຍາດ;
4) ຫາສັດນ້ຳ ແລະ ລ່າສັດປ່າ ໃນສະຖານທີ່ຫວງຫ້າມ, ເຂດອະນຸລັກພັນສັດ ໃນລະດູການຂະຫຍາຍພັນ, ຖືພາມານ ແລະ ລ້ຽງລູກນ້ອຍ;
5) ຜະລິດ, ນຳເຂົ້າ, ຈຳໜ່າຍ ແລະ ນຳໃຊ້ເຄື່ອງມື ຫຼື ອາວຸດຫາປາ ແລະ ລ່າເນື້ອທີ່ມີລັກສະນະດັບສູນ ເຊັ່ນ: ປືນທຸກຊະນິດ, ລະເບີດ, ທາດເຄມີ, ທາດເບື່ອ, ໄຟຟ້າ, ແສງ ຫຼື ສຽງທຽມ ແລະ ອື່ນໆ;
6) ບຸກລຸກທຳລາຍເຂດອະນຸລັກພັນສັດ, ວັງສະຫງວນ, ຖິ່ນທີ່ຢູ່ອາໄສ ແລະ ແຫຼ່ງອາຫານຂອງສັດນ້ຳ ແລະ ສັດປ່າ ໂດຍທາງກົງ ຫຼື ທາງອ້ອມ ເຊັ່ນ: ດ້ວຍການບຸກເບີກ, ຕັ້ງຖິ່ນຖານໃໝ່, ຖາກຖາງປ່າໄມ້, ຈູດປ່າ, ຕັດໄມ້, ນຳໃຊ້ຢາປາບສັດຕູພືດ ຫຼື ຢາຂ້າຫຍ້າເກີນກຳນົດ ແລະ ການກະທຳອື່ນ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ;
7) ຈັບຈອງ, ຍ້າຍ, ປ່ຽນແປງ ຫຼື ທຳລາຍເຄື່ອງໝາຍເຂດແດນ, ວັງສະຫງວນ, ເຂດອະນຸລັກພັນສັດ ແລະ ຖິ່ນທີ່ຢູ່ອາໄສ;
8) ລ້ຽງສັດນ້ຳ ແລະ ສັດປ່າ ເປັນທຸລະກິດທີ່ຢູ່ໃນຕົວເມືອງ ແລະ ເຂດຊຸມຊົນ ຊຶ່ງເຮັດໃຫ້ສະພາບແວດລ້ອມເສື່ອມເສຍ;
9) ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນຳຜ່ານ ຫຼື ເຄື່ອນຍ້າຍສັດນ້ຳ ແລະ ສັດປ່າ ທີ່ຕິດເຊື້ອພະຍາດ, ບໍ່ມີຄວາມປອດໄພຕໍ່ສຸຂະພາບຂອງສັດ, ນຳສັດດັ່ງກ່າວເຂົ້າໃນເວລາເກືອດຫ້າມ ຫຼື ບໍ່ຖືກຕ້ອງຕາມການອະນຸຍາດ ແລະ ລະບຽບກົດໝາຍ;
10) ໃຫ້ສິນບົນແກ່ພະນັກງານ ແລະ ເຈົ້າໜ້າທີ່, ປອມແປງເອກະສານ ແລະ ຕາປະທັບ;
11) ນາບຂູ່, ກົດໜ່ວງຖ່ວງດຶງ ແລະ ຂັດຂວາງການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ ທີ່ປະຕິບັດວຽກງານກ່ຽວກັບສັດນ້ຳ ແລະ ສັດປ່າ;

12) ມີການກະທຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ ກ່ຽວກັບ ສັດນ້ຳ ແລະ ສັດປ່າ.

### 2. ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ປ່າໄມ້

ນອກຈາກຂໍ້ຫ້າມທົ່ວໄປ ແລ້ວ, ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ປ່າໄມ້ ມີການກະທຳ ດັ່ງນີ້:

1) ສວຍໃຊ້ສິດ ແລະ ໜ້າທີ່ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ ຫຼື ນາບຂູ່, ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດລວມ ຂອງລັດ, ລວມໝູ່ ແລະ ບຸກຄົນ;
2) ເປີດເຜີຍຄວາມລັບຂອງລັດ ຫຼື ລັດຖະການ, ປອມແປງເອກະສານ, ຂາດຄວາມຮັບຜິດຊອບທີ່ໄດ້ຮັບມອບໝາຍ;
3) ດຳເນີນທຸລະກິດກ່ຽວກັບສັດນ້ຳ ແລະ ສັດປ່າ ດ້ວຍຕົນເອງ ຫຼື ມີຫຸ້ນສ່ວນ.







## IV. ຖ້າລະເມີດກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ຈະໄດ້ຮັບໂທດຄື ແນວໃດ ?

ຜູ້ທີ່ລະເມີດກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫຼື ລົງໂທດ ຕາມລະບຽບກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 68, 69, 70, 71 ແລະ 72 ຂອງກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ.

### 1. ກໍລະນີເບົາ

ແມ່ນ ການກະທຳຜິດທີ່ມີມູນຄ່າເສຍຫາຍຕ່ຳກວ່າ 200.000 ກີບ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ, ແຕ່ຫາກມີຄວາມຈິງໃຈລາຍງານ, ຮັບສາລະພາບຕໍ່ການກະທຳຜິດທີ່ບໍ່ຖືກຕ້ອງຂອງຕົນ ແລະ ສົ່ງຊັບສິນ ຫຼື ຂອງກາງທີ່ໄດ້ມາ ໂດຍບໍ່ຖືກຕ້ອງນັ້ນຄືນຄົບຖ້ວນ.

➢ **ສໍາລັບ ບຸກຄົນ, ການຈັດຕັ້ງ ຫຼື ວິສາຫະກິດ** ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ;

➢ **ສໍາລັບ ພະນັກງານ ແລະ ເຈົ້າໜ້າທີ່** ຈະຖືກປະຕິບັດວິໄນ ຕາມແຕ່ລະກໍລະນີ ດັ່ງນີ້:

– ຕິຕຽນ, ກ່າວເຕືອນຄວາມຜິດ ໂດຍບັນທຶກໄວ້ໃນສໍານວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;

– ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ, ການຍ້ອງຍໍ.

## 2. ກໍລະນີໜັກ ຫຼື ບໍ່ເຂັດຫຼາບ

ແມ່ນ ການກະທໍາຜິດຕໍ່ລະບຽບກົດໝາຍ ກ່ຽວກັບ ສັດນໍ້າ ແລະສັດປ່າ ແລະ ຂໍ້ຫ້າມຂອງກົດໝາຍດັ່ງກ່າວ ແລະ ກໍ່ຄວາມເສຍຫາຍທີ່ມີມູນຄ່າແຕ່ 200.000 ກີບຂຶ້ນໄປ ຫຼື ຕໍ່າກ່ວາ 200.000 ກີບ ແຕ່ຫາກບໍ່ມີຄວາມຈິງໃຈລາຍງານ ແລະ ຫຼົບຫຼີກຈາກຄວາມຜິດຂອງຕົນ:

➢ **ບຸກຄົນ, ການຈັດຕັ້ງ ຫຼື ວິສາຫະກິດ** ຈະຖືກປັບໃໝເທົ່າຕົວ ຂອງມູນຄ່າຄວາມເສຍຫາຍຂອງສັດນໍ້າ ແລະ ສັດປ່າ. **ກໍລະນີ ມີການລະເມີດເປັນຄັ້ງທີສອງ ຫຼື ເປັນອາຈິນ** ກໍຈະຖືກປັບໃໝ ສາມເທົ່າຕົວ ຂອງມູນຄ່າຄວາມເສຍຫາຍ ຂອງສັດນໍ້າ ແລະ ສັດປ່າ ປະເພດຫວງຫ້າມ, ສອງເທົ່າຕົວ ຂອງສັດປະເພດຄຸ້ມຄອງ ແລະ ໜຶ່ງເທົ່າຕົວ ຂອງສັດປະເພດທົ່ວໄປ ພ້ອມທັງຮິບຊັບສິນທີ່ໄດ້ມາໂດຍບໍ່ຖືກຕ້ອງນັ້ນເປັນຂອງລັດ;

➢ **ສໍາລັບພະນັກງານ ແລະ ເຈົ້າໜ້າທີ່** ນອກຈາກຈະຖືກລົງໂທດດັ່ງກ່າວຂ້າງເທິງແລ້ວ ຕ້ອງປະຕິບັດເພີ່ມຕື່ມ ຄື: ປົດຕໍາແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນທີ່ມີຕໍາແໜ່ງຕໍ່າກວ່າເກົ່າ; ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ. ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງ ນັ້ນ ຄືນໃຫ້ການຈັດຕັ້ງຄົບຖ້ວນ.



### 3. ມາດຕະການທາງອາຍາ

ບຸກຄົນ ທີ່ໄດ້ລະເມີດກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ທີ່ເປັນການກະທຳຜິດທາງອາຍາ ເຊັ່ນ: ❶ ຫາສັດນ້ຳ ແລະ ລ່າສັດປ່າທຳມະຊາດ ປະເພດຫວງຫ້າມທີ່ຫາຍາກ ແລະ ໃກ້ຈະສູນພັນ ເຊັ່ນ: ປາຂ່າ, ຊ້າງ, ເສືອໂຄ່ງ, ແຮດ, ເສົາຫຼາ, ໝີ, ເມີຍ ແລະ ງົວບາ; ❷ ນຳໃຊ້ເຄື່ອງມື ຫຼື ວິທີການຫາປາ ແລະ ລ່າສັດທີ່ມີລັກສະນະດັບສູນ; ❸ ບຸກລຸກທຳລາຍຖິ່ນທີ່ຢູ່ອາໄສ ແລະ ແຫຼ່ງອາຫານຂອງສັດນ້ຳ ແລະ ສັດປ່າ; ❹ ລັກເອົາສັດນ້ຳ ແລະ ສັດປ່າ ປະເພດຫວງຫ້າມ ທີ່ຍັງມີຊີວິດ, ຊາກ ຫຼື ສິ້ນສ່ວນ ແລະ ອະໄວຍະວະຕ່າງໆຂອງສັດ ເພື່ອຂາຍ ແລະ ມີໄວ້ໃນຄອບຄອງ; ❺ ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນຳຜ່ານ ແລະ ເຄື່ອນຍ້າຍສັດນ້ຳ ແລະ ສັດປ່າ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ; ❻ ໃຫ້ ແລະ ຮັບສິນບົນ, ປອມແປງເອກະສານ ແລະ ຕາປະທັບ. ຜູ້ກະທຳຜິດ ຈະຖືກດຳເນີນຄະດີອາຍາ ແລະ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ ສາມ ເດືອນ ຫາ ຫ້າ ປີ ຕາມແຕ່ກໍລະນີ ເບົາ ຫຼື ໜັກ ແລະ ປັບໃໝຕາມມາດຕາ 70 ຂອງກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ລວມທັງການໃຊ້ແທນຄ່າເສຍຫາຍທາງແພ່ງ.

### 4. ມາດຕະການໂທດເພີ່ມ

ນອກຈາກໂທດຕົ້ນຕໍ ຫຼື ມາດຕະການທາງອາຍາ ຂ້າງເທິງນີ້ແລ້ວ, ຜູ້ກະທຳຜິດອາດຈະຖືກປະຕິບັດມາດຕະການໂທດເພີ່ມ ເຊັ່ນ: ໂຈະ ຫຼື ຖອນໃບອະນຸຍາດ, ຖອນສິດນຳໃຊ້ສັດນ້ຳ ແລະ ສັດປ່າ.

# ຄວາມຮູ້ພື້ນຖານ ກ່ຽວກັບ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ 2016)

**ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ໄດ້ຖືກຮັບຮອງເອົາ ໃນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VIII ໃນວັນທີ 11 ພະຈິກ 2016 ແລະ ປະກາດໃຊ້ ໂດຍປະທານປະເທດແຫ່ງ ສປປ ລາວ ໃນວັນທີ 19 ທັນວາ 2016 ຊຶ່ງປະກອບມີ 12 ພາກ, 10 ໝວດ ແລະ 121 ມາດຕາ.**

## I. ຄວາມສຳຄັນຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ມີ ຄືແນວໃດ ?

### 1. ຄວາມໝາຍຂອງການລ້ຽງສັດ ແລະ ການສັດຕະວະແພດ

**ການລຽງສັດ** ແມ່ນ ການນຳເອົາສັດມາລ້ຽງໃນສະຖານທີ່ໃດໜຶ່ງທີ່ເໝາະສົມ ຊຶ່ງມີການຄຸ້ມຄອງ, ການປົກປັກຮັກສາ ແລະ ການນຳໃຊ້ແນວພັນສັດ, ການຈັດການທີ່ຢູ່ອາໄສ ແລະ ສະພາບແວດລ້ອມຂອງສັດ, ການສະໜອງອາຫານ, ນ້ຳ ແລະ ການດູແລສຸຂະພາບສັດທີ່ດີ ໂດຍບໍ່ມີຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ເພື່ອເຮັດໃຫ້ສັດ ມີສຸຂະພາບແຂງແຮງ, ຈະເລີນເຕີບໂຕ, ໃຫ້ຜົນຜະລິດຫຼາຍຂຶ້ນ ແນໃສ່ຮັບປະກັນຕອບສະໜອງໃຫ້ແກ່ຜູ້ບໍລິໂພກພາຍໃນ ແລະ ເປັນສິນຄ້າສົ່ງອອກ.

   

**ການສັດຕະວະແພດ** ແມ່ນ ການນຳໃຊ້ວິທະຍາສາດທາງດ້ານການແພດ ກ່ຽວກັບສັດ ເຂົ້າໃນວຽກງານຮັກສາສຸຂະພາບສັດ ເປັນຕົ້ນ ກວດກາສຸຂະພາບ, ການບົ່ງມະຕິພະຍາດ ແລະ ປິ່ນປົວສັດລ້ຽງ, ສັດນ້ຳ ແລະ ສັດປ່າ, ການກັນ ແລະ ຄວບຄຸມພະຍາດສັດຕິດຕໍ່ ຈາກສັດສູ່ສັດ ລວມທັງ ພະຍາດສັດຕິດຕໍ່ສູ່ຄົນ, ສະຫວັດດີການສັດ, ການກວດກາຄຸນນະພາບ ແລະ ຄວາມປອດໄພທາງດ້ານອາຫານ ໃຫ້ແກ່ຜູ້ບໍລິໂພກ ຕາມລະບົບຕ່ອງໂສ້ຂອງການຜະລິດສັດ, ຈຳໜ່າຍ ແລະ ນຳໃຊ້ຜະລິດຕະພັນສິນຄ້າກ່ຽວກັບສັດ ລວມທັງ ການຄຸ້ມຄອງວິຊາຊີບລ້ຽງສັດ ແລະ ສັດຕະວະແພດ.

## 2. ຄວາມສໍາຄັນຂອງການລ້ຽງສັດ ແລະ ການສັດຕະວະແພດ

**ການລ້ຽງສັດ** ເປັນວຽກງານໜຶ່ງທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການຄໍ້າປະກັນສະບຽງອາຫານ, ສ້າງລາຍຮັບໃຫ້ແກ່ຄອບຄົວ, ແກ້ໄຂຄວາມທຸກຍາກ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າໃຫ້ດີຂຶ້ນເລື້ອຍໆ. ສະນັ້ນ, ລັດ ຈຶ່ງຊຸກຍູ້ສົ່ງເສີມໃຫ້ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ຫັນມາດໍາເນີນການປັບປຸງ ແລະ ຂະຫຍາຍພັນສັດ, ຜະລິດອາຫານສັດ ແລະ ຫັນຮູບແບບການລ້ຽງສັດແບບທໍາມະຊາດ ໄປສູ່ການລ້ຽງສັດທີ່ມີການຄຸ້ມຄອງ ແລະ ນໍາໃຊ້ເຕັກນິກວິທະຍາສາດ ຢ່າງເໝາະສົມ.

**ການສັດຕະວະແພດ** ກໍແມ່ນວຽກງານໜຶ່ງທີ່ສໍາຄັນຕໍ່ການລ້ຽງສັດ ບໍ່ສາມາດຕັດແຍກອອກຈາກກັນໄດ້ ໂດຍສະເພາະແມ່ນກິດຈະການ ກ່ຽວກັບ ການສັດຕະວະແພດ ມີການເຄື່ອນໄຫວທີ່ກ່ຽວຂ້ອງກັບການຄຸ້ມຄອງ ແລະ ບໍລິການດ້ານສັດຕະວະແພດ (ການກັນ ແລະ ຄວບຄຸມພະຍາດລະບາດສັດ, ການຄວບຄຸມການເຄື່ອນຍ້າຍສັດ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການກັກ ຫຼື ຂັງຊົ່ວຄາວ ແລະ ການຂ້າສັດ ແລະ ການກວດກາດ້ານອະນາໄມຜະລິດຕະພັນສັດ).

ຍ້ອນເຫັນໄດ້ຄວາມສໍາຄັນດັ່ງກ່າວ, **ລັດໄດ້ກໍານົດເອົາ ວັນທີ 11 ພະຈິກ ເປັນວັນສັກຢາກັນພະຍາດສັດແຫ່ງຊາດ** ເພື່ອປູກຈິດສໍານຶກໃຫ້ປະຊາຊົນ ແລະ ສັງຄົມເອົາໃຈໃສ່ການກັນ ແລະ ຮັກສາສຸຂະພາບສັດລ້ຽງ ບໍ່ໃຫ້ເກີດ ແລະ ຕິດພະຍາດ ພ້ອມທັງເປັນການພັດທະນາການລ້ຽງສັດ ຂອງປະຊາຊົນ ແລະ ການສັດຕະວະແພດ ໃຫ້ມີການຂະຫຍາຍຕົວຂຶ້ນເລື້ອຍໆ.







## 3. ຈຸດປະສົງຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ

ກົດໝາຍສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ແລະ ການກວດກາວຽກງານລ້ຽງສັດ ແລະ ສັດຕະວະແພດ ເພື່ອພັດທະນາການລ້ຽງສັດ, ການຮັກສາສຸຂະພາບສັດ, ການປົກປັກຮັກສາກໍາມະພັນສັດລ້ຽງ ແລະ ຊັບພະຍາກອນສັດ, ສະຫວັດດີການສັດ ແລະ ຄວາມປອດໄພທາງດ້ານອາຫານແນໃສ່ ເພີ່ມປະລິມານ, ຍົກສູງຄຸນນະພາບຂອງຜະລິດຕະພັນສັດ ແລະ ຜະລິດເປັນສິນຄ້າ, ປົກປັກຮັກສາສິ່ງແວດລ້ອມ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການຄໍ້າປະກັນສະບຽງອາຫານ ແລະ ການຜະລິດເປັນສິນຄ້າ ຕາມທິດກະສິກໍາ ສີຂຽວ, ສະອາດ ແລະ ຍືນຍົງ.

## II. ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ອະນຸຍາດ ໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດໄດ້ ມີຫຍັງແດ່ ?

### 1. ນະໂຍບາຍຂອງລັດ ກ່ຽວກັບ ການລ້ຽງສັດ ແລະ ການສັດຕະວະແພດ

ລັດ ຖືເອົາວຽກງານລ້ຽງສັດ ແລະ ສັດຕະວະແພດ ເປັນວຽກງານສຳຄັນ ຂອງການພັດທະນາດ້ານກະສິກຳ ແລະ ສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດ ດຳເນີນການລ້ຽງສັດ ເພື່ອປະກອບສ່ວນເຂົ້າໃນການຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ການຜະລິດເປັນສິນຄ້າ.

ລັດ ເພີ່ມທະວີການລົງທຶນ ໃສ່ການພັດທະນາພື້ນຖານວັດຖຸເຕັກນິກ ແລະ ບຸກຄະລາກອນ ສຳລັບການຄົ້ນຄວ້າ, ວິໄຈ ແລະ ການຖ່າຍທອດເຕັກນິກ-ເຕັກໂນໂລຊີທີ່ທັນສະໄໝ ກ່ຽວກັບ ການລ້ຽງສັດ ແລະ ການສັດຕະວະແພດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ຕາມທິດ ສີຂຽວ, ສະອາດ, ປອດໄພ, ຍືນຍົງ, ບໍ່ສ້າງຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ.

ລັດ ສົ່ງເສີມ ແລະ ຊຸກຍູ້ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ລົງທຶນໃສ່ການລ້ຽງສັດ, ການສັດຕະວະແພດ ລວມທັງ ການປຸງແຕ່ງຂັ້ນຕົ້ນ ເພື່ອເພີ່ມຜົນຜະລິດຈາກສັດ, ຮັບປະກັນດ້ານຄຸນນະພາບ, ຄວາມປອດໄພຂອງຜູ້ບໍລິໂພກ ແລະ ໃຫ້ກາຍເປັນສິນຄ້າ ດ້ວຍການເຂົ້າເຖິງນະໂຍບາຍຕ່າງໆຕາມລະບຽບການ ເປັນຕົ້ນ ນະໂຍບາຍດ້ານສິນເຊື່ອທີ່ມີດອກເບ້ຍ ແລະ ໄລຍະເວລາກູ້ຢືມສົມເຫດສົມຜົນ ລວມທັງ ນະໂຍບາຍຫຼຸດຜ່ອນພາສີອາກອນ ແລະ ການຊົດເຊີຍ ເພື່ອກັນ ແລະ ຄວບຄຸມພະຍາດສັດ ສະເພາະໃດໜຶ່ງ ຕາມການກຳນົດຂອງອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ.

ລັດ ສົ່ງເສີມ ແລະ ຊຸກຍູ້ການລ້ຽງສັດຂອງຄອບຄົວ ແບບເປັນຟາມ, ກຸ່ມ ແລະ ສະຫະກອນ ດ້ວຍການສ້າງກອງທຶນພັດທະນາການລ້ຽງສັດ, ກອງທຶນສຸຂະພາບສັດ, ນະໂຍບາຍກັນພະຍາດແບບເສຍຄ່າ ຫຼື ບໍ່ເສຍຄ່າ ແລະ ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນວັກເທິງນີ້.

- **ການສົ່ງເສີມການລ້ຽງສັດ:** ລັດ ສົ່ງເສີມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດຳເນີນການລ້ຽງສັດ ຢ່າງເປັນລະບົບ ດ້ວຍນະໂຍບາຍທີ່ມີການນຳໃຊ້ເຕັກນິກ-ເຕັກໂນໂລຊີທີ່ທັນສະໄໝ ເປັນຕົ້ນ ການປັບປຸງ ແລະ ຂະຫຍາຍແນວພັນສັດ ລວມທັງ ແນວພັນສັດພື້ນເມືອງ, ການປູກ ແລະ ນ□າໃຊ້ພືດອາຫານສັດ, ການຜະ ລິດ ແລະ ສະໜອງອາຫານສັດ ແລະ ການສົ່ງເສີມດ້ານເຕັກນິກການລ້ຽງສັດທີ່ດີ ເພື່ອພັດທະນາການລ້ຽງສັດໃຫ້ມີປະສິດທິຜົນ.
- **ການສົ່ງເສີມສັດຕະວະແພດ:** ລັດ ສົ່ງເສີມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດຳເນີນການຮັກສາສຸຂະພາບສັດ ເປັນຕົ້ນ ການບໍລິການກວດກາສຸຂະພາບ ແລະ ປິ່ນປົວສັດ, ການຜະລິດ ແລະ ສະໜອງຢາ ແລະ ຜະລິດຕະພັນການສັດຕະວະແພດ, ການເຝົ້າລະວັງ ແລະ ລາຍງານພະຍາດສັດ, ການກັນ ແລະ ຄວບຄຸມພະຍາດສັດ, ການຄຸ້ມຄອງຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນສັດ, ການສະຫວັດດີການສັດ ລວມທັງ ການພັດທະນາບຸກຄະລາກອນດ້ານສັດຕະວະແພດ.

- ➢ **ກອງທຶນພັດທະນາການລ້ຽງສັດ ແລະ ການສັດຕະວະແພດ:** ລັດ ຊຸກຍູ້ນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ມີການສ້າງຕັ້ງກອງທຶນເພື່ອພັດທະນາການລ້ຽງສັດ ແລະ ການສັດຕະວະແພດ ຕາມລະບຽບການ ໂດຍແຫຼ່ງກອງທຶນຕົ້ນຕໍ ໄດ້ມາຈາກລາຍຮັບຂອງຜູ້ປະກອບການ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງປະກອບທຶນ.
- ➢ **ຂໍ້ມູນ, ຂ່າວສານດ້ານການລ້ຽງສັດ ແລະ ການສັດຕະວະແພດ:** ກະຊວງກະສິກໍາ ແລະ ປ່າໄມ້ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ສ້າງ, ພັດທະນາ ແລະ ຄຸ້ມຄອງລະບົບຂໍ້ມູນ, ຂ່າວສານດ້ານການລ້ຽງສັດ ແລະ ການສັດຕະວະແພດ ຢ່າງລວມສູນ ພ້ອມທັງສົ່ງເສີມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນໍາໃຊ້ ແລະ ເຜີຍແຜ່ຂໍ້ມູນຂ່າວສານດັ່ງກ່າວໃຫ້ປະຊາຊົນ ແລະ ຜູ້ປະກອບການຮັບຊາບ ຢ່າງຖືກຕ້ອງ ທັນເວລາ.
- ➢ **ການສ້າງຕັ້ງກຸ່ມ, ສະຫະກອນ ແລະ ສະມາຄົມ**: ລັດ ຊຸກຍູ້ສົ່ງເສີມການສ້າງຕັ້ງກຸ່ມ ແລະ ສະຫະກອນລ້ຽງສັດ ພ້ອມທັງສະມາຄົມວິຊາຊີບລ້ຽງສັດ ຫຼື ສັດຕະວະແພດ ເພື່ອເຕົ້າໂຮມຄວາມສາມັກຄີ, ທຶນຮອນ, ປົກປ້ອງສິດຜົນປະໂຫຍດອັນຊອບທໍາຂອງຕົນ ພ້ອມທັງແລກປ່ຽນບົດຮຽນດ້ານວິຊາການ ແລະ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ແນໃສ່ ພັດທະນາການຈັດຕັ້ງລວມໝູ່ ດ້ານການລ້ຽງສັດ ແລະ ການສັດຕະວະແພດ ໃຫ້ເຂັ້ມແຂງສາມາດເຊື່ອມໂຍງກັບລະບົບສະຫະກອນ ຫຼື ສະມາຄົມວິຊາຊີບຂອງຂົງເຂດ, ພາກພື້ນ ແລະ ສາກົນ ໃຫ້ສູງຂຶ້ນ ໂດຍປະຕິບັດຢ່າງສອດຄ່ອງກັບລະບຽບພາຍໃນຂອງກຸ່ມ, ສະຫະກອນລ້ຽງສັດ ແລະ ສະມາຄົມທີ່ສ້າງຕັ້ງຂຶ້ນ.

**2. ວຽກງານລ້ຽງສັດ ມີ 9 ກິດຈະກໍາຕົ້ນຕໍ ດັ່ງນີ້:**

- **ແຜນພັດທະນາການລ້ຽງສັດ** ແມ່ນ ການສຶກສາຄວາມເປັນໄປໄດ້, ການກໍານົດຍຸດທະສາດ, ແຜນງານ ແລະ ໂຄງການ ເພື່ອພັດທະນາການລ້ຽງສັດ ໃຫ້ມີການຂະຫຍາຍຕົວ ແລະ ຍືນຍົງ.
- **ການສໍາຫຼວດກ່ຽວກັບການລ້ຽງສັດ** ແມ່ນ ການເກັບກໍາຂໍ້ມູນສະຖິຕິ ກ່ຽວກັບ ການຜະລິດສັດ ເປັນຕົ້ນ ຊະນິດ, ປະເພດ ແລະ ຈໍານວນ, ທົ່ງຫຍ້າ ແລະ ສະຖານທີ່ລ້ຽງສັດ, ຟາມລ້ຽງສັດ, ຜູ້ລ້ຽງສັດ, ປັດໄຈການຜະລິດສັດ, ຜົນຜະລິດຈາກສັດ, ພະຍາດສັດ, ສະພາບແວດລ້ອມ ຂອງການລ້ຽງສັດ, ການຕະຫຼາດສັດ.
- **ການນໍາໃຊ້ທີ່ດິນສໍາລັບການລ້ຽງສັດ** ແມ່ນ ການກໍານົດເຂດ ແລະ ວາງນະໂຍບາຍ ກ່ຽວກັບ ການນໍາໃຊ້ພື້ນທີ່ດິນທີ່ເໝາະສົມ ສໍາລັບການລ້ຽງສັດແຕ່ລະປະເພດ ລວມທັງ ການກໍານົດທິດພັດທະນາ ແລະ ວາງລະບຽບການຄຸ້ມຄອງເຂດລ້ຽງສັດ ແລະ ເຂດສະຫງວນໄວ້ ເພື່ອການປູກພືດວັດຖຸດິບອາຫານສັດ.
- **ການຄົ້ນຄວ້າ ແລະ ການທົດລອງການລ້ຽງສັດ** ແມ່ນ ການສຶກສາທາງດ້ານວິທະຍາສາດ ກ່ຽວກັບ ການລ້ຽງສັດ ເປັນຕົ້ນ ເຕັກນິກການລ້ຽງສັດ, ແນວ

ພັນສັດ, ອາຫານສັດ, ຜົນຕອບແທນທາງດ້ານເສດຖະກິດຂອງການລ້ຽງສັດ ລວມທັງ ການປັບຕົວເຂົ້າກັບສະພາບແວດລ້ອມ ຂອງສັດລ້ຽງແຕ່ລະປະເພດ.

- **ການພັດທະນາ ແລະ ການຄຸ້ມຄອງແນວພັນສັດ**

**ການພັດທະນາແນວພັນສັດ** ແມ່ນ ການນໍາໃຊ້ວິທະຍາສາດໃດໜຶ່ງ ເພື່ອປັບປຸງ ແລະ ຂະຫຍາຍແນວພັນສັດ ລວມທັງ ການເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບ ແນວພັນສັດແຕ່ລະປະເພດ ແນໃສ່ຊຸກຍູ້ການຜະລິດສັດ ໃຫ້ມີຄຸນນະພາບ, ປະສິດທິຜົນ ແລະ ຂະຫຍາຍໃຫ້ເກີດຜົນປະໂຫຍດທາງດ້ານເສດຖະກິດສູງ ແລະ ຍືນຍົງ;

**ການຄຸ້ມຄອງແນວພັນສັດ** ແມ່ນ ການກໍານົດລະບຽບການ ເປັນຕົ້ນ ການຂຶ້ນທະບຽນພັນສັດ, ການບັນທຶກປະຫວັດ ແລະ ຜະລິດຕະພາບ, ການປະເມີນຄຸນຄ່າ ແລະ ປະສິດທິພາບຂອງແນວພັນສັດ ລວມທັງ ການສະຫງວນ, ການປົກປັກຮັກສາ, ການຈັດລິຂະສິດ ກ່ຽວກັບ ກໍາມະພັນ, ສາຍພັນສັດ ແລະ ວິທີການປະສົມພັນສັດ.

- **ການພັດທະນາ ແລະ ການຄຸ້ມຄອງອາຫານສັດ ແລະ ພືດອາຫານສັດ**

**ການພັດທະນາອາຫານສັດ ແລະ ພືດອາຫານສັດ** ແມ່ນ ການນໍາໃຊ້ເຕັກນິກ-ເຕັກໂນໂລຊີໃດໜຶ່ງ ເພື່ອປັບປຸງ ແລະ ຂະຫຍາຍແນວພັນພືດອາຫານສັດ, ການປຸງແຕ່ງອາຫານສັດ ລວມທັງ ການເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບ ອາຫານສັດ ແລະ ພືດອາຫານສັດ ແນໃສ່ເຮັດໃຫ້ການຜະລິດ ແລະ ນໍາໃຊ້ອາຫານສັດມີປະສິດທິຜົນສູງ;

**ການຄຸ້ມຄອງອາຫານສັດ ແລະ ພືດອາຫານສັດ** ແມ່ນ ການກໍານົດລະບຽບການ ເປັນຕົ້ນ ການຂຶ້ນທະບຽນ, ການປູກ, ການຜະລິດ, ການຈໍາໜ່າຍ, ການນໍາເຂົ້າ, ການສົ່ງຜ່ານ, ການສົ່ງອອກ ລວມທັງການຄວບຄຸມຄຸນນະພາບ ແລະ ຄວາມປອດໄພຂອງອາຫານສັດ ແລະ ພືດອາຫານສັດ.

- **ການວິໄຈອາຫານສັດ** ແມ່ນ ການວິເຄາະທາງວິທະຍາສາດດ້ານໂພຊະນາການຂອງອາຫານສັດ ເປັນຕົ້ນ ຄວາມຊຸ່ມ, ທາດໂປຣຕີນ, ເຍື່ອໄຍ, ໄຂມັນ, ແຮ່ທາດ, ວິຕາມິນ, ເຖົ່າ, ພະລັງງານ, ຄວາມເປັນກົດເປັນດ່າງ, ອັດຕາການຍ່ອຍ ຫຼື ດູດຊຶມ ລວມທັງ ການຊອກຄົ້ນຫາສານຕົກຄ້າງ ແລະ ສິ່ງປົນເປື້ອນທີ່ເປັນອັນຕະລາຍຢູ່ໃນອາຫານສັດ ແລະ ວັດຖຸດິບອາຫານສັດ.

- **ການຂຶ້ນທະບຽນພິມສັດ ແລະ ການສືບຍ້ອນຫຼັງປະຫວັດຂອງສັດ**

**ການຂຶ້ນທະບຽນພິມສັດ** ແມ່ນ ການສ້າງເອກະສານບັນທຶກ ແລະ ໝາຍນໍ້າເບີປະຈໍາໂຕສັດ ຫຼື ການສ້າງບັນຊີລະຫັດຈໍາແນກກຸ່ມ ຫຼື ຝູງສັດໃດໜຶ່ງ;

**ການສືບຍ້ອນຫຼັງປະຫວັດຂອງສັດ** ແມ່ນ ການຕິດຕາມຂໍ້ມູນຂອງສັດໂຕໃດໜຶ່ງ ຫຼື ກຸ່ມສັດໃດໜຶ່ງ ຕະຫຼອດຊີວິດຂອງສັດນັ້ນ.

- **ການນຳໃຊ້ສັດລ້ຽງ** ແມ່ນ ສັດປະເພດຕ່າງໆ ທີ່ຄົນນຳມາລ້ຽງ ເພື່ອບໍລິໂພກພາຍໃນຄອບຄົວ, ເປັນແຮງງານລາກແກ່, ທຸລະກິດ, ສາທາລະນະປະໂຫຍດ ແລະ ເພື່ອການທົດລອງ.

  ສັດລ້ຽງ ສາມາດນຳໃຊ້ໃນກໍລະນີ ດັ່ງນີ້:

  1) ການບໍລິໂພກພາຍໃນຄອບຄົວ ຊຶ່ງມີສັດນ້ອຍປະເພດຕ່າງໆ ເປັນຕົ້ນ ສັດປີກ, ໝູ, ແບ້, ແກະ ຫຼື ສັດອື່ນ ທີ່ລ້ຽງເປັນຈຳນວນໜ້ອຍ ໂດຍບໍ່ມີເປົ້າໝາຍເພື່ອຈຳໜ່າຍເປັນລາຍຮັບຕົ້ນຕໍ;
  2) ການເປັນແຮງງານລາກແກ່ ຊຶ່ງມີສັດໃຫຍ່ປະເພດ ງົວ, ຄວາຍ, ຊ້າງ, ມ້າ, ລໍ, ລາ ທີ່ນຳໃຊ້ເຂົ້າໃນການຫຼຸດຜ່ອນແຮງງານຂອງຄົນ ເປັນຕົ້ນ ຂີ່, ຕ່າງເຄື່ອງ, ແກ່ໄຖ ຫຼື ກວຽນ;
  3) ການທຸລະກິດ ຊຶ່ງມີ ສັດທີ່ລ້ຽງເປັນຈຳນວນຫຼາຍ ຫຼື ເປັນຟາມ ເພື່ອຈຳໜ່າຍ;
  4) ການສາທາລະນະປະໂຫຍດ ຊຶ່ງມີ ສັດລ້ຽງໄວ້ປະຈຳເຮືອນ, ສັດລ້ຽງເພື່ອການທ່ອງທ່ຽວ, ການກິລາ, ການຮັກສາຄວາມປອດໄພ ລວມທັງ ສັດລ້ຽງເພື່ອການບັນເທີງ ເປັນຕົ້ນ ສັດຢູ່ໃນສວນສັດ, ໂຮງລະຄອນສັດ ຫຼື ຫໍພິພິທະພັນສັດ;
  5) ການທົດລອງ ຊຶ່ງມີ ສັດທີ່ລ້ຽງໄວ້ເພື່ອການຜະລິດ ແລະ ທົດລອງຢາ, ປິ່ນປົວພະຍາດ, ສຶກສາ ແລະ ຄົ້ນຄວ້າທາງດ້ານວິທະສາດການແພດ ເປັນຕົ້ນ ກະຕ່າຍ, ໜູຂາວ, ໜູສະເພົາ ແລະ ສັດປະເພດອື່ນ ທີ່ເໝາະສົມກັບການທົດລອງແຕ່ລະຢ່າງ.

## 3. ວຽກງານສັດຕະວະແພດ ມີ 5 ກິດຈະກຳຕົ້ນຕໍ ດັ່ງນີ້:

- **ການກັນ ແລະ ຄວບຄຸມພະຍາດລະບາດສັດ**

  **ການກັນພະຍາດສັດ** ແມ່ນ ການນຳໃຊ້ມາດຕະການ ກ່ອນການເກີດພະຍາດ ເພື່ອກັນ ແລະ ຫຼຸດຜ່ອນປັດໄຈສ່ຽງ ທີ່ຈະພາໃຫ້ເກີດພະຍາດສັດ ເປັນຕົ້ນ ການອະນາໄມຂ້າເຊື້ອສະຖານທີ່, ພາຫະນະ, ອຸປະກອນ, ບຸກຄົນທີ່ກ່ຽວຂ້ອງກັບການລ້ຽງສັດ ລວມທັງ ການໃຫ້ຢາກັນພະຍາດແກ່ສັດລ້ຽງ ດ້ວຍວິທີການຕ່າງໆ ເຊັ່ນ: ສັກ, ຢອດ, ພົ່ນ ຫຼື ໃຫ້ກິນ.

  **ການຄວບຄຸມພະຍາດສັດ** ແມ່ນ ການນຳໃຊ້ມາດຕະການຄວບຄຸມພະຍາດ ໃນສະຖານທີ່ລ້ຽງສັດ ຫຼື ຂອບເຂດທີ່ກຳນົດຂຶ້ນໃດໜຶ່ງ ເພື່ອຈຳກັດ ແລະ ທຳລາຍພະຍາດສັດທີ່ເກີດຂຶ້ນແລ້ວ ໃຫ້ສະຫງົບ ແລະ ກັບຄືນສູ່ສະພາບປົກກະຕິ ລວມທັງ ການປິ່ນປົວ, ການນຳໃຊ້ມາດຕະການດ້ານບໍລິຫານ ແລະ ແຜນການຄວບຄຸມສຸກເສີນ ຫຼື ແຜນການລົບລ້າງພະຍາດສັດໃດໜຶ່ງ ເພື່ອບໍ່ໃຫ້ມີ ຫຼື ເກີດມີພະຍາດສັດ ໃນ ສປປ ລາວ.

- **ການປິ່ນປົວສັດ** ແມ່ນ ການບໍລິການດ້ານສັດຕະວະແພດ ເພື່ອກວດສຸຂະພາບສັດ, ບົ່ງມະຕິພະຍາດ, ວາງຢາ, ນຳໃຊ້ເຕັກນິກດ້ານສັດຕະວະແພດ ແນໃສ່ ຟື້ນຟູ ຫຼື ປິ່ນປົວສັດ ໃຫ້ຫາຍດີຈາກອາການເຈັບປ່ວຍ.
- **ການເຄື່ອນຍ້າຍຜະລິດຕະພັນສິນຄ້າກ່ຽວກັບສັດ** ແມ່ນ ທຸກການ ຂົນສົ່ງສັດ, ຜະລິດຕະພັນສັດ, ຜະລິດຕະພັນສຳຮອງຈາກສັດ ແລະ ວັດຖຸປະກອບ ທີ່ມີຄວາມສ່ຽງ ທີ່ຈະນຳເອົາສິ່ງເປັນອັນຕະລາຍຈາກ ເຂດໜຶ່ງໄປຫາເຂດອື່ນ ຢູ່ພາຍໃນ, ນຳເຂົ້າ ຫຼື ສົ່ງອອກປະເທດ.
- **ການຂ້າ, ຄົວສັດ ແລະ ການກວດກາອະນາໄມຊີ້ນ**

**ການຂ້າສັດ** ແມ່ນ ຂະບວນການເຮັດໃຫ້ສັດຕາຍແບບບໍ່ທໍລະມານ ຊຶ່ງກວມເອົາຕັ້ງແຕ່ ຂອດກະກຽມສ້າງຕັ້ງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ, ການຂົນສົ່ງສັດເຂົ້າໂຮງຂ້າ, ການຂ້າ ແລະ ຄົວສັດ ເພື່ອໃຫ້ໄດ້ຊາກສັດທີ່ສະອາດ, ປອດໄພ ເໝາະສົມສຳລັບການບໍລິໂພກ.

- ➢ ການຂ້າ ແລະ ຄົວສັດ ປະເພດ ງົວ, ຄວາຍ, ໝູ ເພື່ອຈຳໜ່າຍ ຕ້ອງດຳເນີນຢູ່ໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ ແລະ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງ ຂອງອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ;
- ➢ ການຂ້າສັດປະເພດ ແບ້, ແກະ ຫຼື ສັດປີກ ທີ່ມີການລົງທຶນເພື່ອທຸລະກິດ ຕ້ອງດຳເນີນຢູ່ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ທີ່ໄດ້ຮັບການອະນຸຍາດຈາກອົງການທີ່ກ່ຽວຂ້ອງເຊັ່ນດຽວກັນ;
- ➢ ສຳລັບ ການຂ້າສັດປີກ, ງົວ, ແບ້, ໝູ ຫຼື ສັດອື່ນ ເພື່ອຈຳໜ່າຍຢູ່ຕະຫຼາດສົດ, ຮ້ານອາຫານປະເພດ ປີ້ງ, ອົບ, ປີ່ນ ຫຼື ອື່ນໆ ຕ້ອງດຳເນີນຢູ່ສະຖານທີ່ ທີ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ ແລະ ປະຕິບັດຕາມລະບຽບການ, ມາດຕະຖານເຕັກນິກ ທີ່ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ກຳນົດ;
- ➢ ສັດ ປະເພດ ງົວ, ຄວາຍ, ໝູ ຫຼື ແບ້ ອະນຸຍາດໃຫ້ ຂ້າ ແລະ ຄົວ ເພື່ອບໍລິໂພກພາຍໃນຄອບຄົວ, ໃນງານບຸນ ໄດ້ ແຕ່ຕ້ອງແຈ້ງໃຫ້ອົງການປົກຄອງບ້ານ ແລະ ຕ້ອງໃຫ້ໄດ້ຮັບການກວດກາ ຈາກສັດຕະວະແພດບ້ານ.

**ການກວດກາອະນາໄມຊີ້ນ** ແມ່ນ ຂັ້ນຕອນການກວດກາດ້ານວິຊາການສັດຕະວະແພດ ຂອງພະນັກງານກວດກາອະນາໄມຊີ້ນ ທີ່ໄດ້ຮັບການແຕ່ງຕັ້ງຢ່າງເປັນທາງການຈາກ ອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ຊຶ່ງກວມເອົາ ການກວດກາຄວາມສະອາດໂຮງຂ້າສັດ, ການກວດສຸຂະພາບສັດກ່ອນຂ້າ, ການກວດກາອະນາໄມຊີ້ນຫຼັງຂ້າສັດ.

- **ສະຫວັດດີການສັດ** ໝາຍເຖິງ ການສ້າງເງື່ອນໄຂ ເພື່ອໃຫ້ສັດມີຊີວິດຢູ່ໃນສະພາບແວດລ້ອມທີ່ຄ້າຍຄືກັນກັບທຳມະຊາດຂອງສັດ ລວມທັງ ການນຳໃຊ້

ແຮງງານສັດ, ການບັນທຸກຂົນສົ່ງສັດ ແລະ ການຂ້າສັດ ທີ່ບໍ່ເປັນການທໍລະມານ ຫຼື ທາລຸນສັດ.

## 4. ທຸລະກິດ ກ່ຽວກັບ ການລ້ຽງສັດ ແລະ ການສັດຕະວະແພດ

### 4.1 ທຸລະກິດ ກ່ຽວກັບ ການລ້ຽງສັດ ປະກອບມີ ດັ່ງນີ້:

- ຟາມລ້ຽງສັດ;
- ຟາມລ້ຽງສັດປ່າ;
- ໜ່ວຍບໍລິການປະສົມພັນສັດ;
- ການຜະລິດ, ວິໄຈ, ນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ ແລະ ຈໍາໜ່າຍອາຫານສັດ;
- ການຜະລິດ ແລະ ຈໍາໜ່າຍອຸປະກອນລ້ຽງສັດ;
- ການຂົນສົ່ງສັດ ຫຼື ບໍລິການສາງເກັບຮັກສາຜະລິດຕະພັນສັດ;
- ຕະຫຼາດສໍາລັບສັດມີຊີວິດ;
- ຕະຫຼາດນັດສໍາລັບສັດມີຊີວິດ;
- ຈຸດເຕົ້າໂຮມສັດໄວ້ ເພື່ອຈໍາໜ່າຍ;
- ຮ້ານບໍລິການທີ່ມີການຂ້າສັດກັບທີ່
- ຮ້ານຂາຍສັດລ້ຽງປະຈໍາເຮືອນ ເຊັ່ນ: ໝາ, ແມວ;
- ໂຮງຂ້າສັດ, ບ່ອນຂ້າສັດຍ່ອຍ;
- ໂຮງ ຫຼື ຫ້ອງປຸງແຕ່ງຜະລິດຕະພັນສັດ ຂັ້ນຕົ້ນ;
- ການນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ ແລະ ຈໍາໜ່າຍສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສໍາຮອງຈາກສັດ;
- ບ່ອນຂາຍຊີ້ນ ແລະ ຜະລິດຕະພັນສັດ;
- ສວນສັດ;
- ໂຮງລະຄອນສັດ;
- ການກິລາກ່ຽວກັບສັດ;
- ໂຮງຮຽນວິຊາຊີບ ຫຼື ສູນຝຶກອົບຮົມວິຊາການລ້ຽງສັດ;
- ການສ້າງສື່ໂຄສະນາ, ສາລະຄະດີ, ວາລະສານ ຫຼື ປື້ມກ່ຽວກັບວິທີການ ລ້ຽງສັດ ເພື່ອຈໍາໜ່າຍ;
- ທຸລະກິດອື່ນ ກ່ຽວກັບ ການລ້ຽງສັດ ທີ່ ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ກໍານົດ.

### 4.2 ທຸລະກິດ ກ່ຽວກັບ ການສັດຕະວະແພດ ປະກອບມີ ດັ່ງນີ້:

- ການບໍລິການກວດສຸຂະພາບ ແລະ ປິ່ນປົວສັດ;
- ການບໍລິການເສີມສວຍສັດລ້ຽງປະຈໍາເຮືອນ ເຊັ່ນ: ໝາ, ແມວ;
- ການຜະລິດ, ການນໍາເຂົ້າ, ການສົ່ງອອກ, ການສົ່ງຜ່ານ ຢາສັດຕະວະແພດ ແລະ ຜະລິດຕະພັນການສັດຕະວະແພດ;
- ຮ້ານຈໍາໜ່າຍຢາສັດຕະວະແພດ;

- ການບໍລິການກັກກັນສັດ;
- ການບໍລິການວິໄຈພະຍາດສັດ ແລະ ຜະລິດຕະພັນສັດ;
- ໂຮງຮຽນວິຊາຊີບ ຫຼື ສູນຝຶກອົບຮົມວິຊາການສັດຕະວະແພດ;
- ການສ້າງສາລະຄະດີ ກ່ຽວກັບ ພະຍາດສັດ ຫຼື ການສັດຕະວະແພດ ເພື່ອຈຳໜ່າຍ;
- ທຸລະກິດອື່ນກ່ຽວກັບການສັດຕະວະແພດ ທີ່ອົງການຄຸ້ມຄອງການລ້ຽງສັດ ແລະ ການສັດຕະວະແພດ ກຳນົດ.

## 5. ສິດ ແລະ ພັນທະ ຂອງຜູ້ປະກອບການ ແລະ ຜູ້ບໍລິໂພກ

### 5.1. ສິດຂອງຜູ້ປະກອບການ

ຜູ້ປະກອບການດ້ານການລ້ຽງສັດ ແລະ ການສັດຕະວະແພດ ມີ ສິດ ດັ່ງນີ້:

- ກໍ່ສ້າງສິ່ງປຸກສ້າງ ແລະ ປະກອບເຄື່ອງມື, ວັດຖູປະກອນ ເພື່ອດຳເນີນທຸລະກິດ ກ່ຽວກັບ ການລ້ຽງສັດ ແລະ ການສັດຕະວະແພດ ຕາມການອະນຸຍາດ;
- ເປັນເຈົ້າກຳມະສິດກິດຈະການ ແລະ ໝາກຜົນທີ່ໄດ້ຮັບ ຈາກການດຳເນີນກິດຈະການ ແລະ ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;
- ໄດ້ຮັບນະໂຍບາຍ, ການສົ່ງເສີມ, ການຊ່ວຍເຫຼືອ, ການແນະນຳຈາກລັດ ແລະ ພາກສ່ວນອື່ນທາງດ້ານວິຊາການ ແລະ ເຕັກໂນໂລຊີ ກ່ຽວກັບ ການລ້ຽງສັດ ແລະ ການສັດຕະວະແພດ;
- ໃຫ້ເຊົ່າ, ໂອນ, ມອບ, ສືບທອດ, ຊື້, ຂາຍ, ຂະຫຍາຍ ແລະ ຢຸດເຊົາກິດຈະການຕາມລະບຽບການ;
- ໄດ້ຮັບຂໍ້ມູນຂ່າວສານດ້ານການລ້ຽງສັດ ແລະ ການສັດຕະວະແພດ ລວມທັງ ການແຈ້ງກ່ຽວກັບຜົນການກວດກາທຸລະກິດຂອງຕົນ;
- ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

### 5.2. ພັນທະຂອງຜູ້ປະກອບການ

ຜູ້ປະກອບການດ້ານການລ້ຽງສັດ ແລະ ການສັດຕະວະແພດ ມີ ພັນທະ ດັ່ງນີ້:

- ດຳເນີນທຸລະກິດ ກ່ຽວກັບ ການລ້ຽງສັດ ແລະ ການສັດຕະວະແພດ ຕາມຫຼັກຈັນຍາບັນ, ມາດຕະຖານເຕັກນິກ, ການອະນຸຍາດ ແລະ ລະບຽບການ;
- ບໍ່ໃຫ້ການດຳເນີນທຸລະກິດຂອງຕົນ ສ້າງຜົນກະທົບທາງລົບຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ;
- ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ ໃນການປະຕິບັດວຽກງານຂອງລັດ;
- ແຈ້ງໃຫ້ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ໃນກໍລະນີ ມີການສົງໄສ ຫຼື ເກີດການລະບາດຂອງພະຍາດສັດທີ່ຈຳເປັນຕ້ອງແຈ້ງ ແລະ ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ ໃນການນຳໃຊ້ມາດຕະການຄວບຄຸມການລະບາດຂອງພະຍາດສັດ;

- ລາຍງານ ແລະ ສະໜອງຂໍ້ມູນ ກ່ຽວກັບ ການເຄື່ອນໄຫວກິດຈະການລວມທັງແຈ້ງເຫດຜົນ ກ່ຽວກັບ ການຢຸດເຊົາກິດຈະການຊົ່ວຄາວ ຫຼື ຖາວອນຂອງຕົນ;
- ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການດ້ານວິຊາການອື່ນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;
- ພົວພັນກັບອົງການປົກຄອງທ້ອງຖິ່ນ ບ່ອນກິດຈະການຂອງຕົນຕັ້ງຢູ່ ແລະປະກອບສ່ວນໃນການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ສິ່ງແວດລ້ອມ;
- ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

### 5.3. ສິດຂອງຜູ້ບໍລິໂພກ

ຜູ້ບໍລິໂພກ ມີ ສິດ ດັ່ງນີ້:

- ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບ ຄຳແນະນຳດ້ານຄຸນນະພາບ, ຄວາມປອດໄພ, ການຊົມໃຊ້ຜະລິດຕະພັນສັດ ແລະ ການບໍລິການດ້ານສຸຂະພາບສັດທີ່ຖືກຕ້ອງ;
- ໄດ້ຮັບການປົກປ້ອງຈາກການຫຼອກລວງ ຫຼື ການໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງຂອງຜູ້ປະກອບການ ທີ່ກ່ຽວຂ້ອງກັບ ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການບໍລິການ;
- ຮ້ອງທຸກຕໍ່ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບ ການລ້ຽງສັດ ແລະ ການສັດຕະວະແພດ ທີ່ມີຜົນກະທົບທາງລົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ລວມທັງການປະຕິດບັດໜ້າທີ່ ທີ່ບໍ່ຖືກຕ້ອງຂອງພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ສັດຕະວະແພດ;
- ແຈ້ງ ຫຼື ລາຍງານຕໍ່ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ເມື່ອພົບເຫັນ ຫຼື ສົງໄສວ່າ ສັດເປັນພະຍາດ ຫຼື ມີການຈຳໜ່າຍຜະລິດຕະພັນສັດທີ່ປົນເປື້ອນສານພິດ ຫຼື ເຊື້ອພະຍາດ ຢູ່ຕາມທ້ອງຕະຫຼາດ ຫຼື ສະຖານທີ່ອື່ນ;
- ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

### 5.4. ພັນທະຂອງຜູ້ບໍລິໂພກ

ຜູ້ບໍລິໂພກ ມີ ພັນທະ ດັ່ງນີ້:

- ເຄົາລົບ, ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບ ການລ້ຽງສັດ ແລະ ການສັດຕະວະແພດ;
- ເກັບມ້ຽນ ແລະ ກຳຈັດຊິ້ນສ່ວນ ຫຼື ສິ່ງເສດເຫຼືອ ຈາກການບໍລິໂພກຂອງຕົນ;
- ລາຍງານ ກ່ຽວກັບ ການດຳເນີນທຸລະກິດທີ່ບໍ່ຖືກຕ້ອງຂອງຜູ້ປະກອບການໃຫ້ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ;

- ແຈ້ງຕໍ່ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ຊາບ ເມື່ອພົບເຫັນການລະເມີດຫຼັກການສະຫວັດດີການສັດ;
- ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.




## III. ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເຮັດ ມີຫຍັງແດ່ ?

### 1. ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1) ລ້ຽງສັດພາຍໃນບ້ານ, ໃນຕົວເມືອງ ທີ່ສົ່ງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;
2) ປ່ອຍສັດຊະຊາຍໃນເຂດຊຸມຊົນ ໂດຍສະເພາະ ຢູ່ພາຍໃນບ້ານ, ເທດສະບານ, ນະຄອນ ແລະ ຕາມທາງຫຼວງ;
3) ນຳໃຊ້ຢາ, ສານເຄມີ ຫຼື ສານກະຕຸ້ນ ປະສົມໃສ່ອາຫານສັດ ຫຼື ຜະລິດຕະພັນສັດ ຫຼື ນຳເຂົ້າຮ່າງກາຍສັດ ທີ່ມີຜົນກະທົບທາງລົບຕໍ່ສັດ, ຜູ້ບໍລິໂພກ ແລະ ສິ່ງແວດລ້ອມ ລວມທັງ ມີການກະທຳໃດໜຶ່ງ ທີ່ພາໃຫ້ເກີດການລະບາດຂອງພະຍາດສັດ;
4) ດຳເນີນທຸລະກິດ ກ່ຽວກັບ ການລ້ຽງສັດ ແລະ ການສັດຕະວະແພດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ;
5) ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ຈຳໜ່າຍຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ຕິດ ຫຼື ປົນເປື້ອນ ເຊື້ອພະຍາດສັດທີ່ຈຳເປັນຕ້ອງແຈ້ງ;
6) ນຳເຂົ້າ ຫຼື ສົ່ງອອກ ຜະລິດຕະພັນສິນຄ້າກ່ຽວກັບສັດ ຜ່ານດ່ານຊາຍແດນທີ່ບໍ່ໄດ້ກຳນົດໄວ້ໃນໃບອະນຸຍາດ;
7) ລັກລອບ ນຳເຂົ້າຜະລິດຕະພັນສັດ ທີ່ບໍ່ໄດ້ຜ່ານການກວດກາ ແລະ ຢັ້ງຢືນຈາກສັດຕະວະແພດ ລວມທັງ ການນຳເຂົ້າຊີ້ນ, ເຄື່ອງໃນ ແລະ ຊິ້ນສ່ວນອື່ນ ທີ່ບໍ່ໄດ້ມາດຕະຖານ, ເສຍຄຸນ ຫຼື ບໍ່ເໝາະສົມສຳລັບບໍລິໂພກ ຫຼື ມີການປະສົມສານເຄມີຕ້ອງຫ້າມ;
8) ທໍລະມານສັດ ຫຼື ກະທຳການອື່ນ ທີ່ມີລັກສະນະໂຫດຫ້ຽມ, ທາລຸນ ຫຼື ລະເມີດຕໍ່ຫຼັກການສະຫວັດດີການສັດ;
9) ຂ້າ, ຄົວ, ບໍລິໂພກ ແລະ ຈຳໜ່າຍສັດເຫງົາ, ເຈັບປ່ວຍ ຫຼື ຕາຍໂດຍບໍ່ຮູ້ສາເຫດ ຫຼື ເປັນພະຍາດລະບາດສັດ ຫຼື ມີສານຕົກຄ້າງ;

10) ຂ້າ, ຄົວສັດ ເພື່ອຈຳໜ່າຍ ໂດຍບໍ່ໄດ້ຮັບອະນຸຍາດ;
11) ຂ້າສັດ ທີ່ຖືພາມານ ເປັນຕົ້ນ ງົວ, ຄວາຍ, ມ້າ ຫຼື ສັດອື່ນ ທີ່ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ກຳນົດເປັນສັດສະຫງວນພັນ;
12) ຂ້າ ແລະ ສົ່ງອອກ ຊ້າງ ຫຼື ສັດທີ່ໃກ້ຈະສູນພັນ;
13) ສົ່ງອອກ ງົວ ແລະ ຄວາຍເພດແມ່ ສາຍພັນພື້ນເມືອງ ຫຼື ສາຍພັນອື່ນທີ່ທາງການປະກາດເປັນສັດສະຫງວນພັນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກກະຊວງກະສິກຳ ແລະ ປ່າໄມ້;
14) ຖິ້ມຊາກ ແລະ ຊິ້ນສ່ວນສັດຕາຍ ຢ່າງຊະຊາຍ;
15) ໃຫ້ຂໍ້ມູນ ຫຼື ສະໜອງຕົວຢ່າງກ່ຽວກັບສັດ, ຜະລິດຕະພັນສັດ ຫຼື ຊິ້ນສ່ວນຕິດພະຍາດສັດ ທີ່ບໍ່ຖືກຕ້ອງ;
16) ຊຸກເຊື່ອງ, ປອມແປງ ຫຼື ທຳລາຍເອກະສານ, ກາຈ້ຳ, ເຄື່ອງໝາຍ, ຂໍ້ມູນ ຫຼື ຕົວຢ່າງ ກ່ຽວກັບ ສັດ, ຜະລິດຕະພັນສັດ ຫຼື ຊິ້ນສ່ວນຕິດພະຍາດສັດ;
17) ໃຫ້ ຫຼື ຮັບສິນບົນ;
18) ນາບຂູ່, ກົດໜ່ວງຖ່ວງດຶງ ແລະ ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ສັດຕະວະແພດ;
19) ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**2. ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສັດຕະວະແພດ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສັດຕະວະແພດ ມີ ພຶດຕິກຳ ດັ່ງນີ້:

1) ສວຍໃຊ້ສິດ, ໜ້າທີ່ ແລະ ຕຳແໜ່ງ ເພື່ອບັງຄັບ, ນາບຂູ່, ກົດໜ່ວງ, ຖ່ວງດຶງ ຫຼື ຮຽກເອົາສິນບົນ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນ;
2) ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3) ປອມແປງເອກະສານ ຫຼື ອອກເອກະສານບໍ່ຖືກຕ້ອງ;
4) ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເມີນເສີຍ, ຂາດຄວາມຮັບຜິດຊອບ ແລະ ຈັບຍາບັນ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ ຕໍ່ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
5) ຮຽກເອົາຄ່າທຳນຽມ, ຄ່າບໍລິການ ແລະ ນຳໃຊ້ລາຍຮັບວິຊາການ ທີ່ບໍ່ຖືກຕ້ອງຕາມລະບຽບການ;
6) ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## IV. ຖ້າລະເມີດກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ຈະໄດ້ຮັບໂທດ ຄືແນວໃດ ?

### 1. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ.

### 2. ມາດຕະການກ່າວເຕືອນ ແລະ ສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີລັກສະນະເບົາ ອີງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ຕ້ອງກ່າວເຕືອນ ແລະ ເຮັດບົດບັນທຶກໄວ້. ຖ້າເປັນການລະເມີດຂໍ້ຫ້າມ ທີ່ບໍ່ເປັນການກະທຳຜິດທາງອາຍາ ຫຼື ບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ແຕ່ຜູ້ລະເມີດ ຫາກມີຄວາມຈິງໃຈລາຍງານ, ຮັບສາລະພາບຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຕົນ ກໍຈະຖືກສຶກສາອົບຮົມ ແລະ ບັນທຶກຢ່າງເປັນລາຍລັກອັກສອນ.

### 3. ມາດຕະການທາງວິໄນ

ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ລະເມີດກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນ ເປັນຕົ້ນ ໂຈະການປະຕິບັດໜ້າທີ່ຊົ່ວຄາວ, ຍົກຍ້າຍໜ້າທີ່, ປົດຕຳແໜ່ງ ຫຼື ໄລ່ອອກຈາກລັດຖະການ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### 4. ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ເປັນຕົ້ນ ດຳເນີນທຸລະກິດ ກ່ຽວກັບ ການລ້ຽງສັດ ແລະ ການສັດຕະວະແພດ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝໜຶ່ງເທົ່າຂອງມູນຄ່າສັດ, ຜະລິດຕະພັນສິນຄ້າກ່ຽວກັບສັດ ຫຼື ຄ່າບໍລິການດ້ານວິຊາການທີ່ຈະຖືກປະຕິບັດນັ້ນ. ໃນກໍລະນີ ມີການລະເມີດເປັນຄັ້ງທີສອງ ຫຼື ເປັນອາຈິນ ຈະຖືກປັບໃໝສອງເທົ່າ ຂອງມູນຄ່າສັດ, ຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມລາຄາທ້ອງຕະຫຼາດ ຫຼື ຄ່າບໍລິການດ້ານວິຊາການ ທີ່ຈະຖືກປະຕິບັດນັ້ນ.

### 5. ມາດຕະການທາງແພ່ງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ບຸກຄົນອື່ນ ຕ້ອງໄດ້ໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

### 6. ມາດຕະການທາງອາຍາ

ບຸກຄົນ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ກໍຈະຖືກລົງໂທດຕາມ ກົດໝາຍອາຍາ ຫຼື ກົດໝາຍອື່ນ ທີ່ກຳນົດໂທດທາງອາຍາ.

# ຄວາມຮູ້ພື້ນຖານ ກ່ຽວກັບ ກົດໝາຍວ່າດ້ວຍການປ້ອງການ ແລະ ການກັກກັນພືດ (ສະບັບປັບປຸງ)

**ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ໄດ້ຖືກຮັບຮອງເອົາ ໃນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VIII ໃນວັນທີ 15 ພະຈິກ 2016 ແລະ ປະກາດໃຊ້ ໂດຍປະທານປະເທດແຫ່ງ ສປປ ລາວ ໃນວັນທີ 16 ທັນວາ 2016 ຊຶ່ງປະກອບມີ 12 ພາກ, 10 ໝວດ ແລະ 121 ມາດຕາ.**

## I. ຄວາມສຳຄັນຂອງກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ມີຄືແນວໃດ ?

### 1. ຄວາມໝາຍຂອງການປ້ອງກັນ ແລະ ການກັກກັນພືດ

**ການປ້ອງກັນພືດ** ແມ່ນ ການສະກັດກັ້ນ, ເຝົ້າລະວັງ ແລະ ກຳຈັດ ບໍ່ໃຫ້ເກີດການລະບາດຂອງສັດຕູພືດ ທີ່ຈະສ້າງຄວາມເສຍຫາຍແກ່ ພືດ, ສັດ, ຄົນ ແລະ ສິ່ງແວດລ້ອມ.

**ການກັກກັນພືດ** ແມ່ນ ການຈຳກັດບໍລິເວນຂອງພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມຢ່າງເປັນທາງການ ໂດຍນຳໃຊ້ມາດຕະການສຸຂານາໄມພືດ ເຂົ້າໃນການກວດກາ, ທົດສອບ ຫຼື ບຳບັດບໍ່ໃຫ້ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ເຄື່ອນຍ້າຍມີການຕິດແປດຂອງສັດຕູພືດຄວບຄຸມ.

### 2. ຄວາມສຳຄັນຂອງການປ້ອງກັນ ແລະ ການກັກກັນພືດ

ສປປ ລາວ ເປັນປະເທດທີ່ມີຄວາມອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ, ມີຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ ທີ່ສວຍສົດງົດງາມ ເຕັມໄປດ້ວຍແຫຼ່ງທີ່ຢູ່ອາໄສຂອງພືດ ແລະ ສັດ ນັບທັງພືດນໍ້າ ແລະ ສັດນໍ້າປະເພດຕ່າງໆ. **"ພືດ"** ໝາຍເຖິງ ພືດທີ່ມີຊີວິດ ແລະ ຊິ້ນສ່ວນຂອງພືດ ເປັນຕົ້ນ ດອກ, ໝາກ, ເມັດ, ໃບ, ກິ່ງ, ກ້ານ, ຍອດ, ລຳ, ຕາ, ໜໍ່, ຮາກ, ສະປໍ ຫຼື ເຊື້ອເຫັດລາ, ແນວພັນພືດ, ເຊື້ອພັນ ແລະ ອື່ນໆ ທີ່ນຳໃຊ້ເພື່ອປູກ ແລະ ຂະຫຍາຍພັນ. ດັ່ງນັ້ນ, ການປ້ອງກັນ ແລະ ການກັກກັນພືດ ຈຶ່ງມີຄວາມສຳຄັນຕໍ່ຄົນ, ສັດ ແລະ ສິ່ງແວດລ້ອມ ເພາະເປັນການປົກປັກຮັກສາສຸຂະພາບຂອງ ຄົນ, ສັດ, ສິ່ງເສີມຜູ້ທີ່ເຮັດທຸລະກິດ ກ່ຽວກັບ ການປ້ອງກັນ ແລະ ກັກກັນພືດ ໃຫ້ໄດ້ຮັບການຂະຫຍາຍຕົວຂຶ້ນເລື້ອຍໆ ທາງດ້ານປະລິມານ ແລະ ຄຸນນະພາບ ສາມາດຕອບສະໜອງໃຫ້ພຽງພໍເຖິງຄວາມຕ້ອງການບໍລິໂພກພາຍໃນ ແລະ ຕ່າງປະເທດ ຊຶ່ງມັນແມ່ນທ່າແຮງອັນສຳຄັນທີ່ສຸດແກ່ການຜະລິດ ເຫັນໄດ້ເຖິງຄວາມຍຸຕິທຳ ລະຫວ່າງຜູ້ສະໜອງ ແລະ ຜູ້ຊົມໃຊ້.

### 3. ຈຸດປະສົງຂອງກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ການຕິດຕາມກວດກາ ວຽກງານປ້ອງກັນ ແລະ ກັກກັນພືດ ເພື່ອສະກັດກັ້ນ ການແຜ່ລະບາດຂອງສັດຕູພືດ ຢູ່ພາຍໃນປະເທດ, ການແຜ່ລະບາດຈາກພາຍນອກເຂົ້າມາ ສປປ ລາວ ແລະ ຈາກ ສປປ ລາວ ໄປຍັງປະເທດອື່ນ ແນໃສ່ຮັກສາສຸຂານາໄມພືດ, ປົກປັກ ຮັກສາສິ່ງແວດລ້ອມ, ຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ ໃຫ້ເພີ່ມຂຶ້ນທາງ ດ້ານປະລິມານ ແລະ ຄຸນນະພາບ ຕາມທິດກະສິກຳສະອາດ, ສີຂຽວ ແລະ ຍືນຍົງ, ເຊື່ອມໂຍງ ກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການອຳນວຍຄວາມສະດວກ ທາງດ້ານການ ຄ້າ, ປົກປັກຮັກສາ ແລະ ພັດທະນາປະເທດຊາດ.




## II. ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ອະນຸຍາດ ໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດໄດ້ ມີຫຍັງແດ່ ?

### 1. ນະໂຍບາຍຂອງລັດ ກ່ຽວກັບ ການປ້ອງກັນພືດ ແລະ ກັກກັນພືດ

ລັດ ສົ່ງເສີມວຽກງານປ້ອງກັນ ແລະ ກັກກັນພືດ ດ້ວຍການສ້າງເງື່ອນໄຂອຳນວຍຄວາມ ສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານດັ່ງກ່າວ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ເປັນຕົ້ນ ການກໍ່ສ້າງພື້ນຖານໂຄງລ່າງ, ການບຳລຸງສ້າງບຸກຄະລາກອນ, ການຄົ້ນຄວ້າທົດລອງ ທາງດ້ານວິທະຍາສາດ, ເຕັກໂນໂລຊີທີ່ທັນສະໄໝ, ພັດທະນາຂໍ້ມູນຂ່າວສານ, ການພະຍາ ກອນສັດຕູພືດ, ການສະໜອງງົບປະມານ ແລະ ວັດຖຸເຕັກນິກ.

ລັດ ຊຸກຍູ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ໃນການ ເຂົ້າຮ່ວມ, ລົງທຶນ ແລະ ສະໜັບສະໜູນ ການດຳເນີນທຸລະກິດ ກ່ຽວກັບ ການປ້ອງກັນ ແລະ ກັກກັນພືດ ເຊັ່ນ: ການສ້າງເຂດປອດສັດຕູພືດ, ພັດທະນາຮູບແບບການຈັດຕັ້ງ ທີ່ຕິດພັນກັບ ການບໍລິການເຕັກນິກວິຊາການປ້ອງກັນ ແລະ ການກັກກັກພືດ, ການຟື້ນຟູການຜະລິດທີ່ໄດ້ ຮັບຜົນກະທົບ ແລະ ເສຍຫາຍຈາກການລະບາດຂອງສັດຕູພືດ.

### 2. ປະເພດຢາປາບສັດຕູພືດ

➢ **ຢາປາບສັດຕູພືດ ອັນຕະລາຍຮ້າຍແຮງສູງ**

ຢາປາບສັດຕູພືດ ອັນຕະລາຍຮ້າຍແຮງສູງ ແມ່ນ ຢາປາບສັດຕູພືດທີ່ມີຄຸນລັກສະ ນະຄວາມເປັນພິດກະທັນຫັນຕໍ່ ສຸຂະພາບ ແລະ ຊີວິດຂອງຄົນ, ນອກນີ້ ຍັງສົ່ງຜົນ ກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ ແລະ ຕົກຄ້າງຍາວນານ ຈາກຜົນໄດ້ຮັບທີ່ເຮັດໃຫ້ໝູ

ທົດລອງຕາຍ ຫ້າສິບສ່ວນຮ້ອຍ ເມື່ອໄດ້ຮັບທາດພິດ ຂອງຢາປາບສັດຕູພືດເຂົ້າທາງປາກໃນປະລິມານ ໜ້ອຍກວ່າ ຫ້າມິນລີກຣາມ ຫຼື ເຂົ້າທາງຜິວໜັງ ໜ້ອຍກວ່າ ຫ້າສິບມິນລີກຣາມ ຕໍ່ນໍ້າໜັກຂອງໜູ ໜຶ່ງກິໂລກຣາມ. ຢາປາບສັດຕູພືດປະເພດນີ້ ບໍ່ອະນຸຍາດໃຫ້ ຜະລິດ, ນຳເຂົ້າ, ຈຳໜ່າຍ, ນຳໃຊ້ ແລະ ຄອບຄອງ.

➢ **ຢາປາບສັດຕູພືດ ອັນຕະລາຍຮ້າຍແຮງ**

ຢາປາບສັດຕູພືດ ອັນຕະລາຍຮ້າຍແຮງ ແມ່ນ ຢາປາບສັດຕູພືດທີ່ມີຄຸນລັກສະນະຄວາມເປັນພິດກະທັນຫັນຕໍ່ ສຸຂະພາບ ແລະ ຊີວິດຂອງຄົນ, ນອກນີ້ ຍັງສົ່ງຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ ແລະ ຕົກຄ້າງຍາວນານ ຈາກຜົນໄດ້ຮັບທີ່ເຮັດໃຫ້ໜູທົດລອງຕາຍ ຫ້າສິບສ່ວນຮ້ອຍ ເມື່ອໄດ້ຮັບທາດພິດ ຂອງຢາປາບສັດຕູພືດເຂົ້າທາງປາກໃນປະລິມານ ຫ້າ ຫາ ຫ້າສິບມິນລີກຣາມ ຫຼື ເຂົ້າທາງຜິວໜັງ ໜ້ອຍກວ່າ ຫ້າສິບ ຫາ ສອງຮ້ອຍ ມິນລີກຣາມ ຕໍ່ນໍ້າໜັກຂອງໜູ ໜຶ່ງກິໂລກຣາມ. ຢາປາບສັດຕູພືດ ປະເພດນີ້ ບໍ່ອະນຸຍາດໃຫ້ ຜະລິດ, ນຳເຂົ້າ, ຈຳໜ່າຍ, ນຳໃຊ້ ແລະ ຄອບຄອງ, ຍົກເວັ້ນ ນຳໃຊ້ເພື່ອການຄົ້ນຄ້ວາ ແລະ ການພັດທະນາເຕັກໂນໂລຊີຂອງລັດຖະບານ, ການປ້ອງກັນ ແລະ ຄວບຄຸມສັດຕູພືດ ກັກກັນ ຫຼື ພາຫະນະເຊື້ອພະຍາດ ແຕ່ຕ້ອງໄດ້ຂຶ້ນທະບຽນ ແລະ ຂໍອະນຸຍາດນຳ ກະຊວງກະສິກຳ ແລະ ປ່າໄມ້.

➢ **ຢາປາບສັດຕູພືດ ອັນຕະລາຍປານກາງ**

ຢາປາບສັດຕູພືດອັນຕະລາຍປານກາງ ແມ່ນ ຢາປາບສັດຕູພືດທີ່ມີຄຸນລັກສະນະຄວາມເປັນ ພິດຕໍ່ສຸຂະພາບ ແລະ ຊີວິດຂອງຄົນ ຈາກຜົນໄດ້ຮັບທີ່ເຮັດໃຫ້ໜູທົດລອງຕາຍ ຫ້າສິບສ່ວນຮ້ອຍ ເມື່ອໄດ້ຮັບທາດພິດ ຂອງຢາປາບສັດຕູພືດເຂົ້າທາງປາກໃນປະລິມານ ຫ້າ ຫາ ສອງພັນ ມິນລີກຣາມ ຫຼື ເຂົ້າທາງຜິວໜັງ ສອງຮ້ອຍ ຫາ ສອງພັນມິນລີກຣາມ ຕໍ່ນໍ້າໜັກຂອງໜູ ໜຶ່ງກິໂລກຣາມ. ຢາປາບສັດຕູພືດປະເພດນີ້ ສາມາດຜະລິດ, ນຳເຂົ້າ, ຈຳໜ່າຍ, ນຳໃຊ້ ແລະ ຄອບຄອງ ໂດຍຕ້ອງຂຶ້ນທະບຽນ ແລະ ຂໍອະນຸຍາດນຳ ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງຕາມລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

➢ **ຢາປາບສັດຕູພືດ ອັນຕະລາຍໜ້ອຍ**

ຢາປາບສັດຕູພືດ ອັນຕະລາຍໜ້ອຍ ແມ່ນ ຢາປາບສັດຕູພືດທີ່ມີຄຸນລັກສະນະຄວາມເປັນພິດຕໍ່ສຸຂະພາບ ແລະ ຊີວິດຂອງຄົນຈາກຜົນໄດ້ຮັບ ທີ່ເຮັດໃຫ້ໜູທົດລອງຕາຍ ຫ້າສິບສ່ວນຮ້ອຍ ເມື່ອໄດ້ຮັບທາດພິດຂອງຢາປາບສັດຕູພືດເຂົ້າທາງປາກ ຫຼື ຜິວໜັງໃນປະລິມານຫຼາຍກວ່າ ສອງພັນມິນລີກຣາມ ຕໍ່ ນໍ້າໜັກຂອງໜູ ໜຶ່ງກິໂລກຣາມ. ຢາປາບສັດຕູພືດປະເພດນີ້ ສາມາດຜະລິດ, ນຳເຂົ້າ, ຈຳໜ່າຍ, ສົ່ງອອກ, ນຳໃຊ້ ແລະ ຄອບຄອງ ໂດຍຕ້ອງຂຶ້ນທະບຽນ ແລະ ຂໍອະນຸຍາດນຳຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຕ້ອງປະຕິບັດຕາມລະບຽບ ການທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

➢ **ຢາປາບສັດຕູພືດ ອັນຕະລາຍບໍ່ມີພິດກະທັນຫັນ**

ຢາປາບສັດຕູພືດ ອັນຕະລາຍບໍ່ມີພິດກະທັນຫັນ ແມ່ນ ຢາປາບສັດຕູພືດທີ່ມີຄຸນລັກສະນະຄວາມ ເປັນພິດຕໍ່ສຸຂະພາບ ແລະ ຊີວິດຂອງຄົນ ແຕ່ບໍ່ອອກລິດທັນທີຈາກ

ຜີນໄດ້ຮັບ ທີ່ເຮັດໃຫ້ໜູທົດລອງຕາຍ ຫ້າສິບສ່ວນຮ້ອຍ ເມື່ອໄດ້ຮັບທາດພິດຂອງຢາປາບສັດຕູພືດເຂົ້າທາງປາກ ຫຼື ຜິວໜັງໃນປະລິມານ ຫ້າພັນມິນລີກຣາມ ຫຼື ຫຼາຍກວ່າ ຕໍ່ນໍ້າໜັກຂອງໜູ ໜຶ່ງກິໂລກຣາມ. ຢາປາບສັດຕູພືດປະເພດນີ້ ສາມາດຜະລິດ, ນໍາເຂົ້າ, ຈໍາໜ່າຍ, ສົ່ງອອກ, ນໍາໃຊ້ ແລະ ຄອບຄອງ ໂດຍຕ້ອງຂຶ້ນທະບຽນ ແລະ ຂໍອະນຸຍາດ ນໍາ ຂະແໜງການກະສິກໍາ ແລະ ປ່າໄມ້ ແລະ ຕ້ອງປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ, ຍົກເວັ້ນຢາປາບສັດຕູພືດຊີວະພາບ ທີ່ມີຄວາມປອດໄພຕໍ່ສຸຂະພາບຂອງ ຄົນ, ສັດ ແລະ ສິ່ງແວດລ້ອມ ບໍ່ຕ້ອງຂຶ້ນທະບຽນ, ແຕ່ຕ້ອງໄດ້ຂໍອະນຸຍາດ ນໍາຂະແໜງການກະສິກໍາ ແລະ ປ່າໄມ້.

ການຈັດລະດັບຄວາມອັນຕະລາຍຂອງຢາປາບສັດຕູພືດ ແມ່ນ ໃຫ້ອີງຕາມລະບົບການຈັດລະດັບຄວາມອັນຕະລາຍຢາປາບສັດຕູພືດຂອງອົງການອະນາໄມໂລກ ໂດຍມີລະຫັດຂອງແຖບສີ ແລະ ຮູບພາບຄວາມປອດໄພທີ່ກ່ຽວຂ້ອງກັບຄວາມເປັນພິດ ຂອງຜະລິດຕະພັນພິມໄວ້ໃນສະຫຼາກເບື້ອງລຸ່ມ ລວມທັງ ແຖບສີ ທີ່ສະແດງໃຫ້ເຫັນເຖິງລະດັບຄວາມອັນຕະລາຍຂອງ ຢາປາບສັດຕູພືດ ດັ່ງນີ້:

1) ຢາປາບສັດຕູພືດ ປະເພດລະດັບອັນຕະລາຍຮ້າຍແຮງສູງ I a ແລະ ປະເພດລະດັບອັນຕະລາຍຮ້າຍແຮງ I b ຕ້ອງມີ:
   - ແຖບສີ: ໃນລະບົບມາດຕະຖານຂອງສີ ແມ່ນສີແດງ ລະຫັດເລກທີ 199C
     ສີແດງ
   - ປະໂຫຍກເຕືອນໄພ: "ພິດຮ້າຍແຮງຫຼາຍ"
   - ຮູບພາບ: 
2) ຢາປາບສັດຕູພືດ ປະເພດອັນຕະລາຍປານກາງ ຫຼື ລະດັບ II ຕ້ອງມີ:
   - ແຖບສີ: ໃນລະບົບມາດຕະຖານຂອງສີ ແມ່ນສີເຫຼືອງ ສີເຫຼືອງ
   - ປະໂຫຍກເຕືອນໄພ: "ພິດຮ້າຍແຮງ"
   - ຮູບພາບ: 
3) ຢາປາບສັດຕູພືດ ປະເພດອັນຕະລາຍໜ້ອຍ ຫຼື ລະດັບ III ຕ້ອງມີ:
   - ແຖບສີ: ໃນລະບົບມາດຕະຖານຂອງສີ ແມ່ນສີຟ້າ ລະຫັດ 293C
     ສີຟ້າ
   - ປະໂຫຍກເຕືອນໄພ: "ອັນຕະລາຍ"
   - ຮູບພາບ: 

4) ສຳລັບຢາປາບສັດຕູພືດປະເພດອັນຕະລາຍບໍ່ມີພິດກະທັນຫັນ ຫຼື ລະດັບ IV ຕ້ອງມີ:

- ແຖບສີ: ໃນລະບົບມາດຕະຖານຂອງສີ ແມ່ນສີຂຽວ ລະຫັດ 374C

ສີຂຽວ

- ປະໂຫຍກເຕືອນໄພ: "ລະວັງ"
- ຮູບພາບ: 

**3. ກິດຈະການ ປ້ອງກັນພືດ ປະກອບມີ ດັ່ງນີ້:**

– **ການສ້າງບັນຊີສັດຕູພືດຄວບຄຸມ:** ກະຊວງກະສິກ□າ ແລະ ປ່າໄມ້ ເປັນຜູ້ສ້າງ, ປັບປຸງ ແລະ ປະກາດບັນຊີສັດຕູພືດຄວບຄຸມ ບົນພື້ນຖານການປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວແຈ້ງບັນຊີ ແລະ ການປ່ຽນແປງບັນຊີດັ່ງກ່າວໃຫ້ອົງການປ້ອງກັນພືດ ພາກພື້ນ ແລະ ສາກົນ ລວມທັງປະເທດຄູ່ຄ້າ ຕາມການຮ້ອງຂໍ.

ບັນຊີສັດຕູພືດຄວບຄຸມ ປະກອບດ້ວຍ:

1) ບັນຊີສັດຕູພືດກັກກັນ;
2) ບັນຊີສັດຕູພືດທີ່ບໍ່ກັກກັນແຕ່ຕ້ອງຄວບຄຸມ;
3) ບັນຊີສັດຕູພືດເຝົ້າລະວັງ.

– **ແຜນການແກ້ໄຂສຸກເສີນ ການແພ່ລະບາດຂອງສັດຕູພືດຄວບຄຸມ:** ຂະແໜງການກະສິກຳ ແລະ ປ່າໄມ້ ສ້າງແຜນການແກ້ໄຂສຸກເສີນການແພ່ລະບາດ ຂອງສັດຕູພືດຄວບຄຸມ ໂດຍປະສານສົມທົບກັບ ຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການສາທາລະນະສຸກ, ຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ, ຂະແໜງການການເງິນ, ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງການປ້ອງກັນຄວາມສະຫງົບ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ບົນພື້ນຖານສະພາບການ ແລະ ເງື່ອນໄຂທາງດ້ານພູມສັນຖານ, ນິເວດວິທະຍາ ແລະ ເງື່ອນໄຂດ້ານສຸຂານາໄມພືດ, ເຕັກນິກການຄວບຄຸມສັດຕູພືດທີ່ເໝາະສົມ ໃນສະພາບແວດລ້ອມທີ່ແຕກຕ່າງກັນ, ການຜະລິດ, ການຕະຫຼາດ ແລະ ປັດໄຈອື່ນ ທີ່ກ່ຽວຂ້ອງ.

ແຜນການແກ້ໄຂສຸກເສີນການແພ່ລະບາດຂອງສັດຕູພືດຄວບຄຸມ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1) ຂໍ້ມູນກ່ຽວກັບສັດຕູພືດທີ່ຕ້ອງຄວບຄຸມ;
2) ລະບົບການຈັດຕັ້ງ ທາງດ້ານການບໍລິຫານ ແລະ ວິຊາການ;
3) ມາດຕະການລວມ ແລະ ມາດຕະການສະເພາະ ທີ່ຕ້ອງນຳໃຊ້;
4) ງົບປະມານ.

- **ການເຝົ້າລະວັງ ແລະ ຄວບຄຸມສັດຕູພືດ:** ຂະແໜງການກະສິກ□າ ແລະ ປ່າໄມ້ ປະສານສົມທົບກັບ ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງລະບົບຕາໜ່າງປ້ອງກັນພືດ ເພື່ອເຝົ້າລະວັງສັດຕູພືດ ດ້ວຍການຕິດຕາມ, ສໍາຫຼວດ, ພະຍາກອນ ແລະ ແຈ້ງເຕືອນກ່ຽວກັບສັດຕູພືດ.

  ເຈົ້າຂອງພື້ນທີ່ ແລະ ເຈົ້າຂອງພືດ ຕ້ອງເຝົ້າລະວັງປາກົດການເກີດຂຶ້ນຂອງສັດຕູພືດ ໃນເບື້ອງຕົ້ນ ດ້ວຍການສໍາຫຼວດ ແລະ ຕິດຕາມ ສົມທົບກັບການຮັບຟັງຂໍ້ມູນແຈ້ງເຕືອນ ກ່ຽວກັບ ສັດຕູພືດ, ການນໍາໃຊ້ເຕັກນິກການປ້ອງກັນພືດແບບປະສົມປະສານ ແລະ ມາດຕະການຄວບຄຸມໃຫ້ທັນເວລາ;
- **ການລາຍງານ ກ່ຽວກັບ ສັດຕູພືດ:** ເຈົ້າຂອງພື້ນທີ່ ແລະ ເຈົ້າຂອງ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ຫຼື ບຸກຄົນອື່ນ ທີ່ ພົບເຫັນປາກົດການການທໍາລາຍ ຫຼື ການລະບາດ ຂອງສັດຕູພືດ ຕ້ອງລາຍງານຕໍ່ອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ ຫຼື ອົງການປົກຄອງບ້ານທີ່ກ່ຽວຂ້ອງພາຍໃນຊາວສີ່ ຊົ່ວໂມງ. ໃນກໍລະນີ ທີ່ມີການລາຍງານຕໍ່ອົງການປົກຄອງບ້ານນັ້ນ ອົງການປົກຄອງດັ່ງກ່າວ ຕ້ອງລາຍງານຕໍ່ອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ ພາຍໃນເວລາ ຊາວສີ່ ຊົ່ວໂມງ;
- **ການວິໄຈສັດຕູພືດ:** ການວິໄຈສັດຕູພືດ ແມ່ນ ການກວດ ແລະ ຈໍາແນກສັດຕູພືດ ພາຍຫຼັງໄດ້ຄົ້ນຄວ້າ ແລະ ທົດລອງແລ້ວ ເພື່ອເປັນຂໍ້ມູນໃຫ້ແກ່ວຽກງານປ້ອງກັນ ແລະ ກັກກັນພືດ. ການວິໄຈສັດຕູພືດ ໃຫ້ດໍາເນີນຢູ່ ຫ້ອງວິໄຈສັດຕູພືດທີ່ ກະຊວງກະສິກໍາ ແລະ ປ່າໄມ້ ໄດ້ຮັບຮອງເອົາ;
- **ການປະກາດເປັນເຂດລະບາດຂອງສັດຕູພືດຄວບຄຸມ:** ໃນກໍລະນີ ທີ່ອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ ໄດ້ຢັ້ງຢືນວ່າມີການລະບາດຂອງສັດຕູພືດຄວບຄຸມ ບົນພື້ນຖານທີ່ໄດ້ມີການປະເມີນຄວາມສ່ຽງ ແລະ ປະຕິບັດແຜນການແກ້ໄຂສຸກເສີນການແຜ່ລະບາດຂອງສັດຕູພືດຄວບຄຸມ ລັດຖະບານ ຫຼື ອົງການປົກຄອງທ້ອງຖິ່ນ ຕ້ອງປະກາດເປັນເຂດລະບາດສັດຕູພືດ ຕາມການສະເໜີຂອງອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ ຂັ້ນຂອງຕົນຕາມແຕ່ລະກໍລະນີ ດັ່ງນີ້:
  1) ຖ້າສັດຕູພືດລະບາດ ຫາກເກີດຂຶ້ນໃນຂອບເຂດເມືອງ, ເທດສະບານ, ນະຄອນໃດໜຶ່ງ ແມ່ນ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນນັ້ນເປັນຜູ້ປະກາດ;
  2) ຖ້າສັດຕູພືດລະບາດ ຫາກເກີດຂຶ້ນຫຼາຍກວ່າໜຶ່ງເມືອງ, ເທດສະບານ, ນະຄອນ ແຕ່ ຢູ່ໃນຂອບເຂດຂອງແຂວງ, ນະຄອນຫຼວງ ແມ່ນ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງນັ້ນ ເປັນຜູ້ປະກາດ;
  3) ຖ້າສັດຕູພືດລະບາດ ຫາກເກີດຂຶ້ນຫຼາຍກວ່າໜຶ່ງແຂວງ, ນະຄອນຫຼວງ ແມ່ນ ນາຍົກລັດຖະມົນຕີ ເປັນຜູ້ປະກາດ.

ການປະກາດເປັນເຂດລະບາດຂອງສັດຕູພືດຄວບຄຸມຕ້ອງມີເນື້ອໃນ ດັ່ງນີ້:

1) ຂໍ້ມູນ ກ່ຽວກັບ ຊະນິດ ແລະ ຊີວະວິທະຍາ ຂອງສັດຕູພືດຄວບຄຸມ ທີ່ລະບາດ ລວມທັງ ຄວາມເປັນອັນຕະລາຍ;
2) ຂອບເຂດພູມສັນຖານ ທີ່ໄດ້ຮັບຜົນກະທົບ ຈາກການລະບາດຂອງ ສັດຕູພືດຄວບຄຸມ;
3) ພັນທະ ແລະ ໜ້າທີ່ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ ກ່ຽວຂ້ອງ ໃນການເຂົ້າຮ່ວມປ້ອງກັນ ແລະ ຄວບຄຸມ ການລະບາດ ຂອງສັດຕູພືດຄວບຄຸມເຂດດັ່ງກ່າວ;
4) ມາດຕະການສຸຂານາໄມພືດ ທີ່ຕ້ອງນຳໃຊ້ໃນເຂດດັ່ງກ່າວ ຕາມທີ່ໄດ້ ກຳນົດໄວ້ໃນ ມາດຕາ 16 ຂອງກົດໝາຍສະບັບນີ້;
5) ກຳນົດເວລານຳໃຊ້ມາດຕະການ;
6) ເຂດກັກກັນພືດ ແລະ ເຂດກັນຊົນ;
7) ເງື່ອນໄຂໃນການອອກປະກາດໃໝ່.

– **ການນຳໃຊ້ມາດຕະການຄວບຄຸມ ໃນເຂດກັກກັນພືດ ແລະ ເຂດກັນຊົນ:** ອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ ຕ້ອງນຳໃຊ້ມາດຕະການຄວບຄຸມ ໃນເຂດກັກກັນພືດ ແລະ ເຂດກັນຊົນ ໂດຍປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດັ່ງນີ້:
  1) ເຝົ້າລະວັງ, ຕິດຕາມ, ກວດກາ, ເກັບຕົວຢ່າງ ແລະ ທົດສອບຕາມຫຼັກວິຊາການ ເພື່ອປະເມີນສະພາບການຂອງສັດຕູພືດຄວບຄຸມ ນັບແຕ່ວັນອອກປະກາດ ຈົນເຖິງວັນຍົກເລີກເຂດດັ່ງກ່າວ;
  2) ໃຫ້ຄຳແນະນຳ ແກ່ເຈົ້າຂອງພື້ນທີ່ ຫຼື ເຈົ້າຂອງພືດ, ສະຖານທີ່ຜະລິດພືດ, ບັນຈຸພືດ ຫຼື ຜະລິດຕະພັນພືດ ທີ່ຢູ່ພາຍໃນເຂດດັ່ງກ່າວ;
  3) ທົບທວນຄືນ ມາດຕະການຄວບຄຸມທີ່ນຳໃຊ້ ເພື່ອຮັບປະກັນໃຫ້ມາດຕະການດັ່ງກ່າວມີຄວາມເໝາະສົມກັບສະພາບຕົວຈິງ.
– **ມາດຕະການສຸຂານາໄມພືດ** ໝາຍເຖິງ ລະບຽບການ ຫຼື ວິທີການປະຕິບັດທີ່ເປັນທາງການ ເພື່ອສະກັດກັ້ນການເຂົ້າມາ ຫຼື ການແຜ່ລະບາດຂອງສັດຕູພືດກັກກັນ ຫຼື ເພື່ອຈຳກັດຜົນກະທົບທາງດ້ານເສດຖະກິດ ທີ່ອາດເກີດຂຶ້ນຈາກສັດຕູພືດທີ່ບໍ່ກັກກັນແຕ່ຕ້ອງຄວບຄຸມ ຢູ່ ສປປ ລາວ;
– **ການຍົກເລີກ ການປະກາດເຂດລະບາດ ຂອງສັດຕູພືດຄວບຄຸມ:** ອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ ຕ້ອງປະເມີນສະພາບຂອງເຂດສັດຕູພືດລະບາດ ຢ່າງເປັນປົກກະຕິ. ໃນກໍລະນີ ສັດຕູພືດຄວບຄຸມຫາກໝົດໄປ ຫຼື ຄວາມສ່ຽງຂອງສັດຕູພືດຄວບຄຸມຢູ່ໃນລະດັບຕ່ຳ ຊຶ່ງບໍ່ມີຄວາມຈຳເປັນຕ້ອງຄວບຄຸມ ບົນພື້ນຖານການຢັ້ງຢືນທາງດ້ານວິທະຍາສາດ ນັ້ນ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ, ສະເໜີຕໍ່ລັດຖະບານ ຫຼື ອົງການປົກຄອງ

ທ້ອງຖິ່ນທີ່ອອກປະກາດນັ້ນ ຍົກເລີກການປະກາດຂອງຕົນ ລວມທັງ ມາດຕະການຄວບຄຸມໃນເຂດກັກກັນພືດ ແລະ ເຂດກັນຊົນ;

- **ແຫຼ່ງຜະລິດປອດສັດຕູພືດ, ສະຖານທີ່ຜະລິດປອດສັດຕູພືດ, ເຂດແພ່ລະບາດຕ່ຳຂອງສັດຕູພືດ ແລະ ເຂດປອດສັດຕູພືດ:** ອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ເຈົ້າຂອງພື້ນທີ່ ຫຼື ເຈົ້າຂອງພືດ ສ້າງ ແລະ ປະກາດເປັນແຫຼ່ງຜະລິດປອດສັດຕູພືດ, ສະຖານທີ່ຜະລິດປອດສັດຕູພືດ, ເຂດແພ່ລະບາດຕ່ຳຂອງສັດຕູພືດ ແລະ ເຂດປອດສັດຕູພືດ ຕາມເງື່ອນໄຂ ດັ່ງນີ້:
  1) ໄດ້ມີການຢັ້ງຢືນວ່າບໍ່ມີສັດຕູພືດຄວບຄຸມ;
  2) ໄດ້ນຳໃຊ້ມາດຕະການສຸຂານາໄມພືດ;
  3) ໄດ້ສ້າງລະບົບຄຸ້ມຄອງ ຫຼື ລະບົບຕິດຕາມ ເພື່ອພິສູດສະພາບການປອດສັດຕູພືດ ຫຼື ລະດັບສັດຕູພືດຢູ່ໃນລະດັບຕ່ຳ.
- **ການນຳໃຊ້ຢາປາບສັດຕູພືດ ແລະ ຊີວະພາບປາບສັດຕູພືດ:** ການນຳໃຊ້ຢາປາບສັດຕູພືດ ເຂົ້າໃນວຽກງານປ້ອງກັນ ແລະ ກັກກັນພືດ ຕ້ອງຮັບປະກັນຄຸນນະພາບ, ປະສິດທິພາບ, ຄວາມປອດໄພ ຂອງຢາປາບສັດຕູພືດ ຕໍ່ ຄົນ, ສັດ, ພືດ, ດິນ, ນ້ຳ ແລະ ສິ່ງແວດລ້ອມ ໂດຍປະຕິບັດຕາມຫຼັກວິຊາການຢ່າງເຂັ້ມງວດ.
- **ກິດຈະການ ການປ້ອງກັນພືດອື່ນ.**

**4. ກິດຈະການ ກ່ຽວກັບ ວຽກງານກັກກັນພືດ ປະກອບມີ ດັ່ງນີ້:**

- ການນຳເຂົ້າ;
- ການສົ່ງອອກ;
- ການສົ່ງຜ່ານ;
- ການບຳບັດ.

**5. ການດຳເນີນທຸລະກິດ ກ່ຽວກັບ ການປ້ອງກັນ ແລະ ການກັກກັນພືດ ປະກອບມີ ດັ່ງນີ້:**

- ການບໍລິການວິໄຈສັດຕູພືດ;
- ການບໍລິການ ການປ້ອງກັນ ແລະ ການກຳຈັດສັດຕູພືດ;
- ການນຳເຂົ້າ ແລະ ຈຳໜ່າຍແນວພັນປອດສັດຕູພືດ, ຢາປາບສັດຕູພືດ, ຊີວະພາບປາບສັດຕູພືດ ແລະ ອຸປະກອນປ້ອງກັນພືດ;
- ການບໍລິການສຸຂານາໄມພືດສົ່ງອອກ;
- ໂຮງຮຽນວິຊາຊີບ, ສູນຝຶກອົບຮົມ ດ້ານການປ້ອງກັນ ແລະ ການກັກກັນພືດ;
- ການໂຄສະນາ ກ່ຽວກັບ ການປ້ອງກັນ ແລະ ການກັກກັນພືດ;
- ທຸລະກິດອື່ນ ກ່ຽວກັບ ການປ້ອງກັນ ແລະ ການກັກກັນພືດ.

## 6. ສິດ ແລະ ພັນທະ ຂອງຜູ້ດໍາເນີນທຸລະກິດ

ຜູ້ດໍາເນີນທຸລະກິດ ມີ ສິດ ແລະ ພັນທະ ຕົ້ນຕໍ ດັ່ງນີ້:

- ດໍາເນີນທຸລະກິດຂອງຕົນ ໃຫ້ຖືກຕ້ອງຕາມການອະນຸຍາດ, ມາດຕະຖານເຕັກນິກ, ກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;
- ເປັນເຈົ້າການ ກັກກັນ, ຄວບຄຸມ, ກໍາຈັດສັດຕູພືດ, ຂ້າເຊື້ອພະຍາດພືດ ພ້ອມທັງນໍາໃຊ້ທຸກວິທີການເພື່ອສະກັດກັ້ນ ແລະ ແກ້ໄຂປາກົດການ ທີ່ເປັນສາເຫດໃຫ້ເກີດການແຜ່ລະບາດຂອງສັດຕູພືດ ເປັນຕົ້ນ ການນໍາເຂົ້າ ແລະ ການສົ່ງອອກພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ຈາກ ພື້ນທີ່ ທີ່ມີການລະບາດຂອງສັດຕູພືດ;
- ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບ ການລະເມີດກົດໝາຍ ແລະ ລະບຽບການຂອງ ພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ;
- ປະກອບສ່ວນ ທາງດ້ານທຶນຮອນ ຫຼື ແຮງງານ ເຂົ້າໃນການພັດທະນາວຽກງານປ້ອງກັນ ແລະ ກັກກັນພືດ;
- ເສຍຄ່າທໍານຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ;
- ໄດ້ຮັບຂໍ້ມູນ ກ່ຽວກັບ ມາດຕະການສຸຂານາໄມພືດທີ່ເປັນຂໍ້ບັງຄັບ ຊຶ່ງອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ ກໍານົດ;
- ໃຫ້ການຮ່ວມມື, ສະໜອງຂໍ້ມູນ ຂ່າວສານ ແລະ ອໍານວຍຄວາມສະດວກ ໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ;
- ແຈ້ງ, ລາຍງານ ສະພາບເຫດການໃນກໍລະນີທີ່ພົບເຫັນ ຫຼື ສົງໄສວ່າມີການລະບາດຂອງສັດຕູພືດ ໃຫ້ອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ ຫຼື ອົງການປົກຄອງບ້ານ.

## 7. ສິດ ແລະ ພັນທະ ຂອງເຈົ້າຂອງພື້ນທີ່ ແລະ ເຈົ້າຂອງພືດ

ເຈົ້າຂອງພື້ນທີ່ ແລະ ເຈົ້າຂອງພືດ ມີ ສິດ ແລະ ພັນທະ ຕົ້ນຕໍ ດັ່ງນີ້:

- ເປັນເຈົ້າການໃນການ ຕິດຕາມ, ເຝົ້າລະວັງ, ກໍາຈັດ ແລະ ສະກັດກັ້ນ ການລະບາດ ຂອງສັດຕູພືດໃນພື້ນທີ່ ທີ່ຕົນຮັບຜິດຊອບ;
- ຮ້ອງທຸກຕໍ່ຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບ ການລະເມີດກົດໝາຍ ແລະ ລະບຽບການຂອງ ພະນັກງານ, ເຈົ້າໜ້າທີ່ກັກກັນພືດ ແລະ ຜູ້ດໍາເນີນທຸລະກິດ;
- ລາຍງານສະພາບທີ່ເກີດການລະບາດຂອງສັດຕູພືດໃນພື້ນທີ່ ທີ່ຕົນຮັບຜິດຊອບຕໍ່ອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ ຫຼື ອົງການປົກຄອງບ້ານທີ່ກ່ຽວຂ້ອງ;
- ໃຫ້ຄວາມຮ່ວມມື ແກ່ພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ ໃນການປະຕິບັດໜ້າທີ່ ການປ້ອງກັນ ແລະ ກັກກັນພືດ.

## III. ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເຮັດ ມີຫຍັງແດ່ ?

### 1. ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1) ນຳເອົາພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ທີ່ເປັນອັນຕະລາຍຕໍ່ສຸຂານາໄມ ພືດ, ຄົນ, ສັດ ແລະ ສິ່ງແວດລ້ອມ ເຂົ້າມາ ສປປ ລາວ;
2) ນຳເຂົ້າ, ສົ່ງຜ່ານ, ເຄື່ອນຍ້າຍພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ;
3) ນຳເຂົ້າ, ຂະຫຍາຍ ຫຼື ມີໄວ້ໃນຄອບຄອງສັດຕູພືດຄວບຄຸມ ໂດຍບໍ່ໄດ້ຮັບອະນຸຍາດ;
4) ເຄື່ອນຍ້າຍພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມຈາກພື້ນທີ່ ທີ່ມີການລະບາດ ຂອງສັດຕູພືດ ໄປພື້ນທີ່ອື່ນຢູ່ພາຍໃນປະເທດ;
5) ສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ບໍ່ສອດຄ່ອງກັບລະບຽບການດ້ານສຸຂານາໄມພືດ ຂອງປະເທດປາຍທາງ;
6) ໃຫ້ສິນບົນ, ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ແກ່ພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ, ປອມແປງເອກະສານ ແລະ ຕາປະທັບ ກ່ຽວກັບ ການປ້ອງກັນ ແລະ ກັກກັນພືດ;
7) ນາບຂູ່, ກົດໜ່ວງ ຖ່ວງດຶງ ແລະ ຂັດຂວາງ ການປະຕິບັດໜ້າທີ່ ຂອງພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ;
8) ໂຄສະນາ ກ່ຽວກັບ ການປ້ອງກັນ ແລະ ການກັກກັນພືດ ເກີນຄວາມເປັນຈິງ;
9) ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### 2. ຂໍ້ຫ້າມສຳລັບ ພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ ມີ ພຶດຕິກຳ ດັ່ງນີ້:

1) ສວຍໃຊ້ ສິດ, ໜ້າທີ່ ແລະ ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ກົດໜ່ວງຖ່ວງດຶງ ຫຼື ຮັບສິນບົນ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ບຸກຄົນ;
2) ເປີດເຜີຍຄວາມລັບ ຂອງລັດ ຫຼື ທາງລັດຖະການ;
3) ປອມແປງເອກະສານ ຫຼື ອອກເອກະສານທີ່ບໍ່ຖືກຕ້ອງ ຕາມລະບຽບການ;
4) ຂາດຄວາມຮັບຜິດຊອບ ຫຼື ປະຕິບັດໜ້າທີ່ດ້ວຍຄວາມປະໝາດ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ;
5) ເມີນເສີຍ ຕໍ່ລະບຽບການ, ຫຼົບການໃນການກວດກາພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ, ແກ້ໄຂວຽກງານໂດຍບໍ່ຖືກຕ້ອງຕາມມາດຕະຖານເຕັກນິກ;
6) ເພີ່ມ ຫຼື ຫຼຸດອັດຕາຄ່າທຳນຽມ, ຄ່າບໍລິການວິຊາການ ຫຼື ນຳໃຊ້ລາຍຮັບຈາກວຽກງານປ້ອງກັນ ແລະ ກັກກັນພືດ ຕາມລຳພັງໃຈ;
7) ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.




## IV. ຖ້າລະເມີດກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ຈະໄດ້ຮັບໂທດຄືແນວໃດ ?

### 1. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ມາດຕະການທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

### 2. ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ການລະເມີດຂໍ້ຫ້າມ ທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ບໍ່ເປັນອັນຕະລາຍຮ້າຍແຮງຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ແຕ່ຫາກມີຄວາມຈິງໃຈລາຍງານ, ຮັບສາລະພາບຕໍ່ການກະທຳ ທີ່ບໍ່ຖືກຕ້ອງຂອງຕົນ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

### 3. ມາດຕະການທາງວິໄນ

ພະນັກງານ, ເຈົ້າໜ້າທີ່ກັກກັນພືດ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງມີລັກສະນະເບົາ, ບໍ່ເປັນການກະທຳຜິດທາງອາຍາ, ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ, ບໍ່ຈິງໃຈລາຍງານການກະ ທຳຜິດ ແລະ ຫຼົບຫຼີກຈາກການກະທຳຜິດຂອງຕົນ ຈະຖືກລົງວິໄນຕາມລະບຽບການ ເປັນ ຕົ້ນ ກ່າວເຕືອນຄວາມຜິດ, ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ຫຼື ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

### 4. ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະ ທຳຜິດທາງອາຍາ ເປັນຕົ້ນ ດຳເນີນທຸລະກິດການປ້ອງກັນ ແລະ ກັກກັນພືດ ໂດຍບໍ່ໄດ້ຮັບອະນຸຍາດ, ດຳເນີນທຸລະກິດໂດຍບໍ່ຖືກຕ້ອງ ຈະຖືກປັບໃໝໜຶ່ງເທົ່າຂອງມູນຄ່າ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ທີ່ຕິດແປດສັດຕູພືດ ຫຼື ຄ່າບໍລິການສຸຂານາໄມພືດ ທີ່ຈະຕ້ອງປະຕິບັດ.

ໃນກໍລະນີ ມີການລະເມີດເປັນຄັ້ງທີ ສອງ ຫຼື ເປັນອາຈິນ ກໍຈະຖືກປັບໃໝສອງເທົ່າ ຂອງມູນຄ່າ ທີ່ໄດ້ກໍານົດໄວ້ໃນວັກທີ 1 ທີ່ໄດ້ກ່າວມາຂ້າງເທິງນີ້.

## 5. ມາດຕະການທາງແພ່ງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ບຸກຄົນອື່ນ ຕ້ອງໄດ້ໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ ກໍ່ຂຶ້ນ.

## 6. ມາດຕະການທາງອາຍາ

ບຸກຄົນ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທໍາຜິດທາງອາຍາ ກໍຈະຖືກ ລົງໂທດຕາມກົດໝາຍອາຍາ ຫຼື ກົດໝາຍອື່ນທີ່ກໍານົດໂທດທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ ລວມທັງ ການໃຊ້ແທນຄ່າເສຍຫາຍທາງແພ່ງ.

# ກົດໝາຍວ່າດ້ວຍການປະມົງ

**ກົດໝາຍວ່າດ້ວຍການປະມົງ ໄດ້ຖືກຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VI ໃນວັນທີ 9 ກໍລະກົດ 2009 ແລະ ປະທານປະເທດແຫ່ງ ສປປ ລາວ ໄດ້ປະກາດໃຊ້ຢ່າງເປັນທາງການ ໃນວັນທີ 20 ກໍລະກົດ 2009 ຊຶ່ງປະກອບມີ 10 ພາກ, 72 ມາດຕາ.**

## I. ຄວາມສຳຄັນຂອງກົດໝາຍວ່າດ້ວຍການປະມົງ ມີຄືແນວໃດ ?

### 1. ຄວາມໝາຍ ແລະ ຄວາມສຳຄັນຂອງການປະມົງ

**1.1. ການປະມົງ** ແມ່ນ ກິດຈະການດ້ານການລ້ຽງ, ການອະນຸລັກ, ການປົກປັກຮັກສາ, ການພັດທະນາ, ການຫາ, ການນຳໃຊ້ສັດນ້ຳ ດ້ວຍວິທີການຕ່າງໆ ໃນພື້ນທີ່ແຫຼ່ງນ້ຳໃດໜຶ່ງ.

**ສັດນ້ຳ** ໝາຍເຖິງ ສັດທຸກຊະນິດທີ່ເກີດ ແລະ ຂະຫຍາຍຕົວຢູ່ໃນນ້ຳຕາມທຳມະຊາດ ຫຼື ຖືກນຳເອົາຈາກທຳມະຊາດມາລ້ຽງ ເຊິ່ງປະກອບມີ ສາມ ປະເພດ ຄື: ສັດນ້ຳປະເພດຫວງຫ້າມ, ສັດນ້ຳປະເພດຄຸ້ມຄອງ ແລະ ສັດນ້ຳປະເພດທົ່ວໄປ.

**1.2. ຄວາມສຳຄັນຂອງການປະມົງ**

ການປະມົງ ມີຄວາມສຳຄັນຕໍ່ການປະກອບສ່ວນເຂົ້າໃນວຽກງານການຄ້ຳປະກັນສະບຽງອາຫານ, ການສ້າງລາຍຮັບໃຫ້ແກ່ຄອບຄົວ, ນຳໃຊ້ຜົນຜະລິດທາງດ້ານການປະມົງ ເພື່ອເປັນອາຫານ ແລະ ເປັນສິນຄ້າ ທັງເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຫຼຸດຜ່ອນຄວາມທຸກຍາກ, ຍົກສູງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ແລະ ປົກປັກຮັກສາສິ່ງແວດລ້ອມ.

ເຖິງວ່າ ສປປ ລາວ ບໍ່ມີຊາຍແດນຕິດກັບທະເລ ແລະ ມະຫາສະມຸດກໍຕາມ, ແຕ່ກໍອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດອັນລ້ຳຄ່າ ໂດຍສະເພາະ ມີແມ່ນ້ຳໃຫຍ່ ແລະ ນ້ອຍຫຼາຍສາຍໄຫຼຜ່ານ ຊຶ່ງບັນດາແມ່ນ້ຳດັ່ງກ່າວ ໄດ້ຕິດພັນກັບການດຳລົງຊີວິດຂອງປະຊາຊົນລາວຕະຫຼອດມາ, ເປັນແຫຼ່ງທຳມາຫາກິນ (ຫາ ແລະ ລ້ຽງສັດນ້ຳ) ດັ່ງຄຳເວົ້າທີ່ວ່າ: "ໃນນ້ຳມີປາໃນນາມີເຂົ້າ". ສະນັ້ນ, ພັກ ແລະ ລັດຖະບານ ເຮົາຈິ່ງຖືວຽກງານນີ້ເປັນວຽກງານໜຶ່ງທີ່ສຳຄັນ ແລະ ໄດ້ມີນະໂຍບາຍໃນການຊຸກຍູ້ສົ່ງເສີມໃຫ້ມີການສຶກສາ, ຄົ້ນຄ້ວາທົດລອງທາງດ້ານວິທະຍາສາດ ກ່ຽວກັບ ແນວພັນໃໝ່, ເຕັກນິກການລ້ຽງແບບໃໝ່, ການຜະລິດອາຫານ, ເຕັກໂນໂລຊີການປຸງແຕ່ງ, ສຸຂະພາບສັດນ້ຳ, ລະບົບນິເວດວິທະຍາ ແລະ ອື່ນໆ ເພື່ອເສີມຂະຫຍາຍສິດເປັນເຈົ້າ ໃນວຽກງານການປະມົງ, ຈຳກັດການນຳເຂົ້າແນວພັນ, ທີ່ອາຫານປາ ແລະ ສັດນ້ຳອື່ນຈາກຕ່າງປະເທດ ໂດຍການສ້າງ ແລະ ປັບປຸງສະຖາບັນ, ສູນຄົ້ນຄ້ວາທົດລອງ ເພື່ອດຳເນີນການຄົ້ນຄ້ວາທົດລອງ, ຜະລິດ, ສະໜອງແນວພັນປາ ແລະ ສັດນ້ຳອື່ນ ຢ່າງກ້ວາງຂວາງ.

ຍ້ອນເຫັນໄດ້ຄວາມສຳຄັນດັ່ງກ່າວ **ລັດຈຶ່ງກຳນົດເອົາວັນທີ 13 ກໍລະກົດ ເປັນວັນປ່ອຍປາແຫ່ງຊາດ ເພື່ອອະນຸລັກ, ປົກປັກຮັກສາ ແລະ ພັດທະນາສັດນ້ຳ** ໃຫ້ອຸດົມສົມບູນ.




## 2. ຄວາມສຳຄັນຂອງກົດໝາຍວ່າດ້ວຍການປະມົງ

ຍ້ອນເຫັນໄດ້ບົດບາດຄວາມສຳຄັນຂອງການປະມົງ ກໍຄືສັດນ້ຳທີ່ກ່າວມາຂ້າງເທິງນັ້ນ, ພັກ ແລະ ລັດຖະບານ ຈຶ່ງມີຄວາມເປັນຫ່ວງເປັນໃຍ ແລະ ໄດ້ວາງນະໂຍບາຍ ກໍຄືລະບຽບກົດໝາຍ ແນໃສ່ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ສັດນ້ຳ ໃຫ້ຍືນນານ ໂດຍໄດ້ສ້າງ ແລະ ຮັບຮອງເອົາກົດໝາຍວ່າດ້ວຍການປະມົງ ເລກທີ 03/ສພຊ, ລົງວັນທີ 09 ກໍລະກົດ 2009 ຊຶ່ງເປັນໜຶ່ງໃນລະບົບກົດໝາຍຂອງລັດ ທີ່ໄດ້ສ້າງຂຶ້ນບົນພື້ນຖານ ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

## 3. ຈຸດປະສົງຂອງກົດໝາຍວ່າດ້ວຍການປະມົງ

ກົດໝາຍວ່າດ້ວຍການປະມົງ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບ ການຈັດຕັ້ງ, ການເຄື່ອນໄຫວ, ການກວດກາວຽກງານການປະມົງ ເພື່ອສົ່ງເສີມການລ້ຽງ, ການອະນຸລັກ, ການປົກປັກຮັກສາ, ການພັດທະນາ ແລະ ນຳໃຊ້ສັດນ້ຳແບບຍືນຍົງ ແນໃສ່ຮັບປະກັນການຕອບສະໜອງປາ ແລະ ສັດນ້ຳອື່ນ ເພື່ອເປັນອາຫານໃຫ້ປະຊາຊົນບັນດາເຜົ່າ, ການປົກປັກຮັກສາສິ່ງແວດລ້ອມ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

# II. ກົດໝາຍວ່າດ້ວຍການປະມົງ ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດໄດ້ ມີຫຍັງແດ່ ?

## 1. ກຳມະສິດ ກ່ຽວກັບ ປາ ແລະ ສັດສັດນ້ຳອື່ນໆ

ປາ ແລະ ສັດນ້ຳທຸກປະເພດຕາມທຳມະຊາດ ທີ່ບໍ່ເປັນກຳມະສິດຂອງບຸກຄົນ ຫຼື ການຈັດຕັ້ງ ໃນຂອບເຂດດິນແດນຂອງ ສປປ ລາວ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ. ລັດ ຮັບຮູ້ສິດນຳໃຊ້ຂອງບຸກຄົນ ແລະ ການຈັດຕັ້ງຕາມລະບຽບກົດໝາຍ.

ສຳລັບ ປາ ແລະ ສັດນ້ຳອື່ນ ທີ່ບຸກຄົນ ຫຼື ການຈັດຕັ້ງໄດ້ນຳເອົາມາລ້ຽງໃນພື້ນທີ່ໃດໜຶ່ງ ດ້ວຍເຫື່ອແຮງ ຫຼື ທຶນຮອນຂອງຕົນ ເປັນກຳມະສິດຂອງຜູ້ລ້ຽງ ຍົກເວັ້ນພໍ່ພັນແມ່ພັນ ແລະ ສາຍພັນລຸ້ນ 1 ສຳລັບສັດນ້ຳປະເພດຫວງຫ້າມ ແລະ ພໍ່ພັນແມ່ພັນ ສຳລັບສັດນ້ຳປະເພດຄຸ້ມຄອງ. ໃນກໍລະນີ ທີ່ນຳມາລ້ຽງເປັນທຸລະກິດການປະມົງ ຕ້ອງໄດ້ຮັບການເຫັນດີ ຈາກຂະແໜງການກະສິກຳ ແລະ ປ່າໄມ້.

## 2. ນະໂຍບາຍຂອງລັດ ດ້ານການປະມົງ

ລັດ ສົ່ງເສີມການລ້ຽງ, ອະນຸລັກ, ປົກປັກຮັກສາ, ພັດທະນາ, ຂະຫຍາຍພັນສັດນ້ຳ ແລະ ຄຸ້ມຄອງການນຳໃຊ້ປາ ແລະ ສັດນ້ຳອື່ນ ຕາມທ່າແຮງຂອງທ້ອງຖິ່ນ ດ້ວຍການວາງນະໂຍບາຍ, ລະບຽບກົດໝາຍ, ສະໜອງທຶນຮອນ, ສົ່ງເສີມດ້ານວິຊາການ, ການຄົ້ນຄວ້າ, ການນ□າໃຊ້ເຕັກໂນໂລຊີ, ຂໍ້ມູນຂ່າວສານ ແລະ ມາດຕະການຕ່າງໆ ເພື່ອເພີ່ມຈຳນວນສັດນ້ຳໃຫ້ຫຼາຍຂຶ້ນ ແນໃສ່ຕອບສະໜອງຄວາມຕ້ອງການຂອງປະຊາຊົນລາວບັນດາເຜົ່າ.

ລັດ ສົ່ງເສີມໃຫ້ບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການລ້ຽງ, ອະນຸລັກ, ປົກປັກຮັກສາ, ພັດທະນາ, ຂະຫຍາຍພັນ ແລະ ການປຸງແຕ່ງປາ ແລະ ສັດນ້ຳອື່ນ ດ້ວຍການປະຕິບັດນະໂຍບາຍຕ່າງໆ ເຊັ່ນ: ນະໂຍບາຍສິນເຊື່ອ, ຍົກເວັ້ນ ຫຼື ຫຼຸດຜ່ອນພາສີ, ອາກອນ ຕາມລະບຽບກົດໝາຍ.

ລັດ ຊຸກຍູ້ໃຫ້ຊາວປະມົງ ຈັດຕັ້ງເປັນກຸ່ມ, ເປັນສະມາຄົມ, ເປັນສະຫະກອນ ເພື່ອສົ່ງເສີມວິທີການຜະລິດ, ການປຸງແຕ່ງປາ ແລະ ສັດນ້ຳອື່ນ ແນໃສ່ ຮັບປະກັນຄຸນນະພາບຂອງຜົນຜະລິດ, ຜະລິດຕະພັນສັດນ້ຳ ລວມທັງ ເປັນເຈົ້າການໃນການຄຸ້ມຄອງການປະມົງ ໃຫ້ມີປະສິດທິຜົນ ແລະ ດຳເນີນກິດຈະການປະມົງ ຢ່າງຖືກຕ້ອງຕາມລະບຽບກົດໝາຍ.

## 3. ພັນທະໃນການປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ສັດນ້ຳ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລ້ວນແຕ່ມີພັນທະໃນການອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ສັດນ້ຳ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ນຳໃຊ້ມາດຕະການອັນຈຳເປັນ ເພື່ອສະກັດກັ້ນຜົນກະທົບຕໍ່ສັດນ້ຳ ຊຶ່ງເກີດຈາກທຳມະຊາດ ຫຼື ການກະທຳຂອງຄົນ ເຊັ່ນ: ການປ່ອຍມົນລະພິດລົງໃສ່ແຫຼ່ງນ້ຳທຳມະຊາດ, ພະຍາດລະບາດ, ການຫາປາ ແລະ ສັດນ້ຳອື່ນແບບທຳລາຍ, ການຊື້ຂາຍທີ່ບໍ່ຖືກຕ້ອງ, ການທຳລາຍຖິ່ນທີ່ຢູ່ອາໄສ, ບ່ອນວາງໄຂ່ ແລະ ແຫຼ່ງອາຫານຂອງສັດນ້ຳ.




4. **ການຈັດແບ່ງປະເພດ ແລະ ສັດນ້ຳອື່ນໆ ມີ 3 ປະເພດ**

**4.1. ປາ ແລະ ສັດນ້ຳອື່ນ ປະເພດຫວງຫ້າມ** ຕ້ອງໄດ້ຮັບການອະນຸລັກ, ປົກປັກຮັກສາ, ພັດທະນາ, ບໍ່ອະນຸຍາດໃຫ້ນຳໃຊ້ສັດນ້ຳປະເພດຄຸ້ມຄອງດັ່ງກ່າວ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດ ຈາກ ລັດຖະບານ. ລັດຖະບານ ເປັນຜູ້ຕົກລົງການຄົ້ນຄວ້າປ່ຽນແປງບັນຊີສັດນ້ຳປະເພດຫວງຫ້າມ ໃນແຕ່ລະໄລຍະ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້;

**4.2. ປາ ແລະ ສັດນ້ຳອື່ນ ປະເພດຄຸ້ມຄອງ** ຕ້ອງໄດ້ຮັບການອະນຸລັກ, ປົກປັກຮັກສາ, ພັດທະນາ, ຄວບຄຸມ ແລະ ກວດກາການນຳໃຊ້ສັດນ້ຳປະເພດດັ່ງກ່າວ ຕາມລະບຽບກົດໝາຍ. ອົງການປົກຄອງທ້ອງຖິ່ນ ເປັນຜູ້ອອກຂໍ້ຕົກລົງ ກ່ຽວກັບການບໍ່ອະນຸຍາດໃຫ້ນຳໃຊ້ສັດນ້ຳປະເພດຄຸ້ມຄອງ ຖ້າເຫັນວ່າ ສັດນ້ຳປະເພດດັ່ງກ່າວ ມີຄວາມສ່ຽງຕໍ່ການຈະສູນພັນ ໃນພື້ນທີ່ແຫຼ່ງນ້ຳທີ່ຕົນຄຸ້ມຄອງແລ້ວ ຕ້ອງແຈ້ງໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ທີ່ກ່ຽວຂ້ອງ. ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ອອກຂໍ້ຕົກລົງ ກ່ຽວກັບ ການບໍ່ອະນຸຍາດໃຫ້ນຳໃຊ້ບາງສັດນ້ຳປະເພດຄຸ້ມຄອງ ບົນພື້ນຖານການສະເໜີຂອງບັນດາອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຖ້າເຫັນວ່າ ສັດນ້ຳປະເພດດັ່ງກ່າວ ມີຄວາມສ່ຽງຕໍ່ການຈະສູນພັນໃນພື້ນທີ່ແຫຼ່ງນ້ຳທີ່ກວມເອົາສອງແຂວງຂຶ້ນໄປ;

**4.3. ປາ ແລະ ສັດນ້ຳອື່ນ ປະເພດທົ່ວໄປ** ຕ້ອງໄດ້ຮັບການປົກປັກຮັກສາ, ພັດທະນາ ແລະ ອະນຸຍາດໃຫ້ນຳໃຊ້ ໂດຍຖືກຕ້ອງຕາມລະບຽບກົດໝາຍ ເພື່ອຮັບປະກັນບໍ່ໃຫ້ສູນພັນ ພ້ອມທັງບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ລະບົບນິເວດ.







5. **ຮູບແບບການປະມົງ ມີ 2 ຮູບແບບ**

**5.1. ການປະມົງແບບຄອບຄົວ** ແມ່ນ ການລ້ຽງ, ການອະນຸລັກ, ການປົກປັກຮັກສາ, ການພັດທະນາ, ການຫາ ແລະ ການນຳໃຊ້ສັດນ້ຳ ໃນຂອບເຂດພື້ນທີ່ແຫຼ່ງນ້ຳໃດໜຶ່ງ ເພື່ອຊົມໃຊ້ໃນຊີວິດປະຈຳວັນຂອງຄອບຄົວເປັນຕົ້ນຕໍ ໂດຍສອດຄ່ອງກັບລະບຽບກົດໝາຍ ດັ່ງນີ້:

- **ການລ້ຽງປາ ແລະ ສັດນ້ຳອື່ນ ປະເພດທົ່ວໄປແບບຄອບຄົວ** ແມ່ນ ໃຫ້ນຳໃຊ້ເນື້ອທີ່ໜອງ ຫຼື ພື້ນທີ່ແຫຼ່ງນ້ຳບໍ່ເກີນ 15.000 ຕາແມັດ ຫຼື ລ້ຽງໃສ່ກະຊັງທີ່ມີເນື້ອທີ່ບໍ່ເກີນ 120 ຕາແມັດຕໍ່ຄອບຄົວ;
- **ການລ້ຽງປາ ປະເພດທົ່ວໄປ, ປະເພດຫວງຫ້າມສາຍພັນຮຸ່ນ 2, ປະເພດຄຸ້ມຄອງສາຍພັນລຸ້ນ 1** ບໍ່ຈຳເປັນຕ້ອງຂໍອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ;
- **ສຳລັບພໍ່ພັນແມ່ພັນ ແລະ ສາຍພັນລຸ້ນ 1 ຂອງສັດນ້ຳປະເພດຫວງຫ້າມ ແລະ ພໍ່ພັນແມ່ພັນຂອງສັດນ້ຳປະເພດຄຸ້ມຄອງ** ແມ່ນ ບໍ່ອະນຸຍາດໃຫ້ຄອບຄົວລ້ຽງ;
- **ຖ້າເປັນຊາວປະມົງ** ຕ້ອງໄດ້ຂຶ້ນບັນຊີສຳມະໂນຄົວຊາວປະມົງ ຕາມລະບຽບການ ຂອງຄະນະກຳມະການຄຸ້ມຄອງການປະມົງ ປະຈຳພື້ນທີ່ແຫຼ່ງນ້ຳນັ້ນ.

**5.2. ການປະມົງແບບທຸລະກິດ** ແມ່ນ ການລ້ຽງ, ການຂະຫຍາຍແນວພັນ, ການຫາ, ການປຸງແຕ່ງປາ ແລະ ສັດນ້ຳອື່ນ ເພື່ອເປັນສິນຄ້າ ແລະ ຈຳໜ່າຍ.

## 6. ກິດຈະກຳການປະມົງ

ກິດຈະກຳການປະມົງ ປະກອບດ້ວຍ: ການລ້ຽງ, ການອະນຸລັກ, ການປົກປັກຮັກສາ, ການພັດທະນາ, ການຫາ ແລະ ການນຳໃຊ້ສັດນ້ຳ ຊຶ່ງຕ້ອງດຳເນີນຕາມຂັ້ນຕອນ ດັ່ງນີ້:

➢ **ການສຳຫຼວດການປະມົງ** ແມ່ນການເກັບກຳຂໍ້ມູນສະຖິຕິ ກ່ຽວກັບ ປາ ແລະ ສັດນ້ຳອື່ນ ແຕ່ລະປະເພດ, ຊະນິດ, ສາຍພັນຕາມສະພາບການຂະຫຍາຍຕົວໃນແຕ່ລະໄລຍະ, ແຕ່ລະເຂດພື້ນທີ່ແຫຼ່ງນ້ຳ ເພື່ອຈັດສັນ, ເປັນຂໍ້ມູນໃນການວາງແຜນອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ຄຸ້ມຄອງ ໂດຍແມ່ນຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເປັນຜູ້ດຳເນີນການສຳຫຼວດ ດັ່ງນີ້:

- **ສຳຫຼວດການລ້ຽງສັດນ້ຳ** ແມ່ນ ການເກັບກຳຂໍ້ມູນສະຖິຕິເນື້ອທີ່ ການລ້ຽງ, ປະເພດພັນປາ ແລະ ສັດນ້ຳອື່ນ, ວິທີການລ້ຽງ ເພື່ອເປັນພື້ນຖານໃຫ້ແກ່ການວາງແຜນພັດທະນາວຽກງານການປະມົງ;
- **ສຳຫຼວດການຫາ, ການນຳໃຊ້ສັດນ້ຳ** ແມ່ນ ການເກັບກຳຂໍ້ມູນສະຖິຕິພື້ນທີ່ແຫຼ່ງນ້ຳ, ວິທີການຫາ, ເຄື່ອງມືອຸປະກອນ, ເຕັກນິກການຫາ ແລະ ການນຳໃຊ້ ເພື່ອວາງແຜນຄຸ້ມຄອງດ້ວຍການກຳນົດເຂດຫາ, ລະດູການຫາ ແລະ ເຄື່ອງມືອຸປະກອນການຫາທີ່ເໝາະສົມ;
- **ການສຳຫຼວດການປະມົງ** ແມ່ນ ໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເປັນຜູ້ກຳນົດ.

- **ການວາງແຜນຍຸດທະສາດດ້ານການປະມົງ** ແມ່ນ ໜ້າທີ່ຂອງກະຊວງກະສິກໍາ ແລະ ປ່າໄມ້ ໂດຍປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອວາງຍຸດທະສາດຮອບດ້ານ ແລະ ຍາວນານໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາການປະມົງ ເພື່ອເປັນທິດທາງລວມໃນການຫັນເປັນແຜນງານ, ໂຄງການ ແລະ ມາດຕະການສະເພາະໜ້າ ກ້າວໄປສູ່ການລ້ຽງ ແລະ ການປຸງແຕ່ງແບບອຸດສາຫະກໍາ ແລະ ທັນສະໄໝ;
- **ການສຶກສາຄົ້ນຄວ້າວິທະຍາສາດດ້ານການປະມົງ** ແມ່ນ ການສຶກສາ, ຄົ້ນຄວ້າທົດລອງວິທະຍາສາດ ກ່ຽວກັບ ແນວພັນໃໝ່, ເຕັກນິກການລ້ຽງແບບໃໝ່, ການຜະລິດອາຫານປາ ແລະ ສັດນໍ້າອື່ນ, ເຕັກໂນໂລຊີການປຸງແຕ່ງ, ພະຍາດປາ, ການປິ່ນປົວ, ລະບົບນິເວດວິທະຍາ ແລະ ອື່ນໆ ເພື່ອເສີມຂະຫຍາຍສິດເປັນເຈົ້າໃນວຽກງານການປະມົງ, ຈໍາກັດການນໍາເຂົ້າແນວພັນ, ຫືອາຫານປາ ແລະ ສັດນໍ້າອື່ນຈາກຕ່າງປະເທດ. **ຂະແໜງການກະສິກໍາ ແລະ ປ່າໄມ້** ເອົາໃຈໃສ່ສ້າງ ແລະ ປັບປຸງສະຖາບັນ, ສູນຄົ້ນຄວ້າທົດລອງ ເພື່ອດໍາເນີນການສຶກສາ, ຄົ້ນຄວ້າທົດລອງວິທະຍາສາດ ເພື່ອຮັບປະກັນ ໃຫ້ແກ່ການຄົ້ນຄວ້າທົດລອງ, ຜະລິດ, ສະໜອງແນວພັນປາ ແລະ ສັດນໍ້າອື່ນ ຢ່າງກວ້າງຂວາງນັ້ນ ທຸກພາກສ່ວນຂອງລັດ ແລະ ເອກະຊົນ ຕ້ອງເຂົ້າຮ່ວມໃນວຽກງານດັ່ງກ່າວ. ການນໍາເຂົ້າ ແລະ ສົ່ງອອກຕົວຢ່າງປາ ແລະ ສັດນໍ້ອື່ນ ເປັນຕົ້ນ ຊາກ ຫຼື ສິ້ນສ່ວນ ເພື່ອການສຶກສາ, ຄົ້ນຄວ້າທາງວິທະຍາສາດ ຕ້ອງໄດ້ຮັບອະນຸຍາດ ຈາກກະຊວງກະສິກ□າ ແລະ ປ່າໄມ້. ການສຶກສາຄົ້ນຄວ້າວິທະຍາສາດດ້ານການປະມົງ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ແລະ ປະຕິບັດຕາມເງື່ອນໄຂ ດັ່ງນີ້:
  - ກໍານົດບ່ອນ ຫຼື ເຂດໃນພື້ນທີ່ແຫຼ່ງນໍ້າ, ໂຄງການຄົ້ນຄວ້າໃຫ້ຈະແຈ້ງ;
  - ກໍານົດເຄື່ອງມືອຸປະກອນການຄົ້ນຄວ້າ ແລະ ວິທີການ, ເຕັກນິກທີ່ຈະນໍາໃຊ້;
  - ກໍານົດເວລາຂອງການນໍາໃຊ້ໃບອະນຸຍາດຄົ້ນຄວ້າ;
  - ມີນັກວິຊາການລາວ ເຂົ້າຮ່ວມໃນໂຄງການຄົ້ນຄວ້າ;
  - ພາຍຫຼັງທີ່ໄດ້ສໍາເລັດການຄົ້ນຄວ້າແລ້ວ ຕ້ອງລາຍງານຜົນ ແລະ ແຜນພັດທະນາການປະມົງໃນຕໍ່ໜ້າ ຕໍ່ຂະແໜງການກະສິກໍາ ແລະ ປ່າໄມ້.

## 7. ການປົກປັກຮັກສາການປະມົງ ມີ 2 ຢ່າງ

**7.1. ການປົກປັກຮັກສາປາ ແລະ ສັດນໍ້າອື່ນ** ແມ່ນ ການປ້ອງກັນປາ ແລະ ສັດນໍ້າອື່ນ ບໍ່ໃຫ້ຖືກທໍາລາຍດ້ວຍທໍາມະຊາດ ແລະ ການກະທໍາຂອງຄົນ ເຊັ່ນ: ການຫາປາ ແລະ ສັດນໍ້າອື່ນ ດ້ວຍການນໍາໃຊ້ເຄື່ອງມືອຸປະກອນ ແລະ ວິທີການຫາແບບທໍາລາຍ ເພື່ອເຮັດໃຫ້ປາ ແລະ ສັດນໍ້າອື່ນມີການຂະຫຍາຍຕົວ ແລະ ອຸດົມສົມບູນຕະຫຼອດໄປ;

**7.2. ການປົກປັກຮັກສາຖິ່ນທີ່ຢູ່ອາໄສ ແລະ ລະບົບນິເວດ** ແມ່ນ ການອະນຸລັກ, ຮັກສາຖິ່ນທີ່ຢູ່ອາໄສຂອງປາ ແລະ ສັດນໍ້າອື່ນ ແລະ ລະບົບນິເວດຂອງພື້ນທີ່ແຫຼ່ງ

ນ້ຳ ລວມທັງ ວັງສະຫງວນ, ເຂດເພາະພັນປາທຳມະຊາດ, ແຫຼ່ງອາຫານ ແລະ ເຂດຫວງຫ້າມອື່ນ ເພື່ອໃຫ້ຊີວະນາໆພັນມີຄວາມອຸດົມສົມບູນ ແລະ ຍືນຍົງ. ພ້ອມກັນນັ້ນ ກໍຕ້ອງວາງມາດຕະການປ້ອງກັນ ເພື່ອສະກັດກັ້ນ ການບຸກລຸກທຳລາຍຈາກການກະທຳຂອງຄົນ ຫຼື ຈາກທຳມະຊາດ.

8. **ການພັດທະນາການປະມົງ ມີ 3 ຢ່າງ**

**8.1. ການພັດທະນາການລ້ຽງ** ແມ່ນ ການປັບປຸງຮູບແບບການລ້ຽງ ໄປສູ່ຮູບແບບການລ້ຽງທີ່ທັນສະໄໝ ດ້ວຍການສະໜອງແນວພັນ ແລະ ໃຫ້ອາຫານປາ ແລະ ສັດນ້ຳອື່ນຢ່າງພຽງພໍ, ນຳໃຊ້ເຕັກນິກ ແລະ ວິທີການລ້ຽງແຕ່ລະປະເພດ ໃຫ້ແທດເໝາະກັບເງື່ອນໄຂ, ທ່າແຮງ ແລະ ສະພາບແວດລ້ອມຂອງທ້ອງຖິ່ນ ແນໃສ່ຍົກສູງຜະລິດຕະພາບຂອງປາ ແລະ ສັດນ້ຳອື່ນ ໃຫ້ສາມາດຕອບສະໜອງຄວາມຕ້ອງການພາຍໃນ ແລະ ເປັນສິນຄ້າສົ່ງອອກ;

**8.2. ການພັດທະນາການຂະຫຍາຍພັນປາ ແລະ ສັດນ້ຳອື່ນ** ແມ່ນ ການຜະລິດແນວພັນສັດນ້ຳໃໝ່ທີ່ດີ ແລະ ຮັບປະກັນທັງປະລິມານ ແລະ ຄຸນນະພາບຂອງສັດນ້ຳ ເພື່ອຕອບສະໜອງຄວາມຕ້ອງການຂອງສັງຄົມ ແລະ ຕະຫຼາດ;

**8.3. ການພັດທະນາການປຸງແຕ່ງປາ ແລະ ສັດນ້ຳອື່ນ** ແມ່ນ ການເຮັດໃຫ້ຜະລິດຕະພັນສັດນ້ຳ ມີຄຸນນະພາບ ດ້ວຍການນຳໃຊ້ວິທະຍາສາດເຕັກນິກ-ເຕັກໂນໂລຊີ ທີ່ທັນສະໄໝ.

9. **ການນຳໃຊ້ສັດນ້ຳ ມີ 4 ຢ່າງ**

**9.1. ການນຳໃຊ້ເພື່ອຄອບຄົວ** ແມ່ນ ການນຳເອົາປາ ແລະ ສັດນ້ຳອື່ນ ຊຶ່ງໄດ້ຈາກການລ້ຽງ, ການຫາມາປຸງແຕ່ງເປັນອາຫານ ເພື່ອບໍລິໂພກ, ເປັນປາເອ້ ຫຼື ຈຳໜ່າຍສ້າງເປັນລາຍຮັບໃຫ້ແກ່ຄອບຄົວ;

**9.2. ການນຳໃຊ້ເພື່ອສາທາລະນະປະໂຫຍດ** ແມ່ນ ການນຳເອົາປາ ແລະ ສັດນ້ຳອື່ນ ມາຮັບໃຊ້ຜົນປະໂຫຍດສ່ວນລວມ ເຊັ່ນ: ການວາງສະແດງຢູ່ຫໍພິພິທະພັນ, ສວນສັດ ແລະ ອື່ນໆ ເພື່ອການເຂົ້າຊົມ ແລະ ສຶກສາຄົ້ນຄວ້າວິທະຍາສາດ, ແຕ່ການນຳໃຊ້ນັ້ນ ຕ້ອງຮັບປະກັນຄວາມຍືນຍົງ, ບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ຫຼື ທຳມະຊາດ;

**9.3. ການນຳໃຊ້ຕາມຮີດຄອງ** ແມ່ນ ການນຳເອົາປາ ແລະ ສັດນ້ຳອື່ນ ມານຳໃຊ້ເພື່ອຄວາມຈຳເປັນທາງດ້ານວັດທະນະທຳ ຫຼື ຄວາມເຊື່ອຖື ແລະ ບຸນປະເພນີບ້ານ ເຊັ່ນ: ການປ່ອຍປາ, ປ່ອຍຫອຍ, ປ່ອຍອ່ຽນ ແລະ ອື່ນໆ;

**9.4. ການນຳໃຊ້ເພື່ອທຸລະກິດ** ແມ່ນ ການປຸງແຕ່ງ, ການຂະຫຍາຍແນວພັນ, ການຈຳໜ່າຍ, ການນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນຳຜ່ານປາ ແລະ ສັດນ້ຳອື່ນ ທີ່ໄດ້ຂຶ້ນທະບຽນຕາມລະບຽບກົດໝາຍ.

## 10. ການດຳເນີນທຸລະກິດ ກ່ຽວກັບ ການປະມົງ

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດການປະມົງ ຕ້ອງສະເໜີຂໍອະນຸຍາດຈາກ ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂຶ້ນທະບຽນຕາມກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ປະຕິບັດຕາມເງື່ອນໄຂຕົ້ນຕໍ ດັ່ງນີ້:

- ມີບົດວິພາກເສດຖະກິດ - ເຕັກນິກ;
- ມີບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລ້ວແຕ່ກໍລະນີ;
- ມີສະຖານທີ່, ພື້ນທີ່, ນັກວິຊາການ, ເຕັກນິກ ກ່ຽວກັບ ການປະມົງ, ຄວາມສະດວກໃນການເຂົ້າອອກ, ການຂົນສົ່ງ ແລະ ອື່ນໆ ໂດຍການເຫັນດີຂອງຂະແໜງລ້ຽງສັດ ແລະ ການປະມົງ;
- ໄດ້ຮັບການເຫັນດີ ຈາກຄະນະກຳມະການຄຸ້ມຄອງການປະມົງປະຈຳພື້ນທີ່ແຫຼ່ງນ້ຳທີ່ກ່ຽວຂ້ອງ ສຳລັບການລ້ຽງສັດນ້ຳ.

➢ **ທຸລະກິດການລ້ຽງປາປະເພດທົ່ວໄປ** ທີ່ນຳໃຊ້ເນື້ອທີ່ໜອງ ຫຼື ພື້ນທີ່ແຫຼ່ງນ້ຳເກີນກວ່າ 15.000 ຫາ 50.000 ຕາແມັດ ຫຼື ລ້ຽງໃສ່ກະຊັງ ທີ່ມີເນື້ອທີ່ເກີນກວ່າ 120 ຫາ 250 ຕາແມັດ ຕ້ອງໄດ້ຮັບການເຫັນດີຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ. ໃນກໍລະນີທີ່ນຳໃຊ້ເນື້ອທີ່ໜອງ ຫຼື ພື້ນທີ່ແຫຼ່ງນ້ຳເກີນກວ່າ 50.000 ຕາແມັດ ຫຼື ລ້ຽງໃສ່ກະຊັງທີ່ມີເນື້ອທີ່ເກີນກວ່າ 250 ຕາແມັດ ຕ້ອງໄດ້ຮັບການເຫັນດີຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນ;

➢ **ທຸລະກິດການລ້ຽງປາປະເພດຫວງຫ້າມ** ຕ້ອງໄດ້ຮັບການເຫັນດີ ຈາກລັດຖະບານ;

➢ **ທຸລະກິດການລ້ຽງປາປະເພດຄຸ້ມຄອງ** ຕ້ອງໄດ້ຮັບການເຫັນດີ ຈາກກະຊວງກະສິກຳ ແລະ ປ່າໄມ້ ຕາມເນື້ອທີ່ໜອງ ຫຼື ພື້ນທີ່ແຫຼ່ງນ້ຳ ທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ;

➢ **ທຸລະກິດ ກ່ຽວກັບ ປາເອ້** (ການລ້ຽງ, ປະສົມພັນ, ຂະຫຍາຍພັນ, ການສົ່ງອອກ ແລະ ນຳເຂົ້າ) ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;

➢ **ທຸລະກິດການປະມົງ ກ່ຽວກັບ ກິດຈະການອື່ນ** (ການປຸງແຕ່ງ, ຂະຫຍາຍແນວພັນ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນຳຜ່ານປາ ແລະ ສັດນ້ຳອື່ນ) ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ສຳລັບຜົນຜະລິດ ແລະ ຜະລິດຕະພັນສັດນ້ຳ** ທີ່ໄດ້ມາຈາກທຸລະກິດການລ້ຽງ ແລະ ການປຸງແຕ່ງເປັນກຳມະສິດສ່ວນຕົວຂອງຜູ້ປະກອບການ. ປາ ແລະ ສັດນ້ຳອື່ນ ທີ່ໄດ້ເລັດລອດໜີອອກຈາກເຂດພື້ນທີ່ລ້ຽງຂອງຜູ້ປະກອບການ ຍັງເປັນກຳມະສິດຂອງຜູ້ກ່ຽວຢູ່ ຖ້າຫາກມີຫຼັກຖານຢັ້ງຢືນຢ່າງຖືກຕ້ອງ.

## 11. ສິດ ແລະ ພັນທະ ຂອງຜູ້ປະກອບການ

**11.1. ສິດ ຂອງຜູ້ປະກອບການ:** ຄອບຄອງ, ນຳໃຊ້, ພັດທະນາ, ໄດ້ຮັບໝາກຜົນ, ມອບ, ຊື້-ຂາຍ ແລະ ໃຫ້ຜູ້ອື່ນ ສືບທອດກິດຈະການການປະມົງ ລວມທັງ ມີສິດສຶກສາ ຄົ້ນຄວ້າທົດລອງທາງດ້ານວິທະຍາສາດ ກ່ຽວກັບ ປາ ແລະ ສັດນ້ຳອື່ນ ດ້ວຍຕົນເອງ ຫຼື ຮ່ວມກັບຜູ້ອື່ນຕາມການອະນຸຍາດ ແລະ ມີສິດອື່ນຕາມລະບຽບກົດໝາຍ.

**11.2. ພັນທະ ຂອງຜູ້ປະກອບການ**

- ປະຕິບັດວຽກງານການປະມົງຕາມລະບຽບກົດໝາຍ ແລະ ສົນທິສັນຍາ ສາກົນ ທີ່ ສປປ ລາວ ເປັນພາຄີຢ່າງເຂັ້ມງວດ;
- ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ຫຼື ທຳມະຊາດ ໃນການດຳເນີນ ທຸລະກິດການປະມົງ ເກີນມາດຕະຖານທີ່ໄດ້ກຳນົດໄວ້;
- ປະກອບສວ່ນ ໃນການສະກັດກັ້ນການລັກລອບຫາສັດນ້ຳ ແລະ ການ ທຳລາຍຖິ່ນທີ່ຢູ່ອາໄສຂອງປາ ແລະ ສັດນ້ຳອື່ນ;
- ອະນຸລັກ, ປົກປັກຮັກສາປາ ແລະ ສັດນ້ຳອື່ນ ເປັນຕົ້ນປະເພດຫວງຫ້າມ, ປະເພດຄຸ້ມຄອງ ແລະ ລະບົບນິເວດ;
- ປະກອບສ່ວນ ແລະ ຂົນຂວາຍທຶນຮອນ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາພັດທະນາການປະມົງ;
- ເສຍຄ່າທຳນຽມ ແລະ ພັນທະອື່ນ ກ່ຽວກັບ ທຸລະກິດການປະມົງ;
- ກວດກາ, ຕິດຕາມສະພາບການລະບາດ ຂອງພະຍາດປາ ແລະ ສັດນ້ຳອື່ນ ແລະ ດຳເນີນການແກ້ໄຂຢ່າງທັນການ ໃນກໍລະນີທີ່ເກີດພະຍາດ;
- ໃຫ້ຄວາມຮ່ວມມື ແລະ ລາຍງານ ກ່ຽວກັບ ຂໍ້ມູນດ້ານການປະມົງ ເປັນຕົ້ນ ການລ້ຽງ, ການນຳໃຊ້ສັດນ້ຳ ແກ່ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນ.

## 12. ຄະນະກຳມະການຄຸ້ມຄອງການປະມົງປະຈຳພື້ນທີ່ແຫຼ່ງນ້ຳ

**12.1. ໂຄງປະກອບ** ມາຈາກຕົວແທນອົງການຕ່າງໆ ຄື: ອົງການປົກຄອງບ້ານ ຫຼື ເມືອງ, ເທດສະບານ, ຊາວປະມົງ, ອົງການຈັດຕັ້ງມະຫາຊົນຂັ້ນບ້ານ ຫຼື ຂັ້ນເມືອງ, ເຈົ້າ ໜ້າທີ່ທະຫານ, ປກສ ບ້ານ ຫຼື ເມືອງ, ເທດສະບານ ແລະ ຕົວແທນຂອງພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນກໍລະນີທີ່ມີຄວາມຈຳເປັນ.

**12.2. ສິດ ແລະ ໜ້າທີ່**

- ສ້າງແຜນການຄຸ້ມຄອງ ແລະ ພັດທະນາການປະມົງ ໃນພື້ນທີ່ແຫຼ່ງນ້ຳ ຂອງຕົນ ເຊັ່ນ: ກຳນົດເຂດພື້ນທີ່, ເຂດຫວງຫ້າມ, ວັງສະຫງວນ, ບ່ອນ ປາວາງໄຂ່, ການຂະຫຍາຍພັນປາ, ການປ່ອຍປາ ແລະ ອື່ນໆ;
- ສະເໜີແຜນການ ແລະ ລະບຽບການຄຸ້ມຄອງການປະມົງ ລວມທັງ ການ ນຳໃຊ້ເຄື່ອງມື ແລະ ວິທີການຫາປາ, ລະດູການ ແລະ ຊະນິດສັດນ້ຳທີ່ບໍ່

ອະນຸຍາດໃຫ້ຫາ ຫຼື ຈັບ ຕໍ່ອົງການປົກຄອງເມືອງ, ເທດສະບານ ເພື່ອພິຈາລະນາ, ຮັບຮອງ ແລະ ປະກາດໃຊ້;

– ເຜີຍແຜ່, ຕິດປະກາດ, ອອກຂ່າວທາງສື່ມວນຊົນ ກ່ຽວກັບ ແຜນການ ແລະ ລະບຽບການຄຸ້ມຄອງການປະມົງ;
– ເປັນຜູ້ປົກປ້ອງສິດ ແລະ ຜົນປະໂຫຍດຂອງຊາວປະມົງ ລວມທັງການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ ໃນພື້ນທີ່ແຫຼ່ງນໍ້າທີ່ຕົນຄຸ້ມຄອງ;
– ຊີ້ນໍາ, ຕິດຕາມ, ກວດກາການປະຕິບັດລະບຽບການຄຸ້ມຄອງການປະມົງໃນພື້ນທີ່ແຫຼ່ງນໍ້າທີ່ຕົນຄຸ້ມຄອງ;
– ຊອກແຫຼ່ງທຶນ ເຂົ້າໃນການຄຸ້ມຄອງ ແລະ ພັດທະນາການປະມົງ ໃນຂອບເຂດແຫຼ່ງນໍ້າທີ່ຕົນຮັບຜິດຊອບ;
– ເກັບກໍາສະຖິຕິ ກ່ຽວກັບ ການປະມົງປະຈໍາປີ ເຊັ່ນ: ຜົນຜະລິດ, ບັນຊີຊາວປະມົງ, ວັງສະຫງວນ ແລ້ວສະຫຼຸບ, ລາຍງານ ໃຫ້ອົງການປົກຄອງທ້ອງຖິ່ນ, ຂະແໜງການທີ່ກ່ຽວຂ້ອງທີ່ຕົນຂຶ້ນກັບ;
– ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງພາກສ່ວນທີ່ຕົນຂຶ້ນກັບ.

## 13. ກົດລະບຽບການປະມົງ ຂັ້ນບ້ານ

ກົດລະບຽບການປະມົງ ຂັ້ນບ້ານ ວາງອອກເພື່ອຄຸ້ມຄອງການປະມົງໃນພື້ນທີ່ໃດໜຶ່ງ ແນໃສ່ ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ຊັບພະຍາກອນການປະມົງທີ່ສ້າງຂຶ້ນໂດຍອົງການປົກຄອງບ້ານ ດ້ວຍການປຶກສາຫາລືກັບ ຄະນະກໍາມະການຄຸ້ມຄອງການປະມົງປະຈໍາພື້ນທີ່ແຫຼ່ງນໍ້າ, ຊາວບ້ານ, ຊຸມຊົນໃກ້ຄຽງ ແລະ ປະສານສົມທົບກັບໜ່ວຍງານກະສິກໍາ ແລະ ປ່າໄມ້ບ້ານ ຫຼື ຫ້ອງການກະສິກໍາ ແລະ ປ່າໄມ້ປະຈໍາເມືອງ, ເທດສະບານ ໃນກໍລະນີທີ່ກົດລະບຽບນັ້ນ ຫາກກວມເອົາຫຼາຍບ້ານພາຍໃນເມືອງ, ເທດສະບານດຽວ. ກົດລະບຽບການປະມົງຂັ້ນບ້ານຈະມີຜົນໃຊ້ໄດ້ ກໍຕໍ່ເມື່ອໄດ້ຖືກຮັບຮອງເອົາໂດຍເຈົ້າເມືອງ, ຫົວໜ້າເທດສະບານ.

ເນື້ອໃນຂອງກົດລະບຽບ ຕ້ອງລະບຸເຖິງ: ຈຸດປະສົງ, ວັງສະຫງວນ ຫຼື ເຂດຫວງຫ້າມ, ຊະນິດປາ ແລະ ສັດນໍ້າອື່ນ; ເຄື່ອງມືຫາປາ ແລະ ວິທີການຫາປາ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ, ການຈັດຕັ້ງປະຕິບັດ, ເນື້ອໃນອື່ນຖ້າເຫັນວ່າມີຄວາມຈໍາເປັນ.





## III. ກົດໝາຍວ່າດ້ວຍການປະມົງ ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເຮັດ ມີຫຍັງແດ່ ?

### 1. ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຢູ່ໃນ ສປປ ລາວ ມີການກະທຳ ດັ່ງນີ້:

1) ນຳໃຊ້ທາດເບື່ອ, ລະເບີດ, ອາວຸດ, ເຄື່ອງໄຟຟ້າ, ເຄື່ອງແສງ, ສຽງທຽມ ຫຼື ສິ່ງອື່ນທີ່ເກືອດຫ້າມ ເພື່ອຫາ ຫຼື ຈັບສັດນ້ຳ;
2) ຖິ້ມສິ່ງເສດເຫຼືອ, ປ່ອຍນ້ຳເປື້ອນ ຫຼື ສານ  ເຄມີ ລົງແຫຼ່ງນ້ຳ;
3) ຮັບເອົາ, ຊື້ຂາຍ, ຄອບຄອງ ຫຼື ຂົນສົ່ງສັດນ້ຳ ທີ່ໄດ້ມາໂດຍບໍ່ຖືກຕ້ອງຕາມກົດໝາຍ;
4) ຜະລິດ, ນຳເຂົ້າ ຫຼື ຂາຍ ເຄື່ອງມືຫາປາທີ່ເກືອດຫ້າມທຸກປະເພດ;
5) ນຳໃຊ້ເຄື່ອງມືຫາປາທີ່ເປັນການກີດຂວາງທາງເດີນຂອງສັດນ້ຳ ເຊັ່ນ: ອວນ, ມອງກວາດ, ລີ່, ຈິບ, ໂຕ່ງ;
6) ດັກເອົາປາຈາກແຫຼ່ງນ້ຳທຳມະຊາດ ດ້ວຍການຕັນຫ້ວຍ, ໂສກ, ບຸ່ງ, ຄອງນ້ຳ, ຂຸດໜອງ ຫຼື ດູດໜອງທຳມະຊາດ ທີ່ມີນ້ຳຕະຫຼອດປີ, ຈັບປາໃນຍາມລະດູປາໄຂ່;
7) ທຳລາຍວັງສະຫງວນ, ຫາສັດນ້ຳ ໃນບໍລິເວນປາປະສົມພັນ, ບ່ອນປາອໍ ຫຼື ປາກອງ ແລະ ບ່ອນປາວາງໄຂ່ຕາມທຳມະຊາດ, ຕາມການກຳນົດຂອງຄະນະກຳມະການຄຸ້ມຄອງການປະມົງປະຈຳພື້ນທີ່ແຫຼ່ງນ້ຳ ຫຼື ຕາມກົດລະບຽບຄຸ້ມຄອງການປະມົງຂັ້ນບ້ານ;
8) ຈັບປາ ຫຼື ສັດນ້ຳອື່ນ ປະເພດຫວງຫ້າມ ແລະ ປະເພດຄຸ້ມຄອງ ລວມທັງປາ ຫຼື ສັດນ້ຳອື່ນ ທີ່ຍັງເປັນລູກຢູ່.

  

### 2. ຂໍ້ຫ້າມສຳລັບເຈົ້າໜ້າທີ່ຄຸ້ມຄອງການປະມົງ

ນອກຈາກຂໍ້ຫ້າມທົ່ວໄປແລ້ວ, ຫ້າມ ເຈົ້າໜ້າທີ່ຄຸ້ມຄອງການປະມົງ ມີການກະທຳ ດັ່ງນີ້:

1) ສວຍໃຊ້ສິດໜ້າທີ່, ຕຳແໜ່ງ, ບັງຄັບ, ນາບຂູ່ ຫຼື ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ;
2) ປອມແປງເອກະສານ, ຂາດຄວາມຮັບຜິດຊອບຕໍ່ວຽກງານ ທີ່ໄດ້ຮັບມອບໝາຍ.

## IV. ຖ້າລະເມີດກົດໝາຍວ່າດ້ວຍການປະມົງ ຈະໄດ້ຮັບໂທດຄືແນວໃດ ?

ບຸກຄົນ, ນິຕິບຸກຄົນ ທີ່ລະເມີດກົດໝາຍວ່າດ້ວຍການປະມົງ ຈະຖືກລົງໂທດ ຕາມແຕ່ລະກໍລະນີເບົາ ຫຼື ໜັກ ທີ່ໄດ້ລະບຸໄວ້ໃນມາດຕາ 64, 65, 66, 67 ແລະ 68 ຂອງກົດໝາຍວ່າດ້ວຍການປະມົງ ຄື:

1. **ກໍລະນີເບົາ** ແມ່ນການລະເມີດລະບຽບກົດໝາຍ ກ່ຽວກັບ ການປະມົງເປັນຕົ້ນ ຫຼື ຂໍ້ຫ້າມທີ່ມີລັກສະນະເບົາບາງ, ບໍ່ມີອົງປະກອບຂອງການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍທີ່ມີມູນຄ່າຕ່ຳກວ່າ 200.000 ກີບ ແຕ່ມີຄວາມຈິງໃຈລາຍງານ:
   - **ບຸກຄົນ ແລະ ນິຕິບຸກຄົນ** ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.
   - **ພະນັກງານ ແລະ ເຈົ້າໜ້າທີ່** ຈະຖືກປະຕິບັດວິໄນ ຕາມແຕ່ລະກໍລະນີ ຄື: ຊີ້ແຈ້ງຄວາມຜິດ ໂດຍບັນທຶກໄວ້ໃນສຳນວນເອກະສານ ຊີວະປະຫວັດຂອງຜູ້ກ່ຽວ; ໂຈະການເລື່ອນຊັ້ນ ແລະ ຂັ້ນເງິນເດືອນ.

2. **ກໍລະນີໜັກ ຫຼື ບໍ່ເຂັດຫຼາບ** ແມ່ນການລະເມີດລະບຽບກົດໝາຍ ກ່ຽວກັບ ການປະມົງ ເປັນຕົ້ນ, ຂໍ້ຫ້າມທີ່ໄດ້ສ້າງຄວາມເສຍຫາຍແຕ່ 200.000 ກີບ ຂຶ້ນໄປ:
   - **ບຸກຄົນ ແລະ ນິຕິບຸກຄົນ** ຈະຖືກປັບໃໝເທົ່າຕົວຂອງມູນຄ່າຄວາມເສຍຫາຍ. ໃນກໍລະນີ ທີ່ມີການລະເມີດເປັນຄັ້ງທີສອງ ຫຼື ເປັນອາຈິນ ຈະຖືກປັບໃໝສາມເທົ່າຕົວ ຂອງມູນຄ່າຄວາມເສຍຫາຍຂອງປາ ແລະ ສັດນ້ຳອື່ນປະເພດຫວງຫ້າມ, ສອງເທົ່າຕົວຂອງມູນຄ່າປາ ແລະ ສັດນ້ຳອື່ນປະເພດຄຸ້ມຄອງ ແລະ ໜຶ່ງເທົ່າຕົວຂອງມູນຄ່າປາ ແລະ ສັດນ້ຳອື່ນປະເພດທົ່ວໄປ ພ້ອມທັງຮິບຊັບສິນທີ່ໄດ້ມາໂດຍບໍ່ຖືກຕ້ອງນັ້ນເປັນຂອງລັດ.
   - **ພະນັກງານ ແລະ ເຈົ້າໜ້າທີ່** ນອກຈາກຖືກລົງໂທດດັ່ງທີ່ກ່າວມາຂ້າງເທິງແລ້ວ, ຍັງຈະຖືກລົງໂທດເພີ່ມຕື່ມ ຄື: ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນທີ່ມີຕຳແໜ່ງຕ່ຳກວ່າເກົ່າ; ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ. ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

3. **ມາດຕະການທາງອາຍາ** ຜູ້ທີ່ໄດ້ລະເມີດກົດໝາຍວ່າດ້ວຍການປະມົງ ທີ່ເປັນການກະທຳຜິດທາງອາຍາ ເຊັ່ນ: ❶ ບຸກລຸກທຳລາຍຖິ່ນທີ່ຢູ່ອາໄສ, ບ່ອນປາວາງໄຂ່ ແລະ ແຫຼ່ງອາຫານປາ ແລະ ສັດນ້ຳອື່ນ; ❷ ຫາ, ຈັບ ຫຼື ມີໄວ້ໃນຄອບຄອງປາ ແລະ ສັດນ້ຳອື່ນ ປະເພດຫວງຫ້າມ ທີ່ຍັງມີຊີວິດ, ຊາກ ຫຼື ສິ້ນສ່ວນໂດຍບໍ່ຖືກຕ້ອງ ແລະ ❸ ນຳເຂົ້າ, ສົ່ງອອກ, ນຳຜ່ານ ແລະ ເຄື່ອນຍ້າຍປາ ແລະ ສັດນ້ຳອື່ນປະເພດຫວງຫ້າມ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ຈະຖືກດຳເນີນຄະດີອາຍາ ແລະ ຖືກລົງໂທດຕັດອິດສະລະພາບ ແຕ່ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ຕາມທີ່ໄດ້ກ່າວມາຂ້າງເທິງ.

# ຄວາມຮູ້ພື້ນຖານ ກ່ຽວກັບ ກົດໝາຍວ່າດ້ວຍ ຊົນລະປະທານ

**ກົດໝາຍວ່າດ້ວຍຊົນລະປະທານ ໄດ້ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ VII ໃນວັນທີ 14 ທັນວາ 2012 ແລະ ປະກາດໃຊ້ໂດຍປະທານປະເທດແຫ່ງ ສປປ ລາວ ໃນວັນທີ 17 ມັງກອນ 2013 ຊຶ່ງປະກອບມີ 9 ພາກ, 79 ມາດຕາ.**

## I. ຄວາມສຳຄັນຂອງກົດໝາຍວ່າດ້ວຍຊົນລະປະທານ ມີຄືແນວໃດ ?

### 1. ຄວາມສຳຄັນຂອງຊົນລະປະທານ

ຊົນລະປະທານ ແມ່ນ ລະບົບການສະໜອງນ້ຳ ແລະ ການລະບາຍນ້ຳ ເພື່ອການຜະລິດກະສິກຳ ຊຶ່ງປະກອບດ້ວຍ ລະບົບຫົວງານ, ລະບົບທົດ ປ້ອງກັນແລ້ງ ແລະ ລະບົບປ້ອງກັນນ້ຳຖ້ວມ.

**ບາງຄຳສັບເຕັກນິກທີ່ນຳໃຊ້ໃນກົດໝາຍວ່າດ້ວຍຊົນລະປະທານ:**

- **ຫົວງານ** ໝາຍເຖິງ ເຂື່ອນ, ອ່າງເກັບນ້ຳ, ຝາຍນ້ຳລົ້ນ, ທາງລະບາຍນ້ຳລົ້ນ, ຈັກສູບນ້ຳ, ປະຕູນ້ຳ ທີ່ສົ່ງນ້ຳຜ່ານອ່າງຜ່ອນກຳລັງນ້ຳສູ່ຄອງເໝືອງແມ່ ແລະ ເຮືອນຈັກໄຟຟ້ານ້ຳ ຕົກຂະໜາດນ້ອຍ;
- **ທາງລະບາຍນ້ຳລົ້ນ** ໝາຍເຖິງ ສິ່ງກໍ່ສ້າງທີ່ສຳຄັນ ເພື່ອລະບາຍນ້ຳອອກຈາກອ່າງເກັບນ້ຳ, ບໍ່ໃຫ້ລະດັບນ້ຳໃນອ່າງສູງຂຶ້ນລົ້ນຜ່ານສັນເຂື່ອນ ເພື່ອຮັບປະກັນຄວາມປອດໄພຂອງຕົວເຂື່ອນ;
- **ປະຕູນ້ຳ** ໝາຍເຖິງ ສິ່ງກໍ່ສ້າງທີ່ສ້າງຂຶ້ນ ເພື່ອຄວບຄຸມກະແສໄຫຼຂອງນ້ຳດ້ວຍລະບົບປະຕູປິດ-ເປີດ ສົ່ງນ້ຳໄປສູ່ອ່າງຜ່ອນກຳລັງນ້ຳ ແລະ ຄອງເໝືອງແມ່;
- **ລະບົບທົດ** ໝາຍເຖິງ ລະບົບຄອງເໝືອງແມ່, ຄອງຂັ້ນສອງ, ຄອງຂັ້ນສາມ ແລະ ຄອງຄັນນາຄູ່ ເພື່ອສົ່ງນ້ຳໄຫຼເຂົ້າສູ່ໄຮ່ນາ;
- **ຄອງລະບາຍ** ໝາຍເຖິງ ຄອງເໝືອງທີ່ມີລະດັບຕ່ຳກວ່າລະບົບຄອງທົດ ຊຶ່ງສ້າງຂຶ້ນ ເພື່ອລະບາຍນ້ຳທີ່ເກີນຄວາມຕ້ອງການ ຫຼື ຖ້ວມຂັງເນື້ອທີ່ການຜະລິດກະສິກຳ ໃຫ້ໄຫຼໄປສູ່ຄອງລະບາຍແມ່ ໄຫຼຜ່ານປະຕູນ້ຳ ຫຼື ສູບອອກສູ່ຫ້ວຍນ້ຳລຳເຊທຳມະຊາດ ເພື່ອຫຼີກເວັ້ນຜົນກະທົບຕໍ່ຜົນຜະລິດກະສິກຳ ແລະ ສິ່ງແວດລ້ອມ;
- **ຊົນລະກະເສດ** ໝາຍເຖິງ ການຜະລິດກະເສດສຸມໃນເຂດຊົນລະປະທານດ້ວຍການນຳໃຊ້ເຕັກນິກວິທະຍາສາດ;

- **ເຂດຊົນລະປະທານ** ໝາຍເຖິງ ຂອບເຂດເນື້ອທີ່ດິນຊົນລະປະທານ ຊຶ່ງປະກອບດ້ວຍ ທີ່ດິນຫົວງານ, ເນື້ອທີ່ຮັບນ້ຳ, ອ່າງເກັບນ້ຳ, ລະບົບຄອງທົດ, ລະບົບຄອງລະບາຍ ແລະ ເຂດເນື້ອທີ່ດິນ ທີ່ລະບົບຊົນລະປະທານ ສາມາດສະໜອງນ້ຳໄດ້ໃນປັດຈຸບັນ ແລະ ເນື້ອທີ່ຂະຫຍາຍຕໍ່ໄປ ຕາມການສຶກສາ, ສຳຫຼວດ-ອອກແບບ ໂດຍມີຫຼັກເຂດກັນຊົນກຳນົດໄວ້;
- **ຊົນລະປະທານປວງຊົນ** ໝາຍເຖິງ ຊົນລະປະທານທີ່ປະຊາຊົນ ລວມທັງຄອບຄົວ ເປັນເຈົ້າການສ້າງຂຶ້ນເອງ ໂດຍນຳໃຊ້ວັດຖຸທ້ອງຖິ່ນ ເຊັ່ນ: ກົງພັດນ້ຳ, ຝາຍໄມ້, ຝາຍກອຍຫີນ, ການນຳໃຊ້ທໍ່ເຮັດຮາງລິນ, ນຳໃຊ້ນ້ຳໃຕ້ດິນ, ໜອງສະ ແລະ ອື່ນໆ;

ຊົນລະປະທານ ມີບົດບາດສຳຄັນໃນການຜະລິດກະສິກຳ ໂດຍສະເພາະແມ່ນການປູກຝັງ, ການລ້ຽງສັດ ແລະ ການປະມົງ, ການປ້ອງກັນໄພແຫ້ງແລ້ງ, ໄພນ້ຳຖ້ວມ ລວມທັງການຜະລິດນ້ຳປະປາ, ອຸດສາຫະກຳ, ເພື່ອການທ່ອງທ່ຽວ ແລະ ຈຸດປະສົງອື່ນ; ຖ້າບໍ່ມີຊົນລະປະທານ ກໍຈະເຮັດໃຫ້ການຜະລິດກະສິກຳ, ອຸດສາຫະກຳ ແລະ ການບໍລິການ ບໍ່ມີປະສິດທິຜົນ ຫຼື ບໍ່ສຳເລັດຜົນໄດ້. ສະນັ້ນ, ລັດ ຈຶ່ງກຳນົດເອົາ **ວັນທີ 3 ພະຈິກ ເປັນວັນຊົນລະປະທານແຫ່ງຊາດ** ໂດຍໃຫ້ມີການສ້າງຂະບວນການຈັດຕັ້ງອະນາໄມລະບົບຄອງເໝືອງ, ການກວດກາຫົວງານ, ອາຄານຕ່າງໆ, ເປີດນ້ຳ ແລະ ກະກຽມຄວາມພ້ອມໃນທຸກດ້ານ ແນໃສ່ຮັບປະກັນການສະໜອງນ້ຳແກ່ການຜະລິດໃຫ້ທັນລະດູການ.





## 2. ຄວາມສຳຄັນຂອງກົດໝາຍວ່າດ້ວຍຊົນລະປະທານ

ຍ້ອນເຫັນໄດ້ບົດບາດຄວາມສຳຄັນຂອງຊົນລະປະທານ ຄືດັ່ງກ່າວ, ລັດຖະບານ ຈຶ່ງໄດ້ສຸມທຶນຮອນມະຫາສານເຂົ້າໃສ່ວຽກງານກໍ່ສ້າງ, ຟື້ນຟູ ແລະ ສ້ອມແປງໂຄງການຊົນລະປະທານ ໄປຄວບຄູ່ກັບການກຳນົດນະໂຍບາຍ ກໍຄືລະບຽບກົດໝາຍກ່ຽວກັບຊົນລະປະທານເປັນອັນລະອຽດ ແນໃສ່ຮັບປະກັນການສະໜອງນ້ຳ, ປ້ອງກັນໄພແຫ້ງແລ້ງ, ໄພນ້ຳຖ້ວມ ແລະ ຫຼຸດຜ່ອນຄວາມເສຍຫາຍ ໃຫ້ແກ່ການຜະລິດກະສິກຳ. ກົດໝາຍວ່າດ້ວຍຊົນລະປະທານ ເລກທີ 26/ສພຊ, ລົງວັນທີ 14 ທັນວາ 2012 ປະກອບດ້ວຍ 9 ພາກ, 79 ມາດຕາ ຊຶ່ງແມ່ນໜຶ່ງໃນລະບົບກົດໝາຍຂອງລັດ ທີ່ສ້າງຂຶ້ນບົນພື້ນຖານ ລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

### 3. ຈຸດປະສົງຂອງກົດໝາຍວ່າດ້ວຍຊົນລະປະທານ

ກົດໝາຍວ່າດ້ວຍຊົນລະປະທານ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ການຕິດຕາມ, ການກວດກາການດໍາເນີນກິດຈະການຊົນລະປະທານ ເພື່ອເຮັດໃຫ້ວຽກງານຊົນລະປະທານ ເປັນຕົ້ນ ການກໍ່ສ້າງຊົນລະປະທານ ທຸກປະເພດ ແລະ ທຸກຂະໜາດ ມີຄຸນນະພາບ, ມີປະສິດທິຜົນ, ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ລະບຽບກົດໝາຍ ແນໃສ່ຮັບປະກັນການສະໜອງນໍ້າ, ປ້ອງກັນໄພແຫ້ງແລ້ງ, ໄພນໍ້າຖ້ວມ, ຫຼຸດຜ່ອນຄວາມເສຍຫາຍໃຫ້ແກ່ການຜະລິດກະສິກໍາ ປະກອບສ່ວນເຂົ້າໃນການຄໍ້າປະກັນສະບຽງອາຫານ, ສົ່ງເສີມການຜະລິດເປັນສິນຄ້າ, ແກ້ໄຂຄວາມທຸກຍາກຂອງປະຊາຊົນລາວບັນດາເຜົ່າ ແລະ ພັດທະນາເສດຖະກິດ-ສັງຄົມຂອງຊາດ ໃຫ້ເຂັ້ມແຂງ.

## II. ກົດໝາຍວ່າດ້ວຍຊົນລະປະທານ ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດໄດ້ ມີຫຍັງແດ່ ?

### 1. ນະໂຍບາຍກ່ຽວກັບວຽກງານຊົນລະປະທານ

ລັດ ຊຸກຍູ້, ສົ່ງເສີມທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃສ່ກິດຈະການຊົນລະປະທານ ລວມທັງ ການສ້າງຊົນລະກະເສດຄົບວົງຈອນ ແນໃສ່ຫັນເປັນອຸດສາຫະກໍາ ແລະ ທັນສະໄໝ ຕາມທ່າແຮງຕົວຈິງຂອງຜູ້ປະກອບການ ບົນພື້ນຖານຫຼັກການ ດັ່ງນີ້:

- ຮັບປະກັນການປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ແລະ ຕາມທິດຫັນເປັນອຸດສາຫະກໍາ ແລະ ທັນສະໄໝ;
- ຮັບປະກັນມາດຕະຖານເຕັກນິກ, ຄຸນນະພາບຂອງການນໍາໃຊ້ຊົນລະປະທານ ຢ່າງຍາວນານ;
- ນໍາໃຊ້ນໍ້າຢ່າງປະຢັດ, ມີປະສິດທິຜົນ, ມີສ່ວນຮ່ວມຂອງຊາວກະສິກອນ ແລະ ຜູ້ປະກອບການ ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ;
- ຮັບປະກັນການຄຸ້ມຄອງ ແລະ ນໍາໃຊ້ໂຄງການຊົນລະປະທານ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ ທັງຮັບປະກັນຜົນປະໂຫຍດຂອງລັດ, ລວມໝູ່, ການຈັດຕັ້ງ ແລະ ຜົນປະໂຫຍດອັນຊອບທໍາຂອງບຸກຄົນ ຕາມລະບຽບກົດໝາຍ;
- ມີການຈັດຕັ້ງຮັບຜິດຊອບ, ມີງົບປະມານ, ນິຕິກໍາຮອງຮັບ ແລະ ຫຼັກໝາຍເຂດຊົນລະປະທານ ໃນການຄຸ້ມຄອງ ແລະ ນໍາໃຊ້ໂຄງການຊົນລະປະທານ.

ນອກຈາກນັ້ນ, ລັດ ຍັງມີນະໂຍບາຍ ສົ່ງເສີມໃຫ້ນໍາໃຊ້ນໍ້າຈາກທ້າຍເຂື່ອນຈັກໄຟຟ້ານໍ້າຕົກ ຫຼື ຈາກອ່າງເກັບນໍ້າຂອງເຂື່ອນໄຟຟ້ານໍ້າຕົກ ດ້ວຍລະບົບໄຫຼເອງ, ສົ່ງເສີມວຽກງານຊົນລະປະທານ ດ້ວຍການໃຫ້ບຸລິມະສິດດ້ານພາສີ, ອາກອນ ແລະ ລາຄາທີ່ຕິດພັນກັບກິດຈະການຊົນລະປະທານ ຕາມລະບຽບກົດໝາຍ; ລັດ ປຸກລະດົມ, ດຶງດູດໃຫ້ປະຊາຊົນ ມີສ່ວນຮ່ວມເຂົ້າໃນວຽກງານຊົນລະປະທານ ຢ່າງກວ້າງຂວາງ ດ້ວຍການອໍານວຍຄວາມສະດວກໃນການເຂົ້າເຖິງແຫຼ່ງທຶນ ແລະ ສິນເຊື່ອດອກເບ້ຍຕໍ່າ.

## 2. ປະເພດ ແລະ ຂະໜາດຊົນລະປະທານ

### 2.1. ປະເພດ ຊົນລະປະທານ ມີ ສອງ ຄື:

- **ຊົນລະປະທານແບບໄຫຼເອງ** ແມ່ນ ຊົນລະປະທານ ຊຶ່ງມີແຫຼ່ງນໍ້າ, ທີ່ຕັ້ງຂອງຫົວງານ ສູງກວ່າລະດັບເນື້ອທີ່ກະສິກຳ;
- **ຊົນລະປະທານແບບໃຊ້ຈັກສູບນໍ້າ** ແມ່ນ ຊົນລະປະທານ ຊຶ່ງມີແຫຼ່ງນໍ້າ, ທີ່ຕັ້ງຂອງຫົວງານ ຕໍ່າກວ່າລະດັບເນື້ອທີ່ກະສິກຳ ຊຶ່ງຕ້ອງໄດ້ນຳໃຊ້ຈັກສູບນໍ້າ.

### 2.2. ຂະໜາດຊົນລະປະທານ ມີ ສີ່ ຄື:

- **ຊົນລະປະທານຂະໜາດໃຫຍ່** ແມ່ນ ຊົນລະປະທານ ທີ່ສາມາດສະໜອງນໍ້າໃຫ້ເນື້ອທີ່ການຜະລິດ ໄດ້ຫຼາຍກວ່າ ໜຶ່ງພັນ ເຮັກຕາ ຂຶ້ນໄປ;
- **ຊົນລະປະທານຂະໜາດກາງ** ແມ່ນ ຊົນລະປະທານ ທີ່ສາມາດສະໜອງນໍ້າໃຫ້ເນື້ອທີ່ການຜະລິດໄດ້ຫຼາຍກວ່າ ໜຶ່ງຮ້ອຍ ຫາ ໜຶ່ງພັນ ເຮັກຕາ;
- **ຊົນລະປະທານຂະໜາດນ້ອຍ** ແມ່ນ ຊົນລະປະທານ ທີ່ສາມາດສະໜອງນໍ້າໃຫ້ເນື້ອທີ່ການຜະລິດ ໄດ້ຫຼາຍກວ່າ ສິບ ຫາ ໜຶ່ງຮ້ອຍ ເຮັກຕາ;
- **ຊົນລະປະທານປອງຊົນ** ແມ່ນ ຊົນລະປະທານ ທີ່ສາມາດສະໜອງນໍ້າໃຫ້ເນື້ອທີ່ການຜະລິດໄດ້ແຕ່ ສິບ ເຮັກຕາ ລົງມາ.

## 3. ກິດຈະການຊົນລະປະທານ

- ການສຶກສາໂຄງການ;
- ການສຳຫຼວດ-ອອກແບບເຕັກນິກກໍ່ສ້າງໂຄງການ;
- ການກໍ່ສ້າງໂຄງການ;
- ການນຳໃຊ້ ແລະ ຟື້ນຟູ ສ້ອມແປງໂຄງການ;
- ການແບ່ງຂັ້ນຄຸ້ມຄອງກິດຈະການໂຄງການ.

ບັນດາກິດຈະການຊົນລະປະທານ ທີ່ກ່າວມາຂ້າງເທິງນີ້ ແລະ ກິດຈະການອື່ນ ທີ່ນຳໃຊ້ເງິນກູ້ຢືມ ຫຼື ເງິນຊ່ວຍເຫຼືອລ້າ ຕ້ອງຜ່ານສະພາວິທະຍາສາດ ກົມຊົນລະປະທານ ກະຊວງກະສິກຳ ແລະ ປ່າໄມ້.

## 4. ການສະເໜີໂຄງການຊົນລະປະທານ ເຂົ້າແຜນການລົງທຶນຂອງລັດ

ໂຄງການຊົນລະປະທານ ຕ້ອງສະເໜີເຂົ້າແຜນການລົງທຶນຂອງລັດ ຫ້າ ປີ ແລະ ປະຈຳປີ ຊຶ່ງມີການເຂົ້າຮ່ວມແຕ່ຫົວທີ ຂອງກຳມາທິການສະພາແຫ່ງຊາດ ຫຼື ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ່ກ່ຽວຂ້ອງ. ການສະເໜີໂຄງການຊົນລະປະທານ ເຂົ້າແຜນການລົງທຶນຂອງລັດ ໃຫ້ປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍການລົງທຶນຂອງລັດ.

- **ກະຊວງກະສິກຳ ແລະ ປ່າໄມ້** ເປັນຜູ້ສັງລວມ ບັນດາໂຄງການຂະໜາດໃຫຍ່ ທີ່ໄດ້ຜ່ານການສຳຫຼວດ-ອອກແບບເຕັກນິກກໍ່ສ້າງແລ້ວ ເຂົ້າໃນແຜນການລົງທຶນຂອງລັດ ຫ້າ ປີ ແລະ ປະຈຳປີ ເພື່ອນຳສະເໜີລັດຖະບານພິຈາລະນາ ໂດຍຜ່ານກະຊວງແຜນການ ແລະ ການລົງທຶນ.
- **ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນ** ເປັນຜູ້ສັງລວມ ບັນດາໂຄງການຂະໜາດກາງ ທີ່ໄດ້ຜ່ານການສຳຫຼວດ-ອອກແບບເຕັກນິກກໍ່ສ້າງແລ້ວ ເຂົ້າໃນແຜນການລົງທຶນຂອງລັດ ຫ້າ ປີ ແລະ ປະຈຳປີ ເພື່ອນຳສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນ ພິຈາລະນາ ໂດຍຜ່ານພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນ.
- **ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ** ເປັນຜູ້ສັງລວມ ບັນດາໂຄງການຂະໜາດນ້ອຍ ທີ່ໄດ້ຜ່ານການສຳຫຼວດ-ອອກແບບເຕັກນິກກໍ່ສ້າງແລ້ວ ເຂົ້າໃນແຜນການລົງທຶນຂອງລັດ ຫ້າ ປີ ແລະ ປະຈຳປີ ເພື່ອນຳສະເໜີ ເຈົ້າເມືອງ, ຫົວໜ້າເທດສະບານ ພິຈາລະນາ ໂດຍຜ່ານຫ້ອງການແຜນການ ແລະ ການລົງທຶນເມືອງ, ເທດສະບານ.
- **ໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ** ເປັນຜູ້ສັງລວມ ບັນດາໂຄງການຊົນລະປະທານປ່ອງຊົນ ທີ່ໄດ້ຜ່ານການສຳຫຼວດ ແລະ ເກັບກຳຂໍ້ມູນແລ້ວ ເຂົ້າໃນແຜນການລົງທຶນຂອງລັດປະຈຳປີ ເພື່ອນຳສະເໜີນາຍບ້ານ ພິຈາລະນາ ໂດຍມີການສົມທົບກັບໜ່ວຍງານທີ່ກ່ຽວ ຂ້ອງພາຍໃນບ້ານ.

## 5. ການນຳໃຊ້ ແລະ ຟື້ນຟູສ້ອມແປງ ໂຄງການຊົນລະປະທານ

### 5.1. ການນຳໃຊ້ໂຄງການຊົນລະປະທານ

ໂຄງການຊົນລະປະທານທຸກຂະໜາດ ທີ່ໄດ້ຮັບມອບຈາກບໍລິສັດຮັບເໝົາກໍ່ສ້າງຢ່າງເປັນທາງການແລ້ວ ເຈົ້າຂອງໂຄງການ ຫຼື ຂະແໜງການກະສິກຳ ແລະ ປ່າໄມ້ ທີ່ກ່ຽວຂ້ອງຕາມການແບ່ງຂັ້ນຄຸ້ມຄອງ ຕ້ອງແຕ່ງຕັ້ງຄະນະຮັບຜິດຊອບປະຈຳໂຄງການ ຫຼື ປະຈຳເຂດໂຄງການ ພ້ອມທັງກຳນົດໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບ ໃຫ້ຄະນະຮັບຜິດຊອບດັ່ງກ່າວ ພາຍໃນກຳນົດ ຫົກສິບ ວັນ.

ການນຳໃຊ້ໂຄງການຊົນລະປະທານ ແມ່ນ ການບໍລິຫານຈັດການນ້ຳຊົນລະປະທານ ເພື່ອນຳໃຊ້ເຂົ້າໃນການຜະລິດກະສິກຳເປັນຕົ້ນຕໍ ຕາມແຜນການແຈກຢາຍນ້ຳຂອງໂຄງການທີ່ໄດ້ຈັດລຽງບຸລິມະສິດຄວາມສຳຄັນຂອງການນຳໃຊ້ນ້ຳ, ນອກຈາກນັ້ນຈຶ່ງສະໜອງໃຫ້ການຜະລິດນ້ຳປະປາ, ອຸດສາຫະກຳ, ເພື່ອການທ່ອງທ່ຽວ ແລະ ຈຸດປະສົງອື່ນ ຕາມເງື່ອນໄຂຕົວຈິງ. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ນ້ຳຊົນລະປະທານ ຕ້ອງເສຍຄ່ານ້ຳຕາມລະບຽບການ ເວັ້ນເສຍແຕ່ການນຳໃຊ້ນ້ຳ ເພື່ອການຜະລິດກະສິກຳ ທີ່ບໍ່ມີຈຸດປະສົງທາງການຄ້າ ແລະ ຕ້ອງໄດ້ຮັບການເຫັນດີຈາກຂະແໜງການກະສິກຳ ແລະ ປ່າໄມ້ ເສຍກ່ອນ.

### 5.2. ການຟື້ນຟູ ສ້ອມແປງໂຄງການຊົນລະປະທານ

ເມື່ອໂຄງການຊົນລະປະທານ ມີສະພາບຊຸດໂຊມ, ເປ່ເພ ຕ້ອງຟື້ນຟູສ້ອມແປງ ໃຫ້ຢູ່ໃນສະພາບດີ, ສາມາດນຳໃຊ້ໄດ້ ເພື່ອຮັບປະກັນການສະໜອງນໍ້າໃຫ້ການຜະລິດ ໂດຍໃຫ້ສະມາຄົມກຸ່ມນຳໃຊ້ນໍ້າ ແລະ ຜູ້ປະກອບການ ມີສ່ວນຮ່ວມ. ສຳລັບຄວາມຮັບຜິດຊອບໃນການຟື້ນຟູສ້ອມແປງໂຄງການຊົນລະປະທານ ແມ່ນໃຫ້ປະຕິບັດຕາມການແບ່ງຂັ້ນຄຸ້ມຄອງການນຳໃຊ້ ແລະ ຟື້ນຟູສ້ອມແປງໂຄງການຊົນລະປະທານ. ໃນກໍລະນີເກີດໄພພິບັດທຳມະຊາດ ເຮັດໃຫ້ໂຄງການຊົນລະປະທານເປ່ເພນັ້ນ ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງຮີບຮ້ອນປະສານສົມທົບກັບຂະແໜງການອື່ນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສ້ອມແປງຄືນ ໃຫ້ທັນລະດູການຜະລິດ.

## 6. ການແບ່ງຂັ້ນຄຸ້ມຄອງ ການກໍ່ສ້າງໂຄງການຊົນລະປະທານ

- **ກະຊວງກະສິກຳ ແລະ ປ່າໄມ້** ຄຸ້ມຄອງການກໍ່ສ້າງໂຄງການຊົນລະປະທານຂະໜາດໃຫຍ່ ໂດຍແມ່ນ ກົມຊົນລະປະທານ ເປັນຜູ້ສັງລວມ.
- **ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນ** ຄຸ້ມຄອງການກໍ່ສ້າງໂຄງການຊົນລະປະທານຂະໜາດກາງ ແລະ ຂະໜາດນ້ອຍ ໂດຍແມ່ນ ຂະແໜງຊົນລະປະທານແຂວງ, ນະຄອນ ເປັນຜູ້ສັງລວມ.
- **ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ** ຄຸ້ມຄອງການກໍ່ສ້າງໂຄງການຊົນລະປະທານປອງຊົນ ໂດຍແມ່ນ ໜ່ວຍງານຊົນລະປະທານເມືອງ, ເທດສະບານ ເປັນຜູ້ສັງລວມ.

## 7. ການຄຸ້ມຄອງ ການນຳໃຊ້ ແລະ ຟື້ນຟູສ້ອມແປງ ໂຄງການຊົນລະປະທານ

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ ຮັບຜິດຊອບຄຸ້ມຄອງການນຳໃຊ້ ແລະ ຟື້ນຟູສ້ອມແປງ ໂຄງການຊົນລະປະທານທຸກຂະໜາດ ໂດຍການຊີ້ນຳຄະນະຄຸ້ມຄອງ ແລະ ນຳໃຊ້ປະຈຳໂຄງການ ແລະ ປະຈຳເຂດໂຄງການ ຂຶ້ນແຜນງົບປະມານນຳໃຊ້ ແລະ ຟື້ນຟູສ້ອມແປງ ເພື່ອສະເໜີຕໍ່ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນ ເອົາເຂົ້າແຜນງົບປະມານຂອງແຂວງ, ນະຄອນ ປະຈຳສົກປີ.

## 8. ສະມາຄົມກຸ່ມນຳໃຊ້ນໍ້າ

### 8.1. ການສ້າງຕັ້ງສະມາຄົມກຸ່ມນຳໃຊ້ນໍ້າ

ສະມາຄົມກຸ່ມນຳໃຊ້ນໍ້າ ແມ່ນ ການຈັດຕັ້ງຂອງຊາວກະສິກອນທີ່ນຳໃຊ້ນໍ້າ ແລະ ໄດ້ຮັບຜົນປະໂຫຍດຈາກໂຄງການຊົນລະປະທານ ຊຶ່ງສ້າງຕັ້ງຂຶ້ນເພື່ອຄຸ້ມຄອງ ແລະ ນຳໃຊ້ໂຄງການຊົນລະປະທານ ໃຫ້ມີປະສິດທິຜົນ ແລະ ຍືນຍົງ, ເຂົ້າຮ່ວມແຕ່ຫົວທີ ໃນການປະກອບຄຳເຫັນຕໍ່ບັນດາກິດຈະການຊົນລະປະທານ. ສຳລັບການສ້າງຕັ້ງສະມາຄົມກຸ່ມນຳໃຊ້ນໍ້າ ໃຫ້ປະຕິບັດຕາມລະບຽບກົດໝາຍກ່ຽວກັບສະມາຄົມ.

ສະມາຊິກຂອງສະມາຄົມກຸ່ມນຳໃຊ້ນ້ຳ ຈະໄດ້ຮັບຜົນປະໂຫຍດ ເປັນຕົ້ນ ມີບູລິມະສິດນຳໃຊ້ນ້ຳ ຕາມຮອບວຽນການສົ່ງນ້ຳຢ່າງພຽງພໍ ແລະ ຍຸຕິທຳ ເຂົ້າໃນການຜະລິດກະສິກຳ ໃຫ້ທັນລະດູການ.

## 8.2. ກົດລະບຽບພາຍໃນ

ກົດລະບຽບພາຍໃນ ຂອງສະມາຄົມກຸ່ມນຳໃຊ້ນ້ຳ ປະກອບດ້ວຍ:

– ຊື່ ແລະ ຈຸດປະສົງ ຂອງສະມາຄົມກຸ່ມນຳໃຊ້ນ້ຳ;
– ທີ່ຕັ້ງຫ້ອງການ ຂອງສະມາຄົມກຸ່ມນຳໃຊ້ນ້ຳ;
– ການພົວພັນພາຍໃນ ແລະ ພາຍນອກ ຂອງສະມາຊິກ;
– ເງື່ອນໄຂການເຂົ້າຮ່ວມ, ການຮັບສະມາຊິກ ແລະ ການພົ້ນຈາກການເປັນສະມາຊິກ;
– ລະບົບການຈັດຕັ້ງ ຂອງສະມາຄົມກຸ່ມນຳໃຊ້ນ້ຳ, ຈຳນວນກຸ່ມ, ການຄັດເລືອກ, ຄວາມຮັບຜິດຊອບ ແລະ ການພົ້ນຕຳແໜ່ງຂອງຄະນະບໍລິຫານງານສະມາຄົມ, ຄະນະກວດກາ;
– ການຄຸ້ມຄອງຊັບສິນບັດ ແລະ ການຈັດແບ່ງຮອບວຽນຂອງການນຳໃຊ້ນ້ຳໃຫ້ທົ່ວເຖິງ ແລະ ຍຸຕິທຳ;
– ລະບຽບການດຳເນີນກອງປະຊຸມຂອງສະມາຄົມກຸ່ມນຳໃຊ້ນ້ຳ;
– ເນື້ອໃນອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

## 8.3. ເງື່ອນໄຂການເຂົ້າເປັນສະມາຊິກ ຂອງສະມາຄົມກຸ່ມນຳໃຊ້ນ້ຳ

ບຸກຄົນ ທີ່ຈະເຂົ້າເປັນສະມາຊິກ ຕ້ອງມີເງື່ອນໄຂ ດັ່ງນີ້:

– ຂຽນໃບສະໝັກເຂົ້າເປັນສະມາຊິກ ດ້ວຍຕົນເອງ;
– ເປັນເຈົ້າຂອງເນື້ອທີ່ດິນກະສິກຳ ຫຼື ໄດ້ຮັບສິດນຳໃຊ້ດິນນາ, ດິນສວນ, ດິນຄັງເຮັດການຜະລິດ ທີ່ຕັ້ງຢູ່ໃນເຂດຊົນລະປະທານ;
– ມີເງື່ອນໄຂອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ກ່ຽວກັບ ສະມາຄົມ.

## 8.4. ສິດ ແລະ ພັນທະ ຂອງສະມາຄົມກຸ່ມນຳໃຊ້ນ້ຳ

ສະມາຄົມກຸ່ມນຳໃຊ້ນ້ຳຊົນລະປະທານ ມີ ສິດ ແລະ ພັນທະ ດັ່ງນີ້:

– ໄດ້ຮັບການຝຶກອົບຮົມວິຊາສະເພາະດ້ານຊົນລະປະທານ, ວຽກງານສົ່ງເສີມການປູກ, ການລ້ຽງ, ປ່າໄມ້, ການຄຸ້ມຄອງ ແລະ ການພັດທະນາທີ່ດິນກະສິກຳຂັ້ນພື້ນຖານ;
– ປະກອບຄຳເຫັນ ເພື່ອຜົນປະໂຫຍດລວມຂອງໂຄງການຊົນລະປະທານ;
– ມີສ່ວນຮ່ວມ ແລະ ເປັນເຈົ້າການໃນການບົວລະບັດຮັກສາ, ຟື້ນຟູ, ສ້ອມແປງໂຄງການຊົນລະປະທານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອຮັບປະກັນແຜນການສະໜອງນ້ຳຊົນລະປະທານເຂົ້າໃນການຜະລິດ;
– ສະໜອງນ້ຳໃຫ້ເນື້ອທີ່ການຜະລິດຕາມຮອບວຽນ ຕາມຄວາມຕ້ອງການຕົວຈິງຂອງພືດແຕ່ລະຊະນິດໃຫ້ທົ່ວເຖິງ ແລະ ຍຸຕິທຳ;

– ເຮັດການຜະລິດກະສິກຳ ຕາມແຜນຈັດສັນການນຳໃຊ້ທີ່ດິນໃນເຂດຊົນລະປະທານ;
– ເກັບ ແລະ ສະຫຼຸບຄ່າໃຊ້ນ້ຳ, ຄ່າກະແສໄຟຟ້າ ໃຫ້ຄົບຖ້ວນ ເພື່ອສົ່ງໃຫ້ຄະນະຄຸ້ມຄອງ ແລະ ນຳໃຊ້ປະຈຳໂຄງການ ຫຼື ປະຈຳເຂດໂຄງການ;
– ປົກປັກຮັກສາສິ່ງແວດລ້ອມ, ປູກຕົ້ນໄມ້ ໃຫ້ເປັນປ່າໃນເຂດອ່າງຮັບນ້ຳ;
– ຮັບປະກັນຄວາມສະຫງົບ ພາຍໃນສະມາຄົມກຸ່ມນຳໃຊ້ນ້ຳ;
– ປະຕິບັດສິດ ແລະ ພັນທະອື່ນ ຕາມລະບຽບກົດໝາຍ.





## III. ກົດໝາຍວ່າດ້ວຍຊົນລະປະທານ ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເຮັດ ມີຫຍັງແດ່ ?

### 1. ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1) ທຳລາຍເຂື່ອນ, ຝາຍ, ປະຕູນ້ຳ, ຈັກສູບນ້ຳ, ອາຄານ, ຄອງເໝືອງ, ອຸປະກອນຝົນຝອຍ ແລະ ໄຟຟ້ານ້ຳຕົກຂະໜາດນ້ອຍ;
2) ທຳລາຍສະພາບແວດລ້ອມ ໃນເນື້ອທີ່ຮັບນ້ຳຂອງອ່າງເກັບນ້ຳຊົນລະປະທານ, ໃຊ້ຢາຂ້າຫຍ້າ, ຢາປາບສັດຕູພືດ ແລະ ປ່ອຍສານເຄມີທີ່ເປັນທາດເບື່ອລົງສູ່ແມ່ນ້ຳ ທີ່ໄຫຼເຂົ້າອ່າງເກັບນ້ຳຊົນລະປະທານ;
3) ດຳເນີນບັນດາກິດຈະການຊົນລະປະທານ ໂດຍບໍ່ໄດ້ຮັບອະນຸຍາດ;
4) ນຳໃຊ້ນ້ຳຈາກອ່າງເກັບນ້ຳຊົນລະປະທານ ເຂົ້າໃນເປົ້າໝາຍທີ່ບໍ່ແມ່ນກະສິກຳ ໂດຍບໍ່ໄດ້ຮັບອະນຸຍາດ;
5) ຊື້ຈ້າງ, ໃຫ້ສິນບົນ ພະນັກງານຊົນລະປະທານ, ທີ່ປຶກສາ, ເຈົ້າຂອງໂຄງການ, ຄະນະຄຸ້ມຄອງ ແລະ ນຳໃຊ້ປະຈຳໂຄງການ, ປະຈຳເຂດໂຄງການ, ສະມາຄົມກຸ່ມນຳໃຊ້ນ້ຳ ໃນການເພີ່ມບໍລິມາດ, ລາຄາຫຼືວໜ່ອຍ, ຖ່ວງດຶງການປະຕິບັດສັນຍາທຸກຮູບແບບ ແລະ ແກ່ຍາວເວລາໃນການປະຕິບັດໂຄງການ ເພື່ອຜົນປະໂຫຍດສ່ວນຕົວ;
6) ດຳເນີນການສຶກສາ, ສຳຫຼວດ-ອອກແບບ, ກໍ່ສ້າງ ແລະ ຄວບຄຸມການກໍ່ສ້າງດ້ວຍຕົນເອງ ຫຼື ຈັດສັນມາດ້ວຍຕົນເອງ;
7) ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານຊົນລະປະທານ, ທີ່ປຶກສາຄຸມງານການກໍ່ສ້າງ, ເຈົ້າຂອງໂຄງການ, ຄະນະຄຸ້ມຄອງ ແລະ ນຳໃຊ້ປະ

ຈຳໂຄງການ ຫຼື ປະຈຳເຂດໂຄງການ, ສະມາຄົມກຸ່ມນຳໃຊ້ນ້ຳ ແລະ ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານຊົນລະປະທານ ເພື່ອປະໂຫຍດສ່ວນຕົວ;

8) ນຳໃຊ້ສັນຄອງຊົນລະປະທານ ແລະ ຄັນຄູປ້ອງກັນນ້ຳຖ້ວມເນື້ອທີ່ກະສິກຳ ເປັນເສັ້ນທາງຂົນສົ່ງສິ່ງຂອງເກີນນ້ຳໜັກທີ່ໄດ້ຮັບອະນຸຍາດ;
9) ເປີດ-ປິດປະຕູນ້ຳ ແລະ ຂຸດເຈາະຄອງຊົນລະປະທານ ເພື່ອໃຊ້ນ້ຳເຮັດການຜະລິດ ແລະ ຄົວເຮືອນ ໂດຍບໍ່ໄດ້ຮັບອະນຸຍາດຈາກຄະນະຄຸ້ມຄອງ ແລະ ນຳໃຊ້ປະຈຳໂຄງການ ຫຼື ປະຈຳເຂດໂຄງການ;
10) ຫຼົບຫຼີກ, ຊັກຊ້າ, ແກ່ຍາວການເສຍຄ່ານ້ຳຊົນລະປະທານ, ຄ່າກະແສໄຟຟ້າ, ເສຍບໍ່ຄົບຖ້ວນ;
11) ນຳໃຊ້ເອກະສານປະເມີນມູນຄ່າໂຄງການ, ການສຶກສາ, ການສຳຫຼວດ-ອອກແບບເຕັກນິກກໍ່ສ້າງ ທີ່ບໍ່ໄດ້ຜ່ານສະພາວິທະຍາສາດຊົນລະປະທານ;
12) ຂາຍໂຄງການຊົນລະປະທານ ທີ່ຕົນເອງປະມູນໄດ້;
13) ນຳໃຊ້ທີ່ດິນເຂດຊົນລະປະທານ ໄປເປັນດິນປຸກສ້າງ, ດິນອຸດສາຫະກຳ ແລະ ດິນປະເພດອື່ນ;
14) ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## 2. ຂໍ້ຫ້າມສຳລັບພະນັກງານຊົນລະປະທານ

ຫ້າມ ພະນັກງານຊົນລະປະທານ ມີ ພຶດຕິກຳ ດັ່ງນີ້:

1) ໃຊ້ສິດ ໜ້າທີ່ເກີນຂອບເຂດ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນລາວບັນດາເຜົ່າ;
2) ປະລະໜ້າທີ່ ແລະ ຄວາມຮັບຜິດຊອບໃນການຕ້ານແລ້ງ ແລະ ການປ້ອງກັນນ້ຳຖ້ວມ ທີ່ການຈັດຕັ້ງໄດ້ມອບໝາຍໃຫ້;
3) ເປີດເຜີຍຄວາມລັບຂອງລັດ ຫຼື ເອກະສານທາງລັດຖະການ ກ່ຽວກັບ ການປະມູນໂຄງການຊົນລະປະທານ;
4) ປອມແປງເອກະສານ, ເຮັດສັນຍາ ໂດຍບໍ່ສອດຄ່ອງກັບແຜນດຳເນີນງານໂຄງການ, ລາຍງານບໍ່ຖືກຕ້ອງກັບຄວາມຈິງ;
5) ນຳໃຊ້ງົບປະມານ ຫຼື ກອງທຶນພັດທະນາຊົນລະປະທານ ບໍ່ຖືກຕ້ອງຕາມລະບຽບກົດໝາຍ;
6) ນຳເອົາເອກະສານ ກ່ຽວກັບ ການສຶກສາເບື້ອງຕົ້ນ, ການສຶກສາຄວາມເປັນໄປໄດ້ ແລະ ການສຳຫຼວດ-ອອກແບບເຕັກນິກກໍ່ສ້າງ ທີ່ບໍ່ໄດ້ຜ່ານຄວາມເປັນເອກະພາບກັນໃນສະພາ ຫຼື ໜ່ວຍງານວິທະຍາສາດຊົນລະປະທານ ເປັນເອກະສານອ້າງອີງ ເພື່ອເອົາເຂົ້າແຜນງົບປະມານແຫ່ງລັດ;
7) ອອກຂໍ້ຕົກລົງ ສັ່ງຜູ້ປະກອບການເຮັດນອກແຜນ;

8) ເຊັນຢັ້ງຢືນເອກະສານການຊໍາລະສະສາງໃຫ້ຜູ້ປະກອບການ ໂດຍບໍ່ໄດ້ອີງໃສ່ການກວດກາໜ້າວຽກ ແລະ ບໍລິມາດຢູ່ສະໜາມ ທີ່ຜູ້ປະກອບການປະຕິບັດໄດ້ຕົວຈິງ ແລະ ຄວາມເປັນເອກະພາບຂອງຄະນະກໍາມະການກວດກາ;
9) ເປີດນໍ້າຊົນລະປະທານ ໂດຍບໍ່ມີແຜນການ, ຂາດຄວາມຮັບຜິດຊອບ ຊຶ່ງກໍ່ໃຫ້ເກີດຜົນເສຍຫາຍ ແລະ ມີໜີ້ສິນຖຸມເຄືອ;
10) ມີພຶດຕິກໍາອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## IV. ຖ້າລະເມີດ ກົດໝາຍວ່າດ້ວຍຊົນລະປະທານ ຈະໄດ້ຮັບໂທດ ຄືແນວໃດ ?

ຜູ້ທີ່ລະເມີດ ກົດໝາຍວ່າດ້ວຍຊົນລະປະທານ ຈະຖືກລົງໂທດແຕ່ເບົາ ຫາ ໜັກ ຕາມແຕ່ລະກໍລະນີທີ່ໄດ້ລະບຸໄວ້ໃນ ມາດຕາ 72, 73, 74, 75 ແລະ 76 ຂອງກົດໝາຍວ່າດ້ວຍຊົນລະປະທານ.

**1. ກໍລະນີເບົາ:** ແມ່ນ ການກະທໍາຜິດ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ມີລັກສະນະເບົາ, ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ, ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດຂອງຕົນ:

- **ສໍາລັບການຈັດຕັ້ງ ແລະ ບຸກຄົນ ຫຼືວິສາຫະກິດ** ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ;
- **ສໍາລັບພະນັກງານ ແລະ ເຈົ້າໜ້າທີ່** ຈະຖືກລົງວິໄນ ຕາມແຕ່ລະກໍລະນີ ຄື: ຕິຕຽນ, ກ່າວເຕືອນຄວາມຜິດ; ໂຈະການເລື່ອນຊັ້ນ-ຂັ້ນເງິນເດືອນ ແລະ ການຍ້ອງຍໍ; ປົດຕໍາແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ; ໃຫ້ອອກຈາກລັດຖະການໂດຍບໍ່ໄດ້ຮັບນະໂຍບາຍໃດໆ. ຜູ້ຖືກລົງວິໄນ ຕ້ອງສົ່ງຄືນ ເງິນ-ຊັບສິນ ທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງ ໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**2. ກໍລະນີທີ່ບໍ່ເຂັດຫຼາບ ຫຼື ສະຖານໜັກ** ແມ່ນ ການລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ທີ່ບໍ່ມີອົງປະກອບການກະທໍາຜິດທາງອາຍາ ແລະ ໄດ້ກໍ່ຄວາມເສຍຫາຍ ຈະຖືກປັບໃໝເທົ່າຕົວຂອງມູນຄ່າຄວາມເສຍຫາຍ ຫຼື ຄ່ານໍ້າ, ຄ່າກະແສໄຟຟ້າ.

- **ໃນກໍລະນີ ທີ່ມີການລະເມີດຄັ້ງທີສອງ** ຈະຖືກປັບໃໝ ສອງເທົ່າຕົວຂອງມູນຄ່າຄວາມເສຍຫາຍ ຫຼື ຄ່ານໍ້າ, ຄ່າກະແສໄຟຟ້າທີ່ຕົນຈະຕ້ອງໄດ້ຈ່າຍ;
- **ໃນກໍລະນີກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ຜົນປະໂຫຍດ ຂອງຊາວກະສິກອນ ແລະ ປະຊາຊົນ** ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ;
- **ບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທໍາຜິດທາງອາຍາ** ຈະຖືກດໍາເນີນຄະດີ ແລະ ລົງໂທດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍອາຍາ.

# ຄວາມຮູ້ພື້ນຖານ ກ່ຽວກັບ ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ

**ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ໄດ້ຖືກຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII ໃນວັນທີ 15 ມິຖຸນາ 2018 ແລະ ປະກາດໃຊ້ໂດຍປະທານປະເທດແຫ່ງ ສປປ ລາວ ໃນວັນທີ 01 ສິງຫາ 2018 ຊຶ່ງປະກອບມີ 12 ພາກ, 05 ໝວດ ແລະ 85 ມາດຕາ.**

## I. ຄວາມສຳຄັນຂອງກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ມີຄືແນວໃດ ?

### 1. ຄວາມໝາຍຂອງການຈັດສັນພູມລຳເນົາ ແລະ ອາຊີບ

**ການຈັດສັນພູມລຳເນົາ** ແມ່ນ ການກຳນົດຂອບເຂດທີ່ຢູ່ອາໄສ, ບ່ອນທຳມາຫາກິນໃຫ້ແກ່ປະຊາຊົນ ນັບທັງຕົວເມືອງ ແລະ ຊົນນະບົດ ທີ່ຖືກຫຍັບຍ້າຍ ຫຼື ຍົກຍ້າຍຈາກພູມລຳເນົາເດີມ ໄປຕັ້ງພູມລຳເນົາບ່ອນໃໝ່ ເພື່ອຮັບປະກັນຄວາມສົມດຸນ ແລະ ສອດຄ່ອງກັບການພັດທະນາ.

**ການຈັດສັນອາຊີບ** ແມ່ນ ການສ້າງເງື່ອນໄຂ ແລະ ຄວາມອາດສາມາດໃນການທຳມາຫາກິນໃຫ້ແກ່ປະຊາຊົນນັບທັງຕົວເມືອງ ແລະ ຊົນນະບົດ ທີ່ຖືກຫຍັບຍ້າຍ ຫຼື ຍົກຍ້າຍຈາກພູມລຳເນົາເດີມ ໄປຕັ້ງພູມລຳເນົາບ່ອນໃໝ່ ເພື່ອໃຫ້ມີແຫຼ່ງລາຍຮັບທີ່ແນ່ນອນ ມີຊີວິດການເປັນຢູ່ດີຂຶ້ນກວ່າເກົ່າ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກ.

### 2. ຄວາມສຳຄັນຂອງການຈັດສັນພູມລຳເນົາ ແລະ ອາຊີບ

ການຈັດສັນພູມລຳເນົາ ແລະ ອາຊີບ ແມ່ນ ນະໂຍບາຍ ແລະ ຍຸດທະສາດສຳຄັນ ຂອງພັກ-ລັດ ແນໃສ່ສ້າງຄວາມສະເໝີພາບ, ຄວາມສາມັກຄີປອງດອງ ຂອງປະຊາຊົນບັນດາເຜົ່າໃຫ້ນັບມື້ນັບສູງຂຶ້ນເລື້ອຍໆ, ເປັນການສ້າງເງື່ອນໄຂໃຫ້ປະຊາຊົນໄດ້ຮັບການປັບປຸງຍົກສູງຄຸນນະພາບຊີວິດການເປັນຢູ່ໃຫ້ດີຂຶ້ນ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກ ແລະ ເປັນການສ້າງພື້ນຖານອັນໜັກແໜ້ນ ໃຫ້ແກ່ການນຳພາປະເທດຊາດ ຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ ໃນປີ 2020.

ຍ້ອນເຫັນໄດ້ຄວາມສຳຄັນດັ່ງກ່າວ ໃນໄລຍະຜ່ານມາ ລັດຖະບານໄດ້ອອກ ຄຳສັ່ງແນະນຳ ເລກທີ 10/ນຍ ວ່າດ້ວຍການສ້າງແຜນລຶບລ້າງຄວາມທຸກຍາກ ແລະ ແຜນຍຸດທະສາດເພື່ອການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ, ໃນປີ 2004 ກົມການເມືອງໄດ້ອອກຄຳສັ່ງແນະນຳ ເລກທີ 09/ກມສພ ແລະ ປີ 2008 ລັດຖະບານໄດ້ຜັນຂະຫຍາຍເປັນຄຳສັ່ງເພີ່ມເຕີມ ຂອງນາຍົກລັດຖະມົນຕີ ເລກທີ 13/ນຍ ກ່ຽວກັບ ການສ້າງບ້ານ ແລະ ກຸ່ມບ້ານພັດທະນາ, ບັນດານິຕິກຳດັ່ງກ່າວໄດ້ກຳນົດຄາດໝາຍຂອງການສ້າງບ້ານ ແລະ ກຸ່ມບ້ານ

ພັດທະນາ, ໝາຍຄວາມວ່າ ເອົາບ້ານເປັນເປົ້າໝາຍໃນການແກ້ໄຂຄວາມທຸກຍາກ ແລະ ຍູ້ແຮງການພັດທະນາ, ການອອກນິຕິກຳດັ່ງກ່າວ ຍັງເປັນຂີດໝາຍໜຶ່ງທີ່ສຳຄັນ ໃນການກຳນົດທິດທາງ ແລະ ບາດກ້າວເດີນຂອງປະເທດ, ຢືນຢັນເຖິງ ຄວາມມຸ້ງມາດປາດຖະໜາອັນແຮງກ້າຂອງພັກ, ລັດຖະບານ ແລະ ປະຊາຊົນເຮົາ ໃນການແກ້ໄຂຄວາມທຸກຍາກ, ນຳພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ, ເສີມຂະຫຍາຍລະບອບປະຊາທິປະໄຕເຮັດໃຫ້ປະເທດມັ່ງຄັ່ງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມສາມັກຄີປອງດອງ ມີປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.





### 3. ຈຸດປະສົງຂອງກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມກວດກາ ວຽກງານຈັດສັນພູມລຳເນົາ ແລະ ອາຊີບ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແລະ ປະສິດທິຜົນສູງ, ຖືກຕ້ອງ, ສອດຄ່ອງກັບການພັດທະນາ ແລະ ຄວາມເປັນຈິງຂອງທ້ອງຖິ່ນ ຮັບປະກັນໃຫ້ປະຊາຊົນລາວບັນດາເຜົ່າ ທີ່ຢູ່ໃນເຂດການຈັດສັນພູມລຳເນົາ ແລະ ອາຊີບ ມີທີ່ຢູ່ອາໄສ, ບ່ອນທຳມາຫາກິນ ແລະ ອາຊີບໝັ້ນຄົງ ແນໃສ່ແກ້ໄຂການເຄື່ອນຍ້າຍແບບບໍ່ຖືກຕ້ອງຕາມກົດໝາຍ, ລຶບລ້າງຄວາມທຸກຍາກ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ທາງດ້ານວັດຖຸ ແລະ ຈິດໃຈ ໃຫ້ດີຂຶ້ນກວ່າເກົ່າ, ສ້າງຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສ້າງເປັນບ້ານພັດທະນາ, ສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

## II. ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຮັດໄດ້ ມີຫຍັງແດ່ ?

### 1. ນະໂຍບາຍ ກ່ຽວກັບ ການຈັດສັນພູມລຳເນົາ ແລະ ອາຊີບ

ລັດ ຮັບປະກັນສິດໃນການຕັ້ງພູມລຳເນົາ ແລະ ປະກອບອາຊີບຂອງປະຊາຊົນ ຕາມລັດຖະທຳມະນູນ, ກົດໝາຍ ແລະ ຖືເອົາວຽກງານຈັດສັນພູມລຳເນົາ ແລະ ອາຊີບ ຕິດພັນກັບວຽກງານກໍ່ສ້າງຮາກຖານ, ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ເປັນມາດຕະການຍຸດທະສາດ ທີ່ຕ້ອງສຸມໃສ່ຈັດຕັ້ງປະຕິບັດໃນສະເພາະໜ້າ ແລະ ຍາວນານ ແນໃສ່ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

ລັດ ສະໜອງງົບປະມານ, ບຸກຄະລາກອນ ແລະ ວັດຖຸປະກອນ ເຂົ້າໃນວຽກງານຈັດສັນພູມລຳເນົາ ແລະ ອາຊີບ ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ ໃນແຕ່ລະໄລຍະ.

ລັດ ຊຸກຍູ້, ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມ, ສຶກສາຄົ້ນຄວ້າ, ວິໄຈ ແລະ ປະກອບທຶນໃນວຽກງານຈັດສັນພູມລຳເນົາ ແລະ ອາຊີບ.

## 2. ຫຼັກການ ກ່ຽວກັບ ການຈັດສັນພູມລຳເນົາ ແລະ ອາຊີບ

ການຈັດສັນພູມລຳເນົາ ແລະ ອາຊີບ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

- ສອດຄ່ອງກັບແນວທາງ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
- ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
- ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ ບົນພື້ນຖານຄວາມສະເໝີພາບ, ຖືກຕ້ອງ, ໂປ່ງໃສ, ເປີດເຜີຍ, ທັນເວລາ ແລະ ຍຸຕິທຳ;
- ຮັບປະກັນ ມີພູມລຳເນົາ, ໂຄງລ່າງພື້ນຖານທີ່ຈຳເປັນ, ບ່ອນທຳມາຫາກິນ, ມີນ້ຳໃຊ້ ແລະ ອາຊີບທີ່ໝັ້ນຄົງ, ມີຊີວິດການເປັນຢູ່ທີ່ດີຂຶ້ນກວ່າເກົ່າ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກ;
- ຈັດສັນບໍລິເວນທ້ອງຖິ່ນເດີມ ໃຫ້ສຳເລັດກ່ອນ ແລ້ວຈຶ່ງຈັດສັນໄປທ້ອງຖິ່ນອື່ນ ໂດຍຮັບປະກັນຄວາມສົມດຸນລະຫວ່າງ ຈຳນວນຄົນກັບພື້ນທີ່ຕົວຈິງ;
- ມີການປະສານສົມທົບ, ປຶກສາຫາລື ແລະ ເຂົ້າຮ່ວມຂອງປະຊາຊົນ, ການຈັດຕັ້ງຂອງລັດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງແຕ່ຫົວທີ.

## 3. ຍຸດທະສາດການຈັດສັນພູມລຳເນົາ ແລະ ອາຊີບ

ຍຸດທະສາດການຈັດສັນພູມລຳເນົາ ແລະ ອາຊີບ ແມ່ນ ການກຳນົດ ນະໂຍບາຍ, ທິດທາງລວມ, ແຜນງານ ແລະ ໂຄງການທີ່ນອນຢູ່ໃນແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໂດຍຕິດພັນກັບວຽກງານຄຸ້ມຄອງການເຄື່ອນຍ້າຍຂອງພົນລະເມືອງ ແລະ ການຈັດສັນພູມລຳເນົາ ແລະ ອາຊີບ ໃຫ້ໄດ້ໂດຍພື້ນຖານ ໂດຍສຸມໃສ່ເຂດການຈັດສັນພູມລຳເນົາ ແລະ ອາຊີບ ຄື: ເຂດທຸລະກັນດານ ແລະ ບໍ່ມີເງື່ອນໄຂໃນການພັດທະນາ, ເຂດທີ່ມີຄວາມສ່ຽງໃນການດຳລົງຊີວິດ, ເຂດທີ່ມີລັກສະນະພິເສດ, ເຂດທີ່ຖືກໂຄງການພັດທະນາ. ເພື່ອຮັບປະກັນຄວາມສົມດຸນລະຫວ່າງ ຈຳນວນປະຊາກອນ ຫຼື ກຳລັງແຮງງານ ກັບພື້ນທີ່, ສົ່ງເສີມໃຫ້ປະຊາຊົນມີອາຊີບທີ່ໝັ້ນຄົງ, ມີແຫຼ່ງລາຍຮັບທີ່ແນ່ນອນ ແລະ ສອດຄ່ອງກັບການພັດທະນາ ໃນແຕ່ລະໄລຍະ.

## 4. ການຈັດສັນພູມລຳເນົາ

### 4.1. ການຈັດສັນພູມລຳເນົາ ມີ ສອງປະເພດ ດັ່ງນີ້:

- **ການຈັດສັນທົ່ວໄປ** ແມ່ນ ການກຳນົດເຂດທີ່ຢູ່ອາໄສ ແລະ ບ່ອນທຳມາຫາກິນ ໃຫ້ແກ່ປະຊາຊົນທີ່ຢູ່ໃນເຂດທຸລະກັນດານ ແລະ ຂາດເງື່ອນໄຂການພັດທະນາ, ເຂດທີ່ມີຄວາມສ່ຽງໃນການດຳລົງຊີວິດ, ເຂດທີ່ມີລັກສະນະພິເສດ ຊຶ່ງແມ່ນຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.
- **ການຈັດສັນສະເພາະ** ແມ່ນ ການກຳນົດເຂດທີ່ຢູ່ອາໄສ ແລະ ບ່ອນທຳມາຫາກິນ ໃຫ້ແກ່ປະຊາຊົນ ທີ່ຖືກຜົນກະທົບຈາກໂຄງການພັດທະນາ ຊຶ່ງແມ່ນຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ຜູ້ພັດທະນາໂຄງການ ເປັນຜູ້ຈັດຕັ້ງປະຕິບັດ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

### 4.2. ເຂດທີ່ຈະໄດ້ຮັບການຈັດສັນພູມລຳເນົາ ມີ ສີ່ເຂດ ດັ່ງນີ້:

➢ **ເຂດທຸລະກັນດານ ແລະ ບໍ່ມີເງື່ອນໄຂໃນການພັດທະນາ ມີ ດັ່ງນີ້:**

- ເຂດທີ່ບໍ່ມີບ່ອນທຳການຜະລິດ ຫຼື ມີໜ້ອຍເກີນໄປ, ຖາງປ່າເຮັດໄຮ່ແບບເລື່ອນລອຍ ແລະ ບໍ່ມີເງື່ອນໄຂໃນການປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນ;
- ເຂດຫ່າງໄກສອກຫຼີກທີ່ບໍ່ມີເງື່ອນໄຂ ຫຼື ມີຄວາມຫຍຸ້ງຍາກ ໃນການພັດທະນາ ເຊັ່ນ: ເຂດພູຜາປ່າເລິກ, ປ່າຍອດນໍ້າ, ມີຄວາມຫຍຸ້ງຍາກໃນການເຂົ້າເຖິງລະບົບການບໍລິການທາງດ້ານສາທາລະນະ;
- ບ້ານນ້ອຍກະແຈກກະຈາຍ, ເປັນກຸ່ມຄົນທີ່ດຳລົງຊີວິດແບບເລື່ອນລອຍ, ທຸກຍາກ.

➢ **ເຂດທີ່ມີຄວາມສ່ຽງໃນການດຳລົງຊີວິດ ມີ ດັ່ງນີ້:**

- ເຂດທີ່ມີໄພພິບັດເລື້ອຍໆ ເປັນຕົ້ນ ເຂດທີ່ມີນໍ້າຖ້ວມ, ເຂດທີ່ມີການເຊາະເຈື່ອນ;
- ເຂດທີ່ບໍ່ຮັບປະກັນດ້ານຄວາມປອດໄພ ເປັນຕົ້ນ ພະຍາດລະບາດ, ມົນລະພິດ, ຜົນກະທົບດ້ານສິ່ງແວດລ້ອມ.

➢ **ເຂດທີ່ມີລັກສະນະພິເສດ** ແມ່ນ ເຂດຍຸດທະສາດດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຂດຊາຍແດນ, ປ່າສະຫງວນ, ປ່າປ້ອງກັນ, ມີທາດເບື່ອ ຫຼື ເຂດທີ່ມີກຳມັນຕະພາບລັງສີ ແລະ ແຫຼ່ງວັດຖຸບູຮານ.

➢ **ເຂດທີ່ຖືກໂຄງການພັດທະນາ** ແມ່ນ ເຂດທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້າ, ໂຄງການຂຸດຄົ້ນແຮ່ທາດ, ເຂດເສດຖະກິດພິເສດ, ເຂດກໍ່ສ້າງໂຄງລ່າງພື້ນຖານ ແລະ ໂຄງການອື່ນ.

**4.3. ຂັ້ນຕອນການຈັດສັນພູມລຳເນົາ ມີ ດັ່ງນີ້:**

- ການສຶກສາຄົ້ນຄວ້າໂຄງການ ແລະ ວາງແຜນການຈັດສັນພູມລຳເນົາ;
- ການທົດແທນຄ່າເສຍຫາຍຈາກການຈັດສັນພູມລຳເນົາ;
- ການກໍ່ສ້າງໂຄງລ່າງພື້ນຖານຮອງຮັບການຈັດສັນພູມລຳເນົາ;
- ການດຳເນີນການຫຍັບຍ້າຍ ຫຼື ຍົກຍ້າຍ ຈັດສັນພູມລຳເນົາ;
- ການພັດທະນາເຂດຈັດສັນພູມລຳເນົາ;
- ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນໃນໄລຍະຂ້າມຜ່ານ;
- ການມອບ-ຮັບໂຄງການຈັດສັນພູມລຳເນົາ;
- ການສິ້ນສຸດໂຄງການຈັດສັນພູມລຳເນົາ.

**4.4. ເງື່ອນໄຂຜູ້ຈະໄດ້ຮັບການຈັດສັນພູມລຳເນົາ ແລະ ອາຊີບ ມີ ດັ່ງນີ້:**

- ເປັນພົນລະເມືອງລາວ, ຊາວຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ອາໄສຢູ່ ສປປ ລາວ ຖາວອນ ຖືກຕ້ອງຕາມກົດໝາຍ;
- ຢູ່ໃນເຂດທີ່ໄດ້ຮັບການຈັດສັນພູມລຳເນົາ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 4.2 ຂອງຄູ່ມືສະບັບນີ້;
- ເຫັນດີຮັບເອົາການຈັດສັນພູມລຳເນົາ.

## 5. ການຈັດສັນອາຊີບ

**5.1. ການຈັດສັນອາຊີບ ມີ ຫ້າປະເພດ ດັ່ງນີ້:**

- ການປູກຝັງ, ການລ້ຽງສັດ ແລະ ການປະມົງ;
- ການປູກໄມ້ ແລະ ປົກປັກຮັກສາປ່າໄມ້;
- ການບໍລິການ, ການຄ້າຂາຍສິນຄ້າ, ການທ່ອງທ່ຽວ;
- ການຜະລິດສິນຄ້າອຸດສາຫະກຳ ແລະ ຫັດຖະກຳ ຂອງຄອບຄົວ;
- ການປະກອບອາຊີບກຳມະກອນ ຢູ່ໂຮງງານ ຫຼື ໂຄງການພັດທະນາ, ການຜະລິດສິນຄ້າໃນໂຮງງານ ຫຼື ສະຖານປະກອບການຂະໜາດນ້ອຍ, ການປະກອບເຄື່ອງມື, ອຸປະກອນ ຫຼື ວັດສະດຸ ທີ່ຜູ້ວ່າຈ້າງນຳມາໃຫ້ຜະລິດ ລວມທັງ ການຮັບຕໍ່ວຽກບາງຂັ້ນຕອນຂອງການຜະລິດມາດຳເນີນການ.

**5.2. ຂັ້ນຕອນການຈັດສັນອາຊີບ ມີ ດັ່ງນີ້:**

- ການເກັບກຳຂໍ້ມູນ;
- ການປະເມີນທາງເລືອກອາຊີບ;
- ການຝຶກອົບຮົມ ແລະ ສ້າງຂີດຄວາມສາມາດ;
- ການຊຸກຍູ້ສົ່ງເສີມດ້ານວິຊາການ, ການເຂົ້າເຖິງແຫຼ່ງທຶນ ແລະ ການຕະຫຼາດ;
- ການສ້າງນັກພັດທະນາກັບທີ່ ແລະ ສ້າງຄອບຄົວຕົວແບບ;
- ການຕິດຕາມ, ປະເມີນຜົນ ການຈັດຕັ້ງປະຕິບັດການຈັດສັນອາຊີບ;
- ການສິ້ນສຸດໂຄງການຈັດສັນອາຊີບ.

## 6. ສິດ ແລະ ພັນທະ ຂອງຜູ້ພັດທະນາໂຄງການ

### 6.1. ຜູ້ພັດທະນາໂຄງການ ມີ ສິດ ດັ່ງນີ້:

- ໄດ້ຮັບການຮ່ວມມືຈາກຂະແໜງການ ຫຼື ພາກສ່ວນທີ່ກ່ຽວຂ້ອງ ໃນການພັດທະນາໂຄງການຈັດສັນພູມລຳເນົາ ແລະ ອາຊີບ;
- ຕິດຕາມ ກວດກາ ດ້ວຍຕົນເອງ ໃນການສຶກສາຄົ້ນຄວ້າການຈັດສັນພູມລຳເນົາ ແລະ ອາຊີບ ລວມທັງ ການທົດແທນຄ່າເສຍຫາຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
- ສະເໜີເຈົ້າຂອງໂຄງການ, ຂະແໜງການ ຫຼື ພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂບັນຫາ ທີ່ຕິດພັນກັບການຈັດສັນພູມລຳເນົາ ແລະ ອາຊີບ;
- ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### 6.2. ຜູ້ພັດທະນາໂຄງການ ມີ ພັນທະ ດັ່ງນີ້:

- ສ້າງບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມທາງສັງຄົມ ແລະ ທຳມະຊາດ ລວມທັງ ແຜນຄຸ້ມຄອງ ຕິດຕາມ ແລະ ກວດກາ ໃຫ້ຖືກຕ້ອງສອດຄ່ອງ ຕາມເຕັກນິກວິຊາການ;
- ປະຕິບັດພັນທະດ້ານສິ່ງແວດລ້ອມທາງສັງຄົມ ແລະ ທຳມະຊາດ ຢ່າງເຂັ້ມງວດ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ;
- ສ້າງແຜນການທົດແທນຄ່າເສຍຫາຍ, ແຜນຈັດສັນພູມລຳເນົາ ແລະ ແຜນການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບ ບົນພື້ນຖານຮັບປະກັນໃຫ້ມີງົບປະມານຢ່າງພຽງພໍ ເພື່ອຄິດໄລ່ເຂົ້າໃນມູນຄ່າຂອງໂຄງການ;
- ຮັບຜິດຊອບໂດຍກົງ ແລະ ຈັດຕັ້ງປະຕິບັດ ແຜນການທົດແທນຄ່າເສຍຫາຍ, ແຜນຈັດສັນພູມລຳເນົາ ແລະ ແຜນການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ;
- ຮັບຜິດຊອບຕໍ່ຜົນເສຍຫາຍ ທີ່ເກີດຈາກການບໍ່ປະຕິບັດຕາມແຜນການຫຍັບຍ້າຍ ຫຼື ຍົກຍ້າຍ;
- ຮັບຜິດຊອບຄ່າໃຊ້ຈ່າຍສຳລັບຜູ້ຊ່ຽວຊານ, ອົງການທີ່ມີບົດຮຽນ ແລະ ປະສົບການ ທັງພາຍໃນ ຫຼື ຕ່າງປະເທດ ລວມທັງ ເຈົ້າຂອງໂຄງການ ແລະ ການຈັດຕັ້ງລັດ ມາດຳເນີນການ ຕິດຕາມ, ກວດກາ ແລະ ຕີລາຄາຜົນສຳເລັດຂອງວຽກງານດັ່ງກ່າວ;
- ຮັບຜິດຊອບຕໍ່ຂໍ້ມູນທີ່ຕົນສ້າງຂຶ້ນ ພ້ອມທັງສະໜອງ ແລະ ເປີດເຜີຍຂໍ້ມູນທີ່ຕິດພັນກັບການປະຕິບັດໂຄງການພັດທະນາຂອງຕົນ ໃຫ້ແກ່ການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ ແລະ ຕໍ່ສາທາລະນະ;

– ວາງເງິນຄໍ້າປະກັນ ຈໍານວນ ສິບສ່ວນຮ້ອຍ ຂອງມູນຄ່າທັງໝົດທີ່ນໍາໃຊ້ເຂົ້າໃນການຈັດສັນພູມລໍາເນົາ ພາຍໃນເວລາ ໜຶ່ງ ເດືອນ ກ່ອນວັນມອບ-ຮັບໂຄງການຈັດສັນພູມລໍາເນົາ;
– ລາຍງານສະພາບການຕ່າງໆ ທີ່ພົວພັນກັບການພັດທະນາໂຄງການຂອງຕົນໃຫ້ເຈົ້າຂອງໂຄງການ ແລະ ຄະນະກໍາມະການຈັດສັນພູມລໍາເນົາ ແລະ ອາຊີບ ທີ່ຕົນຂຶ້ນກັບ ເປັນແຕ່ລະໄລຍະ;
– ສ້າງ, ພັດທະນາສີມືແຮງງານ ແລະ ນໍາໃຊ້ແຮງງານພາຍໃນທ້ອງຖິ່ນ;
– ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## 7. ສິດ ແລະ ພັນທະ ຂອງຜູ້ໄດ້ຮັບການຈັດສັນພູມລໍາເນົາ

### 7.1. ຜູ້ໄດ້ຮັບການຈັດສັນພູມລໍາເນົາ ມີ ສິດ ດັ່ງນີ້:

– ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບ ໂຄງການພັດທະນາ, ຜົນປະໂຫຍດ ແລະ ຜົນກະທົບທີ່ຕົນຈະໄດ້ຮັບ ລວມທັງ ຄວາມຄືບໜ້າໃນການຈັດສັນ, ທົດແທນຄ່າເສຍຫາຍ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕະຫຼອດໄລຍະປະຕິບັດໂຄງການ;
– ໄດ້ຮັບການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ຟື້ນຟູຊີວິດການເປັນຢູ່ ຕາມແຜນການທີ່ໄດ້ຮັບຮອງເປັນທາງການ;
– ສະເໜີເປັນລາຍລັກອັກສອນຕໍ່ເຈົ້າຂອງໂຄງການ, ຜູ້ພັດທະນາໂຄງການ ແລະ ຄະນະກໍາມະການຈັດສັນພູມລໍາເນົາ ແລະ ອາຊີບ ເພື່ອພິຈາລະນາແກ້ໄຂບັນຫາທີ່ຕິດພັນກັບໂຄງການພັດທະນາ;
– ເຂົ້າຮ່ວມກອງປະຊຸມປຶກສາຫາລື ປະກອບຄໍາຄິດເຫັນ ຕໍ່ແຜນການຈັດສັນພູມລໍາເນົາ, ການທົດແທນຄ່າເສຍຫາຍ, ການຟື້ນຟູຊີວິດການເປັນຢູ່;
– ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### 7.2. ຜູ້ໄດ້ຮັບການຈັດສັນພູມລໍາເນົາ ມີ ພັນທະ ດັ່ງນີ້:

– ສະໜອງຂໍ້ມູນໃຫ້ຊັດເຈນ, ຖືກຕ້ອງຕາມຄວາມເປັນຈິງ ພ້ອມທັງຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບ ຂໍ້ມູນຂອງຕົນ;
– ໃຫ້ຄວາມຮ່ວມມື ແລະ ອໍານວຍຄວາມສະດວກ ແກ່ເຈົ້າຂອງໂຄງການ, ຜູ້ພັດທະນາໂຄງການ, ຄະນະກໍາມະການຈັດສັນພູມລໍາເນົາ ແລະ ອາຊີບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດແຜນການຈັດສັນພູມລໍາເນົາ, ການທົດແທນຄ່າເສຍຫາຍ, ການຟື້ນຟູຊີວິດການເປັນຢູ່ ແລະ ການແກ້ໄຂຂໍ້ສະເໜີຂອງຕົນ;
– ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

8. **ສິດ ແລະ ພັນທະ ຂອງຜູ້ໄດ້ຮັບການຈັດສັນອາຊີບ**

**8.1. ຜູ້ໄດ້ຮັບການຈັດສັນອາຊີບ ມີ ສິດ ດັ່ງນີ້:**

- ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບ ຜົນປະໂຫຍດ ແລະ ຜົນກະທົບຕໍ່ອາຊີບຂອງຕົນ;
- ເລືອກອາຊີບທີ່ຕົນມີພື້ນຖານ ຫຼື ອາຊີບໃໝ່ ຕາມທ່າແຮງ;
- ໄດ້ຮັບບູລິມະສິດໃນການເຂົ້າເຮັດວຽກນໍາໂຄງການ;
- ໄດ້ຮັບການສົ່ງເສີມທາງດ້ານເຕັກນິກວິຊາການ ໃນການຍົກລະດັບອາຊີບຂອງຕົນ, ການເຂົ້າເຖິງແຫຼ່ງທຶນ ແລະ ສົ່ງເສີມການຕະຫຼາດ;
- ສະເໜີເປັນລາຍລັກອັກສອນຕໍ່ເຈົ້າຂອງໂຄງການ, ຜູ້ພັດທະນາໂຄງການ ແລະ ຄະນະກໍາມະການຈັດສັນພູມລໍາເນົາ ແລະ ອາຊີບ ເພື່ອພິຈາລະນາແກ້ໄຂບັນຫາທີ່ຕິດພັນກັບອາຊີບຂອງຕົນ;
- ເຂົ້າຮ່ວມກອງປະຊຸມປຶກສາຫາລື ປະກອບຄໍາຄິດເຫັນ ຕໍ່ແຜນການຈັດສັນອາຊີບ;
- ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**8.2. ຜູ້ໄດ້ຮັບການຈັດສັນອາຊີບ ມີ ພັນທະ ດັ່ງນີ້:**

- ສະໜອງຂໍ້ມູນ ກ່ຽວກັບ ອາຊີບຂອງຕົນ ໃຫ້ຊັດເຈນ ແລະ ຖືກຕ້ອງຕາມຄວາມເປັນຈິງ ພ້ອມທັງຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບ ຂໍ້ມູນຂອງຕົນ;
- ໃຫ້ຄວາມຮ່ວມມື ແລະ ອໍານວຍຄວາມສະດວກ ແກ່ເຈົ້າຂອງໂຄງການ, ຜູ້ພັດທະນາໂຄງການ, ຄະນະກໍາມະການຈັດສັນພູມລໍາເນົາ ແລະ ອາຊີບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານຈັດສັນອາຊີບ;
- ເປັນເຈົ້າການ, ບຸກບືນຜ່ານຜ່າຄວາມຫຍຸ້ງຍາກ ແລະ ດຸໝັ່ນໃນການປະກອບອາຊີບ ເພື່ອເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນ;
- ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## III. ກົດໝາຍວ່າດ້ວຍການຈັດສັນພູມລໍາເນົາ ແລະ ອາຊີບ ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເຮັດ ມີຫຍັງແດ່ ?

### 1. ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກໍາ ດັ່ງນີ້:

1) ສະໜອງຂໍ້ມູນ ກ່ຽວກັບ ພູມລໍາເນົາ ແລະ ອາຊີບຂອງຕົນ ໂດຍບໍ່ຖືກຕ້ອງກັບຄວາມເປັນຈິງ;
2) ມີການປະພຶດ ທີ່ສະແດງອອກເຖິງແນວຄິດຄັບແຄບ, ເມີນເສີຍ, ແບ່ງແຍກ ລະຫວ່າງເຜົ່າ ແລະ ສາສະໜາ, ເຫັນແກ່ທ້ອງຖິ່ນ ແລະ ເຜົ່າຕົນເອງ;
3) ເຄື່ອນຍ້າຍ ຫຼື ຈັບຈອງພູມລໍາເນົາ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

4) ໂຄສະນາຕ້ານ ແນວທາງນະໂຍບາຍ, ສ້າງຄວາມປັ່ນປ່ວນ, ຍຸແຍ່, ນາບຂູ່, ກົດໜ່ວງຖ່ວງດຶງ, ສ້າງອຸປະສັກ ຫຼື ຂັດຂວາງຕໍ່ການປະຕິບັດແຜນການຫຍັບຍ້າຍ ຫຼື ຍົກຍ້າຍຈັດສັນພູມລໍາເນົາ ແລະ ການປະຕິບັດໜ້າທີ່ ຂອງເຈົ້າຂອງໂຄງການ ຫຼື ຜູ້ພັດທະນາໂຄງການ;
5) ໃຫ້ ຫຼື ເປັນສື່ກາງ ໃນການໃຫ້ ຫຼື ຮັບສິນບົນ;
6) ດໍາເນີນການຈັດສັນພູມລໍາເນົາ ໂດຍບໍ່ໄດ້ຮັບອະນຸຍາດ;
7) ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## 2. ຂໍ້ຫ້າມສໍາລັບພະນັກງານ, ເຈົ້າຂອງໂຄງການ ແລະ ຄະນະກໍາມະການຈັດສັນພູມລໍາເນົາ ແລະ ອາຊີບ

ຫ້າມ ພະນັກງານ, ເຈົ້າຂອງໂຄງການ ແລະ ຄະນະກໍາມະການຈັດສັນພູມລໍາເນົາ ແລະ ອາຊີບ ມີ ພຶດຕິກໍາ ດັ່ງນີ້:

1) ສວຍໃຊ້ ສິດ, ໜ້າທີ່ ຫຼື ຕໍາແໜ່ງ ເພື່ອບັງຄັບ, ນາບຂູ່, ກົດໜ່ວງ ຖ່ວງດຶງ ຫຼື ຮຽກເອົາສິນບົນ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດ ຂອງລັດ, ລວມໝູ່, ບຸກຄົນ ຫຼື ຜູ້ໄດ້ຮັບຜົນກະທົບ;
2) ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3) ບິດເບືອນຂໍ້ມູນ, ປອມແປງເອກະສານ ຫຼື ອອກເອກະສານໂດຍບໍ່ຖືກຕ້ອງ;
4) ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ບໍ່ມີຄວາມຍຸຕິທໍາ ຫຼື ຂາດຄວາມຮັບຜິດຊອບ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດ ຂອງລັດ, ລວມໝູ່, ບຸກຄົນ ຫຼື ຜູ້ ໄດ້ຮັບຜົນກະທົບ;
5) ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## 3. ຂໍ້ຫ້າມສໍາລັບຜູ້ພັດທະນາໂຄງການ

ຫ້າມ ຜູ້ພັດທະນາໂຄງການ ມີ ພຶດຕິກໍາ ດັ່ງນີ້:

1) ດໍາເນີນການສໍາຫຼວດ ຫຼື ສຶກສາຄົ້ນຄວ້າໂຄງການຈັດສັນພູມລໍາເນົາ ແລະ ອາຊີບ ໂດຍບໍ່ໄດ້ຮັບອະນຸຍາດ;
2) ຖ່ວງດຶງ ຫຼື ແກ່ຍາວເວລາ ການປະຕິບັດແຜນການຍົກຍ້າຍ, ການທົດແທນຄ່າເສຍຫາຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງຜູ້ໄດ້ຮັບຜົນກະທົບ;
3) ນໍາໃຊ້ ຫຼື ແຈ້ງຂໍ້ມູນ ກ່ຽວກັບ ການສໍາຫຼວດ ແລະ ສຶກສາຄົ້ນຄວ້າໂຄງການຈັດສັນພູມລໍາເນົາ ແລະ ອາຊີບ ໂດຍບໍ່ໄດ້ຮັບອະນຸຍາດ;
4) ໃຫ້ສິນບົນພະນັກງານ, ເຈົ້າຂອງໂຄງການ, ຄະນະກໍາມະການຈັດສັນພູມລໍາເນົາ ແລະ ອາຊີບ ແລະ ປະຊາຊົນ;
5) ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ, ເຈົ້າຂອງໂຄງການ, ຄະນະກໍາມະການຈັດສັນພູມລໍາເນົາ ແລະ ອາຊີບ ແລະ ປະຊາຊົນ;

6) ລະເມີດສິດ ແລະ ໜ້າທີ່ ຂອງເຈົ້າຂອງໂຄງການ, ຄະນະກໍາມະການຈັດສັນພູມລໍາເນົາ ແລະ ອາຊີບ;
7) ປະຕິບັດບໍ່ຖືກຕ້ອງ ຕາມແຜນການ ຫຍັບຍ້າຍ ຫຼື ຍົກຍ້າຍ, ການທົດແທນຄ່າເສຍຫາຍ ແລະ ການຟື້ນຟູຊີວິດການເປັນຢູ່ ຂອງຜູ້ໄດ້ຮັບຜົນກະທົບ ຕາມທີ່ໄດ້ຕົກລົງກັບເຈົ້າຂອງໂຄງການ, ຄະນະກໍາມະການຈັດສັນພູມລໍາເນົາ ແລະ ອາຊີບ;
8) ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

### 4. ຂໍ້ຫ້າມສໍາລັບຜູ້ໄດ້ຮັບການຈັດສັນພູມລໍາເນົາ ແລະ ອາຊີບ

ຫ້າມ ຜູ້ໄດ້ຮັບການຈັດສັນພູມລໍາເນົາ ແລະ ອາຊີບ ມີ ພຶດຕິກໍາ ດັ່ງນີ້:

1) ສ້າງອຸປະສັກ, ຂັດຂວາງການປະຕິບັດໜ້າທີ່ ຫຼື ບໍ່ໃຫ້ການຮ່ວມມື ແກ່ພະນັກງານທີ່ກ່ຽວຂ້ອງກັບ ການຈັດສັນພູມລໍາເນົາ ແລະ ອາຊີບ;
2) ຍົກຍ້າຍ ກັບຄືນໄປບ່ອນຢູ່ເດີມ ຫຼື ຢູ່ບ່ອນໃໝ່ ໂດຍບໍ່ໄດ້ຮັບອະນຸຍາດ;
3) ສະໜອງຂໍ້ມູນ ກ່ຽວກັບ ພູມລໍາເນົາ ແລະ ອາຊີບຂອງຕົນ ໂດຍບໍ່ຖືກຕ້ອງຕາມຄວາມເປັນຈິງ;
4) ປຸກລະດົມ, ສ້າງກຸ່ມກ້ອນ, ສ້າງຄວາມແຕກແຍກ ພາຍໃນກຸ່ມຜູ້ໄດ້ຮັບການຈັດສັນ ຫຼື ບ້ານເຈົ້າພາບ;
5) ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## IV. ຖ້າລະເມີດກົດໝາຍວ່າດ້ວຍການຈັດສັນພູມລໍາເນົາ ແລະ ອາຊີບ ຈະໄດ້ຮັບໂທດ ຄືແນວໃດ ?

### 1. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ມາດຕະການທາງແພ່ງ ຫຼື ລົງໂທດທາງອາຍາຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

### 2. ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ແລະ ບໍ່ເປັນອັນຕະລາຍຮ້າຍແຮງຕໍ່ ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ແຕ່ຫາກມີຄວາມຈິງໃຈລາຍງານ, ຮັບສາລະພາບຕໍ່ການກະທໍາທີ່ບໍ່ຖືກຕ້ອງຂອງຕົນ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

### 3. ມາດຕະການທາງວິໄນ

ພະນັກງານຈັດສັນ ພູມລໍາເນົາ ແລະ ອາຊີບ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ມີລັກສະນະເບົາ, ບໍ່ເປັນການກະທໍາຜິດທາງອາຍາ, ກໍ່ຄວາມເສຍຫາຍບໍ່

ຫຼວງຫຼາຍ ແລະ ບໍ່ຈິງໃຈລາຍງານການກະທຳທີ່ບໍ່ຖືກຕ້ອງຂອງຕົນ ຈະຖືກລົງວິໄນຕາມລະບຽບການ ເປັນຕົ້ນ ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ຫຼື ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

### 4. ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ບໍ່ເປັນການກະທຳຜິດທາງອາຍາ ຊຶ່ງກໍ່ຄວາມເສຍຫາຍທາງດ້ານຊັບສິນໃຫ້ແກ່ຜູ້ອື່ນ ຈະຖືກປັບໃໝ ໜຶ່ງເທົ່າຕົວ ຂອງມູນຄ່າຄວາມເສຍຫາຍທັງໝົດ.

ໃນກໍລະນີ ມີການລະເມີດເປັນຄັ້ງທີສອງ ຫຼື ເປັນອາຈິນ ຈະຖືກປັບໃໝສອງເທົ່າຕົວ ຂອງມູນຄ່າຄວາມເສຍຫາຍທັງໝົດ.

### 5. ມາດຕະການທາງແພ່ງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່, ສັງຄົມ ຫຼື ບຸກຄົນອື່ນ ຕ້ອງໃຊ້ແທນຄ່າເສຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນ.

### 6. ມາດຕະການທາງອາຍາ

ບຸກຄົນ, ນິຕິບຸກຄົນ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມປະມວນກົດໝາຍອາຍາ ຫຼື ກົດໝາຍອື່ນທີ່ກຳນົດໂທດທາງອາຍາ ຕາມແຕ່ກໍລະນີເບົາ ຫຼື ໜັກ.

**ເອກະສານອ້າງອີງ:**


1. ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ 2015;
2. ກົດໝາຍວ່າດ້ວຍກະສິກຳ ເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998;
3. ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;
4. ກົດໝາຍວ່າດ້ວຍການປະມົງ ເລກທີ 03/ສພຊ, ລົງວັນທີ 09 ກໍລະກົດ 2009;
5. ກົດໝາຍວ່າດ້ວຍຊົນລະປະທານ ເລກທີ 26/ສພຊ, ລົງວັນທີ 14 ທັນວາ 2012;
6. ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
7. ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ເລກທີ 13/ສພຊ, ລົງວັນທີ 09 ພະຈິກ 2016;
8. ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ເລກທີ 45/ສພຊ, ລົງວັນທີ 15 ມິຖຸນາ 2018;
9. ກົດໝາຍດ້ວຍປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
10. ຂໍ້ຕົກລົງຂອງລັດຖະມົນຕີ ເລກທີ 3604/ກປ, ລົງວັນທີ 17 ກັນຍາ 2019 ວ່າດ້ວຍການຂຶ້ນທະບຽນວິຊາການຢາປາບສັດຕູພືດ;
11. ປື້ມຄູ່ມື ສິດ ແລະ ໜ້າທີ່ຂອງບ້ານ ໃນການຄຸ້ມຄອງ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້ ແລະ ສັດນ້ຳ - ສັດປ່າ 2009.

# ຕິດຕໍ່ປະສານງານ

ພະແນກນິຕິກຳ
ກົມນະໂຍບາຍ ແລະ ນິຕິກຳ, ກະຊວງກະສິກຳ ແລະ ປ່າໄມ້
ຖະໜົນລ້ານຊ້າງ, ນະຄອນຫຼວງວຽງຈັນ

ໂທ/ແຟັກ : (856-21) 417 198

**ຂໍ້ມູນເພີ່ມເຕີມ:**

| | | |
|---|---|---|
| 1. | ທ່ານ ປອ. ທັດສະກາ ສະພັງທອງ | ຮອງຫົວໜ້າກົມນະໂຍບາຍ ແລະ ນິຕິກຳ |
| 2. | ທ່ານ ປອ. ພັນໄຊ ອີງໄຊ | ຫົວໜ້າພະແນກນິຕິກຳ |
| 3. | ທ່ານ ບຸນເຖິງ ແສງມະນີ | ຮອງຫົວໜ້າພະແນກນິຕິກຳ |
| 4. | ທ່ານ ເພັດສະຫວັນ ແພງພະຈັນ | ລັດຖະກອນວິຊາການ |
| 5. | ທ່ານ ນ. ບຸນສີງ ທຳມະວົງ | ລັດຖະກອນວິຊາການ |
| 6. | ທ່ານ ນ. ນູ້ ໄຊລີປ່າງ | ລັດຖະກອນວິຊາການ |
| 7. | ທ່ານ ທະນູສິນ ສຸກພະຈັນ | ລັດຖະກອນວິຊາການ |

ຮຽບຮຽງ ແລະ ຈັດພິມ ໂດຍ: ພະແນກນິຕິກຳ, ກົມນະໂຍບາຍ ແລະ ນິຕິກຳ, ກະຊວງກະສິກຳ ແລະ ປ່າໄມ້

ສະໜັບສະໜູນ ໂດຍ : ອົງການຮ່ວມມືສາກົນແຫ່ງປະເທດ ຍີ່ປຸ່ນ